**ຄະນະໂຄສະນາສຶກສາ ກວາງຈິ**

# ສາຍພົວພັນມິດຕະພາບພິເສດ ຫວຽດນາມ-ລາວ, ລະຫວ່າງກວາງຈິ -ສາລະວັນ ແຕ່ປີ 1930 ມາຮອດປັດຈຸບັນ

(ເອກະສານໂຄສະນາເພື່ອປີສາມັກຄີມິດຕະພາບ ຫວຽດນາມ - ລາວ 2022)

*ກວາງຈິ, 8/2022*

## ຄຳນຳ

A. ສາຍພົວພັນມິດຕະພາບພິເສດ ຫວຽດນາມ-ລາວ……………...11

B. ສາຍພົວພັນມິດຕະພາບຮ່ວມມືລະຫວ່າງແຂວງກວາງຈິ ແລະ ແຂວງສາລະວັນ (51ໜ້າ)……………………………………….……………30

ພາກທີ I. ກວາງຈິ - ສາລະວັນ ເປັນບ້ານໃກ້ເຮືອນຄຽງທີ່ໃກ້ຊິດ, ມີມູນເຊື້ອອັນດີງາມ ໃນການຕໍ່ສູ້ປົດປ່ອຍປະເທດຊາດ ………………………...30

I.ວ່າດ້ວຍລັກສະນະທຳມະຊາດ, ປະຫວັດສາດ ແລະ ວັດທະນະທຳຂອງແຂວງກວາງຈິ-ສາລະວັນ ……………………………………………30

1.ວ່າດ້ວຍລັກສະນະທຳມະຊາດ, ປະຫວັດສາດ ແລະ ວັດທະນະທຳຂອງແຂວງກວາງຈິ ………………………………………..……………30

2.ວ່າດ້ວຍລັກສະນະທຳມະຊາດ, ປະຫວັດສາດ ແລະ ວັດທະນະທຳຂອງແຂວງສາລະວັນ ………………………………………………………33

II. ກວາງຈິ ແລະ ສາລະວັນ ມີການພົວພັນທາງດ້ານປະຫວັດສາດ ແລະມູນເຊື້ອອັນຍາວນານ …………………………………………..……38

III. ກວາງຈິ ແລະສາລະວັນ ຢືນຄຽງຂ້າງກັນໃນການຕໍ່ສູ້ປົດປ່ອຍປະເທດຊາດ (1930-1975). …………………………………………………43

1.ສາມັກຄີກັນຕ້ານພວກຮຸກຮານ ແລະ ລຸກຮືຂຶ້ນ ເພື່ອຍຶດອຳນາດການປົກຄອງ (1930-1945). ...........................................43

2. ກອງທັບ ແລະປະຊາຊົນແຂວງກວາງຈິ ພ້ອມກັບກອງທັບ ແລະ ປະຊາຊົນແຂວງສາລະວັນ ໄດ້ເປັນພັນທະມິດເພື່ອຕໍ່ສູ້ຕ້ານພວກລ່າເມືອງຂຶ້ນຝລັ່ງຮຸກຮານ (1945 - 1954). ...........................................44

3. ກອງທັບ ແລະປະຊາຊົນແຂວງກວາງຈິ ພ້ອມກັບກອງທັບ ແລະປະຊາຊົນ ແຂວງ ສາລະວັນໄດ້ເປັນພັນທະມິດຕ້ານຈັກກະພັດ ອາເມລິກາຮຸກຮານ (1954 - 1975). ...........................................50

ພາກທີ II. ຜົນງານຂອງການພົວພັນຮ່ວມມືບົນບັນດາຂົງເຂດລະຫວ່າງກວາງຈິ ແລະສາລະວັນ ແຕ່ປີ 1975 ມາຮອດປະຈຸບັນ .......................71

I. ກໍ່ສ້າງ ແລະ ພັດທະນາການພົວພັນມິດຕະພາບ ໄລຍະ 1975 – 1989.

1. ການຮ່ວມມືດ້ານປ້ອງກັນປະເທດ - ປ້ອງກັນຄວາມສະຫງົບ, ສ້າງເສັ້ນຊາຍແດນສັນຕິພາບ, ມິດຕະພາບ. ....................................71

2. ການຮ່ວມມືດ້ານເສດຖະກິດ .................................72

3. ການຮ່ວມມືດ້ານວັດທະນະທຳ-ສັງຄົມ, ການສຶກສາ-ກໍ່ສ້າງ, ສາທາລະນະສຸກ ..................................................76

II. ກໍ່ສ້າງ ແລະພັດທະນາສາຍພົວພັນມິດຕະພາບ ໄລແຕ່ຍະປີ 1989 ມາຮອດປັດຈຸບັນ. ...................................................78

1. ການຮ່ວມມືດ້ານປ້ອງກັນປະເທດ, ປ້ອງກັນຄວາມສະຫງົບ, ສ້າງເສັ້ນຊາຍແດນສັນຕິພາບ, ມິດຕະພາບ. ....................................84

2. ການພົວພັນຮ່ວມມືດ້ານເສດຖະກິດ ..............................96

2.1. ການຮ່ວມມືດ້ານກະສິກຳ ແລະປ່າໄມ້ ..........................96

2.2. ການຮ່ວມມືດ້ານອຸດສາຫະກຳ, ການກໍ່ສ້າງ, ຄົມມະນາຄົມ-ຂົນສົ່ງ ....100

2.3. ການຮ່ວມມືດ້ານການຄ້າ, ການລົງທຶນ ແລະ ການທ່ອງທ່ຽວ...104

3. ການຮ່ວມມືດ້ານວັດທະນະທຳ-ສັງຄົມ, ການສຶກສາ-ກໍ່ສ້າງ, ວິທະຍາສາດ ແລະ ເຕັກໂນໂລຊີ ແລະ ບັນດາດ້ານອື່ນໆ ..............................108

3.1. ການຮ່ວມມືດ້ານວັດທະນະທຳ ແລະ ກິລາ. ..................108

3.2. ການຮ່ວມມືດ້ານສາທາລະນະສຸກ. ............................110

3.3. ການຮ່ວມມືດ້ານການສຶກສາ - ກໍ່ສ້າງ, ຍົກສູງແຫຼ່ງຊັບພະຍາກອນມະນຸດ. ............................................................113

3.4. ການຮ່ວມມືດ້ານວິທະຍາສາດ ແລະ ເຕັກໂນໂລຊີ .............116

ພາກທີ III. ສືບຕໍ່ເພີ່ມພູນຄູນສ້າງ ສາຍພົວພັນຮ່ວມມືມິດຕະພາບ ລະຫວ່າງ ແຂວງກວາງຈິ ແລະ ສາລະວັນ ນັບໃຫ້ມື້ນັບໜັ້ນຄົງ ......119

ສະຫຼຸບ .............................................................125

# ຄຳນຳ

ຫວຽດນາມ ແລະ ລາວ ແມ່ນສອງປະເທດບ້ານໃກ້ເຮືອນຄຽງທີ່ມີພູເຂົາ ແລະແມ່ນ້ຳເຊື່ອມຕໍ່ກັນເປັນເສັ້ນທາງດຽວ. ການພົວພັນສະໜິດຕິດພັນລະຫວ່າງ ສອງປະເທດທີ່ໄດ້ກໍ່ຮ່າງສ້າງຕົວ ແລະ ຝຶກຝົນຫຼໍ່ຫຼອມໃນປະຫວັດສາດເປັນພັນປີ ແຫ່ງການສ້າງປະເທດ ແລະ ປ້ອງກັນປະເທດຊາດ. ໂດຍສະເພາະໃນ 90 ປີ ຜ່ານມາ, ການພົວພັນທີ່ເປັນມູນເຊື້ອອັນດີງາມ, ຕິດພັນກັບຄວາມສັດຊື່ບໍລິສຸດລະຫວ່າງ ປະຊາຊົນສອງປະເທດໂດຍແມ່ນ ປະທານ ໂຮ່ຈິມິນ ແລະ ປະທານ ໄກສອນ ພົມວິຫານ, ປະທານ ສຸພານຸວົງ ເປັນຜູ້ສ້າງຕັ້ງພື້ນຖານ, ບັນດາການນຳຮຸ່ນສືບ ທອດ ແລະ ປະຊາຊົນສອງປະເທດທຸ້ມເທເຫື່ອແຮງ ເພີ່ມພູນຄູນສ້າງ, ໄດ້ກາຍເປັນ "ກົດເກນເປັນຕາຍ ແລະກຳລັງແຮງມະຫັດສະຈັນ" ນຳໄປສູ່ໄຊຊະນະອັນຍິ່ງໃຫຍ່ ຂອງພາລະກິດ ປະຕິວັດໃນການຕໍ່ສູ້ເພື່ອຍາດເອົາອຳນາດການປົກຄອງ, ຕໍ່ສູ້ຕ້ານ ພວກລ່າເມືອງຂຶ້ນ ແລະຈັກກະພັດຜູ້ຮຸກຮານ, ກໍຄືພາລະກິດປ່ຽນແປງໃໝ່ ທີ່ພາໃຫ້ ສອງປະເທດພ້ອມກັນພັດທະນາໄປຕາມເສັ້ນທາງສັງຄົມນິຍົມ. ສອງຝ່າຍລ້ວນແຕ່ ຢືນຢັນວ່າ ສາຍພົວພັນມິດຕະພາບອັນຍິ່ງໃຫຍ່, ຄວາມສາມັກຄີແບບພິເສດ ແລະ ການຮ່ວມມືຮອບດ້ານແມ່ນຊັບສິນລວມອັນລ້ຳຄ່າຂອງສອງພັກ ແລະສອງປະເທດ ຊາດ, ຕ້ອງຮັກສາ, ເສີມຂະຫຍາຍ ແລະ ສືບຕໍ່ສືບທອດໃຫ້ຄົນລຸ້ນຫຼັງ ເພື່ອຮ່ວມກັນ

ສ້າງປະເທດຫວຽດນາມ ແລະລາວ ໃຫ້ວັດທະນະຖາວອນ, ຄວາມຮັ່ງມີຜາສຸກ, ປະກອບສ່ວນເພື່ອປັບປຸງສັນຕິພາບ, ສະຖຽນລະພາບ, ການຮ່ວມມື ແລະ ພັດທະນາ ຢູ່ພາກພື້ນ ແລະໃນໂລກ.

ຕິດພັນກັບປະຫວັດສາດການພົວພັນແບບພິເສດຫວຽດນາມ - ລາວ, ໃນ ຕະຫຼອດໄລຍະກໍ່ສ້າງ ແລະ ພັດທະນາ, ແຂວງກວາງຈີ (ຫວຽດນາມ) ແລະ ສາລະ ວັນ (ລາວ) ສືບຕໍ່ເພີ່ມທະວີການພົວພັນຮ່ວມມື ແລະ ຊ່ວຍເຫຼືອເຊິ່ງກັນ ແລະ ກັນ ໃນທຸກດ້ານ. ແຂວງກວາງຈີ ມີເສັ້ນຊາຍແດນທາງບົກ 187,864 ກິໂລແມັດ ທີ່ ໄດ້ຕິດກັບສອງແຂວງ ສະຫວັນນະເຂດ ແລະ ສາລະວັນ, ສປປ ລາວ; ເສັ້ນຊາຍແດນ ລາວ-ຫວຽດນາມ ຄຸ້ມຄອງໂດຍແຂວງສາລະວັນ ແລະ ກວາງຈີ ມີຄວາມຍາວ 79 ກິໂລແມັດ, ຄຸ້ມຄອງແຕ່ຫຼັກໝາຍ 608 ຫາຫຼັກໝາຍ 644 ລວມທັງ 40 ຈຸດທີ່ຕັ້ງ /42 ຫຼັກໝາຍແຫ່ງຊາດ ແລະຫຼັກໝາຍ[1]. ມີດ່ານຊາຍແດນສາກົນລາໄລ ແມ່ນ ສະດວກເພື່ອການເຊື່ອມຕໍ່ບົນເສັ້ນທາງແລວເສດຖະກິດຕາເວັນອອກ-ຕາເວັນຕົກ, ເປັນເສັ້ນ ທາງຍຸດທະສາດທີ່ມີຄວາມໝາຍສຳຄັນດ້ານເສດຖະກິດ ແລະ ການປ້ອງ ກັນຊາດບໍ່ພຽງແຕ່ຂອງສອງແຂວງເທົ່ານັ້ນ ຫາກຍັງແມ່ນ ຂອງທັງສອງປະເທດອີກ ດ້ວຍ.

---

[1] ປະຕິບັດເນື້ອໃນມະຕິ 31/NQ-CP ລົງວັນທີ 13 ພຶດສະພາ 2019 ຂອງລັດຖະບານກ່ຽວກັບ ການກຳນົດຂີດຂັ້ນແດນບໍລິຫານລະຫວ່າງແຂວງ ເທື່ອທຽນເຫ້ວ ແລະ ແຂວງກວາງຈີ ໃນ 2 ເຂດ ປະຫວັດສາດ, ເດືອນ 7/2021 ຄະນະຊີ້ນຳວຽກງານຊາຍແດນແຂວງ ເທື່ອທຽນເຫ້ວ ແລະ ແຂວງກວາງຈີ ໄດ້ຈັດຕັ້ງພິທີມອບ-ຮັບ ແລະ ຄຸ້ມຄອງເສັ້ນຊາຍແດນ ແລະ ຫຼັກໝາຍແຫ່ງຊາດ: 639.640.641.642.643.

ຈາກສາຍພົວພັນ "ບ້ານໃກ້ເຮືອນຄຽງ" ໃນໄລຍະຕົ້ນແຫ່ງການປົກປັກຮັກສາ ແລະສ້າງສາພັດທະນາປະເທດຊາດ, "ຄວາມສາມັກຄີແບບພິເສດ, ພັນທະມິດຕໍ່ສູ້" ໃນການຕໍ່ຕ້ານສັດຕູຮ່ວມກັນ, ແຂວງກວາງຈິ ແລະແຂວງສາລະວັນ ໄດ້ຊຸກຍູ້ "ສາຍພົວພັນມິດຕະພາບແບບພິເສດ, ການຮ່ວມມືຢ່າງຮອບດ້ານ" ໃນພາລະກິດປົກປັກຮັກສາ ແລະສ້າງສາພັດທະນາປະເທດຊາດ. ເສີມຂະຫຍາຍຄວາມສາມັກຄີອັນບໍລິສຸດຜຸດຜ່ອງ ລະຫວ່າງປະຊາຊົນສອງປະເທດໃນການຕໍ່ຕ້ານສັດຕູຮ່ວມກັນ, ມາຮອດປັດຈຸບັນນີ້, ແຂວງກວາງຈິ ແລະ ແຂວງສາລະວັນ ໄດ້ມີການພົວພັນຮ່ວມມືໃນຫຼາຍດ້ານ, ບັນລຸໄດ້ບັນດາຜົນງານທີ່ສຳຄັນ, ຊີວິດທາງດ້ານວັດຖຸ ແລະ ຈິດໃຈຂອງປະຊາຊົນ, ການປ້ອງກັນຄວາມສະຫງົບ ຢູ່ເຂດຊາຍແດນຂອງສອງແຂວງນັບມື້ນັບໄດ້ປົກກະຕິ, ປະກອບສ່ວນຊຸກຍູ້ໃຫ້ການພົວພັນແບບພິເສດລະຫວ່າງຫວຽດນາມ - ລາວ ນັບມື້ນັບພັດທະນາ.

ປີ 2022 ແມ່ນຂີດໝາຍສຳຄັນໃນປະຫວັດສາດແຫ່ງການພົວພັນຮ່ວມມືລະຫວ່າງສອງປະເທດ, ສະເຫຼີມສະຫຼອງ ແຫ່ງວັນສ້າງຕັ້ງສາຍພົວພັນທາງການທູດຫວຽດນາມ - ລາວ ຄົບຮອບ 60 ປີ (5/9/1962-5/9/2022) ແລະ ວັນເຊັນສົນທິສັນຍາມິດຕະພາບ ແລະ ການຮ່ວມມືລະຫວ່າງຫວຽດນາມ - ລາວ ຄົບຮອບ 45 ປີ (18/7/1977 – 18/7/2022). ເປັນສົນທິສັນຍາມີຄວາມໝາຍສຳຄັນທີ່ສຸດ, ແມ່ນພື້ນຖານທາງດ້ານນິຕິກຳທີ່ໜັກແໜ້ນໃຫ້ການເພີ່ມທະວີ ແລະ ເປີດກວ້າງການພົວພັນແບບພິເສດຫວຽດນາມ - ລາວ ໃນໄລຍະໃໝ່; ສ້າງພື້ນຖານໃຫ້ແກ່ສອງຝ່າຍເພື່ອຈະລົງນາມໃນບັນດາສັນຍາຮ່ວມມືລະຫວ່າງສອງປະເທດໃນໄລຍະຈະມາເຖິງ. ເພື່ອປົກປັກຮັກສາ, ເພີ່ມພູນຄູນສ້າງ ແລະ ເສີມຂະຫຍາຍ

ການພົວພັນແບບພິເສດຫວຽດນາມ - ລາວ, ລາວ - ຫວຽດນາມ, ການພົວພັນມິດຕະພາບຮ່ວມມືຢ່າງຮອບດ້ານ ລະຫວ່າງແຂວງກວາງຈິ ແລະ ແຂວງສາລະວັນໃນປັດຈຸບັນ ແລະ ອະນາຄົດ, ຄະນະໂຄສະນາສຶກສາແຂວງກວາງຈິ ໄດ້ສົມທົບກັບຄະນະໂຄສະນາອົບຮົມແຂວງສາລະວັນເພື່ອຮຽບຮຽງເອກະສານໂຄສະນາເຜີຍແຜ່ສອງພາສາຫວຽດນາມ - ລາວ **"ສາຍພົວພັນມິດຕະພາບ, ການຮ່ວມມືແບບພິເສດຫວຽດນາມ - ລາວ; ລະຫວ່າງແຂວງກວາງຈິ - ສາລະວັນ ແຕ່ປີ 1930 ມາຮອດປັດຈຸບັນ".** ເອກະສານລວມມີບັນດາເນື້ອໃນຕົ້ນຕໍຄື: ສະພາບລວມຂອງໄລຍະກໍ່ຮ່າງສ້າງຕົວຂຶ້ນ ແລະ ພັດທະນາສາຍພົວພັນແບບພິເສດຫວຽດນາມ - ລາວ, ລາວ - ຫວຽດນາມ ໃນວິວັດການຕໍ່ສູ້ປະຕິວັດ ແລະ ກິດຈະການປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດໃນປັດຈຸບັນ; ການພົວພັນມິດຕະພາບ, ການຮ່ວມມືລະຫວ່າງ ແຂວງກວາງຈິ ແລະ ແຂວງສາລະວັນ ຈາກເພື່ອນບ້ານ ໃກ້ຄຽງຕາມມູນເຊື້ອ, ແລ້ວຄຽງຂ້າງກັນໃນ ພາລະກິດຕໍ່ສູ້ຍາດເອົາເອກະລາດ ແຫ່ງຊາດ; ບັນດາຜົນງານທີ່ບັນລຸໄດ້ໃນສາຍພົວພັນມິດຕະພາບຢ່າງຮອບດ້ານ ແລະ ໂດຍພິເສດແມ່ນຂອງ 3 ແຂວງ ນັບແຕ່ໄດ້ໂຮມປະເທດຊາດເປັນເອກະພາບ ມາຮອດປັດຈຸບັນ; ສືບຕໍ່ເສີມສ້າງສາຍພົວພັນ ລະຫວ່າງແຂວງກວາງຈິ ແລະ ແຂວງສາລະວັນນັບມື້ນັບໜັ້ນຄົງ.

ເອກະສານໄດ້ຮຽບຮຽງຢ່າງພິຖີພິຖັນ ແລະ ຈິງຈັງ, ແມ່ນເອກະສານໂຄສະນາເຜີຍແຜ່ທີ່ມີຄວາມໝາຍອັນສຳຄັນ, ເພື່ອແຜ່ກະຈາຍໃຫ້ພະນັກງານ, ສະມາຊິກພັກ, ປະຊາຊົນ, ພິເສດແມ່ນຄົນຮຸ່ນໜຸ່ມໃຫ້ມີຄວາມເຂົ້າໃຈຢ່າງເລິກເຊິ່ງກວ່າກ່ຽວກັບສາຍພົວພັນສະໜິດແໜ້ນແຟ້ນ ຫວຽດນາມ - ລາວ, ສາຍພົວພັນລະຫວ່າງ

ແຂວງກວາງຈິ ແລະ ແຂວງສາລະວັນ, ປະກອບສ່ວນປົກປັກຮັກສາ ແລະ ພັດທະນາ ສາຍພົວພັນມິດຕະພາບທີ່ເປັນມູນເຊື້ອ, ສາມັກຄີ ແລະ ການຮ່ວມມືຢ່າງຮອບດ້ານ ລະຫວ່າງສອງປະເທດ.

ໃນຂະບວນການຮຽບຮຽງແນ່ນອນວ່າຈະມີຂໍ້ຜິດພາດ ແລະ ຂໍ້ຈຳກັດທີ່ຫຼີກລ່ຽງບໍ່ໄດ້, ຄະນະບັນນາ ທິການຂໍຮັບຮູ້ຢ່າງຈິງໃຈ ແລະ ນັບຖືບັນດາຄຳຄິດເຫັນປະກອບຂອງບັນດາຜູ້ເຖົ້າຜູ້ແກ່ປະຕິວັດ; ບັນດາພະນັກງານ, ນັກຮົບທີ່ເຄີຍເຂົ້າຮ່ວມການສູ້ຮົບ, ຕິດພັນ, ເສີມສ້າງ ແລະເພີ່ມທະວີສາຍພົວພັນມິດຕະພາບ, ຮອບດ້ານ ລະຫວ່າງແຂວງກວາງຈິ ແລະສາລະວັນ; ພ້ອມກັບບັນດາສະຫາຍ ແລະ ຜູ້ອ່ານ.

ໃນໂອກາດນີ້, ຄະນະບັນນາທິການ ຂໍສະແດງຄວາມຂອບໃຈມາຍັງຄະນະໂຄສະນາອົບຮົມ ແຂວງສາລະວັນ, ບັນດາ ໜ່ວຍງານ ແລະ ທ້ອງຖິ່ນ ທັງພາຍໃນ ແລະ ຕ່າງແຂວງທີ່ໄດ້ສົມທົບ ແລະ ສະໜັບ ສະໜູນ ບັນດາສາລະຄະດີອັນລ້ຳຄ່າ ເພື່ອ ປະກອບເຂົ້າໃນເອກະສານ.

*ກວາງຈິ, 8/2022*

## ກ. ສາຍພົວພັນມິດຕະພາບພິເສດ ຫວຽດນາມ-ລາວ

ໃນປະຫວັດສາດການພົວພັນສາກົນແຕ່ກ່ອນມາຮອດປັດຈຸບັນ, ສາຍພົວພັນມິດຕະພາບ, ຄວາມສາມັກຄີແບບພິເສດ ແລະ ການຮ່ວມມືຮອບດ້ານລະຫວ່າງ ຫວຽດນາມ ແລະ ລາວ ແມ່ນແບບຢ່າງທີ່ເປັນເອກະລັກສະເພາະຂອງໂລກ. ຜ່ານຜ່າຫຼາຍໄລຍະ ແລະ ເຫດການຂອງປະຫວັດສາດ, ສອງປະເທດ ຫວຽດນາມ - ລາວ ໄດ້ພ້ອມກັນອີງໃສ່ສາຍພູຫຼວງໃຫຍ່ໂຕມະໂຫຖານ, ຄຽງບ່າຄຽງໄຫຼ່ກັນ, ເພີ່ມພູນຄູນສ້າງສາຍພົວພັນສາມັກຄີແບບພິເສດຫວຽດນາມ - ລາວທີ່ຈີບງາມລ້ຳເລີດ. ເປັນແບບຢ່າງທີ່ຫາຍາກ ກ່ຽວກັບຄວາມສະໜິດຕິດພັນຢ່າງໜັ້ນແກ່ນ, ຈິງຮັກພັກດີ, ໂປ່ງໃສ ແລະ ມີປະສິດທິຜົນລະຫວ່າງສອງປະເທດ ໃນການຕໍ່ສູ້ເພື່ອເອກະລາດ, ເສລີພາບ ແລະ ຄວາມກ້າວໜ້າຂອງສັງຄົມ.

ດ້ວຍເສັ້ນຊາຍແດນລວມຍາວ 2.300 ກວ່າ ກິໂລແມັດ, ມີວັດທະນະທຳທີ່ຄ້າຍຄືກັນ, ສອງຊົນເຜົ່າຫວຽດນາມ ແລະ ລາວ ໄດ້ຮ່ວມມືກັນຂຽນບັນດາໜ້າປະຫວັດສາດທີ່ສະຫງ່າອົງອາດ, ປັກຮອຍບັນດາຫຼັກໝາຍອັນຮຸ່ງເຮືອງເຫຼືອງເຫຼື້ອມ ກ່ຽວກັບຄວາມຜູກພັນຮັກໄຄ່ເໝືອນດັ່ງອ້າຍນ້ອງຮ່ວມທ້ອງດຽວ, ເປັນຕາຍຮ່ວມກັນ: ປະຊາຊົນລາວໄດ້ຕັ້ງໜ້າຕໍ່ສູ້ຕ້ານ ລະບອບລ່າຫົວເມືອງຂຶ້ນ, ປະສານສົມທົບ, ສະໜັບສະໜູນການປະຕິວັດຫວຽດນາມ ໄລຍະ 1930-1939 ແລະ ປະຕິບັດການຂົນຂວາຍລຸກຮືຂຶ້ນດ້ວຍການປະກອບອາວຸດຍຶດອຳນາດໃນໄລຍະ 1939-

1945. ຮ່ວມມືຊ່ວຍເຫຼືອເຊິ່ງກັນ ແລະ ກັນ ຕ້ານການຮຸກຮານ ຂອງພວກລ່າເມືອງຂຶ້ນຝຣັ່ງ; ປະສານສົມທົບໃນການຕໍ່ສູ້ເພື່ອປະຕິບັດສັນຍາເຊີແນວ, ຕ້ານຍຸດທະສາດສົງຄາມພິເສດຂອງຈັກກະພັດອາເມລິກາ, ແລະສ້າງຕັ້ງສາຍພົວພັນທາງການທູດ (1954-1962); ພັດທະນາພັນທະມິດຕໍ່ສູ້, ເອົາຊະນະບັນດາຍຸດທະສາດສົງຄາມຂອງຈັກກະພັດອາເມລິກາ, ຍາດເອົາໄຊຊະນະຢ່າງສົມບູນ (1973-1975); ການພົວພັນແບບພິເສດຫວຽດນາມ - ລາວ, ລາວ - ຫວຽດນາມ ໃນໄລຍະທົດສອບ, ໄດ້ປູທາງໃຫ້ແກ່ການປ່ຽນໃໝ່ (1976 - 1986). ຄວາມສາມັກຄີແບບພິເສດ ແລະ ການຮ່ວມມືຮອບດ້ານ ຫວຽດນາມ - ລາວ, ລາວ - ຫວຽດນາມ ໃນໄລຍະປ່ຽນໃໝ່ ແລະການເຊື່ອມໂຍງເຂົ້າສາກົນ (1986 - ປັດຈຸບັນ).

ໃນວິວັດການປະຕິວັດດັ່ງກ່າວ, ແຕ່ລະບາດກ້າວພັດທະນາຂອງການປະຕິວັດລາວ ໄດ້ສ້າງກຳລັງໜູນໃຫ້ການປະຕິວັດຫວຽດນາມ ເພື່ອຍາດເອົາໄດ້ໄຊຊະນະ ແລະກົງກັນຂ້າມ, ການໄຊຊະນະຂອງປະຕິວັດຫວຽດນາມ ໄດ້ສ້າງເງື່ອນໄຂໃຫ້ການປະຕິວັດລາວມີຄວາມເຂັ້ມແຂງ ແລະໄດ້ຮັບໄຊຊະນະ. ການພົວພັນນັ້ນແມ່ນມາຈາກຄວາມຮຽກຮ້ອງພາວະວິໄສ ຂອງການ ຕໍ່ສູ້ປົດປ່ອຍຖືທາດແທ້ສາກົນກຳມາຊີບ, ພາໃຫ້ມີປະສິດທິຜົນຢ່າງຊັດເຈນ. ສະນັ້ນ, ສາຍພົວພັນນັ້ນຈຶ່ງກາຍເປັນມໍລະດົກ ອັນລ້ຳຄ່າ, ເປັນກົດເກນແຫ່ງການຄົງຕົວ ແລະ ພັດທະນາຂອງສອງປະເທດ ແລະ ທັງເປັນສາຍພົວພັນທີ່ຈົງຮັກພັກດີ, ບໍລິສຸດ, ພິເສດ ແລະຫາຍາກໃນການພົວພັນສາກົນ. ໃນພາລະກິດລວມນັ້ນ, ລາວ ແລະຫວຽດນາມ ໄດ້ກາຍເປັນເພື່ອນມິດ, ສະຫາຍ, ເປັນອ້າຍນ້ອງຮ່ວມທ້ອງແມ່ດຽວ, ຮ່ວມທຸກຮ່ວມສຸກ, ຮ່ວມສັດຕູດຽວກັນ, ຮ່ວມຂຸມຕະຄອງດຽວກັນ ຕໍ່ສູ້ກັບພວກລ່າເມືອງຂຶ້ນ

ຝລັ່ງ ແລະ ຈັກກະພັດອາເມລິກາ. ນັ້ນແມ່ນສາຍພົວພັນເຖິງວ່າແຕ່ກ່ອນຫຼືປັດຈຸບັນນີ້ກໍຫາຍາກ - ເປັນສາຍພົວພັນບ້ານໃກ້ເຮືອນຄຽງແບບທຳມະຊາດ, ມີປະຫວັດສາດອັນຍາວນານ, ຮ່ວມສາຍພູຫຼວງ, ຮ່ວມແມ່ນ້ຳຂອງ, ຮ່ວມອຸດົມຄະຕິ... ສາຍພົວພັນພິເສດ ຫວຽດນາມ - ລາວ, ລາວ - ຫວຽດນາມ ໄດ້ຜ່ານຜ່າການທົດສອບທີ່ດຸເດືອດເຄັ່ງຄັດຫຼາຍຢ່າງ. ດ້ວຍການເສຍສະຫຼະຢ່າງທຸກຍາກລຳບາກເພື່ອເອກະລາດ ແລະເສລີພາບ, ຄວາມຜາສຸກຂອງສອງປະເທດ ແລະ ປະຊາຊົນສອງປະເທດ ໄດ້ກາຍເປັນພະລັງອັນມະຫັດສະຈັນ ທີ່ນຳເອົາໄຊຊະນະອັນໃຫຍ່ຫຼວງຂອງຫວຽດນາມ ແລະລາວ ໃນການຕໍ່ສູ້ຍາດເອົາອຳນາດຕໍ່ສູ້ຕ້ານລ່າເມືອງຂຶ້ນຝຣັ່ງ ແລະຈັກກະພັດອາເມລິກາຜູ້ຮຸກຮານ; ດຳເນີນພາລະກິດປ່ຽນໃໝ່ພາສອງປະເທດພ້ອມກັນພັດທະນາໄປຕາມເສັ້ນທາງສັງຄົມນິຍົມຢ່າງສຳເລັດ. ສຳລັບປະຊາຊົນສອງປະເທດຫວຽດນາມ ແລະ ລາວ, ສາຍພົວພັນທີ່ຕິດພັນສະໜິດແໜ້ນ ໄດ້ຖືວ່າແມ່ນເຫດຜົນຂອງຊີວິດ, ເປັນຄວາມຜູກພັນຮັກໄຄ່ເລືອດເນື້ອເຊື້ອດຽວສະໜິດຊິດເຊື້ອ, ກ່ອນແລະຫຼັງ ເຊັ່ນດຽວກັນ, ບໍ່ສາມາດແຍກອອກຈາກກັນໄດ້.

ພິເສດໃນຫຼາຍທົດສະວັດທີ່ຜ່ານມາ, ສາຍພົວພັນມິດຕະພາບທີ່ເປັນມູນເຊື້ອອັນດີງາມ, ຄວາມຕິດພັນສັດຊື່ບໍລິສຸດລະຫວ່າງປະຊາຊົນສອງປະເທດໂດຍແມ່ນ ປະທານ ໂຮ່ຈີມິນ ແລະ ປະທານ ໄກສອນ ພົມວິຫານ ສ້າງຕັ້ງຂຶ້ນ, ໃຫ້ບັນດາການນຳຮຸ່ນສືບທອດ ຂອງສອງພັກ, ສອງລັດ ແລະ ປະຊາຊົນສອງປະເທດທຸ້ມເທເຫື່ອແຮງ ເພີ່ມພູນຄູນສ້າງ, ໄດ້ຫຼໍ່ຫຼອມຜ່ານຫຼາຍການທົດສອບ ແລະໄດ້ຝຶກຝົນຫຼໍ່ຫຼອມແບບຖະນຸຖະໜອມ, ພັດທະນາຢ່າງບໍ່ຢຸດຢັ້ງ ແລະ ໄດ້ກາຍເປັນສາຍພົວ

ພັນແບບພິເສດ, ຈີງຮັກພັກດີ, ບໍລິສຸດ ແລະເປັນແບບຢ່າງທີ່ຫາຍາກໃນສາຍພົວພັນສາກົນໃນປັດຈຸບັນນີ້.

ທ່ານປະທານໂຮ່ຈິມິນ ໄດ້ກ່າວວ່າ: “ສອງຊົນຊາດຫວຽດນາມ ແລະ ລາວ ໄດ້ດຳລົງຊີວິດຢູ່ຄຽງຄູ່ກັນບົນຜືນແຜ່ນດິນອັນດຽວກັນ, ມີຮ່ວມກັນສາຍພູຫຼວງ. ສອງຊົນຊາດພວກເຮົາໄດ້ເພິ່ງພາອາໄສເຊິ່ງກັນ ແລະ ກັນ ແລະ ຊ່ວຍເຫຼືອເຊິ່ງກັນ ແລະ ກັນ... ນ້ຳໃຈປະເທດບ້ານໃກ້ເຮືອນຄຽງອ້າຍນ້ອງ ຫວຽດ - ລາວ ເປັນໜ້າດູດດື່ມເຊິ່ງບໍ່ມີວັນທີ່ຈືດຈາງໄດ້”. ປະທານ ໄກສອນ ພົມວິຫານ ເຄີຍກ່າວໄວ້ວ່າ: “ເຖິງວ່າພູຈະເຈື່ອນ, ແມ່ນ້ຳລຳເຊຈະເຫືອດແຫ້ງ, ແຕ່ສາຍພົວພັນມິດຕະພາບ ລາວ-ຫວຽດນາມ ຈະໝັ້ນຄົງຂະໜົງແກ່ນ ຊົ່ວກາລະນານ”. ແນວຄິດອັນໃຫຍ່ຫຼວງຂອງການນຳສອງປະເທດໄດ້ກາຍເປັນເຂັມທິດຊີ້ນຳ, ເຊິ່ງໄດ້ພັກ, ລັດຖະບານ ແລະ ປະຊາຊົນສອງປະເທດປະຕິບັດຢ່າງສະເໝີຕົ້ນສະເໝີປາຍໃນຕະຫຼອດຊຸມປີຕໍ່ສູ້ຕ້ານສັດຕູຮ່ວມກັນ, ຍາດເອົາເອກະລາດ, ໃຫ້ປະເທດເປັນເອກະພາບສັນຕິພາບ, ກໍ່ສ້າງ, ປ່ຽນໃຫມ່, ເຊື່ອມໂຍງແລະ ພັດທະນາ.

ຫວນຄືນມູນເຊື້ອປະຫວັດສາດວິລະຊົນໃນເມື່ອກ່ອນ, ປະຊາຊົນສອງຊາດມີຄວາມເອກອ້າງທະນົງໃຈ ໃນຂະບວນການສ້າງສາ ແລະ ພັດທະນາສາຍພົວພັນແບບພິເສດ ແລະຫາຍາກລະຫວ່າງປະຊາຊົນສອງປະເທດ. ການກຳເນີດຂອງລັດຖະບານປະເທດ ສາທາລະນະລັດປະຊາທິປະໄຕຫວຽດນາມ (2/9/1945) ແລະ ລັດຖະບານລາວອິດສະຫຼະ (12/10/1945) ດ້ວຍບັນດາຄວາມມຸ່ງມາດປາດຖະໜາຂອງສອງຝ່າຍກ່ຽວກັບການສ້າງສາຍພົວພັນປອງດອງກັນ ແລະ ໝັ້ນແກ່ນ ເປັນໜຶ່ງໃນບັນດາພື້ນຖານ ເພື່ອນຳເອົາຄວາມສາມັກຄີ ແລະ

ຊ່ວຍເຫຼືອເຊິ່ງກັນ ແລະ ກັນ ຂຶ້ນສູ່ລະດັບພັນທະມິດຕໍ່ສູ້ໂດຍພື້ນຖານນິຕິກຳທຳອິດ ແມ່ນສົນທິສັນຍາຊ່ວຍເຫຼືອເຊິ່ງກັນ ແລະ ກັນ ລາວ - ຫວຽດນາມ ແລະ ສັນຍາວ່າ ດ້ວຍກອງທະຫານພັນທະມິດ ລາວ -ຫວຽດນາມ.

ວັນທີ 5 ກັນຍາ 1962, ຫວຽດນາມ ແລະ ລາວ ໄດ້ສ້າງຕັ້ງການພົວພັນທາງການທູດຢ່າງເປັນທາງການ, ໄດ້ໄຂໄລຍະໃໝ່ໃນປະຫວັດສາດຂອງການພົວພັນສອງປະເທດ. ພັນທະມິຕໍ່ສູ້ຂອງກອງທັບ ແລະ ປະຊາຊົນສອງປະເທດຫວຽດນາມ - ລາວ ນັບມື້ນັບໄດ້ເພີ່ມທະວີ ແລະ ສາຍພູຫຼວງທີ່ໃຫຍ່ໂຕມະໂຫຖານດ້ວຍສອງເບື້ອງສາຍພູຫຼວງຕາເວັນອອກ - ສາຍພູຫຼວງຕາເວັນຕົກ ໄດ້ກາຍເປັນພາບພົດທີ່ມີຊີວິດຊີວາຂອງສາຍພົວພັນແບບສະໜິດແໜ້ນ "ເຂົ້າເມັດຫັກ ຜັກເສັ້ນໜຶ່ງກໍແບ່ງປັນກັນກິນ" ໃນຊຸມປີທີ່ຫຍຸ້ງຍາກລຳບາກ ແຕ່ກໍເຕັມໄປດ້ວຍຄວາມສະຫງ່າອົງອາດ, ໄດ້ຮ່ວມກັນປະກອບສ່ວນອັນໃຫຍ່ຫຼວງເຂົ້າໃນການຊ່ວຍເຫຼືອປະຊາຊົນ ແລະກຳລັງປະກອບອາວຸດຂອງສອງປະເທດ ຜ່ານຈາກໄຊຊະນະໜຶ່ງໄປສູ່ອີກໄຊຊະນະໜຶ່ງ. ເຊິ່ງຍອດຍິ່ງສຸດແມ່ນວັນມະຫາໄຊໃນລະດູບານໃໝ່ 30 ເມສາ 1975 ຢູ່ ຫວຽດນາມ ແລະ ໄຊຊະນະ ວັນທີ 2 ທັນວາ 1975 ຢູ່ລາວ.

ພາຍຫຼັງຫວຽດນາມ ໄດ້ສຳເລັດການໂຮມປະເທດຊາດເປັນເອກະພາບ ແລະ ສາທາລະນະລັດ ປະຊາທິປະໄຕ ປະຊາທິປະໄຕ ປະຊາຊົນລາວ ໄດ້ເກີດຂຶ້ນໃນປີ 1975, ສາຍພົວພັນ ຫວຽດນາມ - ລາວ ໄດ້ກ້າວເຂົ້າສູ່ໄລຍະໃໝ່. ຈາກການເປັນພັນທະມິດເພື່ອຕໍ່ສູ້ຮ່ວມກັນໃນຊຸ້ມຕະຄອງດຽວກັນມາເປັນການຮ່ວມມືຮອບດ້ານລະຫວ່າງສອງປະເທດທີ່ມີເອກະລາດ ແລະອະທິປະໄຕ. ນັ້ນແມ່ນສາຍພົວພັນມິດຕະພາບ, ຄວາມສາມັກຄີແບບພິເສດ ແລະ ການຮ່ວມມືຮອບດ້ານລະຫວ່າງສອງ

ພັກ ແລະ ສອງລັດ ໂດຍອີງຕາມສົນທິສັນຍາມິດຕະພາບ ແລະ ການຮ່ວມມື ລະຫວ່າງຫວຽດນາມ - ລາວ ໄດ້ລົງນາມໃນວັນທີ 18 ກໍລະກົດ 1977. ເຫດການ ເປັນຂີດໝາຍບາດລ້ຽວໃນການພົວພັນລະຫວ່າງສອງປະເທດແມ່ນຄະນະຜູ້ແທນ ຂັ້ນສູງຂອງພັກ ແລະລັດຖະບານຫວຽດນາມ ນຳໂດຍທ່ານ ເລຂາທິການໃຫຍ່ ເລຢ້ວນ ແລະ ທ່ານນາຍົກລັດຖະມົນຕີ ຟ້າມວັນດົ່ງ ໄດ້ມາຢ້ຽມຢາມລາວຢ່າງເປັນ ທາງການແຕ່ວັນທີ 15-18 ກໍລະກົດ 1977. ໃນການຢ້ຽມຢາມຄັ້ງນີ້, ສອງປະເທດ ໄດ້ລົງນາມຢ່າງເປັນທາງການບັນດາສົນທິສັນຍາທີ່ເປັນຂີດໝາຍບາດລ້ຽວໃໝ່ໃນ ການພົວພັນລະຫວ່າງ 2 ປະເທດ, ລວມມີ: ສົນທິສັນຍາມິດຕະພາບ ແລະ ການ ຮ່ວມມືລະຫວ່າງ ສາທາລະນະລັດ ສັງຄົມນິຍົມ ຫວຽດນາມ ແລະ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ; ສົນທິສັນຍາວ່າດ້ວຍການວາງກຳນົດເຂດຊາຍແດນ ແຫ່ງຊາດ ລະຫວ່າງ ສາທາລະນະລັດສັງຄົມນິຍົມຫວຽດນາມ ແລະ ສາທາລະນະລັດ ປະຊາທິປະໄຕປະຊາຊົນລາວ; ໄດ້ອອກຖະແຫຼງການຮ່ວມກ່ຽວກັບການເພີ່ມທະວີ ຄວາມໄວ້ເນື້ອເຊື່ອໃຈ ແລະ ການຮ່ວມມືອັນຍາວນານລະຫວ່າງສອງປະເທດ. "ສອງຝ່າຍໃຫ້ຄຳໝັ້ນສັນຍາເພື່ອປົກປັກຮັກສາ ແລະ ພັດທະນາສາຍພົວພັນແບບພິ ເສດຫວຽດນາມ - ລາວ, ລາວ - ຫວຽດນາມ, ເພີ່ມທະວີຄວາມສາມັກຄີ ແລະ ເຊື່ອ ໃຈເຊິ່ງກັນ ແລະ ກັນ ຢ່າງບໍ່ຢຸດຢັ້ງ, ການຮ່ວມມືຢ່າງຍາວນານ ແລະ ການຊ່ວຍເຫຼືອ ເຊິ່ງກັນ ແລະ ກັນໃນທຸກດ້ານບົນຈິດໃຈຂອງລັດທິສາກົນກຳມະຊີບ ແລະ ບົນ ຫຼັກການຄວາມສະເໝີພາບຢ່າງສົມບູນ, ເຄົາລົບເອກະລາດ, ອະທິປະໄຕ ແລະ ຜືນ ແຜ່ນດິນອັນຄົບຖ້ວນຂອງກັນ, ເຄົາລົບຜົນປະໂຫຍດອັນຊອບທຳຂອງກັນ, ບໍ່ແຊກ ແຊງເຂົ້າວຽກງານພາຍໃນຂອງກັນ". ສົນທິສັນຍາດັ່ງກ່າວໄດ້ສ້າງຂອບກົດໝາຍ

ເພື່ອຊຸກຍູ້ການຮ່ວມມືຮອບດ້ານ. ໄດ້ລົງນາມໃນບັນດາເອກະສານ, ສັນຍາຮ່ວມມືຫຼາຍສະບັບ, ສ້າງການປ່ຽນແປງຍິ່ງໃຫຍ່ກ່ຽວກັບດ້ານຄຸນນະພາບການພົວພັນແບບພິເສດລະຫວ່າງສອງປະເທດໃນທຸກຂົງເຂດ ການເມືອງ, ເສດຖະກິດ, ການຕ່າງປະເທດ, ປ້ອງກັນຄວາມສະຫງົບ, ປ້ອງກັນຊາດ, ການສຶກສາ, ສາທາລະນະສຸກ, ວັດທະນະທຳ... ການຮ່ວມມືຢ່າງແໜ້ນແຟ້ນລະຫວ່າງ ສອງລັດຖະບານ ໄດ້ສ້າງສາຍຮ່ວມເຂົ້າກັນຢ່າງແໜ້ນແຟ້ນຜດ ຄ້ຳຊູກັນ ແລະ ສ້າງເງື່ອນໄຂສະດວກໃຫ້ແກ່ການພາລະກິດພັດທະນາຂອງທັງຫວຽດນາມ ແລະ ລາວ.

ການລົງນາມໃນບັນດາສົນທິສັນຍາ ຍັງມີຄວາມໝາຍສາກົນທີ່ສຳຄັນ, ຍົກສູງຈິດໃຈສາກົນອັນບໍລິສຸດລະຫວ່າງສອງປະເທດ ພວມພ້ອມກັນມຸ່ງໄປເຖິງຈຸດໝາຍສ້າງສາລັດທິສັງຄົມນິຍົມ ແລະເສີມຂະຫຍາຍ ອິດທິພົນຢ່າງຕັ້ງໜ້າໃນພາກພື້ນ. ພາຍຫຼັງໄດ້ລົງນາມໃນສົນທິສັນຍາມິດຕະພາບ ແລະ ການຮ່ວມມື, ການພົວພັນຮ່ວມມືຮອບດ້ານລະຫວ່າງຫວຽດນາມ - ລາວ ໄດ້ຮັບການປັບປຸງ, ປ່ຽນໃໝ່ ແລະ ພັດທະນາຢ່າງເລິກເຊິ່ງຢ່າງບໍ່ຢຸດຢັ້ງ. ເນື້ອໃນຂອງການຮ່ວມມືເພີ່ມຄວາມແທດຈິງ, ປະສິດທິຜົນການຮ່ວມມືສືບຕໍ່ໄດ້ຮັບການຍົກສູງ ແລະ ເພີ່ມທະວີໃນທຸກຂົງເຂດ. ການພົວພັນດ້ານການເມືອງໄດ້ຮັບການຊຸກຍູ້ຢ່າງແຮງ, ນັບມື້ນັບຕິດພັນກັນຢ່າງເຊື່ອໝັ້ນ, ສອງຝ່າຍໄດ້ສົມທົບກັນຈັດຕັ້ງບັນດາການຢ້ຽມຢາມ, ພົບປະ ລະຫວ່າງການນຳຂັ້ນສູງຂອງສອງພັກ ແລະ ສອງລັດ

ໃນທ້າຍຊຸມປີ 80, ຕົ້ນຊຸມປີ 90 ຂອງສະຕະວັດທີ XX ເປັນຕົ້ນມາ, ຄຽງຄູ່ກັບການປະຕິບັດນະໂຍບາຍການຕ່າງປະເທດທີ່ເປີດກວ້າງ, ລາວ ແລະ ຫວຽດນາມຍັງສືບຕໍ່ໃຫ້ບຸລິມະສິດຮັດແໜ້ນ ແລະ ພັດທະນາສາຍພົວພັນມິດຕະພາບພິເສດ

ລະຫວ່າງສອງປະເທດ. ຍິ່ງໄປກວ່ານັ້ນ, "ພາລະກິດປ່ຽນແປງໃໝ່ຢູ່ສອງປະເທດໃນໄລຍະນີ້ມີຫຼາຍຈຸດທີ່ຄ້າຍຄືກັນ ແລະກ່ຽວຂ້ອງກັນຢ່າງແໜ້ນແຟ້ນ. ທຸກການຜັນປ່ຽນດ້ານການເມືອງ, ສັງຄົມ ແລະ ເສດຖະກິດຂອງລາວຢູ່ໃນລະດັບຕ່າງກັນລ້ວນແຕ່ໄດ້ມີການຜົນກະທົບໂດຍກົງ ຕໍ່ຫວຽດນາມ ແລະ ກົງກັນຂ້າມ. ສະນັ້ນ, ເພີ່ມທະວີການພົວພັນຮ່ວມມືແມ່ນໜ້າທີ່ສຳຄັນຂອງພັກ, ລັດຖະບານ ແລະ ປະຊາຊົນລາວ ກໍຄືຫວຽດນາມ. ການພົວພັນຮ່ວມມືດ້ານການເມືອງລະຫວ່າງ ລາວ ແລະ ຫວຽດນາມໃນໄລຍະນີ້ ສອງຝ່າຍສືບຕໍ່ຮັກສາ ແລະ ຊຸກຍູ້ບັນດາການພົວພັນ ແລະ ແລກປ່ຽນສອງຝ່າຍ ໂດຍຜ່ານການ ຢ້ຽມຢາມ ແລະ ເຮັດວຽກຂອງຄະນະຜູ້ແທນຂັ້ນສູງ. ດ້ວຍທ່າອ່ຽງເປີດກວ້າງຮ່ວມມືໃນພາກພື້ນ ແລະ ສາກົນ, ເພື່ອຮັກສາສາຍພົວພັນມິດຕະພາບພິເສດ ແລະ ການຮ່ວມມືຮອບດ້ານ ລາວ - ຫວຽດນາມ ພັດທະນາຢ່າງບໍ່ຢຸດຢັ້ງ, ລັດຖະບານ 2 ປະເທດໄດ້ປັບປຸງບັນດາວິທີການ ແລະ ກົນໄກຮ່ວມມື.

ປີ 1991, ຫວຽດນາມ ແລະ ລາວ ໄດ້ລົງນາມໃນສັນຍາສຳຄັນຫຼາຍສະບັບ. ປີ 1992, ຄະນະກຳມະການຮ່ວມມືລະຫວ່າງລັດຖະບານ ຫວຽດນາມ - ລາວ ໄດ້ສ້າງຕັ້ງຂຶ້ນເພື່ອສ້າງເງື່ອນໄຂໃຫ້ລັດຖະບານ ສອງປະເທດຜັນຂະຫຍາຍບັນດາຂໍ້ຕົກລົງຮ່ວມມືໃຫ້ສະດວກກວ່າ. ຫວຽດນາມ ແລະ ລາວ ຕັ້ງໜ້າຜັນຂະຫຍາຍບັນດາສັນຍາລະຫວ່າງ ສອງລັດຖະບານ ແລະ ບັນດາຂໍ້ຕົກລົງຕ່າງໆທີ່ກອງປະຊຸມຂອງຄະນະກຳມະການລະຫວ່າງລັດຖະບານ; ຕັ້ງໜ້າຜັນຂະຫຍາຍຂໍ້ຕົກລົງວ່າດ້ວຍຍຸດທະສາດການຮ່ວມມືດ້ານເສດຖະກິດ, ວັດທະນະທຳ, ການສຶກສາ, ວິທະຍາສາດ ແລະ ເຕັກນິກ ຫວຽດນາມ - ລາວ; ເພີ່ມທະວີວຽກງານແນະນຳ, ກວດກາ, ຊຸກຍູ້, ຕັ້ງໜ້າລຶບລ້າງຄວາມຫຍຸ້ງຍາກ ແລະ ສິ່ງກີດຂວາງ, ສືບຕໍ່ການລົງນາມໃນເອກະສານຮ່ວມມື

ຫຼາຍສະບັບ, ສ້າງແລວທາງດ້ານກົດໝາຍຢ່າງຄົບຊຸດ ເພື່ອຊຸກຍູ້ການຮ່ວມມື ລະຫວ່າງສອງປະເທດ.

ກ້າວເຂົ້າສູ່ສະຕະວັດທີ XXI, ນີ້ແມ່ນໄລຍະທີ່ສອງປະເທດເພີ່ມທະວີ ຄວາມສາມັກຄີແບບພິເສດ, ການຮ່ວມມື ຮອບດ້ານທັງລວງກວ້າງ ແລະ ລວງເລິກ, ຄວາມເຊື່ອໝັ້ນ ແລະ ພັດທະນາ, ບົນພື້ນຖານ ສອງ ປະເທດໄດ້ບັນລຸບັນດາ ຜົນງານ ອັນສຳຄັນ, ມີຄວາມໝາຍທາງດ້ານປະຫວັດສາດໃນວິວັດການປ່ຽນໃໝ່. ບັນດາ ຜົນງານທີ່ບັນລຸໄດ້ຈາກການຮ່ວມມືດ້ານການເມືອງ, ການຕ່າງປະເທດ, ປ້ອງກັນຊາ ດ-ປ້ອງກັນຄວາມສະຫງົບຈົນຮອດດ້ານເສດຖະກິດ, ວັດທະນະທຳ, ວິທະຍາສາດ-ເຕັກນິກ, ການຮ່ວມມືລະຫວ່າງທ້ອງຖິ່ນ ໄດ້ປະກອບສ່ວນຊຸກຍູ້ຢ່າງຕັ້ງໜ້າເຂົ້າໃນ ການກໍ່ສ້າງ, ພັດທະນາ, ເຊື່ອມໂຍງເຂົ້າກັບພາກພື້ນ ແລະ ສາກົນຂອງແຕ່ລະປະເທດ. ຫຼາຍກິດຈະການ ແລະ ໂຄງການຮ່ວມມືຢ່າງແທດຈິງລະຫວ່າງສອງປະເທດຄື: ເຄືອ ຂ່າຍໂທລະຄົມ, ຄົມມະນາຄົມ, ໄຟຟ້ານ້ຳຕົກ, ປູກຢາງພາລາ, ກາເຟ, ໂຮງຮຽນ, ໂຮງໝໍ... ໄດ້ສ້າງສຳເລັດ ແລະ ນຳໃຊ້ຢູ່ຫຼາຍເຂດ, ເຂດຫ່າງໄກສອກຫຼີກ ແລະ ຫຍຸ້ງຍາກຂອງລາວ. ປະກອບສ່ວນສຳຄັນເຂົ້າໃນການ ພັດທະນາ ເສດຖະກິດ-ສັງຄົມ ແລະ ຍົກລະດັບຊີວິດການເປັນຢູ່ຂອງປະຊາຊົນ.

ພາຍຫຼັງ 30 ປີ ແຫ່ງການດຳເນີນການປ່ຽນໃໝ່ (ເດືອນ 11/2016), ສອງພັກໄດ້ອອກຖະແຫຼງການຮ່ວມທີ່ລະບຸແຈ້ງວ່າ: "ສອງຝ່າຍຢືນຢັນສາຍພົວພັນ ມິດຕະພາບທີ່ເປັນມູນເຊື້ອ, ຄວາມສາມັກຄີແບບພິເສດ ແລະ ການຮ່ວມມື ຮອບດ້ານ ຫວຽດນາມ - ລາວ ໄດ້ຮັບການຮັກສາເພີ່ມພູນຄູນສ້າງຈາກປະທານໂຮ່ຈິ ມິນ ທີ່ຍິ່ງໃຫຍ່ ແລະປະທານ ໄກສອນ ພົມວິຫານ, ປະທານ ສຸພານຸວົງ ທີ່ຮັກແພງ

ພ້ອມກັບບັນດາການນຳຂອງສອງພັກ, ສອງລັດ ແລະ ປະຊາຊົນສອງປະເທດ, ເຊິ່ງເປັນຊັບສິນບັດລວມອັນລ້ຳຄ່າຂອງສອງພັກ ແລະ ປະຊາຊົນສອງປະເທດ". ສອງຝ່າຍໄດ້ເຫັນດີຍົກລະດັບຈາກການພົວພັນ "ມິດຕະພາບແບບມູນເຊື້ອ" ຂຶ້ນເປັນ "ມິດຕະພາບທີ່ຍິ່ງໃຫຍ່" ເນື່ອງໃນໂອກາດເດີນທາງໄປຢ້ຽມຢາມລາວຢ່າງເປັນທາງການຂອງທ່ານເລຂາທິການໃຫຍ່ ຫງວຽນຟູ໋ຈ້ອງ (ວັນທີ 2 ກຸມພາ 2019) ຖືວ່າເປັນຂີດໝາຍປະຫວັດສາດທີ່ສຳຄັນ; ສ້າງບາດກ້າວບຸກທະລຸໃນການຮ່ວມມືລະຫວ່າງສອງປະເທດ. ຜ່ານບັນດາການພົບປະຂັ້ນສູງເປັນປະຈຳທຸກໆປີ, ສອງຝ່າຍໄດ້ແລກປ່ຽນບັນດາບົດຮຽນອັນລ້ຳຄ່າໃນຂະບວນການປ່ຽນໃໝ່ ແລະ ສ້າງສາປະເທດຊາດ.

ພິເສດ, ວັນທີ 28 ມິຖຸນາ 2021, ທ່ານເລຂາທິການໃຫຍ່, ປະທານປະເທດ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ທ່ານ ທອງລຸນ ສີສຸລິດ ໄດ້ມາຢ້ຽມຢາມຫວຽດນາມ ເຊິ່ງເປັນເຫດການການເມືອງທີ່ມີຄວາມໝາຍອັນສຳຄັນ. ສອງຝ່າຍໄດ້ອອກຖະແຫຼງການຮ່ວມ, ໄດ້ເຊັນເອກະສານຮ່ວມມືສຳຄັນ 7 ສະບັບ ແລະ ບາງສະບັບສັນຍາເສດຖະກິດລະຫວ່າງວິສາຫະກິດ ຫວຽດນາມ - ລາວ, ພ້ອມກັນນັ້ນໄດ້ແລກປ່ຽນຄຳເຫັນກ່ຽວກັບບັນດາບັນຫາພາກພື້ນ ແລະ ສາກົນທີ່ສອງຝ່າຍໄດ້ເອົາໃຈໃສ່. ນີ້ກໍເປັນການພິສູດໃຫ້ເຫັນຕື່ມວ່າ ການພົວພັນຮ່ວມມືລະຫວ່າງສອງພັກ ແລະ ລັດຖະບານນັບມື້ນັບພັດທະນາຢ່າງເລິກເຊິ່ງ, ສ້າງບາດກ້າວບຸກທະລຸ, ພາໃຫ້ສາຍພົວພັນມິດຕະພາບທີ່ຍິ່ງໃຫຍ່, ຄວາມສາມັກຄີແບບພິເສດ ແລະ ການຮ່ວມມືຮອບດ້ານ ຫວຽດນາມ - ລາວ ໄດ້ຮັບປະສິດທິຜົນ ແລະ ແທດຈິງໃນທຸກຂົງເຂດ, ປະກອບສ່ວນໃນການປະຕິບັດມະຕິກອງປະຊຸມໃຫຍ່ຂອງແຕ່ລະ

ພັກ, ຍຸດທະສາດການຮ່ວມມື 10 ປີ ລະຫວ່າງຫວຽດນາມ - ລາວ . ນີ້ແມ່ນການ ຢືນຢັນນະໂຍບາຍການຕ່າງປະເທດກ່ອນ ແລະຫຼັງກໍເປັນແບບດຽວກັນໃນການປົກ ປັກຮັກສາ ແລະ ເສີມຂະຫຍາຍການພົວພັນຮ່ວມມືແບບພິເສດຫວຽດນາມ - ລາວ.

ການພົວພັນການຕ່າງປະເທດຂອງປະຊາຊົນ ລະຫວ່າງຫວຽດນາມ - ລາວ ແມ່ນການເຄື່ອນໄຫວອັນໜຶ່ງທີ່ສຳຄັນ. ໃນຊຸມປີທີ່ຜ່ານມາ, ການເຄື່ອນໄຫວນີ້ໄດ້ ຮັບຄວາມເອົາໃຈໃສ່ເປັນພິເສດ ແລະ ມີການພັດທະນາຢ່າງກົມກຽວກັນ. ສອງຝ່າຍ ໄດ້ສ້າງຕັ້ງສະມາຄົມມິດຕະພາບ ຫວຽດນາມ - ລາວ, ລາວ - ຫວຽດນາມ ເປັນ ຮ້ອຍແຫ່ງ; ບັນດາຄະນະກຳມະການສັນຕິພາບ ແລະ ຄວາມສາມັກຄີຫວຽດນາມ - ລາວ; ບັນດາສະໂມສອນມິດຕະພາບແຕ່ສູນກາງຮອດທ້ອງຖິ່ນ ໄດ້ມີການສົມທົບ ຢ່າງ ແໜ້ນແຟ້ນ, ລາຍການເຄື່ອນໄຫວໄດ້ອຸດົມສົມບູນ ແລະມີຄວາມໝາຍແທດ ຈິງຄື: ງານວາງສະແດງຮູບແຕ້ມ ແລະ ຮູບພາບ, ຈັດຕັ້ງບັນດາການໂອ້ລົມ ສົນທະນາ, ກອງປະຊຸມສຳມະນາ, ງານແຂ່ງຂັນ... ດ້ວຍຫົວຂໍ້ກ່ຽວກັບການພົວພັນ ຫວຽດນາມ - ລາວ ດ້ວຍບັນດາການເຄື່ອນໄຫວທີ່ມີເນື້ອແທ້, ກວ້າງຂວາງ, ປະສິດທິຜົນ, ດຶງດູດສະມາຊິກຫຼາຍແສນຄົນ ເຊິ່ງເປັນນັກຮົບເກົ່າອາສາສະໝັກ, ອະດີດນັກຊ່ຽວຊານ, ອະດີດນັກສຶກສາຕ່າງປະເທດ, ບັນດານັກວິສາຫະກິດ ແລະ ປະຊາຊົນທຸກຊັ້ນວັນນະເປັນຈຳນວນຫຼວງຫຼາຍ ຈາກທົ່ວທຸກຂົງເຂດ ແລະທຸກຮຸ່ນ ຄົນ ລ້ວນແຕ່ໄດ້ເຂົ້າຮ່ວມຢ່າງຕັ້ງໜ້າ.

ດ້ວຍເສັ້ນຊາຍແດນລວມຍາວກວ່າ 2.300 ກິໂລແມັດ, ການຮ່ວມມືໃນຂົງ ເຂດປ້ອງກັນຊາດ, ປ້ອງກັນຄວາມສະຫງົບລະຫວ່າງສອງປະເທດບັນລຸໄດ້ບັນດາ ໝາກຜົນທີ່ສຳຄັນ. ສອງຝ່າຍເຫັນດີເພີ່ມທະວີການຮ່ວມມືເພີ່ມເຕີມກ່ຽວກັບດ້ານ

ປ້ອງກັນຊາດ, ປ້ອງກັນຄວາມສະຫງົບ, ຮັບປະກັນເປັນບ່ອນອີງອັນໜັກແໜ້ນໃຫ້ກັນເພື່ອປະເຊີນກັບບັນດາສິ່ງທ້າທາຍນັບມື້ນັບຫຼາຍຮູບແບບ, ສັບສົນ, ປະກອບສ່ວນຮັກສາຄວາມສະຖຽນລະພາບດ້ານການເມືອງ, ປ້ອງກັນຊາດ ແລະປ້ອງກັນຄວາມສະຫງົບ ຢູ່ແຕ່ລະປະເທດ. ສ້າງເສັ້ນຊາຍແດນ ຫວຽດນາມ ແລະ ລາວ ໃຫ້ມີສັນຕິພາບ, ມິດຕະພາບ, ສະຖຽນລະພາບ, ຮ່ວມມື ແລະ ພັດທະນາແບບຍືນຍົງ. ໂຄງການປັກຫຼັກໝາຍຖີ່ ແລະບູລະນະ ລະບົບຫຼັກໝາຍແຫ່ງຊາດ ຫວຽດນາມ - ລາວ ໄດ້ສຳເລັດແລ້ວ; ສັນຍາ ແລະອະນຸສັນຍາທີ່ກ່ຽວຂ້ອງໄດ້ລົງນາມໃນວັນທີ 16 ມີນາ 2016. ນີ້ແມ່ນບາດກ້າວສຳຄັນໃນການເພີ່ມທະວີການຄຸ້ມຄອງຊາຍແດນແຫ່ງຊາດ ຫວຽດນາມ - ລາວ, ປະກອບສ່ວນກໍ່ສ້າງພື້ນຖານນິຕິກຳທີ່ໝັ້ນແກ່ນໃຫ້ແກ່ການຮ່ວມມືລະຫວ່າງ ສອງຝ່າຍໃນບັນຫາປ້ອງກັນ ແລະ ຄຸ້ມຄອງຊາຍແດນຜືນແຜ່ນດິນ[2].

ໃນຂົງເຂດເສດຖະກິດ, ການຄ້າ, ສອງຝ່າຍໄດ້ສືບຕໍ່ເອົາໃຈໃສ່ຊຸກຍູ້ ແລະເຈລະຈາລົງນາມໃນຫຼາຍ ເອກະສານທີ່ສຳຄັນ, ປະກອບສ່ວນປັບປຸງກົດໝາຍກ່ຽວກັບການຄ້າໃຫ້ສົມບູນແບບ ແລະບົນພື້ນຖານສະເໝີພາບ ພ້ອມກັນມີຜົນປະ ໂຫຍດ, ເຄົາລົບມູນເຊື້ອການຮ່ວມມື ແລະປະເພນີການຄ້າສາກົນ: ສັນຍາການຄ້າສອງຝ່າຍສະບັບໃໝ່, ສັນຍາການຄ້າຊາຍແດນ, ອະນຸສັນຍາສະບັບປັບປຸງສັນຍາການຢືມ

---

[2] ສອງຝ່າຍໄດ້ບູລະນະ ແລະ ປັກຫຼັກໝາຍໃໝ່ 905 ຈຸດທີ່ຕັ້ງ, ເທົ່າກັບ 1.002 ເສົາຫຼັກໝາຍ, ໃນນັ້ນ ໄດ້ເພີ່ມ 168 ເສົາ; ກຳນົດລວມລວງຍາວຂອງເສັ້ນຊາຍແດນຫວຽດນາມ - ລາວ ແມ່ນ 2,337,459 ກິໂລແມັດ.

ທາງສິນຄ້າຫວຽດນາມ - ລາວ, ຮ່າງແຜນພັດທະນາການຄ້າຊາຍແດນ ຫວຽດນາມ - ລາວ...; ເປັນເຈົ້າການ ແລະ ຕັ້ງໜ້າຜັນຂະຫຍາຍບັນດາເອກະສານທີ່ໄດ້ລົງນາມ ແລະ ກົນໄກ “ປະຕູດຽວ” ຢູ່ດ່ານຊາຍແດນ ສາກົນ ລາວບາວ-ແດນສະຫວັນ; ເພີ່ມທະວີບັນດາມາດຕະການສົ່ງເສີມການຄ້າ, ສ້າງເງື່ອນໄຂໃຫ້ການຄ້າສອງຝ່າຍໄດ້ພັດທະນາແບບຍືນຍົງ. ດ້ວຍຄວາມມານະພະຍາຍາມ, ການແລກປ່ຽນການຄ້າ ຫວຽດນາມ - ລາວ ນັບມື້ນັບເພີ່ມຂຶ້ນຢ່າງບໍ່ຢຸດຢັ້ງ. ໃນໄລຍະ 2016 – 2020, ວົງເງິນການຄ້າໄດ້ຂະຫຍາຍຕົວ, ມາຮອດປະຈຸບັນ ບັນລຸໄດ້ 1 ຕື້ ກວ່າ USD ແລະ ໄດ້ມີບັນດາບາດກ້າວພັດທະນາຢ່າງຕັ້ງໜ້າ ດ້ວຍບັນດາການຫັນປ່ຽນ ທາງດ້ານຄຸນນະພາບ ແບບຍືນຍົງ[3]. ມາຮອດປະຈຸບັນ, ຫວຽດນາມ ຢູ່ໃນອັນດັບທີ 3 ຂອງບັນດາປະເທດທີ່ໄດ້ລົງທຶນຢູ່ລາວ (ຖັດຈາກ ຈີນ ແລະ ໄທ) ມີ 209 ໂຄງການທີ່ຍັງມີຜົນສັກສິດ, ຍອດຈຳນວນທຶນຈົດທະບຽນປະມານ 5,18 ຕື້ USD, ເພີ່ມຂຶ້ນ

---

[3] ໃນການຢ້ຽມຢາມຫວຽດນາມ ຂອງ ທ່ານ ທອງລຸນ ສີສຸລິດ, ນາຍົກລັດຖະມົນຕີ ແຫ່ງ ສປປ ລາວ, ສອງຝ່າຍໄດ້ເຫັນດີສືບຕໍ່ຊຸກຍູ້ບັນດາມາດຕະການສົ່ງເສີມການຄ້າ ເພື່ອພາວົງເງິນສອງສົ້ນໄດ້ເຕີບໂຕຢ່າງປົກກະຕິ ແຕ່ 10% – 15%/ ປີ”.

ແຕ່ປີ 2016 ມາຮອດ 2020, ສອງຝ່າຍໄດ້ຕັ້ງໜ້າປະຕິບັດ ແລະ ໄດ້ເອົາເຂົ້ານຳໃຊ້ 28 ກິດຈະການ ແລະ ໂຄງການທີ່ນຳໃຊ້ແຫຼ່ງທຶນຊ່ວຍເຫຼືອ, ໃນນັ້ນມີໂຄງການຈຸດສຸມເຊັ່ນ: ໂຮງໝໍມິດຕະພາບຢູ່ແຂວງຫົວພັນ ແລະ ແຂວງຊຽງຂວາງຂອງລາວ. ພິເສດ, ສອງຝ່າຍໄດ້ສຳເລັດໂຄງການກໍ່ສ້າງຫໍສະພາແຫ່ງຊາດລາວ ຫຼັງໃໝ່. ນີ້ແມ່ນຂອງຂວັນຂອງພັກ, ລັດ ແລະ ປະຊາຊົນ ຫວຽດນາມມອບໃຫ້ແກ່ພັກ, ລັດ ແລະ ປະຊາຊົນລາວ, ເຊິ່ງເປັນເຄື່ອງໝາຍແຫ່ງການພົວພັນແບບພິເສດ ຫວຽດນາມ - ລາວ.

35% ເມື່ອທຽບໃສ່ ປີ 2010[4] ກ່ຽວກັບດ້ານໂຄງປະກອບການລົງທຶນ, ສຸມໃສ່ຕົ້ນຕໍແມ່ນບັນດາຂົງເຂດພະລັງງານໄຟຟ້ານໍ້າຕົກປະມານ 26%; ກະສິກໍາ-ປ່າໄມ້ 23%; ບໍລິການພື້ນຖານໂຄງລ່າງ 20%; ການຂຸດຄົ້ນບໍ່ແຮ່ 19%; ການເງິນ, ທະນາຄານ 3%. ໄລຍະ 2021 – 2025, ຫວຽດນາມ ໄດ້ຮັບຮອງເອົາບ້ວງຊ່ວຍເຫຼືອລ້າໃຫ້ລາວເກືອບ 3.600 ຕື້ດົ່ງ (ເພີ່ມຂຶ້ນ 10% ເມື່ອທຽບໃສ່ໄລຍະກ່ອນ); ປີ 2021, ໄດ້ຈັດວາງການຊ່ວຍເຫຼືອ 715 ກວ່າ ຕື້ດົ່ງ. ໃນປີ 2021, ມີ 03 ໂຄງການຊ່ວຍເຫຼືອໄດ້ເປີດ ແລະ ນໍາໃຊ້, ພິເສດແມ່ນກິດຈະການຫໍສະພາແຫ່ງຊາດລາວ. ໂຄງການໃຫຍ່ຈໍານວນໜຶ່ງໄດ້ສ້າງສໍາເລັດ, ເສີມຂະຫຍາຍຢ່າງມີປະສິດທິຜົນ, ສ້າງວຽກເຮັດງານທໍາໃຫ້ແກ່ປະຊາຊົນລາວ, ປະກອບສ່ວນຢ່າງຕັ້ງໜ້າເຂົ້າໃນການພັດທະນາຂອງແຕ່ລະປະເທດ. ບັນດາກົນໄກບຸລິມະສິດກ່ຽວກັບພາສີນໍາເຂົ້າສົ່ງອອກສໍາລັບສິນຄ້າ ທີ່ມີແຫຼ່ງກໍາເນີດຈາກສອງປະເທດ ສືບຕໍ່ໄດ້ປະຕິບັດຕາມບັນຊີລາຍຊື່ນັບມື້ນັບເປີດກວ້າງ. ຫຼາຍໂຄງການລົງທຶນໄດ້ເສີມຂະຫຍາຍຄວາມປະສິດທິຜົນ, ການຜະລິດ ແລະ ດໍາເນີນທຸລະກິດ ໄດ້ມີຜົນກໍາໄລ, ປະກອບສ່ວນຢ່າງ

[4] ແຕ່ປີ 2016 ມາຮອດ 2020, ສອງຝ່າຍໄດ້ຕັ້ງໜ້າປະຕິບັດ ແລະ ໄດ້ເອົາເຂົ້ານໍາໃຊ້ 28 ກິດຈະການ ແລະ ໂຄງການທີ່ນໍາໃຊ້ແຫຼ່ງທຶນຊ່ວຍເຫຼືອ, ໃນນັ້ນມີໂຄງການຈຸດສຸມເຊັ່ນ: ໂຮງໝໍມິດຕະພາບຢູ່ແຂວງຫົວພັນ ແລະ ແຂວງຊຽງຂວາງຂອງລາວ. ພິເສດ, ສອງຝ່າຍໄດ້ສໍາເລັດໂຄງການກໍ່ສ້າງຫໍສະພາແຫ່ງຊາດລາວ ຫໍໃໝ່. ນີ້ແມ່ນຂອງຂວັນຂອງພັກ, ລັດ ແລະ ປະຊາຊົນ ຫວຽດນາມ ມອບໃຫ້ແກ່ພັກ, ລັດ ແລະ ປະຊາຊົນລາວ, ເຊິ່ງເປັນເຄື່ອງໝາຍແຫ່ງການພົວພັນແບບພິເສດ ຫວຽດນາມ - ລາວ.

ຕັ້ງໜ້າເຂົ້າໃນການພັດທະນາຂອງສອງປະເທດ, ສ້າງວຽກເຮັດງານທຳ, ເພີ່ມສະຫວັດດີການສັງຄົມ, ຊ່ວຍລາວປະຕິບັດໄດ້ດີນະໂຍບາຍລຶບລ້າງຄວາມທຸກຍາກ.

ກ່ຽວກັບການຄົມມະນາຄົມ, ສອງຝ່າຍໄດ້ສືບຕໍ່ປະຕິບັດບົດບັນທຶກຊ່ວຍຈຳລະຫວ່າງສອງລັດຖະບານ ກ່ຽວກັບຍຸດທະສາດການຮ່ວມມືດ້ານຄົມມະນາຄົມໄລຍະ 2016 - 2025, ວິໄສທັດຮອດປີ 2030, ຕາມນັ້ນ, ສອງຝ່າຍໄດ້ສົມທົບຄົ້ນຄວ້າ ແລະ ຊຸກຍູ້ ຊອກຫາແຫຼ່ງທຶນເພື່ອຜັນຂະຫຍາຍບັນດາໂຄງການຈຸດສຸມຄື: ເສັ້ນທາງດ່ວນ ຮ່າໂນ້ຍ-ວຽງຈັນ, ທາງລົດໄຟຫວູງແອ່ງ-ເຕີນເອີບ-ທ່າແຂກ-ວຽງຈັນ ແລະ ໂຄງການເຊື່ອມຕໍ່ຄົມມະນາຄົມທີ່ສຳຄັນອື່ນໆ. ແຕ່ລະກ້າວແກ້ໄຂຄວາມຫຍຸ້ງຍາກ, ຂໍ້ຄົງຄ້າງເພື່ອຊຸກຍູ້ບັນດາໂຄງການຄື: ສະໜາມບິນ ໜອງຄ້າງ, ທ່າກຳປັ່ນ 1, 2 ແລະ 3 ທ່າກຳປັ່ນ ຫວູແອ່ງ.

ກ່ຽວກັບອຸດສະຫະກຳພະລັງງານໄຟຟ້າ, ສອງຝ່າຍໄດ້ເອົາໃຈໃສ່ຊຸກຍູ້ ແລະ ບັນລຸບາງໝາກຜົນທີ່ຕັ້ງໜ້າ. ສອງຝ່າຍໄດ້ລົງນາມໃນບົດບັນທຶກຊ່ວຍຈຳລະຫວ່າງລັດຖະບານສອງປະເທດກ່ຽວກັບການພັດທະນາໂຄງການໄຟຟ້ານ້ຳຕົກຢູ່ລາວ ແລະ ການຊື້-ຂາຍໄຟຟ້າລະຫວ່າງສອງປະເທດຮອດປີ 2030 ດ້ວຍປະລິມານໄຟຟ້າທັງໝົດ 5000 MW ແລະ ສັນຍາວ່າດ້ວຍການຮ່ວມມືພັດທະນາບັນດາກິດຈະການພະລັງງານໄຟ້າ ແລະບໍ່ແຮ່[5]; ໄດ້ລົງນາມບົດບັນທຶກຊ່ວຍຈຳວ່າດ້ວຍການຮ່ວມມືໃນການຊື້-ຂາຍໄຟຟ້າຈາກບັນດາກິດຈະການໄຟຟ້າຂອງລາວ. ຜັນຂະຫຍາຍ

---

[5] ສອງໂຄງການທີ່ດີເດັ່ນຂອງບັນດາວິສາຫະກິດຫວຽດນາມ ແມ່ນໂຄງການເຂື່ອນໄຟຟ້າເຊກະໝານ 1 ແລະ ເຊກະໝານຊານໄຊ

ໂຄງການກໍ່ສ້າງເຂື່ອນໄຟຟ້າຫຼວງພະບາງ, ແກ້ໄຂ ບັນຫາ ເຂື່ອນໄຟຟ້າ ເຊກະໝານ 3, ຫວຽດນາມ ໄດ້ຊື້ໄຟຟ້າຈາກ 2 ໂຮງງານ ດ້ວຍກຳລັງຕິດຕັ້ງ 572 ເມກາວັດ ແລະ ເຊັນສັນຍາຊື້ ໄຟຟ້າຈາກລາວ 20 ສະບັບ, ດ້ວຍກຳລັງຕິດຕັ້ງ 1500 ເມກາວັດ…

ໃນຂົງເຂດວັດທະນະທຳ, ການສຶກສາ, ສາທາລະນະສຸກ, ການທ່ອງທ່ຽວ, ວິທະຍາສາດ ແລະ ເຕັກນິກ, ສອງຝ່າຍຫວຽດນາມ - ລາວ ມີຄວາມສົນໃຈເປັນພິເສດ. ໃນນັ້ນ, ແຜນຮ່າງຍົກສູງຄຸນນະພາບ ແລະ ປະສິດທິຜົນການຮ່ວມມືຫວຽດນາມ - ລາວ ໃນຂົງເຂດການສຶກສາ ແລະ ພັດທະນາຊັບພະຍາກອນມະນຸດ ໄລຍະ 2011 - 2020 ໄດ້ສ້າງການປ່ຽນແປງຢ່າງຕັ້ງໜ້າໃນວຽກງານບຳລຸງສ້າງແຫຼ່ງບຸກຄະລາກອນຂອງລາວ. ໄລຍະ 2021-2030, ສອງຝ່າຍໄດ້ລົງນາມ ແລະ ຜັນຂະຫຍາຍແຜນຮ່າງຍົກສູງຄຸນນະພາບ ແລະ ປະສິດທິຜົນການຮ່ວມມືຫວຽດນາມ - ລາວ ໃນຂົງເຂດການສຶກສາ ແລະ ພັດທະນາ ແຫຼ່ງ ຊັບພະຍາກອນມະນຸດ ໄລຍະ 2021 – 2030 ຕາມການຕົກລົງແຕ່ລະປີຫວຽດນາມຈະໃຫ້ລາວທຶນການບຳລຸງ ແລະອົບຮົມ 1,000 ກວ່າທຶນ, ແລະລາວໃຫ້ຫວຽດນາມ 60 ທຶນ. ໂດຍສະເພາະໃນປີ 2022, ຫວຽດນາມໃຫ້ລາວ 1.100 ທຶນ ການສຶກສາ. ການຝຶກອົບຮົມຖັນແຖວພະນັກງານ ແລະ ຊັບພະຍາກອນມະນຸດຂອງລາວນັບມື້ນັບໄດ້ເພີ່ມທະວີທັງດ້ານປະລິມານ ແລະ ຄຸນນະພາບ[6]. ໃນຂົງເຂດສາທາລະນະສຸກ, ວຽກ

[6] ໄລຍະ 2011-2020, ຫວຽດນາມ ໄດ້ຝຶກອົບຮົມໃຫ້ລາວເກືອບ 30.000 ຄົນ ດ້ວຍໂຄງປະກອບອາຊີບ ແລະ ລະດັບການຝຶກອົບຮົມທີ່ແຕກຕ່າງກັນ, ໃນນັ້ນຕາມສັນຍາແມ່ນເກືອບ

ງານກວດພະຍາດ, ປິ່ນປົວພະຍາດໃຫ້ພະນັກງານ ແລະ ປະຊາຊົນລາວຢູ່ຫວຽດນາມ, ໂດຍພິເສດແມ່ນບັນດາແຂວງທີ່ມີຮ່ວມເສັ້ນຊາຍແດນ ແລະວຽກງານສົມທົບເພື່ອກວດພະຍາດ ແລະ ປິ່ນປົວພະຍາດທາງໄກ ສືບຕໍ່ໄດ້ເອົາໃຈໃສ່ ແລະ ຊຸກຍູ້. ຫວຽດນາມ ກຳລັງໜູນຊ່ວຍລາວສ້າງໂຮງໝໍມິດຕະພາບໃໝ່ 2 ແຫ່ງຢູ່ 2 ແຂວງ (ແຂວງຫົວພັນດ້ວຍມູນຄ່າປະມານ 20 ລ້ານ USD ແລະ ແຂວງຊຽງຂວາງດ້ວຍມູນຄ່າປະມານ 17,6 ລ້ານ USD). ຫວຽດນາມ ຍາມໃດກໍ່ຕັ້ງໜ້າໜູນຊ່ວຍລາວກ່ຽວກັບປະສົບການ, ບຳລຸງສ້າງພະນັກງານແພດ, ອຸປະກອນການແພດ...; ປະສານສົມທົບຢ່າງແໜ້ນແຟ້ນໃນວຽກງານປ້ອງກັນ ແລະ ຄວບຄຸມການແຜ່ລະບາດ Covid-19.

ຄຽງຄູ່ກັບການຮ່ວມມືໃນຂອບເຂດສອງຝ່າຍ, ຄວາມສາມັກຄີແບບອ້າຍນ້ອງລະຫວ່າງຫວຽດນາມ ແລະ ລາວ ກໍ່ໄດ້ຮັບການສະແດງໃຫ້ເຫັນຢ່າງຈະແຈ້ງ ດ້ວຍຄວາມເຫັນດີເຫັນພ້ອມສູງຢູ່ບັນດາເວທີປາໄສພາກພື້ນ ແລະ ສາກົນ ເຊັ່ນ: ສະຫະປະຊາຊາດ, ສະມາຄົມບັນດາປະເທດອາຊີອາຄະເນ (ອາຊຽນ), ອົງການຮ່ວມມືເສດຖະກິດຍຸດທະສາດສາມແມ່ນ້ຳ (ACMECS), ເວທີປາໄສຮ່ວມມືອາຊີ - ເອີລົບ (ASEM), ເຂດສາມຫຼ່ຽມພັດທະນາກຳປູເຈຍ - ລາວ - ຫວຽດນາມ(CLV), ຮ່ວມມື ກຳປູເຈຍ - ລາວ - ມຽນມາ - ຫວຽດນາມ (CLMV), ອົງການຍຸດທະສາດຮ່ວມມືເສດຖະກິດ Ayeyarwady - Chao Phraya - ແມ່ນ້ຳຂອງ

---

5.000 ຄົນ. ໃນໄລຍະ 2011-2019, ລາວໄດ້ຮັບນັກສຶກສາຫວຽດນາມ 395 ຄົນໄປຮ່ຳຮຽນ, ໃນນັ້ນມີປະລິນຍາໂທ 44 ຄົນ, ປະລິນຍາຕີ 289 ຄົນ ແລະ ນັກຮຽນພາສາລາວ 62 ຄົນ.

(ACMECS) ແລະບັນດາກົນໄກການຮ່ວມມືອະນຸພາກພື້ນແມ່ນນ້ຳຂອງ, ອະນຸພາກພື້ນແມ່ນນ້ຳຂອງເປີດກວ້າງ (GMS), ຮ່ວມມື 4 ປະເທດ ກຳປູເຈຍ - ລາວ - ມຽນມາ - ຫວຽດນາມ (CLMV). ເຂດສາມຫຼ່ຽມພັດທະນາ ຫວຽດນາມ - ລາວ - ກຳປູເຈຍ;... ປະກອບສ່ວນຍົກສູງອິດທິພົນ ແລະ ຖານະບົດບາດຂອງແຕ່ລະປະເທດໃນພາກພື້ນ ແລະ ໃນໂລກ. ກ່ຽວກັບການຮ່ວມມືຫຼາຍຝ່າຍ, ນັບແຕ່ເວລາເຂົ້າຮ່ວມອົງການອາຊຽນ, ຫວຽດນາມ ແລະ ລາວ ໄດ້ປະສານສົມທົບ, ສະໜັບສະໜູນກັນ ຜັນຂະຫຍາຍບັນດາການເຄື່ອນໄຫວທີ່ສະມາຄົມໄດ້ວາງອອກ. ສອງປະເທດໄດ້ສະໜັບສະໜູນຫຼັກໝັ້ນຂອງກັນໃນຫຼາຍບັນຫາທີ່ໄດ້ຕັ້ງອອກມາເພື່ອປຶກສາຫາລືຢູ່ບັນດາເວທີອາຊຽນ. ພ້ອມກັນເພີ່ມທະວີຊຸກຍູ້ບັນດາການຮ່ວມມືໂດຍສະເພາະແມ່ນກ່ຽວກັບການປ້ອງກັນຄວາມສະຫງົບ - ປ້ອງກັນຊາດ ເພື່ອກ້າວສູ່ອະນາຄົດທີ່ສັນຕິພາບ, ສະຖຽນລະພາບ ແລະ ວັດທະນະຖາວອນກວ່າ. ສອງຝ່າຍໄດ້ສະໜັບສະໜູນເຊິ່ງກັນ ແລະ ກັນຢ່າງມີປະສິດທິຜົນໃນການຈັດຕັ້ງສຳເລັດບັນດາກອງປະຊຸມກ່ຽວກັບການເມືອງ, ປ້ອງກັນຄວາມສະຫງົບ ແລະປ້ອງກັນຊາດໃນຊຸມປີທີ່ລາວ ຫຼື ຫວຽດນາມ ໄດ້ຖືບົດບາດເປັນປະທານອາຊຽນ.

ຫວນຄືນປະຫວັດສາດສາຍພົວພັນແບບພິເສດ ຫວຽດນາມ-ລາວ ໃນໄລຍະ 9 ທົດສະວັດກວ່າ ນັບແຕ່ການສ້າງຕັ້ງ ພັກກອມມູນິດອິນດູຈີນມາຮອດປັດຈຸບັນ ແລະ ໄລຍະປະຫວັດສາດທີ່ສະຫງ່າອົງອາດ ໃນ 60 ປີ ທີ່ຜ່ານມາ, ພິເສດແມ່ນຜ່ານ 45 ປີ ແຫ່ງການຈັດຕັ້ງປະຕິບັດສົນທິສັນຍາມິດຕະພາບ ແລະ ການຮ່ວມມື. ປະຊາຊົນຫວຽດນາມ ແລະ ລາວ ສາມາດ ເອກອ້າງທະນົງໃຈຕໍ່ສາຍພົວພັນສັດຊື່ບໍລິສຸດ, ສາມັກຄີແບບພິເສດ ແລະ ຫາຍາກ ລະຫວ່າງສອງຊົນຊາດ. ເບິ່ງໄປອະນາຄົດ,

ພວກເຮົາເຫັນໄດ້ຢ່າງຈະແຈ້ງເຖິງຄວາມຈຳເປັນທີ່ຕ້ອງປົກປັກຮັກສາ, ພັດທະນາ, ພ້ອມກັນນັ້ນ ຈົ່ງມີສະຕິລະວັງຕົວ, ຕໍ່ສູ້ຢ່າງບໍ່ຜ່ອນຜັນກັບບັນດາທຳນອງປໍລະປັກ, ທຳລາຍສາຍພົວພັນມິດຕະພາບທີ່ຍິ່ງໃຫຍ່, ຄວາມສາມັກຄີແບບພິເສດ, ການຮ່ວມມືຮອບດ້ານຫວຽດນາມ - ລາວ. ທ່ານເລຂາທິການໃຫຍ່ ຫງວຽນຝູ໋ຈ້ອງ ໄດ້ຢືນຢັນວ່າ: "ພວກເຮົາມີຄວາມພາກພູມໃຈທີ່ສຸດຕໍ່ສາຍພົວພັນແບບພິເສດຫວຽດນາມ - ລາວ ເຊິ່ງພວມພັດທະນາຢ່າງບໍ່ຢຸດຢັ້ງ ແລະ ເກີດດອກອອກຜົນ. ສາຍພົວພັນນີ້ໄດ້ກາຍເປັນກົດເກນການພັດທະນາ, ເປັນປັດໄຈອັນສຳຄັນເພື່ອຮັບປະກັນການໄຊຊະນະຂອງພາລະກິດປະຕິວັດຂອງແຕ່ລະປະເທດ ແລະ ເປັນຊັບສິນບັດລວມອັນລ້ຳຄ່າຂອງສອງພັກ, ສອງຊົນຊາດ ເຊິ່ງຮຸ່ນຄົນໃນປະຈຸບັນຕ້ອງໄດ້ຮັກສາ, ປ້ອງກັນ, ເພີ່ມພູນຄູນສ້າງ ແລະສືບຕໍ່ໃຫ້ຄົນລຸ້ນຕໍ່ໆໄປ". ສະຫາຍ ໄກສອນ ພົມວິຫານ ເຄີຍຢັ້ງຢືນວ່າ: "ພວກເຮົາຕ້ອງຮັບຮູ້ວ່າ ສາຍພົວພັນ ລະຫວ່າງ ລາວ-ຫວຽດນາມ ເຖິງວ່າຈະມີຄຸນຄ່າກວ່າເພັດພອຍອັນລ້ຳຄ່າທີ່ສຸດກໍ່ຕາມ,
ແຕ່ກໍຍັງຕ້ອງໄດ້ເອົາໃຈໃສ່ ເບິ່ງແຍງດູແລ ແລະເພີ່ມພູນຄູນສ້າງເປັນປະຈຳໃຫ້ມີຄວາມໂປ່ງໃສກວ່າ. ພວກເຮົາເຊື່ອໝັ້ນວ່າ, ດ້ວຍມູນເຊື້ອທີ່ໄດ້ຮັບການທົດສອບຜ່ານປະຫວັດສາດ ພ້ອມກັບບັນດາຜົນງານທີ່ບັນລຸໄດ້ລະຫວ່າງສອງປະເທດ, ສາຍພົວພັນແບບພິເສດ ຫວຽດນາມ - ລາວ ຈະ "ຂຽວສົດງົດງາມ, ໝັ້ນຄົງຂະໜົງແກ່ນໄປຊົ່ວກາລະນານ".

## ຂ. ການພົວພັນມິດຕະພາບຮ່ວມມືລະຫວ່າງແຂວງກວາງຈິ ແລະ ແຂວງສາລະວັນ

## ພາກທີ I.

## ກວາງຈິ-ສາລະວັນ ເປັນບ້ານໃກ້ເຮືອນຄຽງທີ່ໃກ້ຊິດ, ມູນເຊື້ອອັນດີງາມໃນການຕໍ່ສູ້ປົດປ່ອຍປະເທດຂອງຊາດ.

### I. ວ່າດ້ວຍລັກສະນະທຳມະຊາດ, ປະຫວັດສາດ, ວັດທະນະທຳຂອງແຂວງກວາງຈິ ແລະ ແຂວງສາລະວັນ

#### *1. ວ່າດ້ວຍລັກສະນະທຳມະຊາດ, ປະຫວັດສາດ, ວັດທະນະທຳຂອງແຂວງກວາງຈິ*

*ລັກສະນະທຳມະຊາດ:*

ທີ່ຕັ້ງພູມີປະເທດ ແລະ ພູມສັນຖານ: ກວາງຈິ ແມ່ນແຂວງໜຶ່ງຢູ່ທິດເໜືອພາກກາງ, ນອນຢູ່ຈຸດທີ່ຕັ້ງ $16^{0}18'$ ຫາ $17^{0}10'$ ເສັ້ນຂະໜານເໜືອ, ຈາກ $106^{0}28'55''$ ຫາ $107^{0}23'58''$ ເສັ້ນແວງຕາເວັນອອກ. ທິດເໜືອກວາງຈິຕິດກັບແຂວງກວາງບິ່ງ; ທິດໃຕ້ຕິດກັບແຂວງເທື່ອທຽນເຫວ້; ທິດຕາເວັນຕົກຕິດກັບແຂວງສະຫວັນນະເຂດ ແລະແຂວງສາລະວັນ, ສ.ປ.ປ ລາວ ດ້ວຍເສັ້ນຊາຍແດນແມ່ນ 179,345 ກິໂລແມັດ, ໃນນັ້ນ, ຕິດກັບແຂວງສະຫວັນນະເຂດແມ່ນ 108,476 ກິໂລແມັດ; ທິດຕາເວັນອອກມີຊາຍແດນ ຕິດກັບທະເລຕາເວັນອອກ

ດ້ວຍລວງຍາວຝັ່ງທະເລ 75 ກິໂລແມັດ. ເນື້ອທີ່ ທຳມະຊາດ ແມ່ນ 4,746 ກິໂລແມັດມົນທົນ.

ກວາງຈິມີທາງຫຼວງແຫ່ງຊາດ ເລກທີ 1A, ທາງລົດໄຟແຕ່ເໜືອຕະຫຼອດໃຕ້ຫວຽດນາມ ແລະ ເສັ້ນທາງໂຮ່ຈິມິນ ທີ່ແລ່ນຜ່ານ; ມີທາງຫຼວງແຫ່ງຊາດ ເລກ 9 ຂ້າມອາຊີ; ມີທ່າກຳປັ່ນທະເລເກື້ອຫວຽດ, ໝີຖຸຍ ແລະ 2 ດ່ານຊາຍແດນສາກົນລາວບາວ ແລະ ລາໄລ.

ກວາງຈິມີເນື້ອທີ່ເກີນ 4/5 ເປັນເຂດເນີນພູ, ອຸດົມສົມບູນໄປດ້ວຍລະບົບນິເວດຈາກພູເຂົາ, ພູພຽງ bazan, ຫາເນີນພູ, ທົ່ງພຽງ ແລະ ເຂດຊາຍຝັ່ງທະເລ. ກວາງຈິແມ່ນນອນຢູ່ໃນເຂດລົມມໍລະສຸມເຂດຮ້ອນທີ່ມີອຸນຫະພູມສູງ, ສະພາບອາກາດຮ້າຍແຮງ, ແລະມີການປ່ຽນແປງທີ່ຜິດປົກກະຕິ.

ແມ່ນ້ຳລຳເຊແຂວງກວາງຈິຖືກແບ່ງອອກແຕ່ທິດເໜືອຮອດທິດໃຕ້ຂອງແຂວງ. ສາມລະບົບແມ່ນ້ຳທີ່ໃຫຍ່ແມ່ນ: ແມ່ນນ້ຳເບັນຫາຍ, ແທກຫານ ແລະ ໂອເລົາ. ນອກຈາກນີ້, ຍັງຕິດກັບສອງສາຍແມ່ນ້ຳ ຂອງລະບົບແມ່ນ້ຳຂອງ ຄື: ແມ່ນນ້ຳເຊບັ້ງຮຽງ ແລະ ແມ່ນນ້ຳເຊໂປນ. ເຂດທະເລກວາງຈິມີເນື້ອທີ່ກວ້າງພໍສົມຄວນ, ແມ່ນເຂດຫາປາທີ່ມີແຫຼ່ງອາຫານທະເລທີ່ອຸດົມສົມບູນ, ມີຫຼາຍຊັບພະຍາກອນພິເສດທີ່ມີຄຸນຄ່າດ້ານໂພຊະນາການ ແລະ ເສດຖະກິດສູງ.

ກວາງຈິມີປາກນ້ຳ 2 ແຫ່ງຄື: ເກື້ອຫວຽດ ແລະ ເກື໊ອຕຸ່ງ, ເຊິ່ງເປັນແຫຼ່ງທ່ອງທ່ຽວ ແລະ ຄົມມະນາຄົມທີ່ສຳຄັນ. ບັນດາຫາດຊາຍຕ່າງໆ ນັບແຕ່ເມືອງ ຫວິງລິງ ຫາ ເມືອງຫາຍລັງ ລ້ວນແຕ່ໄດ້ຮັບການຂຸດຄົ້ນເພື່ອຮັບໃຊ້ການທ່ອງທ່ຽວແລະ ພັກຜ່ອນຢ່ອນອາລົມ. ເກາະໂກນກໍ້ ຫ່າງຈາກແຜ່ນດິນ 25 ກິໂລແມັດ,

ເປັນທີ່ຕັ້ງຍຸດທະສາດກ່ຽວກັບການທະຫານ, ພ້ອມກັນນັ້ນຍັງມີຄວາມບົ່ມຊ້ອນໃນການພັດທະນາເສດຖະກິດທາງທະເລ ແລະ ການທ່ອງທ່ຽວ.

ຈຳນວນພົນລະເມືອງຂອງແຂວງກວາງຈິມີ 630.000 ກວ່າ ຄົນ, ສ່ວນຫຼາຍແມ່ນໃນອາຍຸການເຮັດວຽກ. ແຂວງກວາງຈິມີ 3 ຊົນເຜົ່າກຳລັງດຳລົງຊີວິດຄື: ເຜົ່າກິງ, ເຜົ່າບຣູ-ເວີນກ່ຽວ ແລະ ເຜົ່າປາໂກ-ຕະໂອ້ຍ.

ປະຫວັດແຫ່ງການສ້າງຕັ້ງ: ແຜ່ນດິນກວາງຈິໄດ້ສ້າງຕັ້ງຂຶ້ນເມື່ອ 2100 ກວ່າປີກ່ອນ. ພາຍຫຼັງການປະຕິວັດ ເດືອນສິງຫາ ປີ 1945 ໄດ້ຮັບຜົນສຳເລັດ, ກວາງຈິເປັນແຂວງໜຶ່ງຢູ່ພາກກາງຂອງຫວຽດນາມ.

ທ້າຍເດືອນກໍລະກົດ ປີ 1954, ຕາມສັນຍາເຊີແນວ, ແມ່ນ້ຳເບັນຫາຍ (ກວາງຈິ) ຖືກເລືອກເປັນ ເສັ້ນຂີດຂັ້ນການທະຫານຊົ່ວຄາວແບ່ງແຍກປະເທດ. ທິດໃຕ້ຂອງແມ່ນ້ຳເບັນຫາຍ ຖືກຄຸ້ມຄອງໂດຍລັດຖະບານ ໄຊງ່ອນ. ທິດເໜືອຂອງແມ່ນ້ຳເບັນຫາຍ (ເມືອງວິງລິງ) ຖືກຄຸ້ມຄອງໂດຍສາທາລະນະລັດປະຊາທິປະໄຕຫວຽດນາມ. ວັນທີ 1 ພຶດສະພາ 1972, ແຂວງກວາງຈິໄດ້ຮັບການປົດປ່ອຍ. ປີ 1976, ສີ່ຫົວໜ່ວຍການປົກຄອງ ແຂວງກວາງບິ່ງ, ກວາງຈິ, ເທື່ອທຽນ ແລະ ເຂດວິງລິງ ເຊິ່ງໄດ້ໂຮມກັນເປັນ ແຂວງບິ່ງຈິທຽນ.

ວັນທີ 1 ກໍລະກົດ 1989, ແຂວງບິ່ງຈິທຽນໄດ້ແບ່ງອອກເປັນ 3 ແຂວງຄື: ກວາງບິ່ງ, ກວາງຈິ ແລະ ເທື່ອທຽນເຫວ້. ແຂວງກວາງຈິໄດ້ກັບຄືນສູ່ເຂດແດນປົກຄອງເດີມ. ປັດຈຸບັນ, ແຂວງກວາງຈິມີ 10 ຫົວໜ່ວຍການປົກຄອງຄື: ນະຄອນດົງຮ່າ, ເທດສະບານກວາງຈິ, ເມືອງວິງລິງ, ເມືອງເກາະໂກນກໍ໋, ເມືອງຢໍລິງ, ເມືອງກາມໂລ້, ຈ້ຽວຟອງ, ເມືອງຫາຍລັງ, ເມືອງເຮືອງຮວາ ແລະ ເມືອງດາກະໂຣງ.

ມູນເຊື້ອປະຫວັດສາດ, ວັດທະນະທຳ: ກວາງຈິ ເປັນສະຖານທີ່ແຫ່ງການພົບປະແລກປ່ຽນ ແລະ ເຕົ້າໂຮມຂອງ ຫຼາຍວັດທະນະທຳ (ຊາວເຜົ່າປາໂກແລະ ເວີນກ່ຽວ ຢູ່ບັນດາເມືອງທີ່ມີຊາຍແດນຕິດຈອດ ກັບລາວ ມີວັດທະນະທຳຫຼາຍສິ່ງທີ່ຄ້າຍຄືກັນກັບບັນດາຊົນເຜົ່າລາວຢູ່ເຂດຊາຍແດນ); ມີຫຼາຍງານບຸນ ວັດທະນະທຳທີ່ມີສີສັນພິເສດ. ຄົນກວາງຈິ ມີຄວາມສະຫຼາດ, ພາກພຽນໃນການຮຽນ. ກວາງຈິແມ່ນບ້ານເກີດເມືອງນອນຂອງການນຳຂອງພັກ ແລະ ລັດ ຫຼາຍທ່ານ, ເຊິ່ງດີເດັ່ນແມ່ນທ່ານເລຂາທິການໃຫຍ່ ເລຢ້ວນ, ຮອງນາຍົກລັດຖະມົນຕີ ເຈີ່ນຫົວຢຶກ, ທ່ານ ເຈີ່ນກວຽນ, ພົນເອກ, ລັດຖະມົນຕີກະຊວງປ້ອງກັນປະເທດ ດວ່ານເຄ...

### *2.* ວ່າດ້ວຍລັກສະນະທຳມະຊາດ*,* ປະຫວັດສາດ ແລະ ວັດທະນະທຳແຂວງສາລະວັນ

ແຂວງສາລະວັນເປັນແຂວງໜຶ່ງພາກໃຕ້ຂອງລາວ,ຕັ້ງຢູ່ເທິງພູພຽງບໍລະເວນ; ມີເສັ້ນທາງຫຼວງແຫ່ງຊາດ ເລກທີ 13 ແລະ ເລກທີ 20 ເປັນເສັ້ນທາງຄົມມະນາຄົມຫຼັກຂອງແຂວງ ທີ່ເຊື່ອມຕໍ່ກັບບັນດາເຂດເສດຖະກິດ ສຳຄັນ ທາງທິດຕາເວັນອອກ ມີຊາຍແດນຕິດຈອດກັບແຂວງກວາງຈິ ແລະ ເທື່ອທຽນເຫ້ວຂອງສາທາລະນະລັດສັງຄົມນິຍົມຫວຽດນາມ, ເສັ້ນທາງຕິດຊາຍແດນມີຄວາມຍາວ 80 ກິໂລແມັດ, ທິດຕາເວັນຕົກຕິດກັບ ແຂວງອຸບົນຣາຊະທານີຂອງລາຊະອານາຈັກໄທ ມີຄວາມຍາວ 80 ກິໂລແມັດ, ທິດໃຕ້ຕິດກັບແຂວງເຊກອງ ມີຄວາມຍາວ 200 ກິໂລແມັດ ແລະ ແຂວງຈຳປາສັກ ມີຄວາມຍາວ175 ກິໂລແມັດ, ທິດເໜືອຕິດກັບແຂວງສະຫວັນນະເຂດ ມີຄວາມຍາວ 275 ກິໂລແມັດ. ທົ່ວແຂວງລວມມີ 8ຕົວເມືອງຄື: ເມືອງສາລະວັນ, ເມືອງຄົງເຊໂດນ, ເມືອງລະຄອນເພັງ, ເມືອງວາປີ, ເມືອງເລົ່າງາມ, ເມືອງຕຸ້ມລານ, ເມືອງຕະໂອ້ຍ ແລະ ເມືອງສະໝ້ວຍ. ເທດສະບານສາລາວັນ

ແມ່ນເມືອງເອກຂອງແຂວງສາລະວັນ, ຕັ້ງຢູ່ໃນສາຂາຂອງເຊໂດນ, ເຊິ່ງໄຫຼຜ່ານແຂວງ ແລະ ສິ້ນສຸດໄຫຼລົງສູ່ແມ່ນໍ້າຂອງທີ່ນະຄອນປາກເຊ. ເທດສະບານສາລາວັນມີບົດບາດເປັນສູນກາງການຄ້າເພື່ອສະໜອງສິນຄ້າ ໃຫ້ແກ່ບັນດາຕົວເມືອງຕ່າງໆພາຍໃນແຂວງ. ເທດສະບານກໍ່ແມ່ນສູນກາງດ້ານການເມືອງ, ເສດຖະກິດແລະວັດທະນະທຳຂອງແຂວງ. ຫຼັງຈາກທີ່ໄດ້ຮັບຄວາມເສຍຫາຍຢ່າງໃຫຍ່ຫຼວງທີ່ເກີດຂຶ້ນຈາກສົງຄາມອິນດູຈີນໃນປີ 1971, ມັນໄດ້ຖືກສ້າງຂຶ້ນໃໝ່ຕາມທັດສະນະແຜນການຂອງແຜນຜັ່ງເມືອງແບບໃໝ່.

ປະຊາກອນທົ່ວແຂວງລວມມີ426.843 ຄົນ, ຍິງ 213.746 ຄົນ, ຄວາມໜາແໜ້ນຂອງປະຊາກອນ ສະເລ່ຍ 28 ຄົນ/ກມ$^2$, ລວມມີ 10 ຊົນເຜົ່າດຳລົງຊີວິດຢູ່: ລາວລຸ່ມ ກວມເອົາ 56.60%, ຊ່ວຍ ກວມເອົາ 10.61%, ລະເວນ ກວມເອົາ 3.74%, ຜູ້ໄທ ກວມເອົາ1,47%, ກະຕູ ກວມເອົາ 0,49%, ກະຕາງກວມເອົາ 14,21%, ປະໂກະກວມເອົາ 5,60%,ຕະໂອ້ຍກວມເອົາ 5,80%, ແງະ ກວມເອົາ 2,28%, ອາລັກກວມເອົາ 0,07%. ແຕ່ລະຊົນເຜົ່າລ້ວນແຕ່ມີວັດທະນະທຳເປັນຂອງຕົນເອງ, ໄດ້ຮັບການອະນຸລັກຮັກສາ ແລະ ໄດ້ຮັບການຜັນຂະຫຍາຍຢູ່ເລື້ອຍໆ.

ແຂວງສາລະວັນ ມີເນື້ອທີ່ທັງໝົດ10.691 ກມ$^2$, ມີຄວາມສູງຫ່າງຈາກໜ້ານໍ້າທະເລ 1.300 ມ, ຕັ້ງຢູ່ເຂດຮ້ອນຊຸ່ມ ທີ່ມີສະພາບອາກາດປານກາງ, ອຸນຫະພູມສະເລ່ຍ 26 ອົງສາ, ມີປະລິມານນໍ້າຝົນແຕ່ 1,800-2,500 ມມ/ປີ.

ພູມສັນຖານຂອງແຂວງສາລະວັນ ໄດ້ແບ່ງອອກເປັນ 03 ເຂດຄື: ເຂດທົ່ງພຽງກວມ 40% ປະກອບມີ: ເມືອງສາລະວັນ, ເມືອງຄົງເຊໂດນ, ເມືອງລະຄອນເພັງ, ເມືອງວາປີ ແລະ ເມືອງຕຸ້ມລານ ເຊິ່ງເປັນເຂດເອື້ອອຳນວຍ

ໃຫ້ແກ່ການພັດທະນາ ດ້ານການຜະລິດປູກເຂົ້າ, ປູກພືດອຸດສາຫະກຳ, ປູກພືດໄລຍະສັ້ນ ແລະລ້ຽງສັດ. ເຂດພູພຽງ ກວມເອົາ 20% ຂອງເນື້ອທີ່ທັງໝົດຂອງແຂວງ, ປະກອບມີ: ເມືອງເລົ່າງາມ ແລະ ສ່ວນໜຶ່ງຂອງເມືອງສາລະວັນ, ເມືອຄົງເຊໂດນ ແລະ ເມືອງວາປີ, ເອື້ອອຳນວຍດ້ານການພັດທະນາການປູກກາເຟ, ຖົ່ວດິນ, ຕົ້ນໄມ້ກິນໝາກ ແລະ ປູກພືດອຸດສາຫະກຳ... ເຂດພູດອຍກວມ 40% ຂອງເນື້ອທີ່ແຂວງ, ປະກອບມີ: ເມືອງຕາໂອ້ຍ, ເມືອງສະມ້ວຍ ແລະ ສ່ວນໜຶ່ງຂອງເມືອງຕຸ້ມລານ ເຊິ່ງມີທ່າແຮງໃນການພັດທະນາດ້ານການລ້ຽງສັດ, ປູກພືດອຸດສາຫະກຳ, ພືດໄລຍະສັ້ນ ແລະ ປູກປ່າໄມ້.

ແຂວງສາລະວັນມີແຫຼ່ງຊັບພະຍາກອນທີ່ອຸດົມສົມບູນເຊັ່ນ: (ຫີນປູນ, ຖ່ານຫີນ, ແຮ່ໂລຫະ…) ເປັນກຸນແຈສຳຄັນ ໃນການພັດທະນາອຸດສາຫະກຳຊີມັງ, ວັດສະດຸກໍ່ສ້າງ, ດິນຈີ່, ເບຕົງ, ຫີນປູນ ແລະ ຂະແໜງການອື່ນໆ. ມີທ່າໄດ້ປຽບໃນດ້ານກົນຈັກ ແລະ ການປຸງແຕ່ງຜະລິດຕະພັນກະສິກຳເຊັ່ນ: ການປະກອບ ແລະ ສ້ອມແປງກົນຈັກ, ປຸງແຕ່ງຜະລິດຕະພັນກະສິກຳເພື່ອບໍລິການການທ່ອງທ່ຽວ ແລະ ປຸງແຕ່ງຜະລິດຕະພັນກະສິກຳທີ່ເປັນເອກະລັກ ຂອງທ້ອງຖິ່ນ ເພື່ອສົ່ງອອກ ສິ້ນຄ້າຄື: ຕົ້ນກາເຟ, ຕົ້ນຢາງພາລາ, ຕົ້ນໄມ້ກິນໝາກ ແລະ ອື່ນໆ). ແຂວງສາລະວັນມີທ່າແຮງທາງດ້ານທຳມະຊາດ ເພື່ອພັດທະນາ ເສດຖະກິດ, ໃນນັ້ນ ເນື້ອທີ່ປ່າກວມເອົາ 707.400 ເຮັກຕາ, ເນື້ອທີ່ ກະສິກຳ 97.500 ເຮັກຕາ, ໃນນັ້ນ ມີບໍ່ຫີນກາວ, ບໍ່ຖ່ານຫີນ, ແຮ່ເຫຼັກຫຼາຍແຫ່ງ...; ມີແມ່ນ້ຳຂອງ, ແມ່ນ້ຳເຊໂດນ, ແມ່ນ້ຳເຊບັ້ງນວນ, ແມ່ນ້ຳເຊໂປນ, ແມ່ນ້ຳເຊລະນອງ... ໄຫຼຜ່ານ, ສ້າງເງື່ອນໄຂສະດວກໃຫ້ແກ່ການພັດທະນາກະສິກຳ. ພິເສດແມ່ນພູພຽງບໍລະເວນ ຍັງເປັນຕົ້ນກຳເນີດ

ຂອງແມ່ນ້ຳສາຍສຳຄັນອີກຫຼາຍສາຍ ແລະ ຍັງເປັນແຫຼ່ງກຳເນີດຂອງນ້ຳຕົກ 10 ກວ່າແຫ່ງ.

ແຂວງສາລະວັນ

ມີປະຫວັດຄວາມເປັນມາທາງດ້ານວັດທະນະທຳທີ່ເກົ່າແກ່ແລະຍາວນານ, ມີອາຍຸປະມານ 1.500 ປີ ກ່ອນ ຄ.ສ. ມີສອງພາສາຫຼັກຄື: ມອນ-ຄະແມ ແລະ ລາວ-ໄທ. ຢູ່ນີ້, ມີຮ່ອງຮອຍປະຫວັດສາດຫຼາຍແຫ່ງ, ພິເສດແມ່ນ ທາດກະໂດທຶກ, ເຊິ່ງແມ່ນສູນກາງຄວາມເຫລື້ອມໃສສັດທາໃນສາສະໜາ, ຍັງມີພູຫີນ ທີ່ສະລັກຮູບພາບມະນຸດສັດໃນສະໄໝກ່ອນຢູ່ໝູ່ບ້ານຄຳຕື້, ພູລາຫົດເມືອງຄົງເຊໂດນ. ເຊັ່ນດຽວກັບໃນຫຼາຍທ້ອງຖິ່ນຂອງລາວ, ປະຊາຊົນແຂວງ ສາລະວັນມີຈິດໃຈເອື້ອເຟື້ອເຜື່ອແຜ່, ມັກຮ້ອງເພງ, ຟ້ອນລວມໝູ່; ໂດຍສະເພາະການຟ້ອນລຳສາລະວັນແມ່ນມີຊື່ສຽງ ໂດ່ງດັງ, ເປັນສັນຍາລັກຂອງຄົນສາລະວັນ; ນອກຈາກນີ້ຍັງມີບົດເພງຊາວກະຕາງ ແລະ ຕະໂອ້ຍ ເຊັ່ນ: ລຳເດີມອນ, ລຳກາເລີຍ... ເຄື່ອງດົນຕີມີ: ແຄນ, ຊຸ່ຍ, ຊໍ, ພິນ, ກອງ... ທີ່ໄດ້ຮັບການປົກປັກຮັກສາ ແລະ ເສີມຂະຫຍາຍມາແຕ່ບູຮານນະການ. ສາລະວັນມີແຫຼ່ງທ່ອງທ່ຽວທີ່ມີຊື່ສຽງຄື: ນ້ຳຕົກຕາດເລາະ, ປາກເສັດ-ແກ້ງກຸ ແລະ ສະຖານທີ່ທ່ອງທ່ຽວພູຜາສຸກ... ສາມາດດຶງດູດນັກທ່ອງທ່ຽວ ທັງພາຍໃນ ແລະ ຕ່າງປະເທດ ດ້ວຍບັນດາຜະລິດຕະພັນການທ່ອງທ່ຽວທີ່ມີຊື່ສຽງຄື: ໝາກພ້າວນາໄຊ, ປີ້ງໄກ່ນາປົ່ງ, ເຫຼົ້າຂາວເມືອງຄົງ,ລຳວົງສາລະວັນ. ແຕ່ລະປີແຂວງສາລະວັນກໍ່ໄດ້ຈັດງານບຸນກໍຄື: ບຸນໝາກພ້າວນາໄຊ, ບຸນປີ້ງໄກ່ນາປົ່ງ... ເຊິ່ງເປັນວັດທະນະທຳພື້ນເມືອງຂອງປະຊາຊົນລາວບັນດາເຜົ່າທີ່ຢູ່ແຂວງສາລະວັນ ເຊິ່ງມີເອກະລັກສະເພາະແລະມີສີສັນສາມາດຮັບໃຊ້ການທ່ອງທ່ຽວ ແລະການບໍລິການ.

ໃນທ້າຍສັດຕະວັດທີ XIII ແລະ ຕົ້ນສະຕະວັດທີ XIV, ປະເທດລາວຍັງຄົງປົກຄອງບັນດາເມືອງບູຮານ ທີ່ຢູ່ເຂດ ລ້ອງແມ່ນ້ຳທັງຊ້າຍ ແລະຂວາ. ຝັ່ງຂວາແມ່ນ້ຳຂອງແມ່ນເຂດລາຊະອານາຈັກຕ່າງຫາກຄື: ອານາຈັກຂອງເມືອງຊຽງຮາຍ, ຫຼື ເອີ້ນອີກຊື່ວ່າ: ຊຽງດົງ, ຊຽງທອງ (ປະຈຸບັນນີ້ແມ່ນຫຼວງພະບາງ); ເມືອງພວນ (ຊຽງຂວາງ); ເມືອງວຽງຈັນ...ແລະເມືອງບຸງເບົາ (ແຂວງຄຳມ່ວນ) - ອີກເມືອງໃຫຍ່ເມືອງໜຶ່ງທີ່ກວມເອົາພາກກາງແລະພາກໃຕ້ຂອງລາວ. ເນື່ອງຈາກຮູບແບບການປົກຄອງ ແລະມີຂະໜາດນ້ອຍ, ຈຶ່ງເຮັດໃຫ້ບັນດາເມືອງຢູ່ລາວເກືອບທັງໝົດ ລ້ວນແຕ່ຖືກປົກຄອງໂດຍຕ່າງປະເທດ. ການພັດທະນາຂອງບັນດາປະເທດທີ່ເປັນເອກະລາດທີ່ຢູ່ອ້ອມຂ້າງໄດ້ກະຕຸ້ນໃຫ້ປະເທດລາວ ເກີດມີຄວາມສາມັກຄີ ເພື່ອປົດປ່ອຍປະຊາຊົນລາວບັນດາເຜົ່າໃຫ້ຫລຸດພົ້ນຈາກການປົກຄອງຂອງ ສັກດີນາຕ່າງປະເທດແລະເພື່ອພັດທະນາປະເທດ. ປີ 1349 (ຄື 1892 ປະຕິທິນຂອງສາສະໜາພຸດ) ເຈົ້າຟ້າງຸ້ມ ເປັນຫຼານຊາຍຂອງ ເຈົ້າຊີວິດສຸວັນນະຄຳຟອງ ທີ່ປົກຄອງ ອານາຈັກ ໄດ້ກັບຄືນບ້ານເກີດເມືອງນອນ ເພື່ອທ້ອນໂຮມແຜ່ນດິນ, ປົດປ່ອຍບັນດາປະຊົນລາວບັນດາເຜົ່າອອກຈາກການປົກຄອງຂອງສັກດີນາ ສຸໂຂໄທ (ປະເທດໄທໃນ ຕອນນີ້). ໃນຊ່ວງຕອນຕົ້ນຂອງການປົດປ່ອຍ, ເຈົ້າຟ້າງຸ້ມໄດ້ບຸກໂຈມຕີເອົາເມືອງປາກຊິບ ຊຶ່ງເປັນເມືອງຫຼວງຂອງລາວ ທີ່ຢູ່ພາກຕາເວັນຕົກຂອງແຂວງອຸບົນ (ປະເທດໄທ). ເມື່ອໄດ້ຮັບໄຊຊະນະກອງທັບເຈົ້າຟ້າງຸ້ມກໍໄດ້ຂ້າມແມ່ນ້ຳຂອງເພື່ອເຂົ້າຍຶດເມືອງກະຕຸງ (ທ່າແຂກ-ຄຳມ່ວນ) ເພື່ອສືບຕໍ່ເຄື່ອນໄຫວປົດປ່ອຍທົ່ວປະເທດ. ເກືອບ 10 ປີ ແຫ່ງການຕໍ່ສູ້ ແລະ ຄວາມທຸກຍາກລຳບາກ, ເຈົ້າຟ້າງຸ້ມໄດ້ຍາດເອົາໄຊຊະນະທີ່ຍິ່ງໃຫຍ່ ແລະມີຄວາມໝາຍປະຫວັດສາດ, ຈາກນັ້ນກໍໄດ້ສ້າງຕັ້ງເປັນລາຊະອານາຈັກລ້ານຊ້າງທີ່ມີຄວາມເປັນເອກະລາດ, ເອກະພາບ ແລະ ເຂັ້ມແຂງ. ພາຍຫຼັງເຈົ້າຟ້າງຸ້ມ ແລະປະຊາຊົນລາວ

ບັນດາເຜົ່າທີ່ຢູ່ຕາມເຂດທ້ອງຖິ່ນໄດ້ຢືນຄຽງບ່າຄຽງໄລ່ກັນຕູ່ສູ້ຕ້ານສັກດີນາ ຕ່າງປະເທດ, ຮ່ວມກັນສ້າງສາ ແລະປົກປັກຮັກສາປະເທດຊາດ. ໃນໄລຍະສົງຄາມຕໍ່ຕ້ານພວກລ່າເມືອງຂຶ້ນຝຣັ່ງ ແລະພວກຈັກກະພັດອາເມລິກາທີ່ເຂົ້າມາຮຸກຮານ, ປະຊາຊົນແຂວງສາລະວັນທີ່ກ້າຫານໄດ້ລຸກຮືຂຶ້ນຕໍ່ສູ້ ເພື່ອຄວາມເປັນເອກະລາດຂອງຊາດ. ມີຫຼາຍຂະບວນການຮັກຊາດໄດ້ເກີດຂຶ້ນ, ໂດຍສະເພາະແມ່ນຂະບວນການຕໍ່ສູ້ພາຍໃຕ້ການນຳພາຂອງອົງແກ້ວກົມມະດຳ ຫຼື ເອີ້ນອີກຊື່ໜຶ່ງວ່າ "ຜູ້ມີບຸນ", ປະຊາຊົນເຂດບໍລະເວນ ໄດ້ລຸກຮືຂຶ້ນຕໍ່ສູ້ຕ້ານພວກລ່າເມືອງຂຶ້ນຝລັ່ງ. ພາຍໃຕ້ການຊີ້ນຳຂອງພັກປະຊາຊົນປະຕິວັດລາວ, ປະຊາຊົນແຂວງສາລະວັນກໍ່ຄືທົ່ວປວງຊົນລາວ ໄດ້ພ້ອມກັນລຸກຮືຂຶ້ນປົດປ່ອຍປະເທດຊາດ, ປະກາດສະຖາປະນາເປັນສາທາລະນະລັດປະຊາທິປະໄຕປະຊາຊົນລາວໃນວັນທີ 2/12/1975 ແລະສືບຕໍ່ປະຕິບັດໜ້າທີ່ປົກປັກຮັກສາ ແລະສ້າງສາພັດທະນາປະເທດຊາດໃຫ້ນັບມື້ນັບມີຄວາມຈະເລີນ.

ປະຕິບັດຕາມແນວທາງປ່ຽນໃໝ່ຂອງພັກປະຊາຊົນປະຕິວັດລາວ ເພື່ອໃຫ້ປະຊາຊົນແຂວງສາລະວັນກ້າວຜ່ານຄວາມຫຍຸ້ງຍາກເປັນກ້າວໆເພື່ອກ້າວເຂົ້າສູ່ການເຊື່ອມໂຍງ ແລະພັດທະນາໂດຍຜ່ານບັນດາໂຄງການຮ່ວມມືສາກົນ, ມີຫຼາຍໂຄງການທີ່ໄດ້ລົງທຶນຢູ່ແຂວງສາລະວັນ, ເພື່ອປະກອບສ່ວນພັດທະນາເສດຖະກິດ-ວັດທະນະທຳຂອງແຂວງ.

## II. ກວາງຈິ ແລະ ສາລະວັນ ມີການພົວພັນທາງດ້ານປະຫວັດສາດ ແລະ ມູນເຊື້ອອັນຍາວນານ

ພ້ອມກັນນອນໃນແຫຼມອິນດູຈີນ, ອີງຫຼັງໃສ່ສາຍພູຫຼວງທີ່ໃຫຍ່ໂຕມະໂຫຖານ ແລະ ຮ່ວມກັນດື່ມນ້ຳໃນລຳແມ່ນ້ຳຂອງ, ຫວຽດນາມ ແລະ ລາວ ແມ່ນສອງ

ປະເທດບ້ານໃກ້ເຮືອນຄຽງ ເຊິ່ງມີສາຍສຳພັນສາມັກຄີ, ມິດຕະພາບທີ່ຕິດພັນຢ່າງສະໜິດແໜ້ນມາແຕ່ດົນນານ. ໃນປະຫວັດສາດຂອງຕົນ, ທັງສອງຊົນຊາດ ລ້ວນແຕ່ຕ້ອງຕໍ່ສູ້ກັບສັດຕູທີ່ມີອຳນາດຄືຜູ້ຮຸກຮານງວຽນ-ມິງໂກນ, ສະຫຍາມ, ຝຣັ່ງ, ຍີ່ປຸ່ນ, ແລະອາເມລິກາ. ຜ່ານໄລຍະການປະຕິວັດຂອງແຕ່ລະປະເທດ, ການຮ່ວມມື ແລະການຊ່ວຍເຫຼືອເຊິ່ງກັນ ແລະ ກັນ ໄດ້ຮັບການກໍ່ສ້າງ, ພັດທະນາ ແລະ ນັບມື້ນັບໜັ້ນແກ່ນ, ນີ້ແມ່ນພື້ນຖານໃຫ້ການກໍ່ສ້າງ ແລະ ພັດທະນາສາຍພົວພັນແບບພິເສດ 2 ແຂວງ: ກວາງຈິ (ຫວຽດນາມ) - ສາລະວັນ (ລາວ).

ວ່າດ້ວຍທາງດ້ານທຳມະຊາດ, ພູມສັນຖານ 2 ແຂວງ ແມ່ນຕັ້ງຢູ່ເຂດສາຍພູຫຼວງໜືອ, ນອນຢູ່ພາກກາງ. ເຖິງວ່າຖືກຫ່າງຈາກກັນຍ້ອນສາຍພູຫຼວງ, ແຕ່ຍ້ອນພູມສັນຖານເປັນພູດອຍຕ່ຳ ແລະ ໂນນຄ້ອຍບໍ່ມີຫຼາຍ ສະນັ້ນການເດີນທາງໄປມາຂອງປະຊາຊົນສອງເບື້ອງຊາຍແດນແມ່ນສະດວກດີ.

ກວາງຈິ ແລະ ສາລະວັນ ລ້ວນແຕ່ມີຊັບພະຍາກອນທຳມະຊາດທີ່ອຸດົມສົມບູນ ແລະ ຫຼາກຫຼາຍຮູບແບບ, ໃນນັ້ນມີ ຊັບພະຍາກອນປ່າໄມ້ ແລະ ຫີນປູນທີ່ກວ້າງໃຫຍ່ໄພສານ, ປົກຄຸມທັງສອງເບື້ອງ ທິດຕາເວັນອອກ ແລະ ທິດຕາເວັນຕົກຂອງສາຍພູຫຼວງ. ນີ້ແມ່ນເງື່ອນໄຂທຳມະຊາດທີ່ສຳຄັນໃນການລີ້ໄພ ແລະ ກໍ່ສ້າງສົມບັດໃນການຕໍ່ສູ້ຕ້ານຜູ້ຮຸກຮານ ແລະ ຮັບໃຊ້ວຽກງານພັດທະນາເສດຖະກິດ - ສັງຄົມ, ປ້ອງກັນຊາດ, ປ້ອງກັນຄວາມສະຫງົບ; ພ້ອມກັນນັ້ນ, ເປີດກວ້າງຄວາມສາມາດໃນຮ່ວມມືພັດທະນາການທ່ອງທ່ຽວບົນແລວເສດຖະກິດຕາເວັນອອກ-ຕາເວັນຕົກ.

ຄຽງຄູ່ກັບລັກສະນະຄ້າຍຄືກັນກ່ຽວກັບທຳມະຊາດ, ລະຫວ່າງສອງແຂວງກໍ່ມີຄວາມຄ້າຍຄືກັນທາງດ້ານວັດທະນະທຳ-ສັງຄົມ. ນອກຈາກເອກະລັກວັດທະນະທຳສະເພາະຂອງແຕ່ລະຊົນເຜົ່າແລ້ວ, ຊາວເມືອງສອງແຂວງຍັງມີມູນເຊື້ອ ແລະ ປະເພນີວັດທະນະທຳທີ່ຄ້າຍຄືກັນຄື: ຊື່ສັດ, ເມດຕາຈິດ, ຮັກແຂກແພງຄົນ, ຄວາມເມດຕາກະລຸນາ. ມີງານບຸນ, ຮີດຄອງ ປະເພນີ ຫຼາຍຢ່າງຂອງປະຊາຊົນດຳລົງຊີວິດບົນຂອບເຂດສອງແຂວງຄື: ການຜະລິດແບບປະເພນີດັ້ງເດີມ, ການດຳລົງຊີວິດ, ງານສົບ, ງານແຕ່ງດອງ, ງານບຸນ, ຄວາມເຊື່ອຖື, ຈິດວິນຍານ... ແມ່ນໃກ້ຊິດ ແລະຄ້າຍຄືກັນ.

ໃນໄລຍະຜ່ານມາ, ຊຸມຊົນບັນດາເຜົ່າທີ່ດຳລົງຊີວິດຢູ່ 2 ແຂວງກວາງຈິ-ສາລະວັນ ສ່ວນຫຼາຍແມ່ນອາໄສ ຊັບພະຍາກອນທຳມະຊາດ, ໃນນັ້ນຕົ້ນຕໍແມ່ນແຫຼ່ງຊັບພະຍາກອນປ່າໄມ້ ເພື່ອຄວາມຢູ່ລອດ ແລະ ພັດທະນາ. ຄຽງຄູ່ກັບການພັດທະນາຕິດພັນກັບການປົກປັກຮັກສາສິ່ງແວດລ້ອມ, ປະຊາຊົນໄດ້ຫັນໄປສູ່ການຜະລິດກະສິກຳເທື່ອລະກ້າວ. ປະຊາຊົນສອງແຂວງໄດ້ແບ່ງປັນປະສົບການໃນການຜະລິດ, ວິທີການປູກຝັງ, ແລກປ່ຽນ, ຊື້ຂາຍສິນຄ້າ, ຜະລິດຕະພັນ ແລະ ການບໍລິການຮັບໃຊ້ການພັດທະນາເສດຖະກິດ - ສັງຄົມ ຢ່າງເປັນປະຈຳ. ປະຊາຊົນສອງແຂວງໄດ້ຊອກຫາບັນດາຮູບແບບທີ່ໃກ້ຊິດໃນການລ້ຽງສັດ ແລະ ການປູກຝັງ ແລະຍິນດີທີ່ແບ່ງປັນ ແລະ ໜູນຊ່ວຍເຊິ່ງກັນ ແລະ ກັນ ເພື່ອພ້ອມກັນພັດທະນາ.

ຄວາມຄ້າຍຄືກັນກ່ຽວກັບບັນດາປັດໄຈທາງດ້ານທຳມະຊາດ, ເສດຖະກິດ ແລະສັງຄົມ ໄດ້ປະກອບສ່ວນເຂົ້າ ໃນຄວາມສະໜິດຂອງສາຍພົວພັນບ້ານໃກ້ເຮືອນຄຽງອັນໃກ້ຊິດ, ພິເສດແມ່ນລະຫວ່າງ 2 ແຂວງ ກວາງຈິ - ສາລະວັນ.

ກວາງຈີແມ່ນແຂວງໄດ້ຮ່ວມສາຍພູຫຼວງ ແລະເກືອບ 80 ກິໂລແມັດ ເສັ້ນທາງຊາຍແດນທີ່ຕິດກັບແຂວງສາລະວັນ. ແຕ່ເຫິງນານແລ້ວ, ປະຊາຊົນ 2 ແຂວງກວາງຈີ - ສາລະວັນໄດ້ດຳລົງຊີວິດຢູ່ສອງເບື້ອງສາຍພູຫຼວງໄດ້ມີສາຍພົວພັນຢ່າງສະໜິດຊິດເຊື້ອ, ຄວາມຄ້າຍຄືກັນໃນທາງດ້ານພາສາ ແລະ ຮີດຄອງປະເພນີຫຼາຍດ້ານ, ໄດ້ໄປມາເພື່ອແລກປ່ຽນ, ຊື້ຂາຍ ແລະຢ້ຽມຢາມເຊິ່ງກັນ ແລະ ກັນ. ພິເສດແມ່ນປະຊາຊົນແຂວງ ກວາງຈີ ພ້ອມກັບຊາວ ສາລະວັນ ເພື່ອຄຽງບ່າຄຽງໄລ່ຕໍ່ສູ້ສັດຕູຜູ້ຮຸກຮານ, ປ້ອງກັນຊາຍແດນ, ຮັກສາຜືນແຜ່ນດິນຂອງປະເທດ.

ປະຊາຊົນແຂວງກວາງຈີ ແລະແຂວງສາລະວັນ ໄດ້ຮ່ວມກັນຕໍ່ສູ້ຕ້ານພວກສະຫຍາມມາຮຸກຮານເປັນຫຼາຍຄັ້ງ. ພົ້ນເດັ່ນ ແມ່ນການສູ້ຣົບສາມຄັ້ງແຕ່ເດືອນທັນວາ ປີ (1833) ເຖິງເດືອນມີນາຂອງ ປີ (1834). ຫຼັງຈາກການພ່າຍແພ້ຢ່າງໜັກໜ່ວງທັງສາມຄັ້ງ, ພວກສະຫຍາມກໍບໍ່ກ້າບຸກເຂົ້າມາໃນດິນແດນຂອງພວກເຮົາອີກ. ການໄຊຊະນະອັນສະຫງ່າລາສີນັ້ນ ບໍ່ພຽງແຕ່ໄດ້ຮັກສາຜືນແຜ່ນດິນອັນຄົບຖ້ວນຂອງປະເທດຫວຽດນາມເທົ່ານັ້ນ, ຫາກຍັງຮັກສາຄວາມເອກະລາດຂອງອານາຈັກລາວຢ່າງໝັ້ນຄົງຕໍ່ໄພຮຸກຮານ ຂອງພວກສັກດີນາສະຫຍາມອີກດ້ວຍ.

ເມື່ອພວກລ່າເມືອງຂຶ້ນຝຣັ່ງມາຮຸກຮານ 3 ປະເທດອິນດູຈີນ, ສ້າງຕັ້ງຂຶ້ນ "ອິນດູຈີນຝຣັ່ງ", ບັນດາ ເສັ້ນທາງເຊື່ອມຕໍ່ 3 ປະເທດ ກໍ່ຄ່ອຍໆປະກົດຂຶ້ນ, ເຊິ່ງການໄປມາຫາສູ່ກັນ ແລະ ທຸລະກິດລະຫວ່າງບັນດາ ປະເທດໃນແຫຼມອິນດູຈີນນັບມື້ນັບໄດ້ຮັບຄວາມນິຍົມ. ໃນໄລຍະນີ້, ປະຊາຊົນແຂວງກວາງຈີ ຫຼາຍຄົນໄດ້ໄປຫາແຂວງສາລະວັນເພື່ອເຮັດວຽກ ແລະດຳລົງຊີວິດ ເຊິ່ງໄດ້ຮັບຄວາມສະໜັບ

ສະໜູນ, ເບິ່ງແຍງດູແລ ແລະຮັກແພງ ຈາກປະຊາຊົນບັນດາບ້ານຕ່າງໆຂອງລາວ. ຊາວວິນກ່ຽວ ແລະ ປະໂກະ ຖືວ່າບ້ານທີ່ມາດຳລົງຊີວິດແມ່ນບ້ານເກີດເມືອງນອນແຫ່ງທີສອງຂອງຕົນ, ພ້ອມກັນຢູ່ຮ່ວມກັນແບບປອງດອງ, ສະໜິດ ສະໜົມ, ຮ່ວມກັນກໍ່ສ້າງບ້ານເມືອງ.

ປະຫວັດແຫ່ງການພົວພັນແບບພິເສດ ລະຫວ່າງແຂວງກວາງຈີ ແລະ ສາລະວັນ ເມື່ອຍັງບໍ່ທັນມີພັກ ໄດ້ວາງບັນດາຮອຍປະທັບອັນເລິກເຊິ່ງ. ມູນເຊື້ອນັ້ນ ນັບມື້ນັບໄດ້ເສີມຂະຫຍາຍຕື່ມອີກ ຫຼັງຈາກພັກກອມມູນິດອິນດູຈີນ ໄດ້ຮັບການສ້າງຕັ້ງຂຶ້ນ. ໃນຕະຫຼອດໄລຍະສົງຄາມທີ່ຕໍ່ຕ້ານຝະລັ່ງ ແລະ ອາເມລິກາ ກໍ່ຄືໃນໄລຍະກໍ່ສ້າງ ແລະ ປ້ອງກັນປະເທດ, ແຂວງກວາງຈີ ຍາມໃດກໍຮັກສາສາຍພົວພັນສາມັກຄີແບບພິເສດກັບບັນດາທ້ອງຖິ່ນທີ່ມີຊາຍແດນຕິດພັນກັບເພື່ອນມິດລາວ. ບໍ່ພຽງແຕ່ແມ່ນຄວາມສາມັກຄີ ແລະ ຄວາມຜູກພັນລະຫວ່າງປະຊາຊົນສອງປະເທດທີ່ມີຈຸດໝາຍປາຍທາງດ້ານປະຫວັດສາດອັນດຽວກັນເທົ່ານັ້ນ, ຫາກຍັງແມ່ນການຊ່ວຍເຫຼືອບົນຈິດໃຈຂອງລັດທິປະຊາທິປະໄຕທີ່ບໍລິສຸດ ແລະ ຈິງໃຈ.

ປະຊາຊົນບັນດາເຜົ່າເຂດຊາຍແດນຢູ່ເມືອງດັກກາຣົງ, ແຂວງກວາງຈີ ແລະ ບັນດາເຜົ່າຂອງແຂວງສາລະວັນເວົ້າລວມ ແລະ ບັນດາທ້ອງຖິ່ນອື່ນຢູ່ເຂດພາກກາງ ແລະ ພາກໃຕ້ຂອງລາວ ໂດຍທົ່ວໄປມີລັກສະນະຄ້າຍຄືກັນໃນຫຼາຍດ້ານຄື ທີ່ຢູ່ອາໄສ, ວັດທະນະທຳ, ຮີດຄອງປະເພນີ, ຍາດຕິພີ່ນ້ອງ; ທັງສອງຊຸມຊົນເຜົ່າຕ່າງໆແມ່ນນອນຢູ່ໃນກຸ່ມໃຫຍ່ອາຊີຕາເວັນອອກສຽງໃຕ້ ທີ່ມີຄວາມຫຼາກຫຼາຍ. ປະຊາຊົນສອງເບື້ອງຊາຍແດນ ໄດ້ແລກປ່ຽນ, ຄ້າຂາຍ ແລະ ໄປຢາມພີ່ນ້ອງ ເປັນປະຈຳ; ສ້າງສາຍສຳພັນອັນໃກ້ຊິດ; ເປັນການຊຸກຍູ້ໃຫ້ປະຊາຊົນສອງທ້ອງຖິ່ນເຂົ້າໃຈເຊິ່ງກັນ

ແລະ ກັນກ່ວາອີກ, ພ້ອມກັນຕັດສິນໃຈໃນຂະບວນການຕໍ່ສູ້ເພື່ອເອກະລາດ, ກໍ່ສ້າງ ແລະ ປົກປັກຮັກສາປະເທດຊາດຂອງແຕ່ລະປະເທດ.

## III. ແຂວງກວາງຈິ ແລະ ສາລະວັນ ຢືນຄຽງບ່າຄຽງໄລ່ກັນໃນການຕໍ່ສູ້ປົດປ່ອຍຊາດ (1930-1975)

### 1. ສາມັກຄີຕໍ່ສູ້ຕ້ານຜູ້ຮຸກຮານ ແລະ ລຸກຮືຂຶ້ນຍຶດອຳນາດ (1930-1945)

ເດືອນເມສາປີ 1930, ຄະນະພັກຊົ່ວຄາວແຂວງກວາງຈິໄດ້ຮັບການສ້າງຕັ້ງຂຶ້ນ. ພາຍໃຕ້ການຊີ້ນຳນຳພາຂອງຄະນະພັກແຂວງ, ເຂດບໍລິເວນບ່າລອງ ແລະ ຈ້ຽວງວຽນ ແມ່ນບ່ອນໄປມາຂອງການເຄື່ອນໄຫວ ແລະ ເຜີຍແຜ່ການປະຕິວັດຂອງພະນັກງານຜູ້ຮ່ວມອຸດົມການແລະສະມາຊິກພັກທີ່ຢູ່ເຂດທົ່ງພຽງ. ແຕ່ປີ 1936-1939, ສະຫາຍ ເລເຢວັ້ນ, ຮ່ວາງທິອ໊າຍ, ໂຮ່ຕີ, ເລຕ໋ຳ ໄດ້ໄປເຄື່ອນໄຫວວຽກຢູ່ບ່າລອງ. ສະຫາຍ ເລແຮັ່ງ ໄດ້ຮັບມອບໝາຍໜ້າທີ່ທີ່ຂຶ້ນກັບເຂດບ່າລອງ ເພື່ອກໍ່ສ້າງຮາກຖານ, ແຈກຢາຍໃບປິວ, ໂຄສະນາເຜີຍແຜ່ກ່ຽວກັບການປະຕິວັດຂອງພັກ. ເຫດການທີ່ບັນດາສະມາຊິກພັກໄດ້ກ່າວຄຳປາໄສຢູ່ຫ້ວຍບ້ານອານ (ຕາແສງຈ້ຽວງວຽນ ໃນເດືອນ 12/1936), ໄດ້ສ້າງຕັ້ງໜ່ວຍພັກບາລອງ (ເດືອນ 4/1938) ແລະ ນຳພາປະຊາຊົນຕໍ່ສູ້ຍາດເອົາຜືນແຜ່ນດິນເພື່ອແຈກຢາຍໃຫ້ແກ່ຄົນທຸກຍາກ ໄດ້ສິ່ງຜົນດີຢ່າງເລິກເຊິ່ງຕໍ່ປະຊາຊົນແລະບ້ານເມືອງ. ຍາດຕິພີ່ນ້ອງເລົ່າສູ່ກັນຟັງ ວ່າເຂົາເຈົ້ານັບຖື ກອມມູນິເປັນເທວະດາຟ້າແຖນ ແລະນັບຖືຢ່າງສຸດໃຈ.

ອາວາວ, ບານາງ, ຕ່າລອງ, ອາງໍ່, ອາບຸງ ແມ່ນບັນດາຕາແສງເຂດຊາຍແດນທີ່ມີການພົວພັນຢ່າງແໜ້ນແຟ້ນກັບ ບ້ານເຊ, ອາຢຶງ, ອາຊ໊ອກ,ອາວາວຂອງເມືອງສະມ້ວຍ; ມີທາງລັດແລະເສັ້ນທາງໄປທາງໄປມາຫາສູ່ລະຫວ່າງເຂດຈ້ຽວງວຽນ ແລະ ບ່າ

ລອງ. ມີພະນັກງານຮ່ວມອຸດົມການຫຼາຍຄົນແລະສະມາຊິກພັກຫຼາຍ ຄະນະໄດ້ມາເຄື່ອນໄຫວ ກໍ່ສ້າງຮາກຖານ, ໂຄສະນາເຜີຍແຜ່ ແລະສ້າງຄວາມຕື່ນຕົວໃນການປະຕິວັດໃຫ້ແກ່ພີ່ນ້ອງຮ່ວມຊາດ ທີ່ຢູ່ເຂດ ຊາຍແດນ. ພາກສ່ວນນະໂຍບາຍ ແລະແນວທາງການປົດປ່ອຍຊາດຂອງພັກກອມມູນິດອິນດູຈີນໄດ້ເລີ່ມແຜ່ລາມອອກໄປສູ່ຊາວຫວຽດນາມ ແລະ ຊາວລາວ ຢູ່ເຂດຊາຍແດນຂອງເມືອງສະມ້ວຍ, ແຂວງສາລະວັນ. ພາຍຫຼັງການກໍ່ລັດຖະປະຫານຂອງຍີ່ປຸ່ນ, ທະຫານທີ່ຍັງເຫຼືອຂອງ ກອງທັບຝຣັ່ງທີ່ຖືກໄລ່ລ່າໂດຍຍີ່ປຸ່ນໄດ້ແລ່ນເຂົ້າໄປ ໃນເຂດບາລອງ, ຢຽບປ່າເຂົ້າໄປໃນເຂດຕອນໃຕ້ຂອງປະເທດລາວ ເພື່ອຫລົບລີ້ໂດຍໃຊ້ກົນອຸບາຍຍຶດເອົາແລວທາງຫ້າຍຟຽນ-ເທວິ້ນຮວ່າ. ດ້ວຍການໂຄສະນາເຜີຍແຜ່ຂອງພະນັກງານ, ປະຊາຊົນຢູ່ຕາມຊາຍແດນໄດ້ລຸກຮືຂຶ້ນນາບຂູ່ ເພື່ອຂັບໄລ່, ເຊື່ອງຊ່ອນສະບຽງອາຫານແລະບັງຄັບໃຫ້ພວກມັນຢູ່ຢ່າງໂດດດ່ຽວ, ເພື່ອປະຕິບັດຕາມນະໂຍບາຍຂອງ "ຍີ່ປຸ່ນ - ຝຣັ່ງໃນການຕໍ່ສູ້ຂອງພວກເຮົາ", ປະຊາຊົນຂອງບັນດາບ້ານ ແລະ ເມືອງສາລະວັນໄດ້ສ້ອມແປງຄັນທະນູ, ໜ້າຂາ, ງ່າມ, ທ້ອນໂຮມສະບຽງອາຫານ, ກຽມພ້ອມລຸກຮືຂຶ້ນຍຶດອຳນາດ.

## 2. ກອງທັບ ແລະ ປະຊາຊົນ ແຂວງ ກວາງຈີ - ແຂວງສາລະວັນຮ່ວມສຳພັນສູ້ຮົບຕ້ານພວກລ່າເມືອງຂຶ້ນຝຣັ່ງ (1945 - 1954)

ວັນທີ 23 ກັນຍາ 1945, ດ້ວຍການຊ່ວຍເຫຼືອຂອງກອງທັບອັງກິດ, ພວກລ່າເມືອງຂຶ້ນຝະລັ່ງໄດ້ເປີດສາກບຸກໂຈມຕີປະເທດເຮົາເປັນຄັ້ງທີ2. ຍ້ອນສະພາບການດັ່ງກ່າວ, ລັດຖະບານໄດ້ອອກມາຮຽກຮ້ອງໃຫ້ປະຊາຊົນທົ່ວປະເທດ ສະໜັບສະໜູນພີ່ນ້ອງຮ່ວມຊາດທີ່ຢູ່ທາງພາກໃຕ້ໃນການຕໍ່ສູ້ຕ້ານພວກລ່າເມືອງຂຶ້ນຝະລັ່ງ.

ຢູ່ບໍລິເວນແຂວງກວາງຈິ, ພາຍຫຼັງທີ່ຍີ່ປຸ່ນກໍ່ລັດຖະປະຫານຝຣັ່ງ (9 ມີນາ 1945), ທະຫານຝຣັ່ງ ຈຳນວນໜຶ່ງໄດ້ຫຼົບໜີ ອອກຈາກແຂວງກວາງຈິ ແລະຄ້າຍທະຫານຂອງຕົນ ແລະໄດ້ໄປລີ້ຊ່ອນຢູ່ເຂດຊາຍແດນ ຫວຽດນາມ-ລາວ. ໂດຍສະເພາະແມ່ນຢູ່ເສັ້ນທາງເລກ 9 ມີທະຫານປະມານ 1 ກອງພັນຂຶ້ນກັບກອງພັນນ້ອຍຂອງທະຫານອິນດູຈີນ, ບັນຊາການໂດຍ ພັນເອກ ໂຕວົກແກັງ (ທົ່ວຄືນ), ຍຶດຄອງເຂດວົງນອກຂອງເຊໂປນ, ເມືອງພີນ ແລະ ພະລານ (ສະຫວັນນະເຂດ). ແຜ່ລາມໄປເຖິງ ເມືອງຄຳເກີດ, ຫຼັກຊາວ. ດ້ວຍເຈດຕະນາຢາກບຸກລຸກປະເທດຂອງພວກເຮົາອີກເທື່ອໜຶ່ງ, ໃນທ້າຍເດືອນຕຸລາ 1945, ທະຫານຝຣັ່ງທີ່ລີ້ຢູ່ໃນພາກໃຕ້ຂອງລາວໄດ້ຊອກຫາວິທີຕິດຕໍ່ ແລະສົມຮູ້ຮ່ວມຄິດກັບພວກປະຕິການຝ່າຍທະຫານທີ່ຢູ່ສະຫວັນນະເຂດ ຮິບໂຮມເອົາກອງກຳລັງ ເພື່ອບຸກໂຈມຕີແລະຍຶດເອົາເຂດພາກໃຕ້ ບັງຄັບໃຫ້ກົມກອງຂອງທະຫານຍີ່ປຸ່ນທີ່ຕັ້ງຢູ່ເສັ້ນທາງເລກ 9 ຕ້ອງມອບທີ່ຕັ້ງຂອງຍີ່ປຸ່ນໃຫ້ແກ່ຝຣັ່ງ.

ເພື່ອການສະກັດກັ້ນກົນອຸບາຍຂອງສັດຕູໃຫ້ທ່ວງທັນແຕ່ຫົວທີ, ຄະນະປະຈຳພັກແຂວງ ກວາງຈິ ໄດ້ຕົກລົງສົ່ງກອງກຳລັງ ກອງພັນທະຫານປົດປ່ອຍ ຫງວຽນທ້ຽນເທວິດບັນຊາ ໂດຍສະຫາຍ ຫງວຽນດົ້ງ ຈຶ່ງໄປຊ່ວຍເຫຼືອລາວເພື່ອສ້າງຂະບວນການການປະຕິວັດ ແລະ ລົບລ້າງທະຫານຝລັ່ງ. ເພື່ອຕອບສະໜອງນະໂຍບາຍຂອງແຂວງ, ຄະນະພະນັກງານຮັບຜິດຊອບຂອງພັກເຮືອງຮວາ ໄດ້ລະດົມກອງກຳລັງເຂົ້າຮ່ວມການທະຫານລາດປ້ອງກັນຕົນເອງ,

ນຳພາກອງກຳລັງທະຫານຜ່ານປ່າເພື່ອໄປຕໍ່ສູ້ກັບສັດຕູ; ລະດົມກຳລັງຮົບ ແລະ ແຈກຢາຍເກືອເພື່ອຊ່ວຍເຫຼືອກອງກຳຂອງແຂວງ; ນຳເອົາປືນແກັບບາງສ່ວນທີ່ໄດ້ຈາກຝຣັ່ງໄປປະເທດລາວ ເພື່ອແລກປ່ຽນສະບຽງອາຫານ ແລະ ສະໜັບສະໜູນຄອບຄົວທີ່ຂາດເຂີນ.

ຕາມສັນຍາຊົ່ວຄາວລະຫວ່າງຫວຽດນາມ ແລະ ຝລັ່ງ, ຫຼັງວັນທີ 6/3/1946, ການຕໍ່ສູ້ຂອງກອງທັບ ແລະ ປະຊາຊົນຂອງພວກເຮົາຕໍ່ສູ້ຕ້ານທະຫານຝຣັ່ງທີ່ຢູ່ເສັ້ນທາງເລກທີ 9 ໄດ້ຖືກໂຈະໄວ້ຊົ່ວຄາວແລະຕາມຂໍ້ຕົກລົງລະຫວ່າງຄະນະຜູ້ແທນຂອງພວກເຮົາ (ກວາງຈິ-ສະຫວັນນະເຂດ) ກັບກອງທັບຝລັ່ງ, ພວກເຮົາໄດ້ໃຫ້ກອງທັບຝລັ່ງຢືມເສັ້ນທາງເລກ 9 ແລະ ເລກ 1 (ຈາກດົງຮ່າໄປຮອດເຫ້ວ) ເພື່ອນຳກອງທັບຝຣັ່ງຈຳນວນໜຶ່ງຈາກພາກໃຕ້ຂອງລາວໄປເມືອງເຫ້ວ. ແຕ່ວ່າໃນຄວາມເປັນຈິງແລ້ວ, ພວກມັນເຄື່ອນຍ້າຍກອງກຳລັງໄປເຫວ້ພຽງແຕ່ບາງສ່ວນ, ສ່ວນທີ່ເຫຼືອແມ່ນລ້ວນແລ້ວແຕ່ເປັນທະຫານ ທີ່ລົງມາຈາກ ທາງທິດຕາເວັນອອກຂອງລາວ ແລະສາລະວັນ, ຕິດກັບກວາງຈິ, ເພື່ອທຽມ ແລະດຳເນີນການຣຸກຮານປະເທດ ພວກເຮົາເປັນຄັ້ງທີ 2

ແຕ່ວັນທີ 10 ມັງກອນ 1947, ພວກລ່າເມືອງຂຶ້ນຝຣັ່ງ ໄດ້ຂ້າມແມ່ນ້ຳເຊບັ້ງໄຟໄປບຸກໂຈມຕີບ້ານຕົ້ງເຫວິນ, ຕີຍຶດເອົາແຄແຊັງ ແລະອີກຝ່າຍໜຶ່ງໄດ້ບຸກໂຈມຕີແນວປ້ອງກັນຂອງລາວບາວໃນເຂດຕອນໃຕ້ຂອງລາວ, ແຂວງສາລະວັນ, ຝ່າຍທະຫານອີກ 200 ຄົນ (ລວມມີ ຝຣັ່ງ ແລະມຽນຢານ) ຂ້າມເຂດສະມ້ວຍ ແລະຂ້າມປ່າໄປຫາຕາຣຸດ.

ພາຍໃຕ້ການໂຄສະນາເຜີຍແຜ່ຂອງທະຫານຫວຽດນາມ, ເມື່ອພວກລ່າເມືອງຂຶ້ນຝະລັ່ງຂ້າມຊາຍແດນ, ກອງທັບຫວຽດນາມ ແລະ ລາວຢູ່ບ້ານເຊ, ອາໂຢງ, ອາຊອກ, ແລະອາວາວ ຂອງເມືອງສະມ້ວຍໄດ້ສົມທົບກັນເພື່ອຕໍ່ສູ້, ເຮັດໃຫ້ສັດຕູມີຄວາມເສຍຫາຍຢ່າງຫຼວງຫຼາຍ. ເຖິງຢ່າງໃດກໍຕາມ, ຍ້ອນກຳລັງພົນຂອງພວກເຮົາມີໜ້ອຍ, ກອງທັບຝຣັ່ງໄດ້ບຸກຍຶດເອົາຕາຣຸດ, ປາຣີ ໄດ້ມຸ່ງໜ້າໄປຫາບາລອງ.

ຕໍ່ໜ້າຄວາມຕ້ອງການທີ່ໜັກແໜ້ນຂອງການຕໍ່ຕ້ານ,ປີ 1948, ຕາມຄຳຮຽກຮ້ອງຂອງ "ສຳພັນສູ້ຮົບຊາດ ຫວຽດນາມ - ລາວ", ແຂວງກວາງຈິໄດ້ສົ່ງ1

ກອງກຳລັງທະຫານ ໄປເຮັດວຽກພິເສດໃນເຂດທ້ອງຖິ່ນເຮືອງຮວາ ບັນຊາໂດຍ ສະຫາຍ ເຈີ່ນຊຽນເຕີມ ໄປຊ່ວຍປະເທດລາວສ້າງຖານທີ່ໝັ້ນໃຫ້ແກ່ບັນດາສະຫາຍ ໃນຄະນະບໍລິຫານງານ ພັກກອມມູນິດອິນດູຈີນ, ໃນນັ້ນມີສະຫາຍ ສຸພານຸວົງ ຢູ່ (ສະຫວັນນະເຂດ). ເພື່ອປ້ອງກັນເຂດຖານທີ່ໝັ້ນໃຫ້ ຄວາມປອດໄພ, ປະຊາຊົນ ບ້ານ, ເມືອງ, ແຂວງສາລະວັນ ໄດ້ຊ່ວຍແຂວງສະຫວັນນະເຂດ ກໍ່ສ້າງ ແລະ ປັບປຸງ ກຳລັງແຮງ, ທ້ອນໂຮມສະບຽງອາຫານ, ນຳພາປະຊາຊົນ ສົມທົບກັນຕໍ່ສູ້ຕ້ານສັດຕູ, ສ້າງເງື່ອນໄຂໃຫ້ກອງທະຫານ ພັນທະມິດ ຫວຽດນາມ-ລາວໄດ້ຮັບໄຊຊະນະຢູ່ເມືອງ ທ່າແຂກ, ຄຳເກີດ, ຄະມາ ແລະໄດ້ຕໍ່ສູ້ກັບສັດຕູຢູ່ເຊໂປນ ແລະເມືອງຟິນ.

ເພື່ອຜັນຂະຫຍາຍຖານທີ່ໝັ້ນຕໍ່ຕ້ານຫວຽດນາມ - ລາວ, ສະຫາຍ ຟານດູ, ເລຂາຄະນະພັກເມືອງ ເຮືອງຮວາ, ແລະ ສະຫາຍ ເລຊານປະທານຄະນະກຳມະການ ຕໍ່ຕ້ານການເມືອງໄດ້ປຶກສາຫາລື ແລະ ຊ່ວຍເຫຼືອການກໍ່ສ້າງ ພື້ນຖານໂຄງລ່າງຢູ່ ເມືອງສະມ້ວຍ. ຍ້ອນການເຄື່ອນໄຫວໄດ້ເປີດກວ້າງ, ບັນດາສະຫາຍໄດ້ຂົນຂວາຍ ພໍ່ແມ່ປະຊາຊົນມາຊື້ເຂົ້າຈາກລາວ ແລະ ຊື້ເກືອຈາກເຂດທົ່ງພຽງ; ເອົາເກືອແລກ ປ່ຽນກັບມັນຕົ້ນ ເພື່ອໃຫ້ປະຊາຊົນມີອາຫານສຳຮອງ ຫຼາຍຂຶ້ນ. ພວກເຮົາເຄື່ອນ ໄຫວໂຄສະນາເຜີຍແຜ່ ແລະ ປຸກລະດົມປະຊາຊົນສອງຝັ່ງຊາຍແດນບໍ່ໃຫ້ເຂົ້າຮ່ວມ ການຊຸມນຸມຂອງສັດຕູ. “ໂດຍອາໄສພະນັກງານ, ສະມາຊິກພັກທີ່ຮູ້ເລິກຮູ້ແຈ້ງ, ໃກ້ຊິດກັບຮາກຖານ, ທີ່ໄດ້ປາກເວົ້າ, ລົງມືເຮັດ, ກິນນຳກັນ,ຢູ່ຮ່ວມກັນ, ຮ່ວມກັນ ເຄື່ອນໄຫວກັບພີ່ນ້ອງຮ່ວມຊາດບັນດາເຜົ່າ, ເພື່ອເຂົ້າເຖິງແນວຄິດຈິດໃຈ ແລະ ຄວາມປາດຖະໜາຂອງປະຊາຊົນ, ປະຊາຊົນເຄົາລົບຮັກແພງບັນດາພະນັກງານ ການປະຕິວັດຂອງ ທ່ານ ໂຮ່ຈິມິງ ຍ້ອນເຫດນັ້ນ, ຄຽງຄູ່ກັບຄວາມດຸໝັ່ນໃນການ ອອກແຮງງານຢູ່ໄຮ່ສວນ, ພີ່ນ້ອງຮ່ວມຊາດໄດ້ຊຸກຍູ້ການຂຸດຄົ້ນຜະລິດຕະພັນຈາກ ປ່າ, ຈຶ່ງເຮັດໃຫ້ເຄືອຂ່າຍການຈະລາຈອນສິນຄ້າ ລະຫວ່າງພີ່ນ້ອງຊົນເຜົ່າເທື່ອງ ແລະ

ກິງທີ່ຢູ່ຕາຣູດ, ຕູປິງ, ຕ່າລອງ (ເຂດຈ້າຍກ້ຳແລະແຄແຈ)”[1]; ໄດ້ກໍ່ສ້າງຮ່າງຕົວຂຶ້ນ "ພີ່ນ້ອງຮ່ວມຊາດເຜົ່າສູງໄດ້ຟື້ນຕົວຂຶ້ນ, ບໍ່ຮ່ວມມືກັບສັດຕູ, ປິດກັ້ນເສັ້ນທາງການ ຕິດຕໍ່ ເຮັດໃຫ້ສັດຕູຢ້ານກົວແລະ ຖອນຕົວອອກຈາກຄ້າຍຊວຍນວຍ, ລວາ, ລາໂລ່, ບ້ານເລາະ ແລະບາຢູ”[2].

ປະຕິບັດໜ້າທີ່ "ພັດທະນາການປະຕິວັດລາວ”[3], ຄະນະພັກເມືອງເຮືອງຮວາ ໄດ້ຈັດຕັ້ງກອງປະຊຸມເປີດກວ້າງ ຜັນຂະຫຍາຍໃນເດືອນ 12/1949 ເພື່ອຕັດສິນ ໃຈກວາດລ້າງເຈຕະນາຂອງສັດຕູເພື່ອປັບປຸງແນວໂຮມລາວ, ໂດຍເອົາເຊໂປນ ເກາະກຳບັງ, ເພີ່ມທະວີການຄວບຄຸມກວດກາເພື່ອທຳລາຍລ້າງສັດຕູ. ເພື່ອທຳລາຍ ແຜນການຂອງສັດຕູ, ຄະນະພັກເມືອງເຮືອງຮວາໄດ້ດຳເນີນ "ລະດົມພົນ ທົ່ວປະເທດ". ໃນເວລາພຽງໜຶ່ງອາທິດ, ກວາງຈິ ແລະບັນດາແຂວງຂອງລາວ ໄດ້ສະໝັກໃຈນຳເອົາຄວາຍ ແລະ ຊ້າງເພື່ອຮັບໃຊ້ກອງພົນທະຫານຫຼັກທີ່ຕັ້ງ ຖານທີ່ໝັ້ນຢູ່ຕາຮວາກ, ກ່ອນທີ່ຈະເຄື່ອນຍ້າຍ ໄປຢູ່ເຂດພູພຽງບໍລະເວນ, ເພື່ອ ບຸກໂຈມຕີສັດຕູຢູ່ຕອນໃຕ້ຂອງລາວ ແລະ ພາກຕາເວັນ ອອກສຽງເໜືອຂອງ ກຳປູເຈຍ; ສາມາດຍຶດໄດ້ສະບຽງອາຫານໄດ້ບາງສ່ວນເພື່ອເສີມກຳລັງໃຫ້ກັບບັນດາ ກົມກອງທີ່ສູ້ຮົບຢູ່ຕອນໃຕ້ຂອງລາວ.

ພາຍຫຼັງກອງປະຊຸມໃຫຍ່ຂອງອົງຄະນະພັກເມືອງ ເຮືອງຮວາຄັ້ງທີ 3(ເດືອນ 2/1952), ຂະບວນການ "ສູ້ຮົບຕາເວັນຕົກ, ກອງປຸ້ນ, ໄດ້ປາບພວກປະທຸດສະຮ້າຍ

---

[1]ປະຫວັດຄະນະພັກເມືອງ ເຮືອງຮວາ 1930-1975, ຫນ້າ 70.

[2]ປະຫວັດຄະນະພັກເມືອງ ເຮືອງຮວາ 1930-1975, ຫນ້າ 74.

[3]ປະຫວັດຄະນະພັກເມືອງ ເຮືອງຮວາ 1930-1975, ຫນ້າ 73.

(ພວກຕີນມືຂອງສັດຕູ) ແລະປາບປາມພວກປະຕິການ", ປົດປ່ອຍໝູ່ບ້ານ ແລະ ບ່ອນລີ້ໄພໃຫ້ໄດ້ຮັບການພັດທະນາ. ພາຍໃຕ້ການຊີ້ນໍາຂອງພະນັກງານຫວຽດນາມ, ຊາວສາລະວັນໄດ້ຮູ້ວິທີເຮັດ ແລະນໍາໃຊ້ຮື້ອແຫຼມຫຼາຍປະເພດ, ກັບດັກຕໍ່ສູ້ກັບສັດຕູ, ເພື່ອປົກປັກຮັກສາບ້ານ, ເມືອງ, ໄຮ່ສວນ ແລະສະກັດກັ້ນ ຂ້າເສິກຝຣັ່ງທີ່ເຂົ້າມາປຸ້ນເອົາສະບຽງອາຫານ. ແຕ່ກາງປີ 1953, ສົມທົບກັບ ທະຫານທ້ອງຖິ່ນ ແລະ ທະຫານກອງຫຼອນເຮືອງຣວາ, ທະຫານຂອງພວກເຮົາທີ່ຢູ່ຕອນໃຕ້ຂອງລາວດ້ວຍການຊ່ວຍເຫຼືອ ແລະ ປົກປັກຮັກສາຂອງເພື່ອນໄດ້ດັກຕີ ຄ້າຍທະຫານ ຜາບາງ, ບາງ່ານ (ຕາແສງຕາຣອກ). ທະຫານສ່ວນຫຼາຍຂອງໝວດ ທະຫານຮັກສາຄວາມສະຫງົບທີ່ປະຈໍາຢູ່ຄ້າຍ, ໃນນັ້ນບັນຊາການໂດຍ ຕາເຕ ໄດ້ຖືກທໍາລາຍ, ເຮັດໃຫ້ບັນດານາຍພົນ ແລະ ກອງທະຫານສັດຕູຢູ່ເມືອງແຄແຊັງ ມີຄວາມສັບສົນວຸ້ນວາຍ.

ໃນເດືອນສິງຫາປີ 1953, ທະຫານທີ່ປະຈໍາການຢູ່ປ້ອມລາວບາວ, ພາຍໃຕ້ການບັນຊາຂອງນາຍທະຫານຝຣັ່ງ ໄດ້ພ້ອມກັນບຸກເຂົ້າກວາດເອົາເຂດອ້ອມຮອບພູສະມ້ວຍ, ເພື່ອສ້າງປ້ອມນີ້ຄືນໃໝ່, ເຊິ່ງພວກເຮົາໄດ້ຖືກທໍາລາຍ ໃນເດືອນທັນວາ 1952. ການບຸກໂຈມຕີຂອງສັດຕູໄດ້ເຮັດໃຫ້ປະຊາຊົນເຂດສະມ້ວຍໄດ້ປະສານສົມທົບກັນເພື່ອຕໍ່ສູ້ຢ່າງດຸເດືອດຢູ່ຊ່ອງພູ ຕຸດຣາວຸດ. ຕໍ່ມາ, ສັດຕູໄດ້ເຕົ້າໂຮມກອງກໍາລັງເຂົ້າປິດລ້ອມຄ້າຍທະຫານຢູ່ສະໝ້ວຍ, ຕໍ່ໜ້າການເຄື່ອນໄຫວຢ່າງແຂງແຮງຂອງພວກເຮົາ, ທະຫານໃນປ້ອມບໍ່ກ້າອອກໄປກວາດລ້າງແລະປຸ້ນຈີ້ຄືແຕ່ກ່ອນ. ໃນກາງເດືອນເມສາປີ 1954, ກອງປະຊຸມຄັ້ງທີ 8, ກອງທັບທ້ອງຖິ່ນກວາງຈິໄດ້ປະສານງານເພື່ອປິດລ້ອມຄ້າຍທະຫານຢູ່ສະໝ້ວຍ. ສັດຕູໄດ້ຍອມຈໍານົນໂດຍບໍ່ມີເງື່ອນໄຂ ແລະໄດ້ມອບປືນເຫຼັກຍາວຂອງອັງກິດຈໍານວນ 106 ກະບອກໃຫ້ແກ່ທະຫານຂອງພວກເຮົາ. ໃນໄລຍະໄຊຊະນະຂອງພວກເຮົາ, ພວກເຮົາໄດ້ສືບ

ຕໍ່ປະສານ ປິດລ້ອມອີກ 1 ເຂດທີ່ຕັ້ງຂອງສັດຕູຢູ່ ໂກເປີຈາຕາຢູ່ເມືອງເຊໂປນ. ເດືອນເມສາປີ 1954, ເມືອງເຮືອງຮວາໄດ້ຮັບການປົດປ່ອຍ.

## 3. ກອງທັບ ແລະ ປະຊາຊົນ ແຂວງກວາງຈິ ພ້ອມດ້ວຍກອງທັບ ແລະ ປະຊາຊົນ ແຂວງສາລະວັນ ຕໍ່ສູ້ຕ້ານຈັກກະພັດອາເມລິກາ ທີ່ມາຮຸກຮານ (1954 - 1975)

ສົນທິສັນຍາເຊີແນວໄດ້ລົງນາມທີ່ແມ່ນ້ຳ ເບັນຫາຍ (ເສັ້ນຂະໜານທີ 17) ຢູ່ແຂວງກວາງຈິ ໄດ້ກາຍເປັນເຂດຊາຍແດນແຍກພາກເໜືອ ແລະ ພາກໃຕ້. ກວາງຈິ ທັງຢູ່ຕິດກັບພາກເໜືອສັງຄົມນິຍົມ, ທັງແມ່ນແຂວງຫົວຂົວຂອງພາກໃຕ້. ແມ່ນທີ່ຕັ້ງຍຸດທະສາດສຳຄັນ ຂອງກວາງຈິຍິ່ງເປັນການຕັ້ງປະເດັນໃນຄວາມຮຽກຮ້ອງຕ້ອງການ ຕ້ອງໄດ້ຍົກສູງຫຼາຍກວ່າເກົ່າ ສາຍພົວພັນສາກົນຫວຽດນາມ - ລາວ ເພື່ອຮັບປະກັນການຊ່ວຍເຫຼືອຂອງພາກເໜືອລົງສູ່ພາກໃຕ້, ເພື່ອຕີເອົາໄຊຊະນະ ອາເມລິກາ ຜູ້ຮຸກຮານ ແລະ ຄວາມເປັນເອກະພາບທົ່ວປະເທດ.

ຕໍ່ກັບພາລະໜ້າທີ່ ແລະ ສະພາບການໃໝ່, ພາຍຫຼັງຍ້າຍທະຫານໄປເຕົ້າໂຮມ, ສຳນັກງານຄະນະພັກເມືອງເຮືອງຮວາ ໄດ້ຖອນອອກໄປປະຕິບັດໜ້າທີ່ລັບ. ພື້ນທີ່ຕາແສງເຂດໃຕ້ເສັ້ນທາງເລກ 9 ລວມມີ: ເຮືອງຟຸ່ງ, ເຮືອງຫວຽດ, ເຮືອງເລີບ, ເຮືອງລິງ ເຊິ່ງຕິດກັບລາວ. ແຕ່ລະມື້ບັນດາສະຫາຍພະນັກງານ, ສະມາຊິກພັກ ຈັດແບ່ງກັນໄປຕິດຕາມພື້ນທີ່ ຮ່ວມກັບ ປະຊາຊົນສອງຝັ່ງຊາຍແດນ ເພື່ອຊຸກຍູ້ການຜະລິດ, ການຕໍ່ສູ້ສັດຕູຮຽກຮ້ອງສັດຕູ ຕ້ອງໃຫ້ພີ່ນ້ອງປະຊາຊົນໄດ້ຮັບຄວາມເສລີພາບໃນການທຳມາຫາກິນ, ຊື້ຂາຍ ແລະ ແລກປ່ຽນສິນຄ້າ.

ເພື່ອສືບຕໍ່ນຳພາພໍ່ແມ່ປະຊາຊົນທີ່ຢູ່ທາງພາກໃຕ້ຕໍ່ສູ້ຕ້າການຮຸກຮານຂອງອາເມລິກາ, ຕາມຄຳສັ່ງຂອງຂັ້ນເທິງ, ຈຶ່ງ ຕ້ອງມີສາຍສື່ສານວົງລົງເຊື່ອມຕໍ່ກັບເສັ້ນທາງເລກ 9. ສະຖານີສື່ສານລັບແຫ່ງທຳອິດທີ່ຢູ່ພາກເໜືອ - ໃຕ້; ຈຸດເລີ່ມຕົ້ນ

ແຫ່ງທຳອິດຈາກບ້ານຮ່າ, ເມືອງວິງລິງໄດ້ເປີດຂຶ້ນ. ຈາກບ້ານຮ່າເປີດຊອດເຂົ້າເສັ້ນທາງເລກ 9 ໄປທາງເກີນຕຳ, ລາມເຊີນ, ສະຣ້ວງ, ເກ, ລາຕົງ, ແຈງ ໄປຮອດສະຖານີສູກາງຂອງແຂວງ - ເອີ້ນວ່າ ທາງສູນລວມ. ເສັ້ນທາງໄດ້ສ້າງຂຶ້ນຢ່າງລັບລັບ, ສ່ວນຫຼາຍແມ່ນ ຈະສ້າງໃນຕອນກາງຄືນ. ທ້າຍປີ 1955, ວິງລິງໄດ້ຍ້າຍສະຖານີຄົມມະນາຄົມຈາກບ້ານຮ່າໄປເກີນຕາມ-ແຈງເຊິ່ງເອີ້ນວ່າສາຍລາມເຊີນ. ມາຮອດທ້າຍປີ 1956, ຕົ້ນປີ 1957, ສອງເສັ້ນທາງທົງເຍິດ ແລະ ລຳເຊີນ - ເສັ້ນທາງຂົນສົ່ງສິນຄ້າທາງທະຫານໄປພາກໃຕ້ໄດ້ຈັດຕັ້ງການຮັບສົ່ງທະຫານ, ພະນັກງານ; ການສົ່ງເອກະສານທາງການຈາກພາກເໜືອລົງພາກໃຕ້ແລະຈາກໃຕ້ຫາເໜືອໄດ້ເປີດຂຶ້ນ ແລະນັບມື້ນັບສົມບູນຂຶ້ນ.

ການເຄື່ອນໄຫວຂອງພວກເຮົາຢູ່ສອງເສັ້ນທາງໄດ້ຖືກກວດພົບໂດຍສັດຕູ. ເຂົາເຈົ້າໄດ້ເສີມຂະຫຍາຍລະບົບຄ້າຍທະຫານ, ເສີມຂະຫຍາຍກຳລັງລາດຕະເວນຢູ່ຕາມຊາຍແດນ, ຊຸ້ມຂ້ຽວປະຊາຊົນແລະເຕົ້າໂຮມບັນດາ ຄ້າຍທະຫານໂຮມກອງກຳລັງພິເສດເພື່ອຊອກຫາທັງກາງເວັນແລະກາງຄືນ. ການບຸກໂຈມຕີຂອງສັດຕູ, ຄຽງຄູ່ກັບສະພາບອາກາດທີ່ຮ້າຍແຮງຂອງພູຜາປ່າດົງຂອງເມືອງ ເຈື່ອງເຊີນ, ໄດ້ເຮັດໃຫ້ການເຄື່ອນໄຫວຂອງພວກຂ້າພະເຈົ້າບົນເສັ້ນທາງທົງເຍິດ ແລະ ລຳເຊີນ ປະສົບກັບຄວາມຫຍຸ້ງຍາກຫຼາຍຢ່າງ. ເພື່ອຮັບປະກັນເສັ້ນທາງໃຫ້ມີຄວາມລຸລ່ວງ, ອ້າຍນ້ອງປະຊາຊົນບັນດາເຜົ່າເຈືອງເຊີນຕາທັງເວັນອອກ-ຕາເວັນຕົກ ພາຍໃຕ້ຜູ້ບັງຄັບບັນໂດຍສະຫາຍ ເລແຮັ່ງ ໄດ້ພະຍາຍາມເຈາະຫາເສັ້ນທາງກາງປ່າໄມ້ທີ່ຕຶບໜາ, ໃນກົກເລົ່າກົກຫຍ້າເຕັມໄປດ້ວຍທາກ, ເທິງຫີນຫູແມວທີ່ແຫຼມຄົມ, ມີຫຼາຍໄລຍະທາງທີ່ທຸກຄືນຈຳເປັນຕ້ອງ "ຍ່າງບໍ່ໃຫ້ມີຮອຍ, ເຮັດກິນບໍ່ໃຫ້ມີຄວັນ, ເວົ້າບໍ່ໃຫ້ມີສຽງ". ບົນເສັ້ນເລີ່ມແລກ, ຫວຽດນາມ ກໍໄດ້ກໍ່ສ້າງຮາກຖານສິ່ງອຳນວຍຄວາມສະດວກ

ຢູ່ລາວ ແລະ ຣາກຖານນີ້ກໍ່ແມ່ນສິ່ງອຳນວຍຄວາມສະດວກໃນການຊ່ວຍເຫຼືອຄະນະ559ໃນຕອນທີ່ມີຄວາມຫຍຸ້ງຍາກລຳບາກ ແລະສັບສົນງົງງວຍ.

ໃນຕົ້ນປີ 1959, ເມື່ອສົງຄາມຕໍ່ສູ້ກູ້ຊາດກັບອາເມລິກາຂອງຊົນຊາດເຮົາແມ່ນບໍ່ສາມາດເຮັດໃຫ້ສອງພາກພື້ນເກີດສັນຕິພາບ, ກອງປະຊຸມຄະນະບໍລິຫານງານສູນກາງພັກຄັ້ງທີ 15 ໄດ້ຊີ້ໃຫ້ເຫັນຢ່າງຈະແຈ້ງເຖິງເສັ້ນທາງຂອງການພັດທະນາພື້ນຖານໂຄງລ່າງຂອງການການປະຕິວັດທາງພາກໃຕ້ແມ່ນຕ້ອງໄດ້ນຳໃຊ້ການປະຕິວັດໂດຍການໃຊ້ຄວາມຮຸນແຮງເພື່ອທ້ອນໂຮມ ແຜ່ນດິນແລະການປະຕິວັດປະຊາທິປະໄຕຂອງປະຊາຊົນໃຫ້ສຳເລັດ.

ປະຕິບັດຕາມມະຕິຕົກລົງຂອງກົມການເມືອງ, ຄະນະກຳມະການການທະຫານສູນກາງຊີ້ນຳຜັນຂະຫຍາຍເສັ້ນທາງຄົມມະນາຄົມຂົນສົ່ງເຈື່ອງເຊີນຕາມທິດຊີ້ນຳ: ຍຶດໝັ້ນຮັກສາແລວທາງທິດຕາເວັນອອກ, ເປີດກວ້າງເສັ້ນທາງຄົມມະນາຄົມຕາເວັນຕົກ ເຈື່ອງເຊີນຢ່າງຮີບດ່ວນ.

ຕົ້ນເດືອນມິຖຸນາປີ 1959, ຫົວໜ້າຄະນະ559 ຫວໍເບິ້ມ ໄດ້ໄປນະຄອນວິງລິງ ເພື່ອຮັບຜິດຊອບກອງປະຊຸມປຶກສາຫາລື ກ່ຽວກັບການເປີດກວ້າງເສັ້ນທາງໄປສູ່ພາກໃຕ້. ຜູ້ເຂົ້າຮ່ວມກອງປະຊຸມີສະຫາຍ ເຈືອງຈີ໋ກົງ, ເລຂາຄະນະພັກແຂວງກວາງຈີ້, ເລແຮັ່ງ - ກຳມະການຄະນະພັກແຂວງກວາງຈີ, ໂຮສີ໋ທ໊ານ - ເລຂາຄະນະພັກເຂດພິເສດວິງລິງ, ປະເກື່ອງ - ຄະນະປະຈຳພັກເມືອງ ເຮືອງຮວາ ແລະພະນັກງານຈຳນວນໜຶ່ງທີ່ມີຄວາມຊຳນານ ດ້ານພູມີປະເທດເຊັ່ນ: ໂຮ່ໂອຍຢູ່ຮາກ໊າ, ໂຮ່ນວນຢູ່ຈັງຮິນ-ຊ່ຽວຊານທາງນ້ຳໄຫຼ, ໂຮ່ແຕວ-ຂົງເຂດເສັ້ນທາງເລກ 9.

ແຄຮົ໊-ວິງລິງຖືກເລືອກເປັນຈຸດເລີ່ມຕົ້ນຂອງເສັ້ນທາງປະຫວັດສາດ. ກຸ່ມ 301, ອີງໃສ່ເສັ້ນທາງສູນກາງເພື່ອ ເຮັດວຽກຂົນສົ່ງ. ພາຍໃຕ້ເງື່ອນໄຂຂອງການ

ບຸກໂຈມຕີແບບກະທັນຫັນຂອງອາເມລິກາ, ການຂົນສົ່ງສິນຄ້າຜ່ານເສັ້ນທາງ 9 ແມ່ນວຽກງານທີ່ຫຍຸ້ງຍາກ ແລະ ອັນຕະລາຍທີ່ສຸດ. ຜ່ານການຄົ້ນຄ້ວາພູມສັນຖານທີ່ໄດ້ຮັບອະນຸຍາດຈາກລັດຖະບານສອງປະເທດ ຫວຽດນາມ - ລາວ, ເສັ້ນທາງຂົນສົ່ງດ້ວຍລົດຕາມເສັ້ນທາງ 12A ຈາກເມືອງແກແວ ຜ່ານເມືອງມູຢາໄປລາວ, ເຖິງສາມແຍກລັງຄັງ (ບ້ານນາປາວ) ແລ້ວເປີດເສັ້ນທາງ 129, 128. ລ່ອງໄປທາງພາກໃຕ້ ແລ້ວ ເຂົ້າສູ່ເສັ້ນທາງເລກ 9 ພາກໃຕ້ ຂອງລາວ; ລ່ອງໄປຕໍ່ ແລະ ລ້ຽວໃສ່ເຂດທີ່ໝັ້ນຂອງ ກວາງຈິ, ເທື່ອທຽນ ແລະ ລຽນເຂດ V.

ປະຕິບັດໜ້າທີ່ຄະນະພັກແຂວງກວາງຈິໂດຍກົງ, ໂດຍສະຫາຍເລແຮັ່ງ ໄດ້ສືບຕໍ່ຈັດຕັ້ງສົ່ງກອງກຳລັງຂ້າມເຂດຊາຍແດນໄປຍັງບ້ານປາລໍ, ອາຈາ, ປາລາບ, ສະໜ້ອຍ... (ແຂວງສາລະວັນ). ເພື່ອເປີດເສັ້ນທາງ “ບໍລິເວນທາງຕອນໃຕ້ຂອງລາວ ທີ່ຕິດກັບແຂວງກວາງຈິ ມີທີ່ຕັ້ງສຳຄັນໃນທົ່ວສະໜາມຮົບຂອງລາວ; ບ່ອນທີ່ສັດຕູໄດ້ສຸມກຳລັງໄວ້ເຄື່ອນໄຫວ, ຈັດຕັ້ງການບຸກໂຈມຕີຂະໜາດໃຫຍ່ເຂົ້າໃນແລວທາງແລະເຂດປົດປ່ອຍ, ທຳລາຍຮາກຖານ ແລະຂົ່ມຂູ່ປະຊາຊົນ. ໂດຍສະເພາະ, ແມ່ນຢູ່ເຂດພາກກາງຂອງລາວ, ສັດຕູໄດ້ບຸກໂຈມຕີຮະຮານເຂດນ້ອຍ ຢ່າງລັບໆ, ພ້ອມກັບຈັບກຸມປະຊາຊົນຢ່າງເປີດເຜີຍ, ລອບຂ້າຢ່າງລັບໆເພື່ອຂົ່ມຂູ່ປະຊາຊົນ ແລະ ພະນັກງານຮາກຖານ. ພິເສດ, ອາເມລິກາໄດ້ໃຫ້ຄວາມສຳຄັນກັບຊົນເຜົ່າແມ້ວ ແລະ ປະຊາຊົນທີ່ຢູ່ເທິງເຂດຊາຍແດນຕິດກັບຫວຽດນາມ ໃນຕອນໃຕ້ຂອງລາວ, ໄດ້ໃຊ້ກົນອຸບາຍວາງແຜນໃຫ້ບັນດາຊົນເຜົ່ານີ້

ຕໍ່ຕ້ານການປະຕິວັດ"[1]. ສະນັ້ນ, ເພື່ອຮັບປະກັນຄວາມປອດໄພຂອງການເປີດເສັ້ນທາງດັ່ງກ່າວ, ພວກເຮົາບໍ່ພຽງແຕ່ ສະໜັບສະໜູນການຫຼີກລ້ຽງ ສັດຕູເທົ່ານັ້ນ, ແຕ່ຍັງຫຼີກລ້ຽງປະຊາຊົນ, ຮັກສາຄວາມລັບທັງຄົນໃນຄອບຄົວ, ຍາດຕິພີ່ນ້ອງ ແລະຫມູ່ເພື່ອນມິດສະຫາຍ. ທຳອິດ, ປະຊາຊົນລາວທີ່ຢູ່ທາງພາກຕາເວັນຕົກຂອງເຈື່ອງໄດ້ຫລົບຫນີຍ້ອນເຂົ້າໃຈຜິດວ່າ ເປັນທະຫານ ຂອງ ທ່ານ ພູມີ (ລາວ). ຍ້ອນການໂຄສະນາເຜີຍແຜ່ຂອງພະນັກງານ, ແມ່ນສະຫາຍ ເລແຮ່ນ, ປາເກື່ອງເປັນຕົວແທນ... ພໍ່ແມ່ປະຊາຊົນທີ່ຢູ່ຕາມບັນດາໝູ່ບ້ານຂອງລາວໄດ້ກັບຄືນ ພ້ອມກັນປະກອບສ່ວນຂຸດທາງ ແລະ ເປີດເສັ້ນທາງ. ນີ້ແມ່ນວຽກງານທີ່ເຮັດດ້ວຍຄວາມສະໝັກໃຈດ້ວຍຈິດໃຈທີ່ຂາວສະອາດ ແລະ ສະຫງ່າລາສີຂອງສອງຊົນເຜົ່າທີ່ມີມິດໄມຕີທີ່ດີຕໍ່ກັນແລະສະນິດຕິດແໜ້ນ. ສະນັ້ນ,ເຂົາເຈົ້າຈຶ່ງໄດ້ຜ່ານຜ່າບົດທົດສອບທີ່ທໍລະຫົດ, ບໍ່ພຽງແຕ່ຕໍ່ສູ້ກັບສັດຕູເທົ່ານັ້ນ ແຕ່ຍັງຕ້ອງຕໍ່ສູ້ກັບດິນຟ້າອາກາດຮ້າຍແຮງ ແລະສັດຮ້າຍ. ... ຂອງພູຜາປ່າດົງສາຍພູຫຼວງ, ຍ້ອຍຫຼາຍວັນເດືອນປີທີ່ຕ້ອງຫ່າງຈາກຄອບຄົວ, ບ້ານເກີດເມືອງນອນ ແຕ່ສະຫາຍຄົນລາວຍາມໃດກໍຢືນຄຽງຂ້າງຫວຽດນາມ. ຍ້ອນການຊ່ວຍເຫຼືອ ແລະ ການປະສານງານດັ່ງກ່າວຈຶ່ງເຮັດໃຫ້ເສັ້ນທາງຢູ່ຕາເວັນຕົກສາຍພູຫຼວງຜ່ານແຂວງກວາງຈິໄດ້ເປີດຢ່າງວ່ອງໄວ, ຫຼີກລ່ຽງພູສູງ ແລະ ເຫວເລິກ ແຕ່ຍັງເປັນຄວາມລັບ ແລະ ປອດໄພ.

ໃນຊ່ວງຕົ້ນປີຂອງສົງຄາມຕໍ່ຕ້ານອາເມລິກາເພື່ອກອບກູ້ປະເທດ, ໂດຍສະເພາະນັບຕັ້ງແຕ່ກົດໝາຍວ່າດ້ວຍ 10-59 ອອກມາ, ອາເມລິກາ-ພວກກະບົດໄດ້ສັງຫານຜູ້ຮັກຊາດແລະຜູ້ບໍລິສຸດຢ່າງເປີດເຜີຍແລະປ່າເຖື່ອນ. ການເຄື່ອນໄຫວການປະຕິວັດລາວ ປະສົບກັບຄວາມຫຍຸ້ງຍາກຫຼາຍຢ່າງ. ຄະນະພັກ

---

[1]ສະຫລຸບວຽກງານສ້າງພື້ນຖານໂຄງລ່າງແລະຊ່ວຍເຫລືອເພື່ອນລາວທີ່ຢູ່ທາງພາກກາງແລະພາກໃຕ້.ເ ອກກະສານສຳເນົາທີ່ກົມສຳເນົາ,ຫ້ອງການຄະນະ ປ້ອງກັນປະເທດ.

ແຂວງກວາງຈີ້ ແລະ ປະຊາຊົນບັນດາເຜົ່າໄດ້ປົກປັກຮັກສາ, ລຳລຽງສະບຽງອາຫານ ໃນເວລາທີ່ກອງກຳລັງປະເທດລາວໄດ້ຖືກໄລ່ຈັບ ແລະ ປາບປາມ ໂດຍຝ່າຍຄ້ານ ພູມີ ແລະ ກະຕ່າຍ (ມີຂວາອາເມລິກາ) ທີ່ປີ້ນແປ້ຝ່າຝືນສົນທິສັນຍາເຊີແນວ. ກວາງຈີໄດ້ກາຍເປັນທີ່ໝັ້ນ ແລະ ແນວຫລັງທີ່ໝັ້ນແກ່ນຂອງແຂວງສາລະວັນ. ໂດຍສະເພາະ, ການກຳເນີດຂອງ 2 ໜ່ວຍປະກອບ ອາວຸດແຂວງ ກວາງຈີ, 59A ແລະ 59B, "ເພື່ອຊ່ວຍເຫຼືອເພື່ອນລາວກໍ່ສ້າງກຳລັງປະກອບອາວຸດ ແລະ ກຳລັງພົນ"[2]. ເມືອງ ເຣືອງຣວາ ສ້າງຕັ້ງຂຶ້ນໃນເດືອນ 4/1960 ຢູ່ຕາແສງ ອາບູງ, ມີປືນ 30 ກະບອກ, ລະເບີດຝັງດິນ ແລະໝາກແຕກຈຳນວນໜຶ່ງເພື່ອດຳເນີນ ການດັກຕີຈາກສັດຕູຕາມເສັ້ນທາງ, ປິດລ້ອມຄ້າຍສັດຕູຈຳນວນໜຶ່ງ, ຕັດແຫຼ່ງ ລຳລຽງສະບຽງອາຫານ,ສະບຽງອາຫານຂອງ"ພວກກະບົດຫວຽດ", "ພວກກະບົດລາວ" ທາງທິດເໜືອຂອງເສັ້ນທາງເລກ 9, ຕາເວັນອອກ-ຕາເວັນຕົກ ສາຍພູຫຼວງ, ເຮັດໃຫ້ສັດຕູປະສົບ ກັບຄວາມຫຍຸ້ງຍາກ ຫຼາຍດ້ານ.

ເຊື່ອມຊຶມມະຕິກອງປະຊຸມໃຫຍ່ຄັ້ງທີ15 ຂອງສູນກາງພັກ, ຄະນະປະຈຳພັກແຂວງກວາງຈີໄດ້ວາງ ແຜນນະໂຍບາຍ ຊຸກຍູ້ຕໍ່ສູ້ການເມືອງ ແລະ ກອງກຳລັງປະກອບອາວຸດປ້ອງກັນຕົນເອງ, ຍາດແຍ່ງກາລະໂອກາດ "ລຸກຮືຂຶ້ນຕໍ່ສູ້ພ້ອມກັນບາດດຽວ" ຢູ່ເຂດພູເຣືອງຣວາ ໃນປີ 1960. ປະຕິບັດແຜນນະໂຍບາຍຂອງຄະນະພັກແຂວງ, ການເຄື່ອນໄຫວຕໍ່ສູ້ຂອງກອງທັບ ແລະ ປະຊາຊົນບັນດາເຜົ່າຢູ່ເຂດພາກໃຕ້ຂອງ ເຣືອງຣວາ ໄດ້ເກີດຢ່າງເຂັ້ມແຂງ ແຮງກ້າ, ຈາກຮູບການຕໍ່ສູ້ແບບ ບໍ່ປິດບັງ ແລະຖືກຕ້ອງຕາມກົດໝາຍກ້າວເຂົ້າສູ່ການຕໍ່ສູ້ທີ່ບໍ່ຖືກຕ້ອງຕາມກົດໝາຍ ກັບສັດຕູດ້ວຍຮູບການ "ແລ່ນຫນີບໍ່ຈ່າຍ" ຫລຸດພົ້ນອອກຈາກເຂດທີ່ຢູ່ໃກ້ຄຽງ

---

[2]ປະຫວັດຄະນະພັກເມືອງ ເຣືອງຣວາ 1930-1975, ຫນ້າ 121.

ຄ້າຍສັດຕູ. ຂະບວນການເຮັດແຮ້ວ ກັບດັກໄດ້ຖືກຈັດວາງຢູ່ ຕາມສາຍຫ້ວຍ, ໄຮ່ສວນ, ແລະ ເນີນພູໄດ້ຈຳກັດກຸ່ມສັດຕູໃນການຊອກຫາ. ພິເສດແມ່ນ, ການບຸກໂຈມຕີຂອງ ໂງດິ່ງຢຽມໂດຍສົມທົບກັບກອງກຳລັງປະຕິການລາວທີ່ບຸກເຂົ້າເຂດພາກໃຕ້ຂອງເຮືອງຮວາ ໄດ້ຖືກກອງຫຼອນ, ທະຫານທ້ອງຖິ່ນ ແລະ ປະຊາຊົນຢູ່ລຽບຕາມຊາຍແດນດັກໂຈມຕີດ້ວຍທະນູ, ຂ້າທະຫານຂອງສັດຕູໄດ້ຈຳນວນໜຶ່ງ, ບັງຄັບໃຫ້ພວກມັນປະຖິ້ມການສູ້ຮົບ.

ເດືອນກໍລະກົດ 1960, ພາຍຫຼັງໄດ້ຮັບຂ່າວຈາກຖານທັບວ່າ: ສັດຕູທີ່ຄ້າຍສະມ້ວຍໄດ້ມາຮັບເອົາປືນຢູ່ເມືອນອງ ແລະນຳກັບຄືນໄປປະກອບອາວຸດໃຫ້ທະຫານຢູ່ຄ້າຍ ແລະ ກອງກຳລັງອ້ອມຂ້າງ. ດ້ວຍການຊ່ວຍເຫຼືອແລະການສະຫນັບສະຫນູນຈາກປະຊາຊົນ, ພວກເຮົາໄດ້ຈັດວາງກອງກຳລັງສະກັດກັ້ນສາມາດຍຶດໄດ້ປືນ 27 ກະບອກ ແລະພວກກອງກຳລັງປ້ອງກັນຕົວທັງໝົດໄດ້ຖືກຈັບ ແລະບໍ່ດົນຫລັງຈາກນັ້ນ ພວກເຮົາກໍປະກາດວ່າ ເຂົາເຈົ້າໄດ້ຖືກປ່ອຍກັບຄືນບ້ານເກີດເມືອງນອນເພື່ອທຳມາຫາກິນ ແລະດຳລົງຊີວິດ. ຂະບວນການ "ລຸກຮືຂຶ້ນຕໍ່ສູ້ພ້ອມກັນ" ຢູ່ເຂດພູຽງໄດ້ຮັບການຜັນຂະຫຍາຍ, ໃນທ້າຍປີ 1960, ສັດຕູຕ້ອງຖອນຕົວອອກຈາກປ້ອມສະໝ້ວຍ. 7 ຕາແສງຂອງເມືອງສະມ້ວຍໄດ້ຮັບການປົດປ່ອຍ, ສ້າງຄວາມປອດໂປ່ງ, ເປັນຂົງເຂດຕັ້ງຫຼັກໃຫ້ສອງຝ່າຍຂ້າມໄປມາເພື່ອເຄື່ອນໄຫວສ້າງເງື່ອນໄຂພັດທະນາຂະບວນການ ປະຕິວັດຂອງສອງແຂວງກວາງຈິ ແລະ ແຂວງເທື່ອທຽນ.

ເພື່ອປະເຊີນກັບຂະບວນການປະຕິວັດຢູ່ແຂວງບັກເຢືອງ, ວັນທີ 5/2/1961, ທ. ໂງດິ່ງຢຽມ ແລະ ພູມີ ສົມທົບກັນເປີດບັ້ນຮົບໃຫຍ່ຢູ່ພາກເໜືອເຮືອງຮວາ, ແນໃສ່ທຳລາຍລ້າງອົງການນຳພາສູງສຸດຂອງແຂວງ, ເມືອງ, ສະກັດກັ້ນແລວທາງ

ເໜືອ-ໃຕ້, ຈັດວາງປະຊາຊົນຢູ່ໝູ່ບ້ານຍຸດທະສາດ, ຈັບທະຫານ, ທໍາລາຍເສດຖະກິດ ແລະທໍາລາຍຄັງສາງຂອງພວກເຮົາ. ພາຍໃຕ້ ການນໍາພາຂອງຄະນະປະຈໍາພັກເມືອງ, ປະຊາຊົນບັນດາເຜົ່າຢູ່ເຂດຮາກຖານ, 2 ຝັ່ງຕາເວັນອອກ ແລະຕາເວັນຕົກສາຍພູຫຼວງ ໄດ້ປະຕິບັດ "ສວນຮ້າງບ້ານເປົ່າ", ສົ່ງຜູ້ເຖົ້າ, ແມ່ຍິງ ແລະເດັກນ້ອຍໄປລີ້ໄພຢູ່ລາວຊົ່ວຄາວ. ສ່ວນຊາຍສະກັນທີ່ຍັງຢູ່ ຈໍານວນໜຶ່ງບອກກັບກອງກໍາລັງປະກອບອາວຸດຕັ້ງໜ້າຢ່າງຫ້າວຫັນ, ຕັ້ງແຮ້ວກັບດັກ, ໃຊ້ທະນູ ແລະອາວຸດທີ່ທັນສະໄໝເພື່ອໂຈມຕີສັດຕູ, ເຕົ້າໂຮມຕາມເຂດຕັ້ງທັບຂອງພວກມັນ. ສັດຕູໄດ້ຖືກໂຈມຕີໂດຍບັງເອີນແລະຢູ່ໃນທ່າຮັບຈຶ່ງເຮັດໃຫ້ພວກມັນຖອນໂຕ. ເພື່ອເສີມຂະຫຍາຍໄຊຊະນະ, ພວກເຮົາສືບຕໍ່ຕິດຕາມ ແລະຕໍ່ສູ້ກັບສັດຕູ. ຈຶ່ງເຮັດໃຫ້ 6 ຕາແສງທາງພາກເຫນືອຂອງຖະຫນົນເລກ 9 ໄດ້ຮັບການປົດປ່ອຍ. ເຂດເຮືອງຮວາໃຕ້-ເໜືອໄດ້ຮັບການປົດປ່ອຍ, ເຂດທີ່ໝັ້ນການປະຕິວັດໄດ້ຮັບການເປີດກວ້າງ. ເສັ້ນທາງ 559 ຈາກແຄຣໍ (ວົງລົງ) ແລ່ນລຽບຕາມສາຍເຈື່ອງເຊີນ ຜ່ານເມືອງເຮືອງຮວາ ເປັນພຽງຖະໜົນນ້ອຍ, ແຄບທີ່ໃຊ້ສໍາລັບຄົນຍ່າງ, ແຕ່ປີ 1957-1958, ໄດ້ປົກປັກຮັກສາ ແລະ ສ້າງເປັນເສັ້ນທາງຄົມມະນາຄົມຍຸດທະສາດທີ່ມີຊື່ວ່າໂຮ່ຈິມິງ, ດ້ວຍຫຼາຍເສັ້ນທາງຂ້າມໄປມາຈຶ່ງສ້າງລະບົບເຊື່ອມຕໍ່ ທີ່ເປັນຕ່ອງໂສ້ສໍາຄັນໃນລະບົບຊ່ວຍເຫຼືອຍຸດທະສາດທັງໝົດ ຂອງແນວຮົບຕ້ານອາເມລິກາຂອງປະຊາຊົນສາມປະເທດອ້າຍນ້ອງ.

ເດືອນມິຖຸນາປີ 1961, ຢູ່ໝູ່ບ້ານຕູ່ປີ່ງ, ຄະນະພັກແຂວງກວາງຈິ ໄດ້ດໍາເນີນຈັດຕັ້ງກອງປະຊຸມຄັ້ງທີ 5, ໃນກອງປະຊຸມໄດ້ເນັ້ນໜັກ: ການປົກປັກຮັກສາ ແລະ ກໍ່ສ້າງເສັ້ນທາງ 559 ເປັນເສັ້ນທາງສູນກາງ ແລະ ເສັ້ນທາງອື່ນໆຂອງແຂວງ, ຂອງເມືອງ. ໃນກາງປີ 1962, ຄະນະພັກເມືອງ ຮິລາບ (ລວມມີ 7 ຕາແສງຄື: ມ້ຽວ,

ອາຊີກ, ອາຕຸກ, ອາວາວ, ສະໜ້ອຍ, ອາບູງ, ອາຈາ) ໄດ້ຕົກລົງ: ເປັນເອກະພາບປະຕິບັດນະໂຍບາຍຊົນເຜົ່າຂອງພັກ, ເພີ່ມທະວີຄວາມສາມັກຄີ ຂອງບັນດາເຜົ່າເພື່ອກໍ່ສ້າງພື້ນຖານການປະຕິວັດ. ຄະນະພັກເມືອງໄດ້ແຕ່ງຕັ້ງຄະນະຜູ້ແທນທີ່ຮູ້ພາສາຊົນເຜົ່າ ແລະ ພາສາລາວ ເພື່ອຮັບຜິດຊອບຄຸ້ມຄອງຕາແສງ ອາຊີ່ງ, ອາຕຸກ, ສະໜ້ອຍ, ອາຊີກ, ບາລໍ, ອາວາວ. ສະພາບການຂອງບ້ານຢູ່ລຽບຕາມຊາຍແດນນັບມື້ນັບໝັ້ນຄົງ.

ເດືອນພຶດສະພາ 1961, ພາຍຫຼັງທະຫານຫວຽດນາມ ສົມທົບກັບລາວປົດປ່ອຍເຊໂປນ, ຄະນະການສູນກາງພັກ ແລະ ກະຊວງປ້ອງກັນປະເທດ ໄດ້ຕົກລົງສົມທົບກັນສ້າງສອງເສັ້ນທາງ ເອກະພາບແລະ ລາມເຊີນ 1 ເສັ້ນ, ມອບໃຫ້ກະຊວງຮັບຜິດຊອບ. ທ້າຍປີ 1961, ຄະນະ559 ໄດ້ຍ້າຍມາຢູ່ພາກຕາເວັນຕົກເຈື່ອງເຊີນ (ລາວ). ຮູບແບບການເຄື່ອນໄຫວແຕ່ພາກເໜືອທາງເລກ 9ເຂົ້າໄປແມ່ນການນຳສິນຄ້າ, ໄປແບບລັບໆ, ຫຼີກລ່ຽງສັດຕູເຂົ້າເລິກໄປທາງທິດໃຕ້. ໃນໄລຍະນີ້, ບາງເທື່ອພວກເຮົາໄດ້ຊຸກຍູ້ການຂົນສົ່ງທາງທິດຕາເວັນຕົກຂອງສາຍພູຫຼວງດ້ວຍວິທີ ການຂົນສົ່ງດ້ວຍພາຫະນະ, ລວມທັງໃຊ້ມິຍິນຂົນສົ່ງເຄື່ອງຢູ່ ຕ່າ ໂຄ໊ງ ແລະ ເຄື່ອນຍ້າຍເຄື່ອງດ້ວຍວິທີນີ້ ຈົນເຖິງ ປີ1964. ກ່ອນເຖິງງານບຸນ ເມື້ອເທີນ ການຂົນສົ່ງເຄື່ອງໄປໃຫ້ຈີຫຽນ-ທຽນເຫວ້ ຕາມເສັ້ນຊາຍແດນລາວມາປະເທດໂດຍໃຊ້ສອງເສັ້ນທາງ: ຕ່າໂຄ໊ງ-ເທົ່ລຸງ ສົ່ງໃຫ້ທາງພາກເຫນືອຂອງຈີຫຽນ; ຊາລີ-ເມືອງນອງ-ລາຫາບ-ອາຕຸກ ສົ່ງໃຫ້ທາງພາກໃຕ້ຂອງຈີຫຽນ-ທຽນເຫວ້.

ເພື່ອຕັດການຊ່ວຍເຫຼືອຍຸດທະສາດເໜືອ - ໃຕ້ ຜ່ານເສັ້ນທາງໂຮ່ຈີມິນ,ອາເມລິກາ - ທະຫານຫຸ່ນໄດ້ເພີ່ມທະວີການບຸກໂຈມຕີຢ່າງດຸເດືອດ, ລວມທັງໂຮຍສານພິດໃສ່ຕາແສງ ປາຣີ, ຕາລຽບ ແລະ ອາຊ໊ອກ ໄດ້ເຮັດໃຫ້ສິ່ງແວດລ້ອມຖືກທຳລາຍ;

ພວກເຂົາເຈົ້າໄດ້ປ່ອຍໜ່ວຍກອງມັງໂດຫຼາຍນາຍເຂົ້າໄປໃນປ່າເລິກ, ການນຳໃຊ້ຍຸດທະວິທີ "ຍະວ່າງ" ເພື່ອສົ່ງທະຫານ ດ້ວຍຍົນ; ຈັດຕັ້ງບັນດາບັ້ນຮົບ“ເລເລີ້ຍ” ແລະ “ເຝື້ອງຮວ່າງ” ທີ່ມີຂະໜາດ ໃຫຍ່ເຂົ້າເຂດຕາຮຸດ, ປາຣີແລະເຂດຊາຍແດນຫວຽດນາມ - ລາວ. ພວກເຮົາຕ້ອງອົບພະຍົບຜູ້ເຖົ້າ, ແມ່ຍິງ ແລະ ເດັກນ້ອຍອອກຈາກເຂດຂອງສັດຕູ; ສ່ວນກອງກຳລັງ ທີ່ແຂງແຮງແມ່ນຢູ່ຕໍ່ກັບກອງຫຼອນເພື່ອເຄື່ອນໄຫວອີງໂດຍໃສ່ 3 ຢ່າງຄື: ພະນັກງານອີງໃສ່ປະຊາຊົນ, ປະຊາຊົນອີງໃສ່ແຜ່ນດິນ, ກອງຫຼອນອີງໃສ່ສັດຕູ; ເປັນທີ່ເດັ່ນຊັດຄືກອງທະຫານຂອງບ້ານ ອາງໍ ໄດ້ຍິງຍົນອາເມລິກາຕົກ. ດ້ວຍເຫດນັ້ນ, ກອງທັບ ແລະປະຊາຊົນຂອງພວກເຮົາທີ່ຢູ່ເຂດຊາຍແດນເຮືອງຮວາ ໄດ້ສ້າງຄວາມເສຍຫາຍເປັນຈຳນວນຫຼວງຫຼາຍໃຫ້ແກ່ສັດຕູ, ສັດຕູບໍ່ສາມາດບັນລຸເປົ້າໝາຍການເຕົ້າໂຮມປະຊາຊົນ ແລະ ສ້າງຕັ້ງໝູ່ບ້ານຍຸດທະສາດ. ເຂດພູຂອງເມືອງເຮືອງຮວາ ແລະທິດຕາເວັນອອກ-ຕາເວັນຕົກສາຍພູຫຼວງບໍ່ພຽງແຕ່ເປັນບ່ອນອີງທີ່ໝັ້ນແກ່ນ ໃຫ້ແກ່ບັນດາການເຄື່ອນໄຫວປະຕິວັດຂອງ 2 ແຂວງເທົ່ານັ້ນ, ແຕ່ຍັງສ້າງເງື່ອນໄຂເປີດຊ່ອງທາງ, ເປີດກວ້າງບັນດາເສັ້ນທາງຍຸດທະທາງ ຕາເວັນອອກ - ຕາເວັນຕົກ ສາຍພູຫຼວງຂອງ 2 ປະເທດອີກດ້ວຍ. ເສີມກຳລັງພົນຢ່າງທັນທ່ວງທີ,ເພີ່ມກຳລັງການປະຕິວັດທາງພາກໃຕ້ຂອງຫວຽດນາມ.

ໃນຊ່ວງໄລຍະສົງຄາມຕໍ່ຕ້ານ, ໃນຫຼາຍຊ່ວງເວລາອັນຕະລາຍ, ເພື່ອແນໃສ່ການຫຼີກລ່ຽງຄວາມເສຍຫາຍຂອງຄົນ ແລະ ປະນີປະນອມກັນ ທະຫານຈຶ່ງຕ້ອງຈັດວາງແຜນການສູ້ຮົບ, ປະຊາຊົນບັນດາເຜົ່າເຮືອງຮວາຕ້ອງອົບພະຍົບໄປປະເທດລາວ. ເມືອງສະໝ້ວຍໄດ້ກາຍເປັນຖານທີ່ໝັ້ນຂອງກອງທັບພະນັກງານ ແລະປະຊາຊົນກວາງຈິ ເພື່ອປົກປັກຮັກສາ ແລະ ພັດທະນາກອງກຳລັງຂອງຕົນ. ປະຊາຊົນ

ບັນດາເຜົ່າ ຕະໂອ້ຍ ແລະ ເວີນກ່ຽວທີ່ຢູ່ໃນບ້ານເມືອງ (ປະມານ 6.000 ຄົນ) ຄຸ້ມຄອງໂດຍເຈົ້າໜ້າທີ່ ກວາງຈີ (ເລຂາຄະນະພັກ, ປະທານເທສະບານແຂວງ) ແລະ ປະຊາຊົນແຂວງສາລະວັນຢູ່ບັນດາໝູ່ບ້ານເຂດຊາຍແດນຫ້າວຫັນເຂົ້າຮ່ວມແຮງງານເກນຂົນສົ່ງ, ເພື່ອຕໍ່ສູ້ ແລະ ເຂົ້າຮ່ວມການຕໍ່ສູ້. ພ້ອມກັບປະຊາຊົນ ແລະອົງການນໍາພາສູງສຸດແຂວງກວາງຈີ. ໃນຍາມທີ່ຫຍຸ້ງຍາກ ຂັບຂັນ ໄດ້ອົບພະຍົບໄປປະເທດລາວຊົ່ວຄາວເມື່ອຂະບວນການ ການປະຕິວັດຢູ່ນີ້ ຂ້ອນຂ້າງດີຂຶ້ນ, “ພວກຂ້າເຮົາໄດ້ພັດທະນາ ພື້ນຖານໂຄງລ່າງ 10 ບ້ານທາງທິດໃຕ້, ຕາເວັນຕົກສ່ຽງໃຕ້ຂອງແຂວງສາລະວັນ, ລຽບຕາມຝັ່ງຊ້າຍຂອງແມ່ນໍ້າເຊໂດນ ຫາເມືອງຄົງເຊໂດນ, ບ້ານສ່ວນໃຫຍ່ທີ່ຢູ່ ທາງທິດຕາເວັນຕົກ ຂອງແມ່ນໍ້າເຊໂດນ ຕິດກັບ ຊາຍແດນໄທ, ບ້ານປາໂຂງເໜືອ ແລະ ລຽບຕາມເສັ້ນທາງ ປາກໂຂງ ຫາ ປາກເຊ, ຢູ່ຕາເວັນອອກຕິດກັບເຂດບ້ານ ໂພນ ແລະ ເຂດອ້ອມຂ້າງ ທ່າແຂກ”[1]. ໄດ້ຮັບການອຸປະຖໍາຄໍ້າຊູ, ຊ່ວຍເຫຼືອ ແລະ ປົກປັກຮັກສາຈາກແຂວງສາລະວັນ, ຄະນະພັກແຂວງກວາງຈີ ໄດ້ອອກມະຕິສໍາຄັນ, ຫັນປ່ຽນສະພາບການປະຕິວັດ, ມາເປັນສະພາບການປຸກລະດົມລຸກຮືຂຶ້ນ ຕໍ່ສູ້ພ້ອມກັນຢູ່ເຂດຊົນນະບົດ ແລະ ເຂດທົ່ງພຽງໃນປີ 1964.

ເມື່ອຂະບວນການປະຕິວັດຢູ່ແຂວງສາລະວັນປະສົບກັບຄວາມຫຍຸ້ງຍາກ, ຄະນະພັກ ແລະ ປະຊາຊົນແຂວງກວາງຈີ ເຂດບິ່ງຈິທຽນ ໄດ້ສົມທົບການຊ່ວຍເຫຼືອຢ່າງຫ້ນການ ບໍ່ພຽງແຕ່ຢູ່ໃນເຂດພື້ນທີ່, ເຂດແຂວງເທົ່ານັ້ນ ແຕ່ຍັງລວມເຖິງບັນດາພະນັກງານ, ປະຊາຊົນຢູ່ລຽບຕາມຊາຍແດນໄດ້ພ້ອມໜ້າໃຫ້ການຊ່ວຍ

[1]ສະຫລຸບວຽກງານສ້າງພື້ນຖານໂຄງລ່າງແລະຊ່ວຍເຫລືອເພື່ອນລາວທີ່ຢູ່ທາງພາກກາງແລະພາກໃຕ້.ເອກກະສານສໍາເນົາທີ່ກົມສໍາເນົາ,ຫ້ອງການຄະນະປ້ອງກັນປະເທດ.

ເຫຼືອຢ່າງ ທັນທີ, ແບ່ງປັນໄຟ, ແບ່ງປັນເກືອ ແລະຜັກ, ແບ່ງປັນຄວາມສຸກ ແລະ ຄວາມທຸກໃນເວລາທີ່ຊະນະການສູ້ຮົບ. ນີ້ແມ່ນຈຸດພົ້ນເດັ່ນຂອງສາຍພົວພັນສອງອ້າຍນ້ອງ ທີ່ມີຄວາມໝັ້ນຄົງຕໍ່ເພື່ອນຮ່ວມອຸດົມການແລະຈິດໃຈທີ່ສູງສົ່ງໃນຊ່ວງແຫ່ງສົງຄາມຕໍ່ຕ້ານທີ່ເຕັມໄປດ້ວຍຄວາມທຸກຍາກ, ລຳບາກ ແລະ ການເສຍສະຫຼະຊີວິດເພື່ອຊາດຂອງຄະນະພັກ ແລະປະຊາຊົນແຂວງກວາງຈິ ແລະແຂວງສາລະວັນ. ບັນດາພະນັກງານແລະນັກຮົບແຂວງກວາງຈິ ໄດ້ເຂົ້າຮ່ວມການຕໍ່ສູ້ຢູ່ລາວຄື: ສະຫາຍ ເລແຮັ້ງ, ປະເກື່ອງ, ໂຮ່ເຊິມ, ໂຮ່ໂລຍ, ເຈີ່ນຊວຽນເຕິມ, ເລວັນຕ໊າມ,... ຍາມໃດກໍ່ພາກພູມໃຈໃນຊ່ວງໄລຍະເວລາທີ່ໄດ້ຮ່ວມການຕໍ່ສູ້, ແບ່ງປັນຄວາມເສຍສະຫຼະ ແລະຄວາມລຳບາກຂອງພະນັກງານ ແລະ ປະຊາຊົນລາວ, ຖືວ່າເປັນການປະກອບໃຫ້ບັນດາຊົນເຜົ່າ ແລະ ປະເທດຕົນເຮັດໃຫ້ສາຍພົວພັນມິດຕະພາບຂອງສອງຊົນເຜົ່າ,ສອງປະເທດ,ຂຽວສົດງາມຕະຫຼອດໄປ, ໝັ້ນຄົງທະນົງແກ່ນໄປຊົ່ວກາລະນານ. ນັ້ນແມ່ນການສືບທອດ ແລະ ເສີມຂະຫຍາຍມູນເຊື້ອຮີດຄອງປະເພນີທີ່ສົນທຳຂອງຊາດຫວຽດນາມ, ການປະຕິບັດແນວຄິດຂອງປະທານໂຮ່ຈິມິນກ່ຽວກັບຄວາມສັດຊື່ ແລະ ບໍລິສຸດຜຸດຜ່ອງ, ແມ່ນຈິດໃຈປະຊາທິປະໄຕສາກົນທີ່ສູງສົ່ງ ແລະ ຍັ້ງຢືນ.

ຄວາມສາມັກຄີ ແລະສຳພັນທະມິດສູ້ຮົບລະຫວ່າງ ແຂວງກວາງຈິ ແລະ ແຂວງສາລະວັນ ຍັງໄດ້ຫລໍ່ຫຼອມ ແລະທົດສອບຜ່ານຄວາມເປັນຈິງຂອງສົງຄາມຕໍ່ຕ້ານ ອາເມລິກາເພື່ອກູ້ຊາດ, ໃນນັ້ນ ເຫັນໄດ້ຊັດເຈນທີ່ສຸດແມ່ນ ພັນທະມິດສົມທົບສູ້ຮົບ ທີ່ປະກອບສ່ວນເຂົ້າໃນການຕັດສິນຊີ້ຂາດໄຊຊະນະທີ່ມີຄວາມໝາຍໃນສະໜາມຮົບ.

ໃນລະດູບານໃຫມ່ ແລະລະດູຮ້ອນປີ 1968, ກົມການເມືອງ, ຄະນະພັກສູນກາງຫວຽດນາມ ໄດ້ຕັດສິນໃຈເປີດບັ້ນຮົບ ເສັ້ນທາງເລກ 9 – ແຄແຊງ ດ້ວຍ

ຈຸດປະສົງ "ໃຊ້ກຳລັງບຸກໂຈມຕີຂະໜາດໃຫຍ່ແບບ ລວດດຽວຂອງທະຫານ ແລະ ປະຊາຊົນຫວຽດນາມໃຕ້". ກ່ອນການເຄື່ອນໄຫວເປີດສາກບັ້ນຮົບ, ວັນທີ 12 ມັງກອນ 1968, ຢູ່ແຂວງສາລະວັນ, ກອງທັບປົດປ່ອຍປະຊາຊົນລາວ ແລະ ທະຫານອາສາສະໝັກຫວຽດນາມ ໄດ້ບຸກໂຈມຕີປົດປ່ອຍເທສະບານເມືອງ ຕຸ້ມລານ, ເຊື່ອມຕໍ່ເຂດປົດປ່ອຍຕຸ້ມລານ ແລະ ເລົ່າງາມ.

ວັນທີ 20 ມັງກອນປີ 1968, ບັ້ນຮົບເສັ້ນທາງເລກ 9 - ເຄແຊງ ໄດ້ເປີດສາກຢ່າງເປັນທາງການ ດ້ວຍການບຸກໂຈມຕີຂະໜາດໃຫຍ່ເຂົ້າເທດສະບານເມືອງເຮືອງຮວາ. ປະສານສົມທົບກັບສະໜາມຮົບກວາງຈິ, ຢູ່ແຂວງສາລະວັນ, ໃນທ້າຍເດືອນມັງກອນ ແລະຕົ້ນເດືອນກຸມພາ 1968, ທະຫານທ້ອງຖິ່ນຂອງແຂວງໄດ້ສົມທົບກັບທະຫານອາສາສະໝັກຫວຽດນາມຈັດຕັ້ງການປົດລ້ອມ, ແຍກການສົນຈອນຂອງສັດຕູຈາກປາກເຊຂຶ້ນມາສາລະວັນ ແລະລົງມາເລົ່າງ່າມ. ໃນໄລຍະນີ້, ກອງທັບທ້ອງຖິ່ນ ແລະ ກອງທະຫານລາດຂອງເມືອງເຊກອງໄດ້ສົມທົບກັບກອງພັນທີ 3 ທະຫານອາສາສະໝັກຫວຽດນາມ ເຂົ້າໄປປົດລ້ອມ ແລະ ບັ່ນທອນສັດຕູຢູ່ທ່າແຕງ...

ທ້າຍເດືອນກຸມພາ 1968, ກອງທັບ ແລະປະຊາຊົນລາວ ດ້ວຍການສົມທົບຂອງກອງທັບຫວຽດນາມ ສາມາດປົດປ່ອຍ 51 ຕາແສງ ລວມມີ 716 ບ້ານ, ມີພົນລະເມືອງ 15.000 ຄົນ. ມີພຽງແຕ່ແຂວງສາລະທີ່ໄດ້ປົດປ່ອຍພື້ນທີ່ຖານທີ່ໝັ້ນຂອງລາວງາເກືອບທັງໝົດ, ເຂດເມືອງຕຸ້ມລານທັງໝົດ. ລະບົບກອງປ້ອງກັນຕົວຂອງສັດຕູ ໄດ້ທຸ່ມເທ ເຫື່ອແຮງສ້າງຄວາມແຕກຫັກທີ່ໃຫຍ່. ເຮັດໃຫ້ການປະຕິບັດງານຂອງທະຫານສັດຕູຢູ່ພາກໃຕ້ຂອງລາວໄດ້ຮັບຜົນດີ. ສະເພາະຢູ່ແຂວງສາລະວັນມີ 3 ກອງຮ້ອຍມີທະຫານເສຍອົງຄະແລະແຕກສະຫຼາຍ 258 ຄົນ.

ສະເພາະໄຊຊະນະຂອງກອງທັບ ແລະປະຊາຊົນແຂວງສາລະວັນ ແລະບັນດາແຂວງພາກໃຕ້ຂອງລາວໄດ້ ປະກອບສ່ວນເຂົ້າໃນການທຳລາຍເຈດຕະນາ ກອງກຳລັງຫນຸນຂອງກອງທັບອາເມລິກາ ແລະຫຸ່ນລາວ, ພ້ອມດຽວກັນກັບການສົມທົບແຜນການສູ້ຮົບທີ່ມີປະສິດທິຜົນຂອງບັ້ນຮົບເສັ້ນທາງເລກ 9 - ແຄແຊງຂອງແຂວງກວາງຈິ, ໄດ້ປັບປຸງ ແລະ ພັດທະນາສາຍພົວພັນສາມັກຄີ ຫວຽດນາມ - ລາວ, ລາວ - ຫວຽດນາມ.

ມາຮອດທ້າຍເດືອນມີນາ 1968, ຕໍ່ໜ້າການນາບຂູ່ຂອງກອງທະຫານພັນທະມິດລາວ-ຫວຽດນາມພາກໃຕ້ຂອງລາວ, ສັດຕູຕ້ອງປະທີ່ຕັ້ງຈຳນວນໜຶ່ງທີ່ຢູ່ເຂດຊານເມືອງ: ສະຫວັນນະເຂດ, ສາລະວັນ, ອັດຕະປື, ຈຳປາສັກ ແລະ ອື່ນໆ. ຖອນກອງກຳລັງອອກຈາກເທດສະບານເມືອງ ແລະຕາແສງ.

ຂະນະທີ່ບັ້ນຮົບເສັ້ນທາງເລກ 9- ແຄແຊງ ໄດ້ເຂົ້າສູ່ການບຸກໂຈມຕີທີ່ມີຄວາມໝາຍ, ແຕ່ວັນທີ 21-23 ເມສາ 1968, ກອງພັນ16 ທະຫານຫຼວງເຂດພາກໃຕ້ລາວ ຮ່ວມກັບປະຊາຊົນລາວໄດ້ຈັດຕັ້ງຖານຮົບຍິງເຄື່ອງບິນສອດແນມຂອງສັດຕູ, ສົ່ງໜ່ວຍທະຫານຝ່າຍຂວາຂອງລາວລົງເຂດທ່າເຮືອ ເຊບັ້ງຫຽງ (ສາລະວັນ) ເພື່ອຍຶດ ແລະ ຄວບຄຸມສະໜາມຮົບ.

ເດືອນພຶດສະພາ 1965, ກອງພັນໃຫຍ່ 12 ທະຫານເຂດທາງພາກໃຕ້ລາວ, ທະຫານທ້ອງຖິ່ນວາປີຄຳທອງໄດ້ສົມທົບກັບ ທະຫານອາສາສະໝັກຫວຽດນາມຢູ່ພາກໃຕ້ຂອງລາວ ຈັດຕັ້ງການປິດລ້ອມເທສະບານເມືອງວາປີຄຳທອງ ແລະຄ້າຍທະຫານຢູ່ອ້ອມຂ້າງຖືກກອງທະຫານພັນທະມິດການບຸກໂຈມຕີ, ພາຍຫຼັງການຕໍ່ສູ້ຕ້ານປະມານສອງສາມມື້, ສັດຕູຖືກເສຍຫາຍເປັນຈຳນວນຫຼາຍ ຈຶ່ງຈຳເປັນຕ້ອງຖອນຕົວກັບໄປທີ່ສາລະວັນ.

ວັນທີ 16 ພຶດສະພາ 1968, ກອງທະຫານພັນທະມິດລາວ-ຫວຽດນາມ ໄດ້ບຸກໂຈມຕີສັດຕູຢູ່ເມືອງວາປີ (ສາລະວັນ), ປົດປ່ອຍ 10 ບ້ານ ແລະໄດ້ກຳຈັດສັດຕູທີ່ບໍ່ຍອມຮັບປະລາໄຊ300 ກວ່າຄົນຈາກການສູ້ຮົບ, ສັດຕູໄດ້ມອບສອງ ກອງພັນ BI19, BI25 ແລະໜຶ່ງກອງຮ້ອຍ BI41 ມີຍົນ ແລະທະຫານປືນໃຫຍ່ ເພື່ອຊ່ວຍໜຸນໃນການຕອບໂຕ້ຍາດເອົາເມືອງວາປີຄືນ ແຕ່ພວກເຮົາຖືກຂັດຂວາງຢ່າງດຸເດືອດ.

ວັນທີ 11 ກໍລະກົດ 1968, ບັ້ນຮົບເສັ້ນທາງເລກ 9-ແຄແຊງ ໄດ້ສິ້ນສຸດລົງດ້ວຍໄຊຊະນະ. ຄຽງຄູ່ກັບໄຊຊະນະຂອງກອງທັບ ແລະ ປະຊາຊົນຫວຽດນາມໃນການຕໍ່ສູ້ຕ້ານສັດຕູ, ກອງທັບ ແລະ ປະຊາຊົນບັນດາແຂວງພາກໃຕ້ຂອງລາວ, ໃນນັ້ນມີການປະກອບສ່ວນອັນສຳຄັນຂອງກອງທັບ ແລະ ປະຊາຊົນແຂວງສາລະວັນ ໄດ້ເຮັດໃຫ້ສັດຕູລົ້ມເຫຼວຢ່າງໜັກໜ່ວງ, ປະກອບສ່ວນ ຊຸກຍູ້ໃຫ້ກອງທັບອາເມລິກາ ແລະລູກແຫລ້ງຕົນມີນັບມື້ນັບຕົກຕໍ່າ ແລະຢູ່ໃນທ່າຮັບຍຸດທະສາດສະໜາມຮົບຂອງສອງປະເທດ ຫວຽດນາມ ແລະ ລາວ.

ການເຄື່ອນໄຫວຮ່ວມມືສູ້ຮົບຂອງກອງທັບ ແລະ ປະຊາຊົນສອງປະເທດ ຫວຽດນາມ - ລາວ, 2 ແຂວງ ກວາງຈິ - ສາລະວັນ ໃນບັ້ນຮົບເສັ້ນທາງເລກ 9 - ແຄແຊງ ປີ 1968 ແມ່ນການສົມທົບການບຸກໂຈມຕີ ທີ່ເຄັ່ງຄັດວ່ອງໄວ ແລະມີປະສິດທິຜົນ, ເສີມຂະຫຍາຍຄວາມສາມັກຄີສຳພັນທະມິດສູ້ຮົບພິເສດຂອງຫວຽດນາມ-ລາວ, ລາວ-ຫວຽດນາມ, ບັງຄັບ ໃຫ້ສັດຕູຕ້ອງປະເຊີນກັບການຈັດວາງກຳລັງຂອງການແຍກກຳລັງປະຕິວັດຂອງສອງຫວຽດນາມ-ລາວ.
ໄຊຊະນະຂອງກອງທັບ ແລະ ປະຊາຊົນສອງປະເທດ ຫວຽດນາມ - ລາວ ແລະ 2 ແຂວງກວາງຈິ - ສາລະວັນ ໄດ້ “ສັ່ນສະເທືອນ” ສະໜາມຮົບຫວຽດນາມໃຕ້, ໃນຂະນະດຽວກັນ “ປີ້ນຂວໍ້າປີ້ນຫງາຍ” ຂອງສະໜາມຮົບລາວ, ໄດ້ສະຫຼະຊີບໃນ

ຄວາມມັກໃຫຍ່ໃຝ່ສູງຂອງຈັກກະພັດອາເມລິກາ ໃນສົງຄາມຮຸກຮານຫວຽດນາມ ແລະລາວ, ໄດ້ບັງຄັບໃຫ້ພວກເຂົາປ່ຽນຍຸດທະສາດສົງຄາມ, ຫັນຈາກຍຸດທະສາດ ສົງຄາມພາກສ່ວນ ມາເປັນຍຸດທະສາດຂອງຫວຽດນາມ ສົງຄາມເຄມີຢູ່ຫວຽດນາມ ໃຕ້ ແລະຈາກຍຸດທະສາດສົງຄາມພິເສດມາເປັນ ການເພີ່ມທະວີຍຸດທະສາດສົງຄາມ ພິເສດໃນລາວ, ນັ່ງຮ່ວມໂຕະເພື່ອເຈລະຈາທີ່ປາຣີ. ເຂດປົດປ່ອຍກວາງຈີ້ເຊື່ອມຕໍ່ ກັບແຂວງສາລະວັນ, ຄະນະພັກ, ກອງທັບ ແລະປະຊາຊົນ 2 ແຂວງກວາງຈີ, ສາລະ ວັນ ນັບມື້ສ້າງເງື່ອນໄຂຊ່ວຍເຫລືອເຊິ່ງກັນ ແລະກັນ ເພື່ອສ້າງສາເຂດປົດປ່ອຍໃຫ້ ເຂັ້ມແຂງ, ປົກປັກຮັກສາເສັ້ນທາງຍຸດທະສາດ ເຈື່ອງເຊີນ - ໂຮ່ຈິມິງແລະພ້ອມທີ່ ຈະຕໍ່ສູ້ກັບບັນດາເລ່ລ່ຽມສົງຄາມໃໝ່ຂອງຈັກກະພັດອາເມລິກາ.

ມາຮອດປີ 1971, ກອງທັບອາເມລິກາ ແລະ ທະຫານຫຸ່ນໄດ້ທຳການເຄື່ອນ ທັບ “ລາມເຊີນ 719” ດ້ວຍຈຸດປະສົງບຸກໂຈມຕີ ແລະ ທຳລາຍລ້າງກອງກຳລັງຂອງ ພວກເຮົາ ແຕ່ ດົ່ງຮ່າ ຮອດ ແຄແຊ້ງມາເຖິງເຊໂປນ, ໄດ້ຕັດເສັ້ນທາງຍຸດທະສາດ ເຈື່ອງ ເຊີນ ທັງໝົດ. ວັນທີ 30 ມັງກອນປີ 1971 (10 ວັນ ພາຍຫຼັງສັດຕູດຳເນີນການ ເຄື່ອນທັບ “ລາມເຊີນ 719” ຜູ້ບັນຊາການກອງທະຫານ ສູງສຸດຂອງ ຫວຽດນາມ ແລະ ກອງບັນຊາການກອງທັບປົດປ່ອຍປະຊາຊົນລາວໄດ້ຊີ້ນຳໃຫ້ໜ່ວຍທະຫານ ອາສາສະໝັກຫວຽດນາມ ແລະ ໜ່ວຍກອງກຳລັງປະກອບອາວຸດເຂດພາກໃຕ້ ຂອງລາວແນວໂຮມ Y (ແນວໂຮມສາລະວັນ) ພາຍໃຕ້ການບັງຄັບບັນຊາໂດຍກົງ ຂອງສະຫາຍ ຮວ່າງກຽນ - ຮອງກອງບັນຊາການທະຫານ 559. ເຂົ້າຮ່ວມກອງປະຊຸມ ແນວໂຮມລາວ ມີສະຫາຍ ຄຳຈັນ, ສະຫາຍ ກ່າລັງ ພ້ອມດ້ວຍບັນດາສະຫາຍເລຂາ ຄະນະພັກແຂວງແລະຫົວໜ້າພັກແຂວງຂອງບັນດາແຂວງພາກໃຕ້ຂອງລາວ.

ປະສານສົມທົບກັບແນວໂຮມເສັ້ນທາງເລກທີ 9 – ແຄແຊັງ, ວັນທີ 21/02/1971, ກອງບັນຊາການແນວໂຮມ Y ໄດ້ຈັດຕັ້ງການບຸກໂຈມຕີບັນດາຖານທີ່ໝັ້ນສຳຄັນຂອງສັດຕູຢູ່ ຖານທີ່ໝັ້ນ38 (ອິນທີ), ຖານທີ່ໝັ້ນ 165 (ເນີ້ມຕຽງ) ແລະ ຖານທີ່ໝັ້ນ 22 (ເນີ້ມລຶກ). ກອງກຳລັງທີ່ເຂົ້າຮ່ວມການບຸກໂຈມຕີຢູ່ບັນດາຖານທີ່ໝັ້ນດັ່ງກ່າວ ແມ່ນກຳລັງຫຼັກຂອງທະຫານ ເຂດພາກໃຕ້ຂອງລາວ, ບັນດາກອງຮ້ອຍທ້ອງຖິ່ນ ຂອງແຂວງສາລະວັນ, ກອງທັບອາສາສະໝັກຫວຽດນາມ. ປະຊາຊົນບັນດາຊົນເຜົ່າຢູ່ຕາແສງ ວ້າວ, ບານາງ, ອາງໍ, ອາບູງຂອງເມືອງເຮືອງຮວາ (ປະຈຸບັນແມ່ນຂຶ້ນກັບເມືອງດາກຣຶງ) ພ້ອມກັບປະຊາຊົນບັນດາເຜົ່າລາວແຂວງສາລະວັນ ບໍ່ວ່າຈະຕາກແດດ ແລະຕາກຝົນທັງກາງເວັນ ແລະກາງຄືນ ແຕ່ກໍຍັງຢືນຄຽງບ່າຄຽງໄລ່ກັບບັນດາກົມກອງທະຫານຫຼວງ, ຊາວໜຸ່ມອາສາສະໝັກບຸກເບີກພູ, ປູທາງ, ຂຸດຖະຫນົນແລະ ຂົນເຄື່ອງເປັນຫມື່ນແມັດ, ກໍ່ສ້າງຂົວ ແລະ ຄອງ; ເພື່ອຂົນສົ່ງອາວຸດ, ລູກປືນ, ແລະສິນຄ້າອື່ນໆໄປຍັງງບ່ອນເຕົ້າໂຮມ. ບັນດາເດັກນ້ອຍ ແລະ ເດັກຍິງຊາວເວີນກ່ຽວ, ປາໂກ ແລະ ປະຊາຊົນລາວບັນດາເຜົ່າລຸ້ນກຳລັງແຮງນ້ອຍ ແລະຈິດໃຈຝົດຟື້ນຕໍ່ການປະຕິວັດໄດ້ສົມທົບກັບກອງກຳລັງຂົນສົ່ງອາວຸດຍຸດໂທປະກອນ, ລູກປືນ, ສະບຽງອາຫານ, ຢາ... ເພື່ອຮັບໃຊ້ທະຫານທີ່ສູ້ຮົບ. ມີຫຼາຍເສັ້ນທາງຄົມມະນາຄົມທີ່ສັດຕູໄດ້ບຸກໂຈມຕີຢ່າງດຸເດືອດ, ແຕ່ວ່າ ແຕ່ລະກຸ່ມຄົນທີ່ຂົນສະບຽງອາຫານ ແລະ ລູກປືນຍັງບໍ່ຢຸດອອກໄປທຸກທິດທາງເພື່ອໄປຮັບໃຊ້ກອງທັບຢ່າງທັນທ່ວງທີ.

ພີ່ນ້ອງຮ່ວມຊາດຍັງສະໝັກໃຈກິນແຕ່ມັນກອຍ ແລະ ຜັກປ່າ, ເພື່ອຈຶ່ງເຂົ້າສານ, ປ່ຽງມັນ, ຫົວເຜືອກໄວ້ໃຫ້ບັນດານັກຮົບ. ພົນລະເມືອງແຕ່ລະຄົນຄືລູກຫຼານຂອງແຂວງກວາງຈິ ແລະ ສາລະວັນ, ພາຍສະບຽງອາຫານ,ລູກປືນທັງກາງເວັນ ແລະ

ກາງຄືນມາສະໜາມຮົບ ເພື່ອເຂົ້າຮ່ວມການຂົນສົ່ງທະຫານທີ່ເສຍອົງຄະກັບໄປແນວຫລັງ. ບາງເທື່ອຢູ່ໃນເສັ້ນທາງຂົນສົ່ງຜູ້ບາດເຈັບໄດ້ຖືກສັດຕູຫຼອນໂຈມຕີ, ມີພີ່ນ້ອງຮ່ວມຊາດຫຼາຍຄົນໄດ້ໃຊ້ຮ່າງກາຍເພື່ອປົກປ້ອງພະນັກງານນັກຮົບ. ລະເບີດ ແລະລູກປືນຂອງສັດຕູ ສາມາດທຳລາຍບ້ານເຮືອນ ແລະໄຮ່ສວນ, ແຕ່ບໍ່ສາມາດທຳລາຍຄວາມຮັກທີ່ມີຕໍ່ກອງທັບຂອງປະຊາຊົນ. ກວ່າຈະເຖິງວັນທີ່ໄດ້ຮັບໄຊຊະນະ, ເດັກນ້ອຍກວາງຈິ ແລະ ສາລະວັນໄດ້ລົ້ມຕາຍໄປເປັນຈຳນວນຫຼວງຫຼາຍ. ຍັງມີພໍ່ແມ່ປະຊາຊົນຄົນລາວຫຼາຍຄົນ ເຖິງວ່າຊີວິດຂອງພວກເພິ່ນຍັງປະສົບກັບຄວາມຫຍຸ້ງຍາກ, ມີອາຫານກິນບໍ່ພຽງພໍ, ເຄື່ອງນຸ່ງຫົ່ມບໍ່ພຽງພໍ, ແຕ່ເພິ່ນກໍຍັງເກັບທ້ອນກະປ໋ອງເຂົ້າເພື່ອໄປລ້ຽງລູກຫຼານ ທະຫານທີ່ໄດ້ຮັບບາດເຈັບ, ເບິ່ງແຍງເປັນຢ່າງດີ ແລະ ຮັກສາປິ່ນປົວຄືດັ່ງລູກຫຼານຂອງຕົນເອງ.

ການປະສານສົມທົບຢ່າງເຂົ້າກັນດີ ແລະນ້ຳໃຈສາມັກຄີຕໍ່ສູ້ກ້າຫານເດັດດ່ຽວຂອງກອງທະຫານພັນທະມິດຫວຽດນາມ - ລາວ, ການເສຍສະຫຼະຊີວິດເພື່ອຊາດຂອງບັນດາຊົນເຜົ່າສອງຝັ່ງຊາຍແດນກວາງຈິ ແລະສາລະວັນ ໄດ້ສ້າງຄວາມເຂັ້ມແຂງຢ່າງບໍ່ຢຸດຢັ້ງ, ໄດ້ຊ່ວຍໃຫ້ກອງທະຫານພັນທະມິດ ຫວຽດນາມ - ລາວ ທະຍອຍດັບສູນ ສັດຕູ ແລະ ຍາດເອົາ3 ຖານທີ່ໝັ້ນສຳຄັນ: 38 (ອິນທີ), 165 (ເນີນຕຽງ), 22 (ເນີນລຶກ), "ເພີ່ມໄຟ" ໃຫ້ກັບສະຫມໍລະພູມ ເລກ 9- ແຄແຊງ ໃນເວລານັ້ນຄືຈຸດຕັດສິນຂອງບັ້ນຮົບທາງເລກ 9–ພາກໃຕ້ຂອງລາວ, ປະກອບໃນການບຸກເອົາຊະນະ ອາເມລິກາ-ຫຸ່ນຂອງມັນໃນບັ້ນຮົບ "ລາມເຊີນ 719".

ວັນທີ 23 ມີນາ 1971, ບັ້ນຮົບການບຸກໂຈມຕີຢູ່ເສັ້ນທາງ 9-ເຂດພາກໃຕ້ຂອງລາວໄດ້ສິ້ນສຸດລົງດ້ວຍໄຊຊະນະຂອງ ພວກເຮົາເຮັດໃຫ້ສະຖານະການສະໜາມຮົບສາມປະເທດອິນດູຈີນມີການຜັນປ່ຽນ, ເປີດຄວາມສາມາດໃໝ່ເພື່ອ

ເອົາຊະນະນະໂຍບາຍ "ສົງຄາມເຄມີຫວຽດນາມ" ຂອງອາເມລິກາ. ໄຊຊະນະຄັ້ງນີ້ ເປັນຫຼັກຖານພະຍານເຖິງຄວາມສາມັກຄີ ແລະສາຍສຳທີ່ແໜ້ນແຟ້ນຂອງ ຫວຽດນາມ - ລາວ, ລະຫວ່າງ 2 ແຂວງກວາງຈິ ແລະ ແຂວງສາລະວັນ ກໍຄືພົນຕີ ດົງຊີງວຽນ - ຄະນະຜູ້ບັນຊາການ 559... ຍ້ອນວ່າຍັງຢູ່ຂອງເສັ້ນທາງ ແລະ ໄຊຊະນະສົມບູນຂອງບັ້ນຮົບ,ຖ້າບໍ່ສາມາດຊອກຫາກົກເຄົ້າເຫງົ້າຕໍາແຫ່ງໄຊຊະນະໄດ້ ຈາກບາດກ້າວ ຂອງອ້າຍບ່າວ,ເດັກສາວປະໂກໃນທາງທີ່ເຕັມໄປດ້ວຍລູກປືນ, ໃນ ສຽງທີ່ດັງກ້ອງກັງວານຂອງເຄື່ອງດົນຕີ, ຫຼືການເຕັ້ນລໍາວົງຂອງທະຫານຊາຍຍິງ ແລະ ທະຫານປົດປ່ອຍປະເທດລາວພາຍຫຼັງການສູ້ຮົບ..., ມັນຍາກທີ່ຈະອະທິບາຍ ໃຫ້ຄົບຖ້ວນ ເຖິງອາລົມຂອງຄວາມດີໃຈນີ້... ແລະເປັນຫຍັງພວກເຮົາຈຶ່ງຊະນະ"[7].

ໄຊຊະນະເສັ້ນທາງເລກທີ 9 – ເຂດໃຕ້ຂອງລາວ ຮັກສາ "ສາຍໂລຫິດ" ຂອງເສັ້ນທາງຍຸດທະສາດ ເຈື່ອງເຊີນ - ໂຮ່ຈີມິງ, ເປີດກວ້າງເຂດປົດປ່ອຍ, ສ້າງ ເງື່ອນໄຂເພື່ອຈັດວາງກອງກໍາລັງ ແລະ ອາວຸດຍຸດໂທປະກອນເຂົ້າໃນສະໜາມ ຮົບກຽມ ພ້ອມສູ້ຮົບຍຸດທະສາດຂະໜາດໃຫຍ່ ປີ 1972, ແຂວງກວາງຈີ້ໄດ້ຮັບ ການປົດປ່ອຍຢ່າງຮອບດ້ານ.

ປີ 1974, ສະຖານະການການປະຕິວັດຂອງຫວຽດນາມ ແລະ ລາວ ໄດ້ ປ່ຽນແປງຢ່າງວ່ອງໄວ. ເພື່ອຮັບໃຊ້ແຜນການເປີດສາກການບຸກໂຈມຕີ ແລະ ລຸກຮື້ ຂຶ້ນເພື່ອປົດປ່ອຍທົ່ວເຂດພາກໃຕ້ ,ເພື່ອທ້ອນໂຮມປະເທດຊາດ, ການລໍາລຽງ ອຸປະກອນພະລາທິການ ແລະ ວິທະຍາການ, ພິເສດແມ່ນອາວຸດ,ລູກກະສຸນ ແລະ ເຊື້ອເພີງ ໃຫ້ບັນດາກອງພົນຫຼັກທີ່ຕໍ່ສູ້ຢູ່ບັນດາສະໜາມຮົບຢ່າງຮີບດ່ວນ. ; ໃນນັ້ນ,

---

[7]ສະຖາບັນປະຫວັດສາດການທະຫານ: ໄຊຊະນະຂອງສົງຄາມຢູ່ເສັ້ນທາງເລກທີ9- ທາງພາກໃຕ້ຂອງລາວທີ່ມີຄວາມຫມາຍແລະບົດຮຽນປະຫວັດສາດຂອງກອງທັບປະຊາຊົນ.

ການກໍ່ສ້າງທໍ່ສົ່ງນ້ຳມັນເຊື້ອໄຟ ຈາກພາກເໜືອໄປຍັງສະໜາມຮົບພາກໃຕ້ແມ່ນມີຄວາມໝາຍສຳຄັນຕໍ່ທະຫານ ແລະ ປະຊາຊົນແຂວງ ກວາງຈີ້;ສາລະວັນທ້າວທັນເຂົ້າຮ່ວການສູ້ຮົບຄັ້ງໃໝ່, ທັງເຮັດວຽກງານປົກປັກຮັກສາຄວາມປອດໄພຂອງເສັ້ນທາງສາຍພູຫຼວງ ແລະ ເສັ້ນທາງທໍ່ນ້ຳມັນ, ພ້ອມທັງກະຕືລືລົ້ນເຂົ້າຮ່ວມການຂົນສົ່ງສິນຄ້າ, ອາວຸດຍຸດໂທປະກອນໄປຍັງສະໜາມຮົບພາກໃຕ້, ລາວ ແລະ ກຳປູເຈຍ. ເພື່ອຮັກສາຄວາມປອດໄພຂອງເສັ້ນທາງຄົມມະນາຄົມ ເຈືອງເຊີນ, ກອງທັບແລະປະຊາຊົນແຂວງກວາງຈິ, ແຂວງສາລະວັນ, ບໍ່ໄດ້ຄຶດງໍ້ຕໍ່ຄວາມຫຍຸ້ງຍາກລຳບາກ, ດ້ວຍຈິດໃຈ “ຊີວິດຕິດກັບຂົວ, ຕິດເສັ້ນທາງ, ຕາຍຢ່າງພິລະອາດຫານ”. “ທັງໝົດກໍເພື່ອການປົດປ່ອຍບ້ານເກີດເມືອງນອນຫວຽດນາມ - ລາວ” ຢືນຄຽງບ່າຄຽງໄລ່ກັນແລະເຕັມໄປດ້ວຍຄວາມຮັກແພງອ້າຍນ້ອງ, ສູ້ຊົນແລະຍາດເອົາໄຊຊະນະ. ໃນສົງຄາມຄັ້ງນີ້ ມີພະນັກງານ, ນັກຮົບ, ອາສາສະໝັກຊາວໜຸ່ມ, ປະຊາຊົນບ້ານເກີດເມືອງນອນແຂວງກວາງຈິແລະສາລະວັນພັນກວ່າຄົນໄດ້ເສຍສະຫຼະຊີວິດ ເພື່ອສ້າງເສັ້ນທາງສາຍພູຫຼວງໃຫ້ລຸລ່ວງ, ເພື່ອເອກະລາດແຫ່ງຊາດຂອງປະເທດຫວຽດນາມ - ລາວ ຄວາມສາມັກຄີ, ປະສານສົມທົບການສູ້ຮົບລະຫວ່າງແຂວງກວາງຈິ ແລະ ແຂວງສາລະວັນ ໃນສົງຄາມ ຕ້ານອາເມລິກາ ແລະກູ້ຊາດໄດ້ສະແດງອອກໃນຫຼາຍດ້ານແລະຫຼາຍຂົງເຂດ, ແຕ່ເຫດການໃຫຍ່ສຸດ ທີ່ຢູ່ໃນ ປະຫວັດສາດຂອງຊາດແມ່ນການເອື້ອເຟື້ອເກື້ອຫນູນກັນ, ອຸປະຖຳຄ້ຳຊູ, ຊ່ວຍເຫຼືອກັນຢູ່ເປັນປະຈຳ, ກໍ່ສ້າງຖານທີ່ໝັ້ນ, ຮັບປະກັນສາຍເລືອດການຈະລາຈອນໃນເສັ້ນທາງ 559, ກາຍເປັນເສັ້ນທາງຄົມມະນາຄົມຍຸດທະສາດເໜືອ-ໃຕ້. ເຫດການດັ່ງກ່າວໄດ້ຢູ່ໃນປະຫວັດສາດຂອງປະເທດຊາດເປັນວິລະກຳທີ່ສວຍງາມ, ປະກອບສ່ວນສຳຄັນທີ່ເຮັດໃຫ້ໄດ້ຮັບໄຊຊະນະອັນສະຫງ່າລາສີ, ສິ້ນສຸດດ້ວຍ ຍຸດທະນາການການ

ປະຫວັດສາດໂຮ່ຈິມິນ, ປົດປ່ອຍພາກໃຕ້ ແລະ ທ້ອນໂຮມປະເທດຊາດ. ກອງທັບ ແລະປະຊາຊົນແຂວງ ກວາງຈິ ແລະ ແຂວງສາລະວັນ ມີຄວາມພາກພູມໃຈ ທີ່ໄດ້ປະກອບສ່ວນເຫື່ອແຮງແລະສະຕິປັນຍາ ຂອງຕົນເຂົ້າໃນການຕໍ່ສູ້ຕ້ານ ອາເມລິກາ, ທ້ອນໂຮມປະເທດຊາດອັນຍິ່ງໃຫຍ່ ຂອງປະຊາຊົນສອງຊາດ ຫວຽດນາມ ແລະ ລາວ ຈົນເຖິງວັນທີ່ໄດ້ຮັບໄຊຊະນະ.

## ພາກທີ II.
## ຜົນງານຂອງການພົວພັນຮ່ວມມືໃນບັນດາຂົງເຂດກວາງຈິ ແລະ ແຂວງສາລະວັນ ແຕ່ປີ 1975 ເຖິງປະຈຸບັນ.

### I. ກໍ່ສ້າງ ແລະ ພັດທະນາສາຍພົວພັນມິດຕະພາບໃນໄລຍະ 1975 – 1989

ພາຍຫຼັງທີ່ໄດ້ຮັບໄຊຊະນະຈາກສົງຄາມຕໍ່ຕ້ານການຮຸກຮານຂອງຈັກກະພັດອາເມລິກາ (1975), ການພົວພັນລະຫວ່າງ ຫວຽດນາມ - ລາວ ໄດ້ກ້າວເຂົ້າສູ່ໄລຍະໃໝ່ຢ່າງເປັນທາງການ: ຈາກການເປັນສຳພັນທະມິດຕໍ່ສູ້ຮ່ວມຊຸມຕະຄອງດຽວກັນ, ການຮ່ວມມືຮອບດ້ານລະຫວ່າງສອງປະເທດທີ່ເປັນເອກະລາດ ແລະ ອະທິປະໄຕ, ຮ່ວມກັນສ້າງສາ ແລະ ປົກປັກຮັກສາເອກະລາດຂອງຊາດ. ຄຽງຄູ່ກັບການພັດທະນາຂອງສາຍພົວພັນລາວ-ຫວຽດນາມ, ສອງແຂວງກວາງຈິ້ (ຫວຽດນາມ) ແລະ ສາລະວັນ (ລາວ) ກໍ່ເພີ່ມທະວີການຮ່ວມມື ແລະ ຊ່ວຍເຫຼືອເຊິ່ງກັນ ແລະ ກັນໃນທຸກດ້ານ. ຄະນະພັກ, ລັດຖະບານ ແລະ ປະຊາຊົນແຂວງກວາງຈິ ແລະ ແຂວງສາລະວັນ ຍາມໃດກໍ່ຮູ້ຢ່າງເລິກເຊິ່ງວ່າ ແຕ່ລະຜົນສຳເລັດຂອງສອງແຂວງໃນການກໍ່ສ້າງ ແລະ ພັດທະນາລ້ວນແຕ່ໄດ້ມາຈາກການແບ່ງປັນ, ຮ່ວມມື ແລະ ໜູນຊ່ວຍເຫຼືອອັນລ້ຳຄ່າຂອງຄະນະພັກ, ລັດຖະບານ ແລະ ປະຊາຊົນ.

ວັນທີ 20 ກັນຍາປີ 1975, ກົມການເມືອງສູນກາງພັກກອມມູນິດຫວຽດນາມ ໄດ້ອອກມະຕິຕົກລົງເລກທີ 245-NQ/TW ໂຮມສາມແຂວງກວາງບິ່ງ, ກວາງຈີ້, ເທືອທຽນ ແລະຂົງເຂດ ວິງລີງ ເຂົ້າເປັນແຂວງບິ່ງຈິທ່ຽນ. ແຂວງກວາງຈີ້ໃນຕອນນີ້ຂຶ້ນກັບແຂວງບິ່ງຈິທຽນ. ເຖິງວ່າມີການປ່ຽນແປງຂອງການບໍລິຫານງານເຂດຊາຍແດນ, ແຕ່ໃນໄລຍະ 1975-1989, ການພົວພັນລະຫວ່າງ 2 ແຂວງບິ່ງຈິທຽນ (ຫວຽດນາມ) ແລະ ສາລະວັນ (ລາວ) ຍັງຄົງຄົງງົດງາມ. 14 ປີຫລັງການປົດປ່ອຍ, ສອງແຂວງໄດ້ມີການຮ່ວມມືຮອບດ້ານທາງດ້ານການເມືອງ, ເສດຖະກິດ, ວັດທະນະທຳ, ປ້ອງກັນຊາດປ້ອງກັນຄວາມສະຫງົບ ແລະຊ່ວຍເຫຼືອເຊິ່ງກັນ ແລະ ກັນໃນການກໍ່ສ້າງພື້ນຖານອຸປະກອນເຕັກນິກ, ເຝິກອົບຮົມພະນັກງານປະກອບສ່ວນກໍ່ສ້າງ ແລະ ພັດທະນາບ້ານເກີດເມືອງນອນ.

**1. ການຮ່ວມມືດ້ານການເມືອງ, ປ້ອງກັນຊາດ - ປ້ອງກັນຄວາມສະຫງົບ, ສ້າງເສັ້ນຊາຍແດນສັນຕິພາບ ແລະ ມິດຕະພາບ**

- ເພີ່ມທະວີການຮ່ວມມືດ້ານການເມືອງ:

ເພື່ອແນໃສ່ເພີ່ມທະວີການຮ່ວມມືດ້ານການເມືອງ, ສອງແຂວງກວາງຈິ ແລະສາລະວັນ ໄດ້ຮັບຮອງເອົາຫຼາຍເອກະສານສຳຄັນ ແລະ ສົ່ງຄະນະຜູ້ແທນຂັ້ນສູງລົງໄປຢ້ຽມຢາມ ແລະ ເຮັດວຽກກັບແຂວງ. ປີ 1983, ຄະນະພັກຜູ້ແທນແຂວງສາລະວັນໄດ້ມາຢ້ຽມຢາມ ແລະ ເຂົ້າຮ່ວມກອງປະຊຸມໃຫຍ່ຄັ້ງທີ III ຂອງອົງຄະນະພັກແຂວງບິ່ງຈິທຽນ. ພ້ອມກັນນັ້ນ, ປີ 1983, ແຂວງສາລະວັນ ແລະ ແຂວງ ບິ່ງຈິທຽນ ໄດ້ລົງນາມໃນສັນຍາຮ່ວມມືໄລຍະ 1983 – 1985, ເຫັນດີປັບປຸງວິທີການຮ່ວມມືຄື: ຫັນການຮ່ວມມືເທື່ອລະກ້າວ, ຊ່ວຍເຫຼືອເປັນກໍລະນີແລະກ້າວໄປສູ່ການຮ່ວມມືຍຸດ

ທະສາດຍາວນານ; ເພີ່ມທະວີວຽກງານວິຊາສະເພາະ ແລະ ການຝຶກອົບຮົມໃຫ້ແຂວງສາລະວັນ.

ປີ 1985, ເພື່ອສືບຕໍ່ເພີ່ມທະວີການພົວພັນກັບແຂວງສາລະວັນ, ຄະນະຜູ້ແທນຂັ້ນສູງແຂວງບິ່ງຈິທຽນ ໄດ້ມາຢ້ຽມຢາມ ແລະ ເຮັດວຽກຢູ່ແຂວງສາລະວັນ. ໃນການຢ້ຽມຢາມການເຮັດວຽກຄັ້ງນີ້ທັງສອງຝ່າຍ ໄດ້ເຊັນສັນຍາຮ່ວມມືໃນປີ 1986 ແລະ ໄລຍະ 1986-1990.

- ການຮ່ວມມືປ້ອງກັນປະເທດ-ປ້ອງກັນຄວາມສະຫງົບ:

ແຕ່ປີ 1986 – 1989, ຢູ່ລຽບຕາມຊາຍແດນທີ່ຂຶ້ນກັບແຂວງສາລະວັນ ແລະ ແຂວງບິ່ງຈິທຽນ ກອງປຸ້ນໄດ້ມີການເຄື່ອນໄຫວຢ່າງລັບໆ, ໂດຍສະເພາະແມ່ນ "ພວກປະຕິການຜັດຖິ່ນ ຄົນຫວຽດນາມ ໂດຍ ຮ່ວາງເກີມິງ ເປັນຫົວໜ້າແລະໄດ້ຈັດຕັ້ງ 3 ກອງຮ້ອຍຊື້ຈາກໄທເຂົ້າມາລາວເພື່ອແຊກຊຶມເພື່ອໃຫ້ຫວຽດນາມດຳການເຄື່ອນໄຫວ." ພາຍຫຼັງການສືບສວນ-ສອບສວນເປັນເວລາໜຶ່ງ, ກອງກຳລັງປະກອບອາວຸດບິ່ງຈິທຽນໄດ້ປະສານສົມທົບ ກັບກຳລັງປະກອບອາວຸດເມືອງເຊໂປນ (ສະຫວັນນະເຂດ) ແລະຕະໂອ້ຍ (ສາລະວັນ) ເພື່ອປິດລ້ອມ ແລະ ທຳລາຍ.

ຄຽງຄູ່ກັບການທຳລາຍລ້າງບັນດາກອງກຳລັງປະຕິການ, ກອງບັນຊາການທະຫານແຂວງ ບິ່ງຈິທຽນໄດ້ສົມທົບກັບຄະນະ ຜູ້ບັນຊາການທະຫານເຂດ 4 ເປີດສູນບຳລຸງເພື່ອອົບຮົມບັນດາພະນັກງານ ແລະ ແລກປ່ຽນປະສົບການໃຫ້ກັບບັນດາກອງກຳລັງປະກອບອາວຸດແຂວງສາລະວັນ. ສົມທົບກັນຢ່າງແໜ້ນແຟ້ນໃນການຕ້ານການລັກລອບຄ້າຂາຍສິນຄ້າເຖື່ອນ, ຄ້າຂາຍ ສິນຄ້າຕ້ອງຫ້າມ, ສະກັດກັ້ນການລັກລອບຂ້າມຊາຍແດນທີ່ຜິດກົດໝາຍ ແລະ ການເຄື່ອນຍ້າຍຢ່າງເສລີ.

ວັນທີ 18 ກໍລະກົດ 1977, ສົນທິສັນຍາແຜນການສ້າງເສັ້ນຊາຍແດນລະຫວ່າງຫວຽດນາມ - ລາວ ໄດ້ຮັບການລົງນາມ, ໃນນັ້ນ, ເສັ້ນຊາຍແດນແຂວງບິ່ງຈິຫຽນ (ຫວຽດນາມ) ກັບແຂວງສາລະວັນ (ລາວ) (ເອີ້ນວ່າໄລຍະ S) ໄດ້ວາງກຳນົດຄວາມຍາວ 87 ກິໂລແມັດ. . ຜັນຂະຫຍາຍປະຕິບັດຕາມບັນດາຂໍ້ກຳນົດຂອງສົນທິສັນຍາ, ສອງແຂວງບິ່ງຈິຫຽນ ແລະ ສາລະວັນ ໄດ້ຊຸກຍູ້ການປັກຫຼັກແດນ . ຖອດຖອນປະສົບການຈາກຂະບວນການປັກຫຼັກໝາຍ ຂອງເສັ້ນຊາຍແດນລະຫວ່າງແຂວງບິ່ງຈິຫຽນ ແລະ ສະຫວັນນະເຂດໃນໄລຍະ 200 ກມ, ແຜນການປັກຫຼັກໝາຍຢູ່ເສັ້ນໄລຍະ S ແມ່ນເຮັດຮອດໃສ ກະຕ້ອງເຮັດໃຫ້ແລ້ວບ່ອນນັ້ນ. ຍ້ອນເຫດນັ້ນ, ໃນບໍ່ຮອດ 1 ເດືອນແຫ່ງການຜັນຂະຫຍາຍ, ວັນທີ 3/9/1979, ພະແນກ ປະຈຳເຂດຊາຍແດນຂອງສອງ ແຂວງບິ່ງຈິຫຽນ ແລະ ແຂວງສາລະວັນ ໄດ້ສຳເລັດການປັກຫຼັກໝາຍຊາຍແດນ ເສັ້ນໄລຍະ S ຍາວ 87 ກິໂລແມັດຕິດກັນລະຫວ່າງແຂວງ ບິ່ງຈິຫຽນ ແລະ ແຂວງສາລະວັນ ກໍໄດ້ສຳເລັດ, ມີຫຼັກໝາຍຊາຍແດນທັງໝົດ 11 ແຫ່ງ. ພາຍຫຼັງການປັກຫຼັກໝາຍ , ແຂວງບິ່ງຈິຫຽນ ແລະ ແຂວງສາລະວັນ ໄດ້ສົມທົບການເຄື່ອນໄຫວສົ່ງມອບຂົງເຂດ ດັ່ງກ່າວໄດ້ລຸລ່ວງດີ. ຜົນສຳເລັດ ຂອງການປັກຫຼັກໝາຍ, ຍົກຍ້າຍທີ່ດິນ ແລະ ພົນລະເມືອງຂອງ 2 ແຂວງໄດ້ປະກອບສ່ວນ ກໍ່ສ້າງເສັ້ນຊາຍແດນ ມິດຕະພາບອັນຍາວນານ, ຮັບປະກັນຄວາມສາມັກຄີ ແລະມິດຕະພາບລະຫວ່າງ 2 ປະເທດ.

## 2. ການຮ່ວມມືໃນຂົງເຂດເສດຖະກິດ

- ການຮ່ວມມືໃນຂົງເຂດກະສິກຳ ແລະ ປ່າໄມ້:

ໃນຊຸມປີ 1976 – 1989, ເພື່ອຊ່ວຍໃຫ້ແຂວງສາລະວັນຟື້ນຟູເສດຖະກິດພາຍຫຼັງສົງຄາມ, ແຂວງບິ່ງຈິຫຽນ ໄດ້ສົ່ງນັກຊ່ຽວຊານຈຳນວນໜຶ່ງໄປຊ່ວຍຂະ

ແໜງກະສິກຳດຳການວາງແຜນທີ່ດິນ, ສ້າງແຜນດຳເນີນງານ ບຸກເບີກດິນນາຮ້າງ ຊ່າວນາເຮື້ອ ທີ່ຖືກປະຖິ້ມໃນຊ່ວງສົງຄາມ, ຄົ້ນຄ້ວາຟື້ນຟູແນວພັນພືດທີ່ສາມາດປັບ ແລະເຕີບໂຕໄດ້ໃນເຂດທ້ອງຖິ່ນຂອງລາວ, ພ້ອມກັນນັ້ນກໍ່ນຳເອົາບາງແນວພັນທີ່ໃຫ້ຜະລິດຕະພັນສູງຈາກແຂວງ ບິ່ງທ້ວນ ມາທົດລອງປູກ. ແຂວງບິ່ງທິ້ງກໍໄດ້ສົ່ງພະນັກງານວິຊາການໄປຊ່ວຍຊີ້ນຳເຕັກນິກທາງດ້ານສັດຕະວະແພດຢູ່ແຂວງສາລະວັນ. ອຸປະກອນການຊ່ວຍເຫຼືອ, ເຕັກນິກ ແລະ ສົ່ງຜູ້ຊ່ຽວຊານໄປສ້ອມແປງ, ຍົກລະດັບ ແລະ ສ້າງໂຄງການຊົນລະປະທານຈຳນວນໜຶ່ງ ຢູ່ຂົງເຂດແຂວງສາລະວັນ.

ນັບແຕ່ປີ 1986, ພາຍຫຼັງຫວຽດນາມເຄື່ອນໄຫວການປະຕິຮູບເສດຖະກິດໃຫມ່ທັງໝົດ, ການຮ່ວມມືໃນ ຂົງເຂດ ກະສິກຳລະຫວ່າງແຂວງສາລະວັນ ແລະ ແຂວງບິ່ງຈິທຽນ ເລີ່ມສຸມໃສ່ເປົ້າໝາຍພັດທະນາກະສິກຳ ແບບຍັ້ງຢືນ. 2 ຝ່າຍໄດ້ຜັນຂະຫຍາຍຫຼາຍລາຍການ ແລະ ໂຄງການໃນຮູບແບບການຮ່ວມທຶນ ແລະ ຮ່ວມກັນບົນພື້ນຖານຄວາມສະເໝີພາບ ແລະ ມີຜົນປະໂຫຍດຮ່ວມກັນ. ບັນດາໂຄງການທົດລອງການພັດທະນາກະສິກຳແບບຍັ້ງຢືນ ຢູ່ເມືອງຕາະໂອ້ຍ (ສາລະວັນ) ໄດ້ຮັບຜົນສຳເລັດໃນເບື້ອງຕົ້ນ. ພາຍໃຕ້ການຊີ້ນຳຂອງນັກຊ່ຽວຊານທາງການກະເສດແຂວງ ບິ່ງຈິທຽນ, ພໍ່ແມ່ປະຊາຊົນຢູ່ເມືອງຕາະໂອ້ຍ ໄດ້ກໍ່ສ້າງຊົນນະບົດໃໝ່ທີ່ມີໄຟຟ້າ - ເສັ້ນທາງ - ໂຮງຮຽນ - ສະຖານີນ້ອຍ.

ສອງແຂວງບິ່ງຈິທຽນ ແລະ ສາລະວັນ ກໍ່ເພີ່ມທະວີການຮ່ວມມືດ້ານປ່າໄມ້. ບໍລິສັດຮ່ວມທຸລະກິດເຂດພູດອຍບິ່ງຈິທຽນທັງໄດ້ຮ່ວມກັນການຂຸດຄົ້ນ, ປຸງແຕ່ງ ແລະ ຜະລິດເຊື້ອເພີງກັບແຂວງສາລະວັນ, ແລະ ທັງຮ່ວມທຶນກັບບໍລິສັດເພື່ອສ້າງເສດຖະກິດເຂດພູດອຍລາວໃຫ້ຈະເລີນພັດທະນາເພື່ອຂຸດຄົ້ນ ແລະ ສົ່ງອອກໄມ້ທ່ອນ. ແຕ່ປີ 1986 – 1989, ແຂວງບິ່ງຈິທຽນ ໄດ້ສົ່ງນັກຊ່ຽວຊານ, ນັກວິຊາການຫຼາຍທ່ານ ໄປສຳຫຼວດ ແລະ ວາງແຜນປ່າໄມ້ໃຫ້ແຂວງສາລະວັນ.

**- ການຮ່ວມມືໃນຂົງເຂດອຸດສາຫະກຳ ກໍ່ສ້າງເສັ້ນທາງ ຄົມມະນາຄົມ - ຂົນສົ່ງ:**

ແຂວງບິ່ງຈິທຽນໄດ້ຊ່ວຍແຂວງສາລະວັນ ເລັ່ງຟື້ນຟູບັນດາພື້ນຖານອຸດສາຫະກຳທີ່ຖືກທຳລາຍຈາກສົງຄາມ; ກໍ່ສ້າງໂຮງງານ ແລະວິສາຫະກິດ ຈຳນວນ ໜຶ່ງ; ການຝຶກອົບຮົມແລະ ບຳລຸງວິຊາສະເພາະໃຫ້ກັບບັນດາພະນັກງານແລະຜູ້ອອກແຮງງານ. ແຕ່ປີ 1985-1987, ແຂວງບິ່ງຈິທຽນ ໄດ້ຊ່ວຍແຂວງສາລະວັນ ທາງດ້ານອຸປະກອນຈຳນວນໜຶ່ງເພື່ອການກໍ່ສ້າງກິຈະການສະຫວັດດີການ ໃຫ້ແກ່ປະຊາຊົນ ເຊັ່ນ: ສຸກສາລາ, ໂຮງຮຽນປະຖົມ ຢູ່ເມືອງຕາໂອ້ຍ. ກ່ຽວກັບພື້ນຖານໂຄງລ່າງຄົມມະນາຄົມ, ດ້ວຍການໜູນຊ່ວຍດ້ານອຸປະກອນ, ເຕັກນິກ ແລະ ນັກຊ່ຽວຊານຈາກແຂວງ ບິ່ງຈິທຽນ, ແຂວງສາລະວັນ ໄດ້ກໍ່ສ້າງເສັ້ນທາງລະຫວ່າງເມືອງ ແລະ ເສັ້ນທາງລະຫວ່າງບ້ານຈຳນວນໜຶ່ງ ຢູ່ເມືອງສະໝ້ວຍ

**- ການຮ່ວມມືດ້ານການຄ້າ:**

ເພື່ອຕອບສະໜອງຄວາມຕ້ອງດ້ານການການຜະລິດ ແລະ ຊີວິດການເປັນຢູ່ຂອງປະຊາຊົນແຂວງສາລະວັນ, ແຂວງ/ບິ່ງຈິທຽນ ໄດ້ຊຸກຍູ້ການສົ່ງອອກສິນຄ້າມທີ່ຈຳເປັນຄື: ຜ້າແພ, ເສັ້ນດ້າຍ, ເຄື່ອງໃຊ້ຄົວເຮືອນ, ເຈ້ຍ; ມີກນັກຮຽນ, ຢາງຕີນລົດຖີບ, ຕະປູທຸກຊະນິດ, ຜ້າຫົ່ມ, ເຫຼົ້າ. ແຂວງສາລະວັນຍັງເພີ່ມທະວີການສົ່ງອອກສິນຄ້າມາແຂວງບິ່ງຈິທຽນ ກໍຄືສິນຄ້າກະສິກຳ, ປ່າໄມ້ທີ່ປະຊາຊົນຂຸດຄົ້ນ ແລະ ເຊື້ອເພີງ ແລະ ວັດຖຸສົງຄາມ ຈຳນວນໜຶ່ງ. ແລະ ເສດເສດຖະກິດຈຳນວນໜຶ່ງ. ນັບແຕ່ປີ 1985, ອຸດສາຫະກຳການຄ້າຕ່າງປະເທດຂອງແຂວງ ບິ່ງຈິທຽນໄດ້ເລີ່ມເຄື່ອນໄຫວການຊ່ວຍຊື້-ຊ່ວຍຂາຍບັນດາຜະລິດຕະພັນຈາກແຂວງສາລະວັນ ດ້ວຍການຮ່ວມມືທີ 3.

**3 ການຮ່ວມມືດ້ານວັດທະນະທຳ, ການສຶກສາ-ເຝິກອົບຮົມ ການແພດ**

**- ຂົງເຂດວັດທະນະທຳ**:

ພາຍຫຼັງປີ 1975, ຂະແໜງວັດທະນະທຳແຂວງ ບິ່ງຈິທຽນ ໄດ້ຊ່ວຍແຂວງ ສາລະວັນ ບູລະນະ ແລະ ພັດທະນາລະບົບກະຈາຍສຽງ. ເນື່ອງໃນໂອກາດວັນບຸນສຳຄັນຂອງສອງຊົນເຜົ່າ, ຂະແໜງວັດທະນະທຳ ແລະ ກິລາແຂວງບິ່ງຈິທຽນ ໄດ້ສົ່ງຄະນະສະແດງສິລະປະ, ທີມບານເຕະ ແລະ ບານສົ່ງໄປສະແດງ ແລະ ແຂ່ງຂັນຢູ່ແຂວງສາລະວັນ. ແຂວງບິ່ງຈິທຽນ ກໍ່ໄດ້ສ້າງເງື່ອນໄຂໃຫ້ຄະນະສະແດງສິລະປະ, ທີມບານເຕະ, ບານສົ່ງ ແລະ ປິງປ່ອງ ຂອງແຂວງສາລະວັນ ທີ່ໄດ້ພົບປະແລກປ່ຽນ, ສະແດງ ແລະຝຶກຊ້ອມຢູ່ບິ່ງຈິທຽນ

**- ຂົງເຂດການສຶກສາ - ການຝຶກອົບຮົມ:**

ແຕ່ປີ 1977-1985, ບິ່ງຈິທຽນໄດ້ໃຊ້ສ່ວນໜຶ່ງຂອງທຶນຊ່ວຍເຫຼືອເພື່ອກໍ່ສ້າງໂຮງຮຽນຈຳນວນໜຶ່ງໃຫ້ແຂວງສາລະວັນ. ດ້ວຍງົບປະມານຊ່ວຍເຫຼືອຈາກແຂວງບິ່ງຈິທຽນ, ແຂວງສາລະວັນ ໄດ້ສ້າງໂຮງຮຽນປະຖົມຢູ່ເມືອງ ຕະໂອ້ຍ. ຂະແໜງການສຶກສາແຂວງບິ່ງຈິທຽນຍັງໄດ້ສົ່ງນັກຊ່ຽວຊານໄປຊ່ວຍ ແຂວງສາລະວັນ ວິຊາຮຽນ, ຊັ້ນຮຽນ ແລະ ການບຳລຸງຄູອາຈານ. ເພື່ອແກ້ໄຂບັນຫາຂາດເຂີນຄູສອນໃນຫ້ອງຮຽນ, ບັນດາຮາກຖານ ການສຶກສາຂອງແຂວງບິ່ງຈິທຽນ ໄດ້ຝຶກອົບຮົມຄູສອນຈຳນວນໜຶ່ງຢູ່ແຂວງສາລະວັນຂອງລາວ.

**- ການແພດ:**

ແຕ່ປີ 1976 – 1985, ສົມທົບກັບງົບປະມານສູນກາງ, ແຂວງບິ່ງຈິທຽນ ໄດ້ຫັກງົບປະມານທ້ອງຖິ່ນຊ່ວຍ ແຂວງສາລະວັນ ກໍ່ສ້າງສຸກສາລາ ຢູ່ເມືອງຕະໂອ້ຍ. ຂະແໜງການແພດ ບິ່ງຈິທຽນ ກໍ່ໄດ້ໜູນຊ່ວຍບັນດາໂຮງໝໍຈັດຊື້ອຸປະກອນການແພດ, ຢາປິ່ນປົວພະຍາດ ແລະ ຢາຕ້ານພະຍາດໄຂ້ຍຸງລາຍ, ພ້ອມທັງສົ່ງຜູ້ຊ່ຽວຊານ

ວິຊາ ສະເພາະມາບໍາລຸງໃຫ້ກັບທີມແພດ; ຜັນຂະຫຍາຍບັນດາຫຼັກສູດການປ້ອງກັນພະຍາດ. ແຕ່ປີ 1988-1989, ຄະນະແພດ ບິ່ງຈິທຽນ ໄດ້ສົມທົບກັບແຂວງສາລະວັນ ໄດ້ຜັນຂະຫຍາຍບັນດາຫຼັກສູດການປ້ອງກັນພະຍາດໄຂ້ຍຸງ, ພາຍຫຼັງ 2 ປີ ແຫ່ງການຜັນຂະຫຍາຍ, ບັນດາໂຄງການຮ່ວມມືບັນລຸໄດ້ໝາກຜົນດີ, ຈໍາກັດການແຜ່ລະບາດຂອງພະຍາດຢູ່ແຂວງສາລະວັນຂອງລາວ.

## II.ກໍ່ສ້າງແລະພັດທະນາການພົວພັນມິດຕະພາບທີ່ເປັນມູນເຊື້ອໄລຍະ ປີ 1989 ຮອດປະຈຸບັນ.

ປະຕິບັດແນວທາງການຕ່າງປະເທດຂອງພັກ ແລະລັດ, ໃນຊຸມປີຜ່ານມາການພົວພັນລະຫວ່າງການນໍາພັກ, ອໍານາດການປົກຄອງ, ແນວໂຮມປະເທດຊາດຫວຽດນາມ ແຂວງກວາງຈິ້ ແລະ ແຂວງສາລະວັນນັບມື້ນັບເຂົ້າສູ່ລວງເລິກ. ຈຸດພົ້ນເດັ່ນໃນການພົວພັນດ້ານການເມືອງລະຫວ່າງແຂວງສາລະວັນ ແລະກວາງຈິນັບແຕ່ປີ 1989 ເຖິງປັດຈຸບັນນີ້ແມ່ນ 2 ຝ່າຍໄດ້ສືບຕໍ່ເພີ່ມທະວີການພົວພັນ, ແລກປ່ຽນ ແລະເຊັນບັນດາການຮ່ວມມື ທີ່ໄດ້ຕົກລົງ ກັນ ໂດຍຜ່ານການຢ້ຽມຢາມ ແລະ ເຮັດວຽກຂອງການນໍາຂັ້ນສູງບັນດາແຂວງ. ສອງແຂວງໄດ້ລົງນາມໃນສັນຍາຮ່ວມມືສອງຝ່າຍຫຼາຍສະບັບດ້ວຍເນື້ອໃນທີ່ອຸດົມສົມບູນ ແລະ ແທດຈິງໃນທຸກຂົງເຂດຄື: ການຄ້າ, ການລົງທຶນ, ການສຶກສາ-ບໍາລຸງສ້າງ, ສາທາລະນະສຸກ, ວັດທະນະທໍາ, ກິລາ, ການທ່ອງທ່ຽວ, ວິທະຍາສາດ-ເຕັກໂນໂລຊີ, ຄົມມະນາຄົມຂົນສົ່ງ, ວຽກງານຊາຍແດນ, ການທູດປະຊາຊົນ. ...

ນັບແຕ່ປີ 1989 ມາຮອດປະຈຸບັນ, ດ້ວຍຄວາມໄວ້ເນື້ອເຊື່ອໃຈ ແລະສະໜິດຕິດພັນກັນຢ່າງເລິກເຊິ່ງ, ການຮ່ວມມືລະຫວ່າງແຂວງກວາງຈິ ແລະ ແຂວງ

ສາລະວັນບັນລຸໄດ້ບັນດາໝາກຜົນສຳຄັນໃນຫຼາຍຂົງເຂດ. ໃນເງື່ອນໄຂທີ່ກວາງຈີກໍຍັງເປັນແຂວງທຸກຍາກ, ງົບປະມານຂອງແຂວງຍັງຫຍຸ້ງຍາກ, ແຕ່ຄະນະພັກ, ອຳນາດການປົກຄອງ ແລະ ປະຊາຊົນແຂວງກວາງຈີ ໄດ້ເຫັນອົກເຫັນໃຈແລະແບ່ງປັນຄວາມຫຍຸ້ງຍາກຂອງແຂວງສາລະວັນ. ປະຢັດແຫຼ່ງງົບປະມານທ້ອງຖິ່ນໃຫ້ຄວາມສຳຄັນໃນການຊ່ວຍເຫຼືອ, ຊ່ວຍເຫຼືອໃຫ້ແຂວງສາລະວັນດ້ວຍຫຼາຍຮູບຫຼາຍແບບ. ໂດຍຜ່ານການໜູນຊ່ວຍດ້ານການເງິນ, ວັດຖຸ, ເຕັກນິກ, ວຽກງານຊ່ຽວຊານ, ແນວພັນພືດ, ສັດລ້ຽງ, ຝຸ່ນ, ຢາປ້ອງກັນພືດ, ກໍ່ສ້າງວຽກງານສະຫວັດດີການສັງຄົມ ແລະຊີວິດການເປັນຢູ່ຂອງປະຊາຊົນປະກອບສ່ວນຟື້ນຟູແລະພັດທະນາເສດຖະກິດຂອງແຂວງເພື່ອນ.

ແຕ່ປີ 1999 ເປັນຕົ້ນໄປ, ພາຍຫຼັງບັນດານະໂຍບາຍບຸລິມະສິດໃຫ້ຄວາມສຳຄັນ ແລະບຸລິມະສິດໃໝ່ຂອງລັດຖະບານ 2 ປະເທດມີຜົນສັກສິດ, ບັນດາວິສາຫະກິດຂອງກວ່າງຈີໄດ້ລົງທຶນກໍ່ສ້າງຮາກຖານວິສາຫະກິດ ຈຳນວນໜຶ່ງ, ບັນດາຕົວແທນຈຳໜ່າຍສິນຄ້າຢູ່ແຂວງສາລະວັນ. ກົງກັນຂ້າມ, ບາງວິສາຫະກິດຂອງແຂວງສາລະວັນກໍ່ໄດ້ໄປລົງທຶນດຳເນີນທຸລະກິດການຄ້າຢູ່ກວາງຈີ ຈຳນວນນັກທຸລະກິດຄ້າຂາຍລະຫວ່າງສອງປະເທດນັບມື້ນັບເພີ່ມຂຶ້ນຢ່າງບໍ່ຢຸດຢັ້ງ. ຄະນະກຳມະການປະຊາຊົນແຂວງກວາງຈີໄດ້ຊີ້ນຳບັນດາອົງການໜ້າທີ່ຊີ້ນຳ, ໜູນຊ່ວຍບັນດາວິສາຫະກິດກວາງຈີເພື່ອຊ່ວຍແກ້ໄຂຄວາມຫຍຸ້ງຍາກ ແລະຂໍ້ຄົງຄ້າງໃນການສົ່ງອອກເຂົ້າ, ຝຸ່ນຈຸລິນຊີ, ຊັບພະຍາກອນນ້ຳ, ຖ່ານ... ໄປສູ່ລາວ ພ້ອມກັນນັ້ນຍັງຂົນສົ່ງເຄື່ອງຈັກ, ພາຫະນະ, ອຸປະກອນ, ຝຸ່ນຊີວະພາບ ຂ້າມຊາຍແດນເພື່ ຜັນຂະຫຍາຍບັນດາໂຄງການປູກກາເຟ, ຢາງພາລາ ແລະ ມັນວັດຖຸດິບໃໝ່ຢູ່ແຂວງສາລະວັນ. ບໍລິສັດການຢາກວາງຈີໄດ້ເປີດຕົວແທນຢາຫຼວງຢູ່ບັນດາເມືອງຕະໂອ້ຍ, ສະໝ້ວຍ

(ແຂວງສາລະວັນ). ບໍລິສັດການຄ້າກວາງຈີຈຳກັດຜູ້ດຽວ ໄດ້ເປີດຕົວແທນຈຳໜ່າຍການຢາ ຢູ່ແຂວງສາລະວັນ.

ເພື່ອສ້າງເງື່ອນໄຂສະດວກ ໃຫ້ບັນດາວິສາຫະກິດຂອງສອງຝ່າຍແນະນຳຜະລິດຕະພັນໃໝ່, ການນຳຂອງ 2 ແຂວງໄດ້ຊີ້ນຳໃຫ້ພະແນກການຄ້າ ແລະພະແນກການຄ້າຕ່າງປະເທດຂອງ 2 ແຂວງ ສົມທົບກັນຈັດຕັ້ງງານຕະຫຼາດນັດ. ບັນດາຮ້ານຂາຍເຄື່ອງທີ່ເຂົ້າຮ່ວມງານຕະຫຼາດນັດໄດ້ນຳສະເໜີບັນດາຜະລິດຕະພັນໃໝ່ ໂດຍປະຊາຊົນທ້ອງຖິ່ນຢູ່ແຂວງສາລະວັນ ແລະກວາງຈີ້ປະດິດ, ຜະລິດ, ປຸງແຕ່ງ ແລະຊຸດຄົ້ນ. ຜ່ານງານວາງສະແດງ (ງານຕະຫຼາດນັດ), ບັນດາວິສາຫະກິດຂອງສອງແຂວງ ແລະ 2 ປະເທດໄດ້ລົງນາມໃນສັນຍາຊົມໃຊ້ຜະລິດຕະພັນຂອງກັນ. ປະກອບສ່ວນຊຸກຍູ້ການເຄື່ອນໄຫວການຄ້າລະຫວ່າງສອງແຂວງ ແລະບັນດາແຂວງອື່ນຂອງສອງປະເທດກໍ່ຄືກັບບັນດາປະເທດອື່ນໃນໂລກ. ແຕ່ປີ 1989 ມາຮອດປະຈຸບັນ, ເທິງທ່ວງການພັດທະນາຂອງພື້ນເສດຖະກິດ, ການເຄື່ອນໄຫວການຄ້າລະຫວ່າງສອງແຂວງໄດ້ມີບາດກ້າວ ບຸກທະລຸທີ່ສຳຄັນ, ວົງເງິນຂາອອກຂາເຂົ້າຂອງສອງແຂວງນັບມື້ນັບເພີ່ມຂຶ້ນ. ບໍລິສັດໄຟຟ້າ ກວ່າງຈີໄດ້ສະໜອງໄຟຟ້າກວ່າ 160 ລ້ານ kWh, ເທົ່າກັບກວ່າ 10 ລ້ານ USD ໃຫ້ລາວ... ສອງຝ່າຍໄດ້ສົມທົບກັນສົມທົບກັບບັນດາກະຊວງ, ຂະແໜງການຂອງສອງປະເທດກໍ່ສ້າງ ແລະພັດທະນາດ່ານຊາຍແດນສາກົນລະໄລ. ຢູ່ທີ່ນີ້, ການເຄື່ອນໄຫວຄ້າຂາຍ (ພົວພັນການຄ້າ) ຂອງບັນດານັກທຸລະກິດຊາວລາວ, ຫວຽດນາມແລະນັກທຸລະກິດຕ່າງປະເທດຈຳນວນໜຶ່ງ ຄື: ໄທແລະກຳປູເຈຍເກີດຂຶ້ນຢ່າງຄຶກຄື້ນ.

ການຮ່ວມມືລະຫວ່າງສອງແຂວງໃນຂົງເຂດວັດທະນະທຳ, ວິທະຍາສາດ ແລະ ເຕັກໂນໂລຊີ, ສຶກສາ ແລະບຳລຸງສ້າງ ແລະຂົງເຂດອື່ນໆຍັງໄດ້ຮັບໝາກຜົນສຳຄັນຫຼາຍຢ່າງ. ໃນຂົງເຂດສຶກສາ - ບຳລຸງສ້າງ, ແຂວງກວາງຈິ ໄດ້ໜູນຊ່ວຍແຂວງສາລະວັນ ໃນການກໍ່ສ້າງສ້າງນັກຮຽນນັກສຶກສາ ແລະ ຝຶກອົບຮົມໃຫ້ຖັນແຖວພະນັກງານ[8]. ມີນັກຮຽນແລະພະນັກງານຂອງ ແຂວງສາລະວັນຫຼາຍຄົນໄດ້ໄປຝຶກອົບຮົມຢູ່ແຂວງກວາງຈິໂດຍສະເພາະແມ່ນລະດັບທິດສະດີການເມືອງ-ການປົກຄອງ ເມື່ອ ກັບຄືນປະເທດເຮັດວຽກຢູ່ໃນຕຳແໜ່ງສູງແລະມີຄວາມໄວ້ວາງ ໃຈ. ການຮ່ວມມືໃນຂົງເຂດສາທາລະນະສຸກ, ແຂວງກວາງຈິ ໜູນຊ່ວຍແຫຼ່ງງົບປະມານການໃຊ້ຈ່າຍ ລົງທຶນກໍ່ສ້າງພື້ນຖານໂຄງລ່າງ, ບັນດາສຸກສາລາບ້ານຢູ່ຕາມຊາຍແດນ, ເບິ່ງແຍງສຸຂະພາບປະຊາຊົນ, ຮັບປະກັນຊີວິດສັງຄົມໃຫ້ແກ່ຊາວອົບພະຍົບໂດຍເສລີທີ່ໄດ້ຮັບອະນຸຍາດໃຫ້ຢູ່ບ່ອນພັດພາອາໄສໃນເຂດຊາຍແດນ.

ດ້ວຍຄວາມມານະບຸກບືນຂອງທຸກຂັ້ນ, ທຸກຂະແໜງ, ໃນນັ້ນ, ພິເສດແມ່ນກຳລັງຕຳຫຼວດ, ທະຫານປ້ອງກັນຊາຍແດນ ແລະການທະຫານຂອງສອງຝ່າຍສະນັ້ນ, ສະພາບການປ້ອງກັນຄວາມສະຫງົບ, ປ້ອງກັນຊາດຢູ່ເຂດຊາຍແດນຫວຽດນາມ - ລາວ ສືບຕໍ່ໄດ້ຮັບການຮັກສາແໜ້ນ; ການກຳແໜ້ນສະພາບການ, ແລກປ່ຽນຂໍ້ມູນຂ່າວສານ ແລະຕໍ່ສູ້ຕ້ານອາດຊະຍາກຳຫຼາຍປະເພດລະຫວ່າງຕຳຫຼວດສອງປະເທດ ແລະມີການຜັນປ່ຽນຫຼາຍຢ່າງ ຢ່າງຕັ້ງໜ້າ.ໄດ້ປະສານສົມທົບກັນກຳແໜ້ນສະພາບການ ແລະສະກັດກັ້ນການເຄື່ອນໄຫວສາສະໜາທີ່ຜິດ

---

[8]ແຂວງກວາງຈິ ໄດ້ຈັດຕັ້ງບັນດາຊຸດຝຶກອົບຮົມລະດັບທິດສະດີການເມືອງ ແລະ ການປົກຄອງຊັ້ນກາງໃຫ້ແກ່ພະນັກງານຂອງ ແຂວງ ສາລະວັນ 70 ທ່ານ.

ກົດໝາຍຢູ່ເສັ້ນຊາຍແດນ. ແຈ້ງໃຫ້ກັນ ແລະກັນທັນການກ່ຽວກັບແຜນຍຸດທະສາດ, ເລລ່ຽມ ແລະແບບວິທີເຄື່ອນໄຫວຕ້ານ ແລະທຳລາຍຂອງບັນດາອິດທິກຳລັງສັດຕູ, ໂດຍສະເພາະແມ່ນພວກປະຕິການທີ່ບໍ່ມີທີ່ອາໄສ. ກຳລັງໜ້າທີ່ຂອງສອງຝ່າຍສົມທົບກັນສະກັດກັ້ນການແຊກຊຶມເຂົ້າຊາຍແດນທີ່ຜິດກົດໝາຍ, ໄປເຮັດໄຮ່ເຮັດນາ, ໄປພັກພາອາໄສ, ພ້ອມກັນກໍ່ສ້າງເສັ້ນຊາຍແດນສັນຕິພາບ, ມິດຕະພາບ, ເປັນແບບຢ່າງ. ສ້າງເງື່ອນໄຂສະດວກໃຫ້ປະຊາຊົນບັນດາແຂວງລຽບຕາມຊາຍແດນແກ້ໄຂຂໍ້ຄົງຄ້າງກັບວຽກງານຂາອອກ, ຂາເຂົ້າ, ເຂື້ອອກເມືອງ ຢູ່ບັນດາດ່ານຊາຍແດນລະຫວ່າງ 2 ປະເທດຢ່າງວ່ອງໄວ. ສອງແຂວງໄດ້ເຮັດວຽກງານໂຄສະນາອົບຮົມເປັນຢ່າງດີເພື່ອຊ່ວຍປະຊາຊົນປະຕິບັດບັນດາສັນຍາ, ລະບຽບຂໍ້ກຳນົດຢູ່ເຂດຊາຍແດນ, ຮັບປະກັນອະທິປະໄຕຜືນແຜ່ນດິນຂອງແຕ່ລະປະເທດ; ຄຽງຄູ່ກັນນັ້ນຕັ້ງໜ້າແກ້ໄຂບັນຫາຊາວອົບພະຍົບເຄື່ອນໄຫວຢ່າງເສລີ ແລະການແຕ່ງງານບໍ່ທະບຽນສົມລົດຮູບແບບແຮກສ່ຽວ "ບ້ານ - ບ້ານ" ໄດ້ນຳມາເຊິ່ງຜົນສະທ້ອນຫຼາຍຢ່າງ. ປະຊາຊົນສອງຝັ່ງຊາຍແດນຕິດພັນກັນ, ຊ່ວຍເຫຼືອ, ໜູນຊ່ວຍເຊິ່ງກັນ ແລະກັນໃນການພັດທະນາເສດຖະກິດ, ຊຸກຍູ້ພົວພັນການຄ້າ, ປະກອບສ່ວນເຂົ້າໃນການລຶບລ້າງຄວາມອຶດຫິວ, ຫຼຸດຜ່ອນຄວາມທຸກຍາກ. ການເຄື່ອນໄຫວແຮກສ່ຽວຂອງບັນດາອົງການ, ໂຮງຮຽນ ແລະບັນດາທ້ອງຖິ່ນຮ່ວມຊາຍແດນສອງແຂວງປະກອບສ່ວນສຳຄັນເຂົ້າໃນການນຳການພົວພັນທາງດ້ານການເມືອງ - ມິດຕະພາບລະຫວ່າງ 2 ຝ່າຍເຂົ້າເຖິງຊີວິດການເປັນຢູ່[9].

---

[9]ແຂວງສາລະວັນ ສ້າງເງື່ອນໄຂອຳນວຍຄວາມສະດວກໃຫ້ເມືອງ ເຮື້ອງ ຮົວາ ແຮກສ່ຽວກັບເມືອງສະໝ້ອຍ, ໂຮງຮຽນວິທະຍາໄລຄູ ກວ່າງຈິ ແຮກສ່ຽວກັບວິທະຍາໄລສາລະວັນ, ຄ້າຍທະຫານ ແຂວງ

ໃນວຽກງານປ້ອງກັນ ແລະຕ້ານການແຜ່ລະບາດຂອງພະຍາດໂຄວິດ-19, ແຂວງກວາງຈິ ໄດ້ເປັນເຈົ້າການສົມທົບກັນຢ່າງຕັ້ງໜ້າ ໜູນຊ່ວຍແຂວງສາລະວັນ ໃນວຽກງານໂຄສະນາເຜີຍແຜ່, ສຶກສາອົບຮົມປະຊາຊົນໃນການສົມທົບກັນປ້ອງກັນ ແລະ ຕ້ານພະຍາດ.ຊີ້ນຳບັນດາກຳລັງປະຕິບັດໜ້າທີ່ຈັດຕັ້ງການລາດຕະເວນ, ກວດກາ, ຄຸ້ມຄອງການເຄື່ອນໄຫວເຂົ້າ-ອອກເມືອງ, ຂາອອກຂາເຂົ້າຂ້າມຊາຍແດນຢ່າງເຂັ້ມງວດ, ຮັບປະກັນວຽກງານປ້ອງກັນ ແລະຕ້ານການແຜ່ລະບາດຂອງພະຍາດ ແລະການໄປມາຄ້າຂາຍສິ້ນຄ້າລະຫວ່າງສອງຝ່າຍ, ຄະນະກຳມະການປະຊາຊົນແຂວງກວາງຈິສົມທົບກັບຄະນະກຳມະການ ອົງການປົກຄອງແຂວງສາລະວັນຈັດຕັ້ງວຽກງານ ແລະມອບຂອງຂວັນໃຫ້ບັນດາກຳລັງທີ່ປະຕິບັດໜ້າທີ່ຢູ່ດ່ານຊາຍແດນລາໄລ ແລະ ເມືອງສະໝ້ວຍ. ປະສານສົມທົບ, ສ້າງເງື່ອນໄຂໃຫ້ນັກສຶກສາລາວເຂົ້າຫວຽດນາມຜ່ານດ່ານຊາຍແດນສາກົນລາໄລ, ດຳເນີນການກັກໂຕເຕົ້າໂຮມຢູ່ສູນຮາກຖານກັກໂຕຂອງແຂວງກວາງຈິ ກ່ອນເຂົ້າຮຽນຢູ່ບັນດາມະຫາວິທະຍາໄລ, ສະຖານທີ່ບຳລຸງສ້າງຢູ່ຫວຽດນາມ. ໜູນຊ່ວຍລະບຽບການເຂົ້າເມືອງໃຫ້ຄົນເຈັບຊາວລາວທີ່ມີຄວາມປາດຖະໜາຢາກໄດ້ຮັບການກວດ ແລະປິ່ນປົວພະຍາດຢູ່ບັນດາໂຮງໝໍຂອງຫວຽດນາມ....

ສາຍພົວພັນມິດຕະພາບທີ່ເປັນມູນເຊື້ອ, ຄວາມສາມັກຄີແບບພິເສດລະຫວ່າງສອງພັກ ແລະສອງລັດ ຫວຽດນາມ-ລາວແມ່ນສາຍພົວພັນມິດຕະພາບແບບພິເສດ ແລະຫາຍາກໃນໂລກ. ແຕ່ລະຜົນງານບັນລຸໄດ້ ຂອງແຂວງກວາງຈິ ແລະແຂວງສາລະວັນ ໃນການກໍ່ສ້າງແລະພັດທະນາປະຈຸບັນນີ້ລ້ວນແຕ່ນຳເອົາ

---

ດ່ານຊາຍແດນລາໄລ, ເມືອງ ດາກຣົງແຣກສ່ຽວກັບຄ້າຍ 71 ຂອງຕຳຫຼວດປ້ອງກັນຊາຍແດນລາໄລ, ເມືອງສະໝ້ວຍ-ສາລະວັນ

ສັນຍາລັກ ຢ່າງເດັ່ນຊັດຂອງການແບ່ງປັນ, ການຮ່ວມມື ແລະການຊ່ວຍເຫຼືອອັນປະເສີດຂອງຄະນະພັກ, ອຳນາດການປົກຄອງ ແລະປະຊາຊົນສອງແຂວງ. ໃນໄລຍະຈະມາເຖິງ, ສອງຝ່າຍໃຫ້ຄຳໝັ້ນສັນຍາຈະສຸມໃສ່ຊີ້ນຳຢ່າງມີປະສິດທິຜົນວຽກງານແກ້ໄຂຄວາມຫຍຸ້ງຍາກຕິດພັນ ເຖິງການເຄື່ອນໄຫວການຄ້າ, ທີ່ສຸດແມ່ນບັນຫາການນຳເຂົ້າ-ສົ່ງອອກແລະແລກປ່ຽນສິນຄ້າກະສິກຳໄປມາຊາຍແດນ. ພ້ອມກັນນັ້ນ, ກໍ່ສ້າງເງື່ອນໄຂໃຫ້ວິສາຫະກິດພາຍໃນ ແລະ ຕ່າງປະເທດສະແຫວງຫາໂອກາດຮ່ວມມື ແລະລົງທຶນໃນບັນດາຂົງເຂດທີ່ສອງແຂວງມີຄວາມສາມາດປົ່ມຊ້ອນຄື: ກະສິກຳ, ພະລັງງານທົດແທນ, ການບໍລິການ Logistics, ການທ່ອງທ່ຽວ...

**1. ການຮ່ວມມືຢູ່ໃນຂົງເຂດປ້ອງກັນຄວາມສະຫງົບ - ປ້ອງກັນຊາດ, ກໍ່ສ້າງເສັ້ນທາງຊາຍແດນສັນຕິພາບ, ມິດຕະພາບ.**

***ເພີ່ມທະວີການຮ່ວມມືດ້ານຄວາມສະຫງົບສຸກ, ດ້ານປ້ອງກັນຊາດ***

ໃນໄລຍະຜ່ານມາ, 2 ຝ່າຍໄດ້ຈັດຕັ້ງກອງປະຊຸມ, ພົບປະເຈລະຈາແລກປ່ຽນບົດຮຽນໃນການຕໍ່ສູ້ຕ້ານອາດຊະຍາກຳຢູ່ເຂດຊາຍແດນ; 2 ຝ່າຍໄດ້ສົ່ງຈົດໝາຍແຈ້ງການ, ຈົດໝາຍແລກປ່ຽນ, ໂທລະສັບກັບ 9.322 ຄັ້ງ ເພື່ອແລກປ່ຽນຂໍ້ມູນຂ່າວສານ ແລະສະພາບການທີ່ກ່ຽວຂ້ອງເຖິງສອງເບື້ອງຊາຍແດນຄື: ສະພາບການເຄື່ອນໄຫວຂອງບັນດາການຈັດຕັ້ງທາງສາສະໜາ, ສະພາບການເຄື່ອນໄຫວຂອງອາດຊະຍາກຳ ຕ່າງໆ, ພິເສດແມ່ນອາດຊະຍາກຳການຄ້າຢາເສບຕິດ, ວັດຖຸລະເບີດ, ອາວຸດຍຸດໂທປະກອນຂ້າມຊາຍແດນ, ສະພາບການເຂົ້າມາເຮັດໄຮ່ນາ, ການອົບພະຍົບຖິ່ນຖານຢ່າງເສລີໂດຍການແຕ່ງງານທີ່ບໍ່ມີທະບຽນສົມລົດກ່ຽວພັນເຖິງ

ສອງຝັ່ງຊາຍແດນ... ບົນພື້ນຖານນັ້ນ, ກຳລັງໜ້າທີ່ຂອງສອງຝ່າຍເປັນເຈົ້າການປະສານສົມທົບກັນ ຜັນຂະຫຍາຍວຽກງານສືບສວນບັນດາຄະດີກ່ຽວກັບຢາເສບຕິດທີ່ສັບສົນ, ສາຍອົງການຈັດຕັ້ງໃຫ້ປະຊາຊົນເຂົ້າ-ອອກເມືອງຜິດກົດໝາຍ, ການຄ້າຂາຍຂົນສົ່ງສິນຄ້າຕ້ອງຫ້າມ, ພ້ອມກັນນັ້ນກໍສະກັດກັ້ນ, ຈຳກັດບັນດາການເຄື່ອນໄຫວ, ເຜີຍແຜ່ສາສະໜາທີ່ຜິດກົດໝາຍຢູ່ບັນດາຖິ່ນຖານຊາຍແດນ.

ໃນຕົ້ນປີ 1998, ອົງການໂອເດຟານ (ອຸບົນ) ທີ່ເຄື່ອນໄຫວຢູ່ຊາຍແດນລາວ-ໄທແບບລັບໆໄດ້ສົ່ງໂຈນ 25 ຄົນ ຈາກໄທໄປແຂວງສາລະວັນ ດ້ວຍເຈດຕະນາສ້າງກຳລັງແລະເຊື່ອມຕໍ່ກັບກຸ່ມໂຈນວັງປາວທີ່ເຫຼືອຢູ່ ເພື່ອຕ້ານການປະຕິວັດຂອງທັງສອງຝ່າຍ. ພົມແດນລະຫວ່າງລາວກັບໄທລັກສົ່ງໂຈນ 25 ຄົນຈາກໄປຢູ່ແຂວງສາລະວັນ ດ້ວຍຄວາມຕັ້ງໃຈ ທີ່ຈະສ້າງກອງກຳລັງ ແລະເຊື່ອມໂຍງກັບກຸ່ມໂຈນວັງປາວທີ່ຍັງຫລົງເຫຼືອຢູ່ ເພື່ອຕໍ່ຕ້ານການປະຕິວັດທັງສອງຝ່າຍພວກມັນໄດ້ກໍ່ເລື່ອງໃຫ້ເກີດໄຟໄໝ້ຕະຫຼາດປາກເຊ, ໃຊ້ລະເບີດພົກທຳລາຍຂົວຊີມັງ (ເມືອງນາຄອນເພັງ); ດຳເນີນດັກຕີບັນດາອົງການການທະຫານ ແລະບັນດາພື້ນຖານເສດຖະກິດຫວຽດນາມຢູ່ລາວ ແລະຂົວເຮືອບັກບາງແຫ່ງຢູ່ທາງຫຼວງແຫ່ງຊາດເລກ 9; ເຂົາເຈົ້າໄດ້ດຳເນີນວາງລະເບີດຝັງດິນໃສ່ລົດໂດຍສານທີ່ບັນທຸກຊາວຫວຽດນາມ ຜ່ານດ່ານຊາຍແດນ, ແລະຫວ່ານໃບປິວບິດເບືອນ ສະພາບການຢູ່ແຂວງທີ່ມີຊາຍແດນຕິດຈອດລະຫວ່າງເມືອງສະໝ້ວຍ (ສາລະວັນ) ແລະເມືອງເຮືອງຮວາ (ກວາງຈີ). ຫຼັງຈາກການສືບສວນ ແລະຕິດຕາມມາເປັນໄລຍະ, ກອງກຳລັງປະກອບອາວຸດຂອງສອງແຂວງໄດ້ດຳເນີນການປິດລ້ອມທຳລາຍລ້າງ, ສ່ວນທີ່ເຫຼືອໄດ້ຫາວິທີຫຼົບໜີກັບຄືນປະເທດໄທ. ແຕ່ປີ 2004 ຫາປີ 2012 ໂດຍໄດ້ຮັບກຳລັງໜູນຈາກອົງການສືບຂ່າວ ຂອງສະຫະລັດແລະໄທ, ປະຕິການພັດຖິ່ນລາວທີ່ຢູ່ໃນອົງການໂອເດຟານ

ຢູ່ແຂວງອຸບົນ (ປະເທດໄທ) ໄດ້ສືບຕໍ່ປັບປຸງກຳລັງ ແຊກຊຶມເຂົ້າໄປໃນແຂວງ ສະຫວັນນະເຂດ, ສາລະວັນແລະຫາວິທີໃຫ້ຖືກຕ້ອງຕາມກົດໝາຍເປີດເຜີຍ ກ່ຽວກັບຫວຽດນາມດ້ວຍວິທີການທ່ອງທ່ຽວ ເພື່ອດຳເນີນການຕ້ານແລະທຳລາຍການປະຕິວັດຂອງສອງຝ່າຍ. ກອງບັນຊາການຕຳຫຼວດ ແຂວງ ກວາງຈິ ແລະກອງບັນຊາການ ປກສ ແຂວງສະຫວັນນະເຂດ ແລະສາລະວັນ ໄດ້ປະສານສົມທົບກັນ ຕິດຕາມ ແລະ ປິດລ້ອມ ໄດ້ທັງໝົດ 69 ຄົນ. ສວຍໃຊ້ພູມີປະເທດທຸລະກັນດານຢູ່ເຂດຊາຍແດນລະຫວ່າງສອງແຂວງ, ພວກອາດຊະຍາກຳນັບມື້ນັບ ເພີ່ມທະວີການເຄື່ອນໄຫວ ສົ່ງຄົນຂ້າມຊາຍແດນຢ່າງຜິດກົດໝາຍ, ຂ້າມຊາຍແດນເພື່ອຂີ້ລັກຊັບສິນ. ໃນປີ 2007, ກອງບັນຊາການທະຫານຊາຍແດນແຂວງກວາງຈິ ແລະຕຳຫຼວດ ຊາຍແດນແຂວງສາລະວັນໄດ້ສົມທົບກັນລ້ອມຈັບຕົວໄດ້ 5 ເປົ້າໝາຍ (ລາວ 03 ຄົນ, ຫວຽດນາມ 02 ຄົນ) ລັກລອບຂົນສິ່ງສິນຄ້າເມື່ອລົດຂ້າມຜ່ານດ່ານຊາຍແດນລາໄລ (ກວາງຈິ) - ລາໄລ (ສາລະວັນ).

ສອງແຂວງຍັງໄດ້ສົມທົບກັນໃນການຄຸ້ມຄອງລະບົບເສັ້ນຊາຍແດນ ແລະຫຼັກໝາຍແຫ່ງຊາດ, ຄຸ້ມຄອງບັນດາອົງການຈັດຕັ້ງ, ເອກະຊົນຄົນຕ່າງປະເທດທີ່ເຂົ້າ ແລະອອກ ເຂດຊາຍແດນດິນຕໍ່ແຜ່ນ, ດ່ານຊາຍແດນ.ກອງບັນຊາການທະຫານປ້ອງກັນຊາຍແດນແຂວງ ແລະອົງການຮັບຜິດຊອບຂອງແຂວງກວາງຈິໄດ້ສົມທົບກັບກອງບັນຊາການທະຫານ ແຂວງສາລະວັນຜັນຂະຫຍາຍເຊັນສັນຍາໃນບົດບັນທຶກພົບປະເຈລະຈາປະຈຳປີກ່ຽວກັບການວຽກງານຄຸ້ມຄອງ, ປົກປັກຮັກສາຊາຍແດນ, ດ່ານຊາຍແດນຖືກຕາມສັນຍາວ່າດ້ວຍລະບຽບຂໍ້ກຳນົດການຄຸ້ມຄອງຊາຍແດນ ແລະດ່ານຊາຍແດນຫວຽດນາມ - ລາວແລະບັນດາຂໍ້ມູນເອກະສານທີ່ເປັນລາຍລັກອັກສອນຕົກລົງຮ່ວມມືຂອງສອງຝ່າຍ. ອຳນາດການປົກຄອງທ້ອງຖິ່ນ

ເມືອງດາກຣິງ, ເຣືອງຮວາແຂວກວາງຈີໄດ້ຈັດຕັ້ງຢ້ຽມຢາມ, ອວຍພອນເນື່ອງໃນໂອກາດວັນງານບຸນໃຫຍ່, ບຸນປີໃໝ່ເປັນປະຈຳ ແລະແບ່ງປັນຄວາມຫຍຸ້ງຍາກ, ໜູນຊ່ວຍ ແລະຊ່ວຍເຫຼືອເຊິ່ງກັນ ແລະກັນກັບເມືອງສະໝ້ວຍ, ແຂວງສາລະວັນ ເມື່ອເກີດໄພພິບັດ, ອັກຄີໄພ.

ກອງບັນຊາການທະຫານຊາຍແດນແຂວງ ໄດ້ສົມທົບກັບພະແນກປ້ອງກັນຄວາມສະຫງົບແຂວງສາລະວັນຜັນຂະຫຍາຍ ເຊັ່ນສັນຍາໃນບົດບັນທຶກພົບປະເຈລະຈາກ່ຽວກັບວຽກງານຮັບປະກັນຄວາມສະຫງົບ, ຄວາມເປັນລະບຽບຮຽບຮ້ອຍ ແລະຕໍ່ສູ້ຕ້ານອາດຊະຍາກຳຢູ່ແນວຊາຍແດນຫວຽດນາມ-ລາວ. ກອງກຳລັງປ້ອງກັນຊາຍແດນຂອງສອງຝ່າຍໄດ້ສົມທົບກັນຢ່າງຕັ້ງໜ້າເພື່ອຕໍ່ສູ້ຕ້ານ, ປ້ອງກັນບັນດາອາດຊະຍາກຳທຸກປະເພດ, ຈັດຕັ້ງການລາດຕະເວນ, ຄວບຄຸມກວດກາການເຄື່ອນໄຫວໄປມາຊາຍແດນ, ດ່ານຊາຍແດນ, ດ່ານຊາຍແດນ; ຊຸກຍູ້ແຮງວຽກງານວິຊາອາຊີບພື້ນຖານ, ຄຸ້ມຄອງຖິ່ນຖານເປົ້າໝາຍ, ສຸມໃສ່ສະກັດກັ້ນ ຕໍ່ສູ້ບັນດາການເຄື່ອນໄຫວສວຍໃຊ້ບັນດາເຜົ່າ, ສາສະໜາເພື່ອທຳລ້າຍລ້າງບັນດາອິດທິກຳລັງສັດຕູ, ການເຄື່ອນໄຫວອາດຊະຍາກຳຢາເສບຕິດ. ປະສານສົມທົບກັບພະແນກປ້ອງກັນຄວາມສະຫງົບແຂວງສາລະວັນຕໍ່ສູ້ ສຳເລັດຮັບຜິດຊອບສະເພາະຄະດີຄະດີຢາເສບຕິດໄດ້ 09 ຄະດີ, ຈັບເປົ້າໝາຍຄົນລາວ 19 ຄົນ. ຍຶດຂອງກາງ ຢາບ້າສັງລວມ (WY) 182.600 ເມັດ, ຢາໄອ 6 ກິໂລກຼາມ, ປືນສັ້ນສຳລັບທະຫານ 02 ກະບອກ, ໜັງສືຜ່ານແດນ 05 ເຫຼັ້ມ, ລົດໃຫຍ່ 03 ຄັນ, ລົດຈັກ 04 ຄັນ, ໂທລະສັບມືຖື 03 ເຄື່ອງ.

ແຂວງສາລະວັນແລະແຂວງກວາງຈີເປັນຈຸດຮ້ອນກ່ຽວກັບສະພາບການຄ້າເຖື່ອນ, ລັກລອບຄ້າ-ຂາຍສິນຄ້າ ຕ້ອງຫ້າມ ແລະການຂ້າມຊາຍແດນທີ່ຜິດກົດໝາຍ.

ການຕໍ່ສູ້ຕ້ານການລັກລອບຄ້າເຖື່ອນ, ຂາຍສິນຄ້າຕ້ອງຫ້າມແລະສະກັດກັ້ນສະພາບການຂ້າມຊາຍແດນທີ່ຜິດກົດໝາຍໄດ້ເກີນຂຶ້ນໄປຢ່າງດຸເດືອດ, ນັກຮົບຫຼາຍຄົນເສຍຊີວິດຢ່າງວິລະຊົນໃນຂະນະປະຕິບັດໜ້າທີ່. ການຕໍ່ສູ້ຮັບຜິດຊອບສະເພາະຄະດີ, ຄະດີກ່ຽວກັບຢາເສບຕິດປະສົບຜົນສຳເລັດ ໄດ້ປະກອບສ່ວນສະກັດກັ້ນສະພາບການຮົ່ວໄຫຼບັນດາສານເສບຕິດຂ້າມຊາຍແດນເຂົ້າ ຫວຽດນາມ. ຂະບວນການຕໍ່ສູ້, ບັນດາການຮັບຜິດຊອບ ສະເພາະຄະດີ, ຄະດີຮັບປະກັນຄວາມຮຽກຮ້ອງ ຕ້ອງການກ່ຽວກັບການເມືອງ, ວິຊາອາຊີບ, ກົດໝາຍແລະສອດຄ່ອງກັບຫຼັກການຂອງການຕ່າງປະເທດ. ເຖິງແມ່ນວ່າໄດ້ພະຍາຍາມຫຼາຍຢ່າງກໍ່ຕາມ, ແຕ່ວ່າສະພາບການຄ້າເຖື່ອນ, ຂົນສິ່ງສິນຄ້າຕ້ອງຫ້າມຂ້າມຊາຍແດນແຂວງສາລະວັນ ແລະ ກວາງຈິຍັງບໍ່ທັນສິ້ນສຸດລົງ. ແຕ່ດ້ວຍໝາກຜົນທີ່ບັນລຸໄດ້ໃນວິວັດການສົມທົບກັນລະຫວ່າງບັນດາກຳລັງປະຕິບັດໜ້າທີ່ຂອງສອງຝ່າຍໄດ້ປະກອບສ່ວນເຮັດໃຫ້ຈົບງາມປອດໃສການພົວພັນດ້ານການຄ້າລະຫວ່າງສອງແຂວງ ແລະ 2 ປະເທດໃຫ້ດີຂຶ້ນ. ປີ 2008, ບັນດາກອງກຳລັງໜ້າທີ່ຂອງແຂວງສາລະວັນ ແລະກວາງຈິ ໄດ້ຄົ້ນພົບ ແລະຈັບໄດ້ 02 ຄະດີການຄ້າເຖື່ອນຂົນສິ່ງຜ່ານດ່ານສາກົນລາໄລ, ສິນຄ້າເຖື່ອນນຳເຂົ້າຕົ້ນຕໍແມ່ນໄມ້ແລະ ສັດຫາຍາກທີ່ຂຸດຄົ້ນຢູ່ບັນດາແຂວງຂອງລາວ. ໃນປີ 2011, ໄດ້ສົມທົບກັບຕຳຫຼວດແຂວງສາລະວັນ, ຫ້ອງການຕຳຫຼວດປ້ອງກັນແລະ ຕ້ານຢາເສບຕິດ ກອງບັນຊາການຕຳຫຼວດແຂວງກວາງຈິ ໄດ້ທຳລາຍສາຍຄ້າຂາຍຢາເສບຕິດຂະໜາດໃຫຍ່ຈາກລາວໄປຫວຽດນາມຜ່ານດ່ານຊາຍແດນລາໄລ, ໄດ້ຈັບກຸມ 8 ເປົ້າໝາຍຄົນຂອງລາວ, ເກັບກູ້ຢາເສບຕິດສັງລວມ 64.800 ເມັດ. ລົດໃຫຍ່ 02

ຄັນ, ມີດເຫຼັກ 01 ອັນ, ດາບໃຫຍ່ 03 ອັນ, ປືນ K59 01 ກະບອກ, ລູກປືນ 05 ລູກ.

***ກໍ່ສ້າງເສັ້ນຊາຍແດນສັນຕິພາບແລະມິດຕະພາບ.***

ເສັ້ນຊາຍແດນລາວ-ຫວຽດນາມຄຸ້ມຄອງໂດຍແຂວງສາລະວັນແລະກວາງຈິມີຄວາມຍາວ 79.388 ກິໂລແມັດ, ຄຸ້ມຄອງແຕ່ຫຼັກໝາຍ 608 ຫາຫຼັກໝາຍ 644 ປະກອບມີ 40 ບ່ອນ/42 ແຫ່ງຫຼັກໝາຍແຫ່ງຊາດແລະເສົາສັນຍານ. ປະຕິບັດເນື້ອໃນມະຕິ 31/NQ-CP ລົງວັນທີ 13 ພຶດສະພາ 2019 ຂອງລັດຖະບານກ່ຽວກັບການກຳນົດເຂດຊາຍແດນບໍລິຫານລະຫວ່າງແຂວງເທື່ອທຽນເຫ້ວ ແລະ ແຂວງກວາງຈິ ຢູ່ 2 ເຂດໂດຍ ປະຫວັດສາດປະໄວ້, ເດືອນ 7/2021 ຄະນະຊີ້ນຳວຽກງານຊາຍແດນແຂວງເທື່ອທຽນເຫ້ວ ແລະແຂວງກວາງຈິ ໄດ້ຈັດຕັ້ງການມອບ-ຮັບ, ຮັບເອົາຄຸ້ມຄອງເສັ້ນຊາຍແດນ ແລະບັນດາຫຼັກໝາຍແຫ່ງຊາດ: 639.640.641.642. 643[10].

---

[10]ປະຕິບັດແຜນນະໂຍບາຍເພີ່ມຄວາມໜາແໜ້ນ ແລະ ບູລະນະລະບົບຫຼັກໝາຍແຫ່ງຊາດຫວຽດນາມ - ລາວ ໂດຍລັດຖະບານ 2 ປະເທດອະນຸມັດຜ່ານ.ບົນຈິດໃຈມິດຕະພາບ ແລະ ການຮ່ວມມືແບບພິເສດຫວຽດນາມ - ລາວ, ແຕ່ປີ 2008 ຮອດທ້າຍປີ 2012, ກວ່າງຈິ ໄດ້ສົມທົບກັບແຂວງສະຫວັນນະເຂດ ແລະ ສາລະວັນ ໄດ້ສຳເລັດວຽກງານເພີ່ມຄວາມໜາແໜ້ນ ແລະ ບູລະນະລະບົບຫຼັກໝາຍແຫ່ງຊາດກັບ 62 ບ່ອນຈຳນວນທັງໝົດ 68 ຫຼັກໝາຍ, ເກີນເປົ້າໝາຍທີ່ໄດ້ວາງອອກໃນແຜນການ.ໃນນັ້ນ, ລະຫວ່າງແຂວງກວາງຈິ ແລະ ແຂວງສາລະວັນ ຢູ່ 31 ບ່ອນ / 33 ຫຼັກໝາຍ (ແຕ່ຫຼັກໝາຍເລກ 608 ຫາ ຫຼັກ 638), ພ້ອມກັນນັ້ນ ປັກເພີ່ມ 37 ເສົາສັນຍານຮອງ / 24 ບ່ອຍ ເພື່ອເຮັດໃຫ້ແຈ້ງທາງຊາຍແດນຢູ່ຈຸດທີ່ມີລັກສະນະພູມສັນຖານຈຳເພາະ.ດັ່ງນັ້ນ,ພາຍຫຼັງສຳເລັດວຽກງານເພີ່ມຄວາມໜາແໜ້ນ ແລະ ບູລະນະລະບົບຫຼັກໝາຍແຫ່ງຊາດແລ້ວ, ເສັ້ນຊາຍແດນລະຫວ່າງ 3 ແຂວງ ກວ່າງຈິ - ສະຫວັນນະເຂດ - ສາລະວັນ ໄດ້ເພີ່ມຄວາມໜາແໜ້ນເພີ່ມຫຼັກໝາຍ 37 ບ່ອນ ແລະ ປັກຫຼັກໝາຍຊາຍແດນ 38 ຫຼັກໝາຍ.

ຮັບຜິດຊອບວຽກງານປ້ອງກັນເສັ້ນທາງຊາຍແດນຢູ່ຝ່າຍລາວແມ່ນຕຳຫຼວດຊາຍແດນ, ຝ່າຍຫວຽດນາມແມ່ນທະຫານປ້ອງກັນຊາຍແດນ. ເພື່ອເຮັດສຳເລັດໜ້າທີ່ ທີ່ພັກ - ລັດ ແລະປະຊາຊົນມອບໝາຍໃຫ້, ຕຳຫຼວດຊາຍແດນ ແຂວງສາລະວັນ ແລະທະຫານປ້ອງກັນຊາຍແດນແຂວງກວາງຈິ ໄດ້ຜ່ານຜ່າຄວາມຫຍຸ້ງຍາກ, ສົມທົບກັນປະຕິບັດຫຼາຍມາດຕະການເພື່ອກໍ່ສ້າງແນວຊາຍແດນລະຫວ່າງ 2 ແຂວງໃຫ້ກາຍເປັນເສັ້ນທາງຊາຍແດນສັນຕິພາບ ແລະ ມິດຕະພາບ.

ເພື່ອກຳແໜ້ນການຜັນແປສະພາບການ ແລະ ແກ້ໄຂບັນດາສະພາວະການເກີດຂຶ້ນສິ່ງຜົນກະທົບກະທົບເຖິງຄວາມໝັ້ນຄົງ ຢູ່ເຂດຊາຍແດນຢ່າງທັນການ, ຕຳຫຼວດຊາຍແດນແຂວງສາລະວັນ ແລະກອງບັນຊາການທະຫານປ້ອງກັນປະເທດກວາງຈິໄດ້ປະຕິບັດລະບົບສ່ອງແສງລາຍງານວຽກແຕ່ລະເດືອນ; ດຳເນີນການລາດຕະເວນສອງຝ່າຍ ແລະຝ່າຍດຽວຕາມແຕ່ລະໄລຍະໆ ຕາມກຳນົດ; ບົວລະບັດ, ສ້ອມແປງບັນດາຈຸດຫຼັກໝາຍທີ່ເສຍຫາຍໃຫ້ທັນເວລາ; ແກ້ໄຂບັນດາປະກົດການເຂົ້າມາເຮັດໄຮ່ນາ, ເຂົ້າມາອາໄສຢ່າງທັນການ; ສະກັດກັ້ນສະພາບການຂ້າມຊາຍແດນຜິດກົດໝາຍ ແລະສົ່ງຄືນຄົນຂ້າມຊາຍແດນຖືກຕາມກົດໝາຍຂອງສອງປະເທດ. ບັນດາຄ້າຍທະຫານ ປ້ອງກັນຊາຍແດນແນວຊາຍແດນດິນຕໍ່ແຜ່ນ ແຂວງກວາງຈິໄດ້ສົມທົບກັບກອງຮ້ອຍທະຫານປ້ອງກັນຊາຍແດນ 511 ຈັດຕັ້ງການລາດຕະເວນສອງຝ່າຍ 391 ຄັ້ງ ໃນຈຳນວນ 9.261 ຖ້ຽວ ຂອງພະນັກງານ-

ນັກຮົບຂອງສອງຝ່າຍເຂົ້າຮ່ວມ. ຜ່ານການລາດຕະເວນຕາມລະບົບເສັ້ນຊາຍແດນ, ໄດ້ຮັກສາບັນດາຫຼັກໝາຍແຫ່ງຊາດຢ່າງໝັ້ນຄົງ, ໄດ້ກວດພົບບັນດາຫຼັກໝາຍແຫ່ງຊາດຖືກທຳລາຍ 12 ແຫ່ງຢ່າງທັນການ ແລະ ໄດ້ສະເໜີບັນດາມາດຕະການແກ້ໄຂ.

ກອງບັນຊາການທະຫານປ້ອງກັນຊາຍແດນແຂວງ ແລະບັນດາອົງການຮັບຜິດຊອບຂອງແຂວງກວາງຈິ ສົມທົບກັບກອງບັນຊາການທະຫານແຂວງສາລະວັນຜັນຂະຫຍາຍເຊັນສັນຍາໃນບົດບັນທຶກພົບປະເຈລະຈາແຕ່ລະປີ ກ່ຽວກັບວຽກງານຄຸ້ມຄອງ, ປົກປັກຮັກສາຊາຍແດນ, ດ່ານຊາຍແດນຖືກຕາມສັນຍາວ່າດ້ວຍລະບຽບຂໍ້ກຳນົດການຄຸ້ມຄອງຊາຍແດນແລະດ່ານຊາຍແດນຫວຽດນາມ - ລາວ ແລະບັນດາຂໍ້ມູນເອກະສານ ທີ່ເປັນລາຍລັກອັກສອນຕົກລົງຮ່ວມມືຂອງສອງຝ່າຍ. ບັນດາຂະແໜງອົງການຮັບຜິດຊອບຂອງສອງປະເທດເປັນປະຈຳ ໄດ້ສົມທົບກັນໂຄສະນາເຜີຍແຜ່, ຂົນຂວາຍປະຊາຊົນຢູ່ເຂດຊາຍແດນໃຫ້ປະຕິບັດຢ່າງດີບັນດາສັນຍາກ່ຽວກັບລະບຽບຂໍ້ກຳນົດການຄຸ້ມຄອງຊາຍແດນ, ຈັດຕັ້ງການລາດຕະເວນ, ກວດກາປົກປັກຮັກສາເສັ້ນຊາຍແດນ, ລະບົບຫຼັກໝາຍແຫ່ງຊາດ.

ອີງໃສ່ສະພາບການສະເພາະຂອງແຕ່ລະທ້ອງຖິ່ນ, ສອງແຂວງໄດ້ເປັນເຈົ້າການ, ປະດິດສ້າງຜັນຂະຫຍາຍຫຼາຍມາດຕະການເພື່ອປົກປັກຮັກສາຄວາມສະຫງົບຢູ່ຊາຍແດນ. ເດືອນມິຖຸນາປີ 2003, ຄະນະພັກແຂວງກວາງຈິວາງແຜນນະໂຍບາຍປະຕິບັດມາດຕະການ “ແຮກສ່ຽວບ້ານ - ບ້ານສອງຝັ່ງຊາຍແດນ”, ຈັດວາງສັບຊ້ອນພະນັກງານທະຫານຊາຍແດນຈຳນວນໜຶ່ງຮັບຜິດຊອບຄວບຫຼາຍຕຳແໜ່ງວຽກງານລັດວຽກງານອຳນາດການປົກຄອງໃນບັນດາເມືອງ, ຕາແສງຊາຍແດນ, ທີ່ສຸດແມ່ນຢູ່ບັນດາເຂດຫ່າງໄກສອກຫຼີກ, ເຂດໄກ, ພ້ອມກັນນັ້ນກໍ່ສ້າງເງື່ອນໄຂໃຫ້ທະຫານປ້ອງກັນຊາຍແດນ ແລະບັນດາທ້ອງຖິ່ນຢູ່ແຂວງ

ຕິດກັບຊາຍແດນສົມທົບກັນຢ່າງແໜ້ນແຟ້ນໃນວຽກງານປ້ອງກັນຄວາມສະຫງົບຊາຍແດນ. ຂະບວນການ "ມະຫາຊົນເຂົ້າຮ່ວມຄຸ້ມຄອງຕີນເອງທາງເສັ້ນຫຼັກໝາຍ, ຮັກສາຄວາມສະຫງົບເປັນລະແບບຮຽບຮ້ອຍຢູ່ບັນດາໝູ່ບ້ານເຂດຊາຍແດນ" ໄດ້ຜັນຂະຫຍາຍ, ຄຽງຂ້າງຮັກສາຄວາມສະຫງົບເປັນລະແບບຮຽບຮ້ອຍແລ້ວ, ຍັງຊ່ວຍເຫຼືອ, ໜູນຊ່ວຍເຊິ່ງກັນ ແລະກັນໃນການພັດທະນາເສດຖະກິດ, ຊຸກຍູ້ພົວພັນການຄ້າ, ລຶບລ້າງຄວາມອຶດຫິວ ແລະຫຼຸດຜ່ອນຄວາມທຸກຍາກ, ປັບປຸງແລະຍົກສູງຊີວິດການເປັນຢູ່ຂອງປະຊາຊົນຢູ່ເຂດຊາຍແດນໃຫ້ດີຂຶ້ນເທື່ອລະກ້າວ. ພ້ອມກັນນັ້ນ, ນີ້ກໍ່ແມ່ນຮູບແບບການສຶກສາໃຫ້ປະຊາຊົນໄດ້ຮັບຮູ້ຢ່າງຄົບຖ້ວນເຖິງຄວາມໝາຍ ແລະລະດັບຄວາມສໍາຄັນຂອງການປະຕິບັດສັນຍາວ່າດ້ວຍລະບຽບຂໍ້ກໍານົດຊາຍແດນ. ມາຮອດປະຈຸບັນ, ລະຫວ່າງແຂວງ ກວາງຈະ -ແຂວງສາລະວັນ ໄດ້ມີ 08/08 ຄູ່ບ້ານແຮກສ່ຽວ ຂຶ້ນກັບ 2 ເມືອງຄື: ເຮືອງຮວາ, ດາກຣົງ, ແຂວງກວາງຈິ ກັບເມືອງສະໝ້ວຍ, ແຂວງສາລະວັນ.

ຜ່ານການເຄື່ອນໄຫວແຮກສ່ຽວ ຂອງກຸ່ມທີ່ອາໄສຢູ່ສອງຝັ່ງຊາຍແດນ, ບັນດາຂັ້ນ, ບັນດາຂະແໜງໄດ້ຈັດຕັ້ງການໂຄສະນາເຜີຍແຜ່ໃຫ້ປະຊາຊົນບັນດາຊົນເຜົ່າສ່ວນໜ້ອຍທີ່ດໍາລົງຊີວິດຢູ່ສອງຝັ່ງເຂດຊາຍແດນກ່ຽວກັບອະທິປະໄຕຜືນແຜ່ນດິນ, ສະຕິຊາດ, ຫຼັກໝາຍຂອງຊາດ, ການປະຕິບັດບັນດາຂໍ້ກໍານົດຂອງສັນຍາວ່າດ້ວຍລະບຽບຂໍ້ກໍານົດຊາຍແດນລະຫວ່າງຫວຽດນາມແລະລາວ, ຫຼີກເວັ້ນສະພາບການເຂົ້າມາເຮັດໄຮ່ນາ. ບັນດາຂໍ້ກໍານົດຂອງກົດໝາຍຂອງແຕ່ລະປະເທດກ່ຽວກັບການເອົາເມຍ, ເອົາຜົວຢູ່ສອງຝັ່ງຊາຍແດນ; ໂຄສະນາເຜີຍແຜ່ກ່ຽວກັບຄວາມໝາຍຂອງວຽກງານເພີ່ມໜາ, ບູລະນະ ລະບົບຫຼັກໝາຍແຫ່ງຊາດ; ພ້ອມກັນນັ້ນ, ໄດ້ເຜີຍແຜ່ຄວາມຮູ້ດ້ານກະສິກໍາ, ປ້ອງກັນພະຍາດ,...

ເທິງເນວຊາຍແດນກວາງຈິ - ສາລະວັນ, ມີ 03 ກົມກອງໄດ້ເຊັນສັນຍາໃນຂໍ້ລະບຽບຂໍ້ກຳນົດແຮກສ່ຽວກັບບັນດາ ກອງກຳລັງປ້ອງກັນຊາຍແດນຕໍ່ໜ້າ. ເນື່ອງໃນໂອກາດງານບຸນໃຫຍ່, ບຸນປີໃໝ່ສືບມາແຕ່ບູຮານປະຈຳຊາດຂອງສອງປະເທດ, ອຳນາດການປົກຄອງ ແລະຍາດພີ່ນ້ອງບ້ານແຮກສ່ຽວຂອງສອງຝ່າຍລ້ວນແຕ່ໄດ້ຈັດຕັ້ງການຢ້ຽມຢາມ, ອວຍພອນ, ຮ່ວມມ່ວນຊື່ນ, ເພີ່ມທະວີຮັດແໜ້ນຄວາມສຳພັນສາມັກຄີ, ມິດຕະພາບອ້າຍນ້ອງ. ບັນດາການເຄື່ອນໄຫວພົບປະ ແລກປ່ຽນວັດທະນະທຳ, ກາຍະບໍລິຫານແລະກິລາລະຫວ່າງບັນດາໝູ່ບ້ານ ໄດ້ຈັດຕັ້ງເປັນປະຈຳ, ປະກອບສ່ວນແນະນຳ, ອະນຸລັກຮັກສາ ເອກະລັກ ວັດທະນະທຳຂອງແຕ່ລະຊົນເຜົ່າ, ປະກອບສ່ວນເຮັດປອດໃສ, ຊາຍແດນ.

ປະກົດການໄປເຮັດໄຮ່ນາ, ໄປພັດພາອາໄສຢູ່ຕາມແຄວຊາຍແດນລະຫວ່າງສອງເບື້ອງໄດ້ຫຼຸດລົງຫຼາຍເມື່ອທຽບໃສ່ແຕ່ກ່ອນແຕ່ບໍ່ທັນສິ້ນສຸດລົງ. ປີ 2011, ປະຊາຊົນບັນດາຕາແສງອາຈາ, ອາຊີງ (ເມືອງສະໝ້ວຍ, ແຂວງສາລະວັນ) ໄດ້ໄປຖາງໄຮ່ເຮັດໄຮ່ຢູ່ຕາແສງອາວາວ (ເມືອງດາກຣົງ, ແຂວງກວາງຈິ), ອາເຍີຍ (ເມືອງເຮືອງຮວາ, ແຂວງກວາງຈິ), ປີ 2013, ປະຊາຊົນ 20 ຄົນຢູ່ຕາແສງອາເຍີຍ (ເມືອງເຮືອງຮວາ, ແຂວງກວາງຈິ) ໄດ້ເຂົ້າໄປເຮັດໄຮ່ນາຈຳນວນໜຶ່ງຢູ່ບາງບ້ານຂອງເມືອງສະໝ້ວຍ (ສາລະວັນ) ເພື່ອເຮັດໄຮ່. ທະຫານປ້ອງກັນຊາຍແດນກວາງຈິ ແລະຕຳຫຼວດຊາຍແດນແຂວງສາລະວັນ ໄດ້ສະກັດກັ້ນສະພາບການດັ່ງກ່າວໂດຍໄວ, ພ້ອມທັງສົມທົບກັບຄະນະກຳມະການປະຊາຊົນບັນດາເມືອງດາກຣົງ, ເຮືອງຮວາ (ກວາງຈິ) ແລະເມືອງສະໝ້ວຍ (ສາລະວັນ) ເພື່ອສ້າງເງື່ອນໄຂຊ່ວຍພີ່ນ້ອງປະຊາຊົນກັບຄືນສູ່ທ້ອງຖິ່ນຂອງຕົນໝັ້ນຄົງການຜະລິດ.

ນອກຈາກນັ້ນ, ບັນດາດ່ານຊາຍແດນ, ທາງນ້ອຍລຽບຕາມແນວຊາຍແດນລະຫວ່າງ 2 ແຂວງ ກໍສ້າງ ຄວາມຫຍຸ້ງຍາກ ບໍ່ໜ້ອຍ ໃຫ້ແກ່ບັນດາກໍາລັງປະຕິບັດໜ້າທີ່ໃນການປ້ອງກັນຄວາມສະຫງົບຊາຍແດນ. ສວຍໂອກາດການຄຸ້ມຄອງຍັງບໍ່ພຽງພໍຂອງບັນດາກໍາລັງປະຕິບັດໜ້າທີ່ ໄດ້ມີຫຼາຍຄົນຂ້າມຊາຍແດນຜິດກົດໝາຍເພື່ອໄປຂຸດຄົ້ນໄມ້, ຊອກຫາໄມ້ເກດສະໜາ ແລະ ທີ່ສຸດແມ່ນການຂົນສິ່ງສິນຄ້າເຖື່ອນ, ສິນຄ້າຕ້ອງຫ້າມ. ອາໄສເຂົ້າການເປີດເຜີຍຂອງໝູ່ຊົນປະຊາຊົນແລະຜ່ານການເຄື່ອນໄຫວລາດຕະເວນສອງຝ່າຍແລະຝ່າຍດຽວ, ແຕ່ປີ 2000 ຮອດປີ 2013, ຕໍາຫຼວດສາລະວັນໄດ້ຈັບຕົວ ແລະສົ່ງຄືນແຂວງກວາງຈິ 270 ຄົນ, ຕໍາຫຼວດກວ່າງຈິໄດ້ຈັບຕົວແລະສົ່ງຄືນໃຫ້ແຂວງສາລະວັນ 82 ຄົນ.

ການປະສານສົມທົບແກ້ໄຂບັນດາຄະດີງານ ທີ່ເກີດຂຶ້ນຢູ່ຊາຍແດນ, ການລາດຕະເວນສອງຝ່າຍໄດ້ຮັກສາ ບັນດາການ ເຄື່ອນໄຫວ ເປັນປະຈໍາ. ມາຮອດປະຈຸບັນ, ບັນດາຄ້າຍທະຫານປ້ອງກັນຊາຍແດນກວາງຈິໄດ້ຮັກສາຢ່າງຈິງຈັງ ການເຄື່ອນໄຫວລວມມອບວຽກ, ແລກປ່ຽນສະພາວະການໄວ້ກັບບັນດາກອງຮ້ອຍປ້ອງກັນຊາຍແດນ, ຄ້າຍ, ປ້ອມຕໍາຫຼວດຂອງແຂວງສາລະວັນມີ 821 ຖ້ຽວໃນຈໍານວນ 9.526 ຖ້ຽວພະນັກງານ, ນັກຮົບສອງຝ່າຍ ເຂົ້າຮ່ວມ. ແຕ່ງຕັ້ງຝຶກອົບຮົມວິຊາອາຊີບໃຫ້ 89 ສະຫາຍຂອງກອງກໍາລັງປ້ອງກັນຊາຍແດນແຂວງສາລະວັນ ໂດຍໄດ້ຮັບການຕີລາຄາສູງຈາກກອງບັນຊາການ ທະຫານແລະພະແນກປ້ອງກັນຄວາມສະຫງົບແຂວງສາລະວັນ. ພ້ອມກັນນັ້ນ, ໄດ້ໃຫ້ການຊ່ວຍເຫຼືອກໍາລັງ ປ້ອງກັນຊາຍແດນ ແລະປະຊາຊົນຢູ່ເຂດຊາຍແດນແຂວງສາລະວັນກັບຜົນບວກງົບປະມານ

ການໃຊ້ຈ່າຍປະມານ 06 ຕື້ດົ່ງ[11]. ໜູນຊ່ວຍໃຫ້ກອງບັນຊາການທະຫານ ແລະ ປ້ອງກັນຄວາມສະຫງົບແຂວງສາລະວັນ, ເຄື່ອງມືໜູນຊ່ວຍຮັບໃຊ້ໃນໜ້າທີ່ ການລາດຕະເວນ, ຄຸ້ມຄອງປ້ອງກັນຊາຍແດນ, ຕໍ່ສູ້ຕ້ານ ແລະປ້ອງກັນ ອາດຊະຍາກຳມີມູນຄ່າປະມານ 1,9 ຕື້ດົ່ງ[12]. ປະຕິບັດຕົກລົງກັນລະຫວ່າງລັດຖະບານທັງສອງປະເທດຫວຽດນາມ ແລະລາວ ໄດ້ເຊັນສັນຍາໃນວັນທີ 8 ກໍລະກົດ 2013 ກ່ຽວກັບການແກ້ໄຂບັນຫາຕັ້ງຖິ່ນຖານຊາວອົບພະຍົບໂດຍເສລີ ແລະແຕ່ງງານໂດຍບໍ່ມີທະບຽນສົມລົດຢູ່ເຂດຊາຍແດນຂອງສອງປະເທດ, ມາຮອດປະຈຸບັນ, ປະທານປະເທດຫວຽດນາມ ໄດ້ລົງນາມໃນມະຕິຕົກລົງກ່ຽວກັບການເຂົ້າສັນຊາດ ຫວຽດນາມໃຫ້ຊາວລາວ 502 ຄົນທີ່ອົບພະຍົບແບບເສລີ, ແຕ່ງງານບໍ່ມີທະບຽນສົມລົດຈາກແຂວງສາລະວັນມາແຂວງກວາງຈີ[13].

---

[11]ປະກອບມີ: ຢ້ຽມຢາມ, ມອບຂອງຂວັນໃນວັນງານບຸນ, ວັນປີໃໝ່, ວັນສ້າງຕັ້ງ ຈຳນວນມູນຄ່າ 781 ລ້ານດົ່ງ; ສະໜອງຄອມພິວເຕີ ສ່ວນບຸກຄົນ 01 ຊຸດໃຫ້ທະຫານປ້ອງກັນຊາຍແດນ 511; ໜູນຊ່ວຍສະບຽງອາຫານ, ສະບຽງວັດຖຸອຸປະກອນປິ່ນປົວພະຍາດເພື່ອປ້ອງກັນ ແລະ ຄວບຄຸມໂລກລະບາດໂຄວິດ-19, ຜ່ານຜ່າຜົນຮ້າຍຈາກຝົນ, ໄພນ້ຳຖ້ວມໃນປີ 2020 ທີ່ເກີດຂຶ້ນ ດ້ວຍມູນຄ່າປະມານກວ່າ 2 ຕື້ດົ່ງ.

[12]ຈັດຕັ້ງການໄປກວດພະຍາດໂດຍບໍ່ເສຍຄ່າ, ມອບຂອງຂວັນໃຫ້ປະຊາຊົນ 98.000 ເທື່ອຄົນ ແລະແຈກຢາຍຢາຕ້ານໄຂ້ຍຸງໃຫ້ປະຊາຊົນ 6.145 ເທື່ອຄົນຢູ່ບັນດາບ້ານຕິດຊາຍແດນຂຶ້ນກັບບັນເມືອງສະໜ້ອຍ, ລວມມູນຄ່າປະມານ 02 ຕື້ດົ່ງ. ນອກຈາກນັ້ນ, ແຕ່ປີ 2016 ມາຮອດປະຈຸບັນບັນດາຄ້າຍທະຫານຊາຍແດນ ເທິງເສັ້ນຊາຍແດນຫວຽດນາມ - ລາວ ໄດ້ໜູນຊ່ວຍນັກຮຽນລາວ 10 ຄົນ ພາຍໃຕ້ໂຄງການ “ຍົກສູງເດັກນ້ອຍເຂົ້າໂຮງຮຽນ” ໃນແຕ່ລະເດືອນ ໜູນຊ່ວຍນັກຮຽນ 500.000 ດົ່ງ/01 ຄົນ ຜູ້ປະສົບກັບສະພາບການ ຫຍຸ້ງຍາກ, ບົນຂຶ້ນໃນການຮຽນ.

[13]ຫົວໜ້າຄະນະຜູ້ແທນເຂດຊາຍແດນ ສອງປະເທດ ຫວຽດນາມ ແລະ ລາວ ໄດ້ອະນຸມັດບັນຊີລາຍຊື່ຜູ້ອົບພະຍົບເສລີ ແລະ ແຕ່ງງານບໍ່ມີທະບຽນສົມລົດຢູ່ເຂດຊາຍແດນໄດ້ຮັບອະນຸຍາດໃຫ້ຢູ່ບ່ອນພັກພາອາໄສ. ລະອຽດມີ 42 ຄົວເຮືອນ/236 ຄົນທີ່ອົບພະຍົບຢ່າງເສລີ ແລະ 45 ກໍລະນີທີ່ແຕ່ງງານບໍ່ມີທະບຽນສົມລົດດຳລົງຊີວິດຢູ່ຕາແສງ ອາເຍີຍ, ເມືອງ ເຮື້ອງ ຮົວາ, ແຂວງ ກວ່າງຈີ; 42

2.ການຮ່ວມມືໃນຂົງເຂດເສດຖະກິດ

ສືບທອດ ແລະເສີມຂະຫຍາຍຄວາມສຳພັນມິດຕະພາບທີ່ເປັນມູນເຊື້ອ, ຄວາມຈິງຮັກພັກດີ, ໂປ່ງໃສ, ຄວາມສາມັກຄີແບບພິເສດລະຫວ່າງສອງພັກ, ສອງລັດ, ສອງຊົນເຜົ່າຫວຽດນາມ - ລາວ, ໃນຊຸມປີມໍ່ໆມານີ້, ແຂວງກວາງຈິ ແລະ ແຂວງສາລະວັນຍາມໃດກໍຄຽງບ່າຄຽງໄຫຼ່, ຮ່ວມມືໃນຫຼາຍຂົງເຂດ, ປະກອບສ່ວນເຮັດເສີມຂະຫຍາຍສາຍພົວພັນມິດຕະພາບທີ່ເປັນມູນເຊື້ອແບບພິເສດຫວຽດນາມ - ລາວຂຽວສົດງົດງາມຕະຫຼອດໄປ.

- ການຮ່ວມມືໃນຂົງເຂດກະສິກຳແລະປ່າໄມ້

ໃນທ້າຍສະຕະວັດທີ 20, ເຖິງແມ່ນວ່າຂະແໜງອຸດສາຫະກຳ, ກໍ່ສ້າງ, ຄົມມະນາຄົມຂົນສົ່ງແລະການຄ້າແຂວງສາລະວັນ ແລະກວາງຈິໄດ້ມີຄວາມພັດທະນາເປັນທີ່ຍອມຮັບແຕ່ກະສິກຳ ແລະປ່າໄມ້ຍັງຄົງເປັນທ່າແຮງ ແລະ ເປັນຖານຄ້ຳຊູຂອງເສດຖະກິດ. ການຮ່ວມມືໃນຂົງເຂດກະສິກຳ ແລະປ່າໄມ້ມີບົດບາດສຳຄັນໃນການຮ່ວມມືດ້ານເສດຖະກິດ.

* ໃນຂົງເຂດກະສິກຳ, ແຂວງກວ່າງຈິໄດ້ລົງທຶນງົບປະມານການໃຊ້ຈ່າຍ ແລະສົ່ງນັກຊ່ຽວຊານໄປສົມທົບ ການຈັດຕັ້ງປະຕິບັດວາງຜັງທີ່ດິນຢູ່ບັນດາເມືອງຕະໂອ້ຍ, ສະໝ້ວຍ, ຊ່ວຍໃຫ້ບັນດາເມືອງດັ່ງກ່າວສຳເລັດໂຄງການວາງແຜນຜັງ

---

ຄອບຄົວ/86 ຄົນ ອົບພະຍົບຢ່າງເສລີ ແລະ 49 ກໍລະນີທີ່ກໍລະນີທີ່ແຕ່ງງານບໍ່ມີທະບຽນສົມລົດດຳລົງຊີວິດຢູ່ເມືອງ ດາກຣົງ ແຂວງ ກວ່າງຈິ; 08 ຄອບຄົວ/46 ຄົນອົບພະຍົບຢ່າງເສລີ ແລະ 112 ກໍລະນີທີ່ແຕ່ງງານບໍ່ມີທະບຽນສົມລົດດຳລົງຊີວິດຢູ່ບາງຕາແສງຊາຍແດນອື່ນໆຂຶ້ນກັບເມືອງ ເຮື້ອງ ຮ໊ວາ ແຂວງ ກວ່າງຈິ.

ທີ່ດິນປູກຝັງ. ເພື່ອປະຕິບັດສາທິດໂຄງການການພັດທະນາເສດຖະກິດຄອບຄົວຕາມຮູບແບບໃໝ່ຢູ່ ບັນດາເມືອງ ສະໝ້ວຍ, ຕະໂອ້ຍ, ປີ 2001, ຂະແໜງກະສິກຳຂອງແຂວງກວາງຈິ ໄດ້ສົ່ງມອບໃຫ້ແຂວງສາລະວັນ 1 ໂຕນ ພັນຖົ່ວດິນ ແລະ ໄດ້ສົ່ງພະນັກງານວິຊາເຕັກນິກປູກຝັງໄປແນະນຳເຕັກນິກການປູກ, ເບິ່ງແຍງຖົ່ວດິນຢູ່ຟາມພັນໜອງແດນ. ປີ 2012, ແຂວງກວາງຈິໄດ້ລົງທຶນກໍ່ສ້າງສວນກ້າເບ້ຍໄມ້, ຟາມພັນຢູ່ເມືອງຕະໂອ້ຍເພື່ອສະໜອງແນວພັນພືດ ແລະລ້ຽງສັດໃຫ້ທ້ອງຖິ່ນ.

- ເຄື່ອນໄຫວຊ່ວຍເຫຼືອ, ການຮ່ວມມື ແລະ ການລົງທຶນກໍ່ໄດ້ຮັບການເພີ່ມທະວີຂຶ້ນກວ່າແຕ່ກ່ອນ.

ໂດຍໄດ້ຮັບຄວາມເຫັນດີເຫັນພ້ອມຈາກຂະແໜງກະສິກຳຂອງແຂວງສາລະວັນ, ຂະແໜງອຸປະກອນ ອຸດສາຫະກຳ ກະສິກຳກວາງຈິໄດ້ເປີດຕົວແທນຢູ່ບາງເມືອງຂອງແຂວງສາລະວັນເພື່ອສະໜອງຝຸ່ນ, ຢາປາບສັດຕູພືດ ແລະຢາສັດຕະວະແພດໃຫ້ແກ່ຊາວກະສິກອນ. ດ້ວຍຄວາມຊ່ວຍເຫຼືອດ້ານວິຊາສະເພາະຂອງຂະແໜງສັດຕະວະແພດກວາງຈິ, ບັນດາເມືອງຕະໂອ້ຍ, ສະໝ້ວຍໄດ້ຄວບຄຸມພະຍາດປາກເປື່ອຍລົງເລັບຂອງຄວາຍງົວທັນການ; ຮັບປະກັນຄວາມໝັ້ນຄົງຂອງການຜະລິດກະສິກຳ.

ເພື່ອປະກອບສ່ວນຊ່ວຍພັດທະນາຊົນລະປະທານແຂວງສາລະວັນ, ບໍລິສັດຊົນລະປະທານແຂວງກວາງຈິໄດ້ລົງທຶນກໍ່ສ້າງອ່າງເກັບນ້ຳ ແລະເໝືອງຟາຍສົ່ງນ້ຳຢູ່ເມືອງສະໝ້ວຍໃນປີ 2001. ບັນດາໂຄງການນີ້, ໄດ້ປະກອບສ່ວນ ເຂົ້າໃນການເປີດກ້ວາງເນື້ອທີ່ດິນປູກຝັງ ແລະຍົກສູງສະມັດຕະພາບເຂົ້າໃຫ້ແຂວງສາລະວັນ.

ໃນຂົງເຂດປ່າໄມ້, ການຮ່ວມມືລະຫວ່າງແຂວງກວາງຈິກັບແຂວງສາລະວັນໄລຍະ 2000-2014 ສືບຕໍ່ຊຸກຍູ້ຕາມ 2 ທິດຄື: ການຂຸດຄົ້ນ, ປຸງແຕ່ງ ແລະການ

ຂົນສົ່ງເຄື່ອງປ່າຂອງດົງປ່ເພື່ອສົ່ງອອກ; ແຜນຜັງ, ການປູກແລະປົກປັກຮັກສາປ່າໄມ້. ຄຽງຂ້າງບັນດາການເຄື່ອນໄຫວວຽກງານການຊ່ວຍເຫຼືອ ແລະການຊ່ວຍເຫຼືອດ້ານງົບປະມານການໃຊ້ຈ່າຍ, ວິຊາເຕັກນິກໃຫ້ແກ່ແຂວງສາລະວັນແລ້ວ, ການຮ່ວມມືລະຫວ່າງສອງຝ່າຍ ໃນໄລຍະນີ້ຕົ້ນຕໍແມ່ນໄດ້ດໍາເນີນດ້ວຍບັນດາຮູບການຮ່ວມທຸລະກິດ, ຮ່ວມກັນ ແລະການລົງທຶນໂດຍກົງ.

ໃນປີ 2001, ບໍລິສັດຂຸດຄົ້ນເຄື່ອງປ່າຂອງດົງກວ໋າງຈິໄດ້ຊຸກຍູ້ການຮ່ວມທຸລະກິດ, ຮ່ວມກັນ ແລະການຮ່ວມມືລົງທຶນ ກັບບັນດາວິສາຫະກິດແຂວງສາລະວັນເພື່ອຂຸດຄົ້ນບັນດາຊະນິດໄມ້ມີຄ່າ.

ປີ 2005, ບໍລິສັດການຄ້າກວາງຈິ ໄດ້ລົງທຶນກໍ່ສ້າງໂຮງງານປຸງແຕ່ງເຄື່ອງປ່າຂອງດົງວັດຖຸດິບໄມ້ໄຜ່, ໄມ້ຢູ່ເມືອງສະໝ້ວຍ. ໃນຂົງເຂດຂົນສົ່ງໄມ້ສົ່ງອອກ, ມີຫຼາຍບໍລິສັດ, ໂຮງງານຂົນສົ່ງຂອງແຂວງກວາງຈິ ໄດ້ເຊັນໃນສັນຍາຂົນສົ່ງໄມ້ກົມສົ່ງອອກໃຫ້ບັນດາວິສາຫະກິດຂອງແຂວງສາລະວັນດ້ວຍຈໍານວນໄມ້ນັບພັນຕາແມັດຕໍ່ປີ. ຈາກບັນດາສະຖານທີ່ຂຸດຄົ້ນຢູ່ລາວ, ໄມ້ໄດ້ຖືກຂົນສົ່ງຕາມທາງຫຼວງແຫ່ງຊາດເລກ 9 ແລະເສັ້ນທາງ 15B ໂຮມເມືອໄວ້ຍັງທ່າກໍາປັ່ນເກືອຫວຽດ (ກວາງຈິ), ຫຼັງຈາກນັ້ນ, ສົ່ງອອກໄປຍັງຈີນ, ຍີ່ປຸ່ນ, ສ.ເກົາຫຼີ, ໄຕ້ຫວັນແລະປະເທດອື່ນໆໃນໂລກດ້ວຍເສັ້ນທາງທະເລ.

ດ້ວຍບັນດານະໂຍບາຍບຸລິມະສິດ, ພິເສດສົ່ງເສີມບັນດາວິສາຫະກິດກວາງຈິຊຸກຍູ້ການຮ່ວມມືໃນຂົງເຂດປ່າໄມ້ຂອງແຂວງສາລະວັນ, ບັນດາວິສາຫະກິດແຂວງກວາງຈິໄດ້ຜັນຂະຫຍາຍຫຼາຍໂຄງການຮ່ວມມືລົງທຶນປູກ ແລະ ປົກປັກຮັກສາປ່າໄມ້ຢູ່ເມືອງຕະໂອ້ຍ, ສະໝ້ວຍ. ໃນປີ 2001, ດ້ວຍການຊ່ວຍເຫຼືອດ້ານວິຊາ

ສະເພາະ ແລະ ໜູນຊ່ວຍດ້ານງົບປະມານ ການໃຊ້ຈ່າຍ, ວິຊາເຕັກນິກຂອງແຂວງກວາງຈິ, ຂະແໜ່ງປ່າໄມ້ ແຂວງສາລະວັນ ໄດ້ດໍາເນີນການສໍາຫຼວດ, ວາງແຜນຜັງປ່າ ແລະຈັດຕັ້ງມອບເນື້ອທີ່ດິນ ແລະປ່າໃຫ້ບັນດາຄອບຄົວຊາວກະສິກອນຄຸ້ມຄອງ.

ປີ 2014, ບໍລິສັດຢາງພາລາກວາງຈິໄດ້ຮ່ວມກັນກັບຂະແໜງປ່າໄມ້ແຂວງສາລະວັນປະຕິບັດໂຄງການປູກຢາງພາລາດ້ວຍເນື້ອທີ່ 930 ເຮັກຕາ, ຍອດຕົ້ນທຶນລົງທຶນ 203,1 ຕື້ດົ່ງ (ມາຮອດປະຈຸບັນ, ບໍລິສັດໄດ້ປູກ ແລະ ເບິ່ງແຍງດູແລໄດ້ 341,78 ເຮັກຕາ; ບັນລຸ 36,76% ຂອງແຜນການ. ອັນດັບກ້າວຖັດມາຈໍານວນຕົ້ນທຶນລົງທຶນສະສົມໃຫ້ໂຄງການຮອດປັດຈຸແມ່ນ 47,5 ຕື້ດົ່ງ).

ປະຕິບັດແຜນຊຸກຍູ້ການລົງທຶນຂອງຫວຽດນາມເຂົ້າລາວຮອດ ປີ 2025, ບັນດາການເຄື່ອນໄຫວຮ່ວມມື ໃນການປູກປ່າ ວັດຖຸດິບແລະກໍ່ສ້າງໂຮງງານປຸງແຕ່ງໄມ້ປ່າທີ່ປູກເພື່ອຮັບໃຊ້ໃຫ້ແກ່ຂະແໜງອຸດສາຫະກໍາປຸງແຕ່ງໄມ້ຂອງ 2 ແຂວງໄດ້ຮັບການຜັນຂະຫຍາຍ. ໃນນັ້ນ, ແຂວງສາລະວັນເຫັນດີສະໜັບສະໜູນບັນດາວິສາຫະກິດກວາງຈິຮ່ວມມືຊຸກຍູ້ການລົງທຶນປູກປ່າ ແລະກໍ່ສ້າງໂຮງງານປຸງແຕ່ງໄມ້ປ່າທີ່ປູກຢູ່ແຂວງສາລະວັນຕາມຮູບແບບ 2+3; ແຂວງກວາງຈິໜູນຊ່ວຍທຶນຮອນ, ເຕັກນິກ, ເບ້ຍໄມ້ເພື່ອປູກແລະເບິ່ງແຍງດູແລປ່າທີ່ປູກ, ຮັບຊື້ໄມ້ຈາກປ່າທີ່ປູກ; ບຸລິມະສິດການນໍາໃຊ້ແຫຼ່ງແຮງງານແລະການຜະລິດ ເບ້ຍໄມ້ກັບທີ່. ພ້ອມກັນນັ້ນ, ສອງຝ່າຍໄດ້ສົມທົບກັນຜັນຂະຫຍາຍບັນດາມາດຕະການໂຄສະນາເຜີຍແຜ່, ປຸກລະດົມປະຊາຊົນເຂົ້າໃຈແລະສະໜັບສະໜູນບັນດາວິສາຫະກິດຂອງສອງແຂວງໃນຂະບວນການປູກຝັງ, ເບິ່ງແຍງ, ປົກປັກຮັກສາ ແລະຂຸດຄົ້ນປ່າປູກ ; ສ້າງເງື່ອນໄຂສະດວກໃຫ້ແກ່ການພັດທະນາເສດຖະກິດ ແລະຍົກລະດັບຊີວິດ

ການເປັນຢູ່ຂອງປະຊາຊົນເທິງຖິ່ນຖານແຂວງສາລະວັນ. ພ້ອມກັນນັ້ນ, ກວາງຈີຍັງໜູນຊ່ວຍການບຳລຸງສ້າງພະນັກງານ, ພັດທະນາຊັບພະຍາກອນມະນຸດ ແລະ ແລກປ່ຽນປະສົບການໃນຂົງເຂດກະສິກຳ ແລະປ່າໄມ້ໃຫ້ແຂວງສາລະວັນ.

ສາມາດເວົ້າໄດ້ວ່າການຮ່ວມມືດ້ານປ່າໄມ້ລະຫວ່າງສອງແຂວງ ບໍ່ພຽງແຕ່ປະກອບສ່ວນສ້າງເງື່ອນໄຂສະດວກຊ່ວຍໃຫ້ແຂວງສາລະວັນຊຸກຍູ້ການຂຸດຄົ້ນແຫຼ່ງຊັບພະຍາກອນປ່າໄມ້ເພື່ອພັດທະນາເສດຖະກິດ, ປົກປັກຮັກສາ ແລະພັດທະນາແຫຼ່ງຊັບພະຍາກອນອັນລ້ຳຄ່າເທົ່ານັ້ນ, ແຕ່ຍັງຊ່ວຍໃຫ້ແຂວງກວາງຈີສ້າງວຽກເຮັດງານທຳໃຫ້ນັບພັນຄົນຊາວຜູ້ອອກແຮງງານ.

ໃນປີ 2020 ແລະ 2021, ການລະບາດຂອງພະຍາດໂຄວິດ-19 ໄດ້ສົ່ງຜົນກະທົບຢ່າງກວ້າງຂວາງແລະເລິກເຊິ່ງເຖິງທຸກປະເທດໃນທົ່ວໂລກ. ຢູ່ແຂວງກວ່າງຈີ, ບັນດາການເຄື່ອນໄຫວພາຍນອກ, ພາຍໃນນັ້ນບັນດາການເຄື່ອນໄຫວຮ່ວມມືກັບບັນດາແຂວງເພື່ອນລາວທີ່ມີຊາຍແດນຕິດກັບກວາງຈີ ໄດ້ຮັບການປັບປຸງ ແລະຈັດຕັ້ງປະຕິບັດໃຫ້ແທດເໝາະກັບເງື່ອນໄຂ ການປ້ອງກັນ, ຕ້ານພະຍາດໃນສະພາບການໃໝ່.ການນຳບັນດາແຂວງ, ທ້ອງຖິ່ນທີ່ມີຊາຍແດນຮ່ວມ, ບັນດາອົງການຈັດຕັ້ງມະຫາຊົນ, ບັນດາກົມ, ກົມກອງ ແລະບັນດາຂະແໜງການຂອງ 2 ຝ່າຍຍາມໃດກໍ່ຮັກສາລະບອບການແລກປ່ຽນ ແລະ ສົມທົບກັນຢ່າງແໜ້ນແຟ້ນ ແລະປະສົບຜົນສຳເລັດໃນການຮ່ວມມືຢ່າງມີປະສິດທິຜົນ ແລະ ແທດຈິງ.

- ການຮ່ວມມືໃນຂົງເຂດອຸດສາຫະກຳ, ກໍ່ສ້າງ, ຄົມມະນາຄົມ-ຂົນສົ່ງ

* ອຸດສາຫະກຳ

ແຕ່ປີ 1989 ຮອດປີ 2014, ຄຽງຄູ່ກັບການໜູນຊ່ວຍ ແລະການຊ່ວຍເຫຼືອແຂວງສາລະວັນ, ກວາງຈີ ໄດ້ຊຸກຍູ້ການຮ່ວມມືດ້ານການລົງທຶນ ແລະການຮ່ວມມື

ໃນຂົງເຂດອຸດສາຫະກຳ. ໃນຊຸມປີ 1991 ຫາປີ 1998, ໂດຍນະໂຍບາຍລົງທຶນອອກຕ່າງປະເທດຂອງຫວຽດນາມ ຍັງຈຳນວນໜຶ່ງບໍ່ພຽງພໍ, ແຫຼ່ງທຶນຂອງບັນດາວິສາຫະກິດຍັງມີຄວາມຈຳກັດ, ສະນັ້ນ, ສອງແຂວງຍັງຄົງດຳເນີນບັນດາໂຄງການຂະໜາດນ້ອຍເປັນຕົ້ນຕໍ.ໂດດເດັ່ນແມ່ນໂຮງງານດິນຈີ່ເຖິງແມ່ນວ່າແຂວງກວາງຈິໄດ້ລົງທຶນຍົກລະດັບໂຮງງານດິນຈີ່ ແລະກະເບື້ອງຢູ່ເມືອງສາລະວັນ.

ນັບແຕ່ປີ 1999 ເປັນຕົ້ນມາ, ການເຄື່ອນໄຫວລົງທຶນຜະລິດແລະເຮັດທຸລະກິດຂອງວິສາຫະກິດກວາງຈິ ຢູ່ແຂວງສາລະວັນໄດ້ພັດທະນາຢ່າງວ່ອງໄວ, ຕົ້ນທຶນໃນການລົງທຶນກໍ່ເພີ່ມຂຶ້ນກວ່າທຽບໃສ່ໄລຍະກ່ອນ. ຂະແໜງອຸດສາຫະກຳໄຟຟ້າ ແລະນ້ຳປະປາກວາງຈິ ລົງທຶນຍົກລະດັບໂຮງງານສະໜອງນ້ຳສະອາດໃຫ້ແຂວງສາລະວັນ…

ບົນຈິດໃຈຂອງສັນຍາວ່າດ້ວຍການຮ່ວມມື ກ່ຽວກັບພະລັງງານໄຟຟ້າທີ່ລັດຖະບານສອງປະເທດໄດ້ເຊັນ ສັນຍາປີ 1998, ຂະແໜງພະລັງງານໄຟຟ້າ ກວ່າງຈິໄດ້ລົງທຶນຍົກລະດັບ, ສ້ອມແປງ ແລະກໍ່ສ້າງໂຄງການໄຟຟ້ານ້ຳຕົກຈຳນວນໜຶ່ງ, ພ້ອມກັນນັ້ນກໍ່ສ້າງສາຍສົ່ງໄຟຟ້າຈຳນວນໜຶ່ງ. ສະໜອງໄຟຟ້າໃຫ້ແຂວງສາລະວັນ. ປີ 2001, ຂະແໜງພະລັງງານໄຟຟ້າກວ່າງຈິໄດ້ລົງທຶນກໍ່ສ້າງສາຍສົ່ງ 35 KV ຈາກດາກຣົງຫາດ່ານຊາຍແດນແຫ່ງຊາດລາໄລ; ໄດ້ສະໜອງໄຟຟ້າຮອດເມືອງຕະໂອ້ຍ, ສະໝ້ວຍ.

* ກ່ຽວກັບການກໍ່ສ້າງ: ປີ 2005, ກວາງຈິໄດ້ລົງທຶນ 1 ຕື້ດົ່ງເພື່ອກໍ່ສ້າງເຮືອນພັກ, ປ້ອມກວດກາດ່ານຊາຍແດນແຫ່ງຊາດລາໄລ;ລົງທຶນ 960 ລ້ານດົ່ງກໍ່ສ້າງໂຮງຮຽນໃຫ້ແຂວງສາລະວັນ.ປີ2006, ກວາງຈິໄດ້ລົງທຶນ 300 ລ້ານດົ່ງເພື່ອ

ສ້າງປ້ອມກວດກາດ່ານຊາຍແດນ ແດນວິໄລຢູ່ເມືອງນອງ. ກວາງຈີ ໄດ້ລົງທຶນ 600 ລ້ານດົ່ງ ເພື່ອກໍ່ສ້າງໂຮງຮຽນປະຖົມ ເມືອງ ສະໝ້ວຍ.ໃນປີ 2011 ຫາປີ 2013, ແຂວງກວາງຈີ ໄດ້ລົງທຶນ 6 ຕື້ດົ່ງໃຫ້ແຂວງສາລະວັນ ເພື່ອກໍ່ສ້າງໂຮງຮຽນກິນນອນຊົນເຜົ່າ; ວິສາຫະກິດເອກະຊົນຫຼາຍແຫ່ງຂອງແຂວງກວ່າງຈີກໍຊຸກຍູ້ການລົງທຶນກໍ່ສ້າງຫຼາຍໂຄງການຊີວິດການເປັນຢູ່ທາງດ້ານວັດຖຸ ແລະຈິດໃຈຂອງປະຊາຊົນວຽກເຮັດງານທຳອື່ນໆຢູ່ຫຼາຍທ້ອງຖິ່ນຂອງແຂວງສາລະວັນ.

ໃນໄລຍະ 2016 – 2022, ແຂວງກວ່າງຈີ ໄດ້ຫັກງົບປະມານການໃຊ້ຈ່າຍ, ໜູນຊ່ວຍແຂວງສາລະວັນກ່ວາ 22,5 ຕື້ດົ່ງ; ໃນນັ້ນ, 06 ຕື້ດົ່ງໃນໄລຍະ 2017-2019 ເພື່ອໜູນຊ່ວຍກໍ່ສ້າງສະຖານີສາທາລະນະສຸກບ້ານຕາລໍ ແລະ ໂຮງຮຽນມັດທະຍົມຕອນຕົ້ນ ຕາລຸງກາງ; 06 ຕື້ດົ່ງໃນໄລຍະປີ 2020-2022 ເພື່ອກໍ່ສ້າງຂົວທາງເບຕົງເສີມເຫຼັກຂ້າມຫ້ວຍອັນຕອງ ແລະ ໂຮງຮຽນມັດທະຍົມຕອນຕົ້ນບ້ານປັນໄຕໃຫຍ່.

ແຕ່ປີ 1989 ຫາປີ 2014, ໃນຂົງເຂດຄົມມະນາຄົມຂົນສົ່ງ, ສອງແຂວງໄດ້ສຸມໃສ່ການຍົກລະດັບ, ສ້ອມແປງ ແລະກໍ່ສ້າງບັນດາໂຄງການການ ຄົມມະນາຄົມ, ທັງຊຸກຍູ້ການຮ່ວມມືດ້ານການຂົນສົ່ງສິນຄ້າ. ຂະແໜງການຄົມມະນາຄົມແຂວງກວາງຈີໄດ້ໃຫ້ຄວາມສຳຄັນລົງທຶນຍົກລະດັບ ແລະສ້າງບັນດາສາຍການຄົມມະນາຄົມທີ່ສຳຄັນຕິດຕໍ່ສອງຝັ່ງ ເພື່ອສ້າງເງື່ອນໄຂຄວາມສະດວກໃຫ້ແຂວງສາລະວັນຊຸກຍູ້ການນຳເຂົ້າ ແລະສົ່ງອອກສິນຄ້າໄປຕ່າງປະເທດ ແລະ ແຂວງກວາງຈີລົງທຶນຜະລິດ, ເຮັດທຸລະກິດສິນຄ້າຢູ່ບັນດາທ້ອງຖິ່ນຂອງລາວ.

ຂະແໜງການຄົມມະນາຄົມກວາງຈີໄດ້ລົງທຶນຍົກລະດັບສາຍເສັ້ນທາງແຂວງ 588 ແລະກະຊວງການຄົມມະນາຄົມຂົນສົ່ງໄດ້ປ່ຽນເປັນທາງຫຼວງແຫ່ງຊາດ

15D; ສົມທົບກັບພະແນກໂຍທາທິການ ແລະຂົນສົ່ງແຂວງສາລະວັນເພື່ອເຊື່ອມຕໍ່ທາງຫຼວງແຫ່ງຊາດ 15D ຈາກຕາຣຸດຫາດ່ານຊາຍແດນລາໄລ (ເມືອງດາກຣຶງ, ແຂວງກວາງຈິ) ກັບເສັ້ນທາງ 15A ແຂວງສາລະວັນ.

ທາງຫຼວງແຫ່ງຊາດ 15D ໄດ້ເລີ່ມກໍ່ສ້າງມາແຕ່ປີ 2011 ແລະໄດ້ເປີດການຈາລະຈອນທາງດ້ານວິຊາເຕັກນິກໃນທ້າຍປີ 2012. ພາຍຫຼັງສຳເລັດການຍົກລະດັບທາງຫຼວງແຫ່ງຊາດ 15D, ແຂວງກວາງຈິໄດ້ສົມທົບກັບແຂວງ ສາລະວັນເພື່ອດຳເນີນ ການສຳຫຼວດ, ສ້າງວິພາກເສດຖະກິດ - ເຕັກນິກເປີດສາຍທາງ 15B (ເຊື່ອມຕໍ່ຈາກດົງຮ່າຫາດ່ານຊາຍແດນແຫ່ງຊາດລາໄລ ຮອດເທສະບານແຂວງສາລະວັນ. ເສັ້ນທາງ 15B ໄດ້ລົງທຶນກໍ່ສ້າງໂດຍລັດຖະບານລາວ ແລະ ແຂວງສາລະວັນ ແລະກໍ່ສ້າງສຳເລັດໃນຕົ້ນປີ 2014 - ນີ້ແມ່ນເສັ້ນທາງສຳຄັນທີ່ບໍ່ພຽງແຕ່ປະກອບສ່ວນຊຸກຍູ້ເຂົ້າການເຄື່ອນໄຫວການແລກປ່ຽນສິນຄ້າ ລະຫວ່າງສອງປະເທດເທົ່ານັ້ນແຕ່ຍັງສ້າງເງື່ອນໄຂສະດວກ ໃຫ້ແຂວງສາລະວັນພັດທະນາເສດຖະກິດໃນພາກຕາເວັນອອກ ແລະກວາງຈິ ພັດທະນາເສດຖະກິດພາກຕາເວັນຕົກ.

ປະຕິບັດສັນຍາແລະອະນຸສັນຍາກ່ຽວກັບການປະຕິບັດສັນຍາເພື່ອສ້າງເງື່ອນຄວາມໄຂສະດວກໃຫ້ແກ່ພາຫະນະກົນຈັກທາງບົກໄປມາຊາຍແດນລະຫວ່າງລັດຖະບານແຫ່ງສາທາລະນະລັດສັງຄົມນິຍົມຫວຽດນາມ ແລະລັດຖະບານ ແຫ່ງ ສປປ ລາວ; ແຂວງກວາງຈິໄດ້ປະຕິບັດບັນດາມາດຕາໄດ້ກຳນົດໃນອະນຸສັນຍາຢ່າງເຂັ້ມງວດ. ໃນຂົງເຂດການຂົນສົ່ງສິນຄ້າລະຫວ່າງກ່ວາງຈິກັບສອງແຂວງສະຫວັນນະເຂດ ແລະສາລະວັນ, ພະແນກການຄົມມະນາຄົມ - ຂົນສົ່ງກວາງຈິ ໄດ້ອອກອະນຸຍາດດ່ວນໃຫ້ປະມານ 2.500 ຖ້ຽວອະພະຫະນະແຕ່ລະປີ.

ໃນຂອບເຂດຈຳກັດການຮ່ວມມືລະຫວ່າງກວາງຈີ ແລະສາລະວັນ, ພະແນກການຄົມມະນາຄົມ -ຂົນສົ່ງກວາງຈີ ໄດ້ຈັດຕັ້ງຄະນະວຽກງານເຂົ້າຮ່ວມບັນດາກອງປະຊຸມ, ສຳມະນາ, ສົນທະນາ ແລະການຮ່ວມມືລົງທຶນຄື: ສຳຫຼວດບັນດາເສັ້ນທາງຄົມມະນາຄົມທີ່ເຊື່ອມຕໍ່ບັນດາເມືອງຊາຍແດນແຂວງກວາງຈີກັບ ແຂວງສາລະວັນ - ລາວ ໃນປີ 2011; ສຳຫຼວດ ແລະ ປະເມີນການຮ່ວມມືພັດທະນາການທ່ອງທ່ຽວເສັ້ນທາງກວາງຈີ - ສາລະວັນ - ປາກເຊັດຢູ່ແຂວງສາລະວັນປີ 2013…

ຫວ່າງມໍ່ໆມານີ້, ແຂວງກວາງຈີ ໄດ້ລົງທຶນ ແລະຍົກລະດັບສາຍທາງຫຼວງແຫ່ງຊາດ 15 D, ໄລຍະແຕ່ຖະໜົນໂຮ່ຈິມິນຫາດ່ານສາກົນລາໄລມີຄວາມຍາວ 12,2 ກິໂລແມັດ ເພື່ອຕອບສະໜອງຄວາມຮຽກຮ້ອງຕ້ອງການຂອງການຄົມມະນາຄົມ ທີ່ນັບມື້ນັບສູງຜ່ານດ່ານສາກົນລາໄລ; ຮັບປະກັນຄວາມປອດໄພ ແລະຄວາມສະດວກ ສະບາຍໃຫ້ແກ່ປະຊາຊົນ ແລະບັນດາ ພາຫະນະຈະລາຈອນເທິງເສັ້ນທາງ. ວຽກງານການວາງແຜນກໍ່ສ້າງພື້ນຖານໂຄງລ່າງຄົມມະນາຄົມທີ່ເຊື່ອມຕໍ່ລະຫ່າງກວາງຈີ ແລະສາລະວັນກໍ່ໄດ້ມີຄວາມເອົາໃຈໃສ່. ກວາງຈີໄດ້ສົມທົບກັນຢ່າງຕັ້ງໜ້າກັບບັນດາພະນັກງານ, ຂະແໜ່ງການສູນກາງ ແລະ ບັນດາພາກສ່ວນທີ່ກ່ຽວຂ້ອງໃຫ້ສຳເລັດ. ວາງແຜນ ແລະແຕ່ລະກ້າວຜັນຂະຫຍາຍເສັ້ນທາງບົກແຕ່ທ່າກຳປັ່ນມີຖຸ່ຍຫາດ່ານຊາຍແດນສາກົນລາໄລ.

- ການຮ່ວມໃນຂົງເຂດດ້ານການຄ້າ, ການລົງທຶນແລະການທ່ອງທ່ຽວ:

ໃນສະຖານະການພົວພັນດ້ານການຄ້າລະຫວ່າງສອງປະເທດ ຫວຽດນາມ - ລາວ ນັບມື້ນັບເພີ່ມຂຶ້ນ, ການຮ່ວມມືດ້ານການຄ້າລະຫວ່າງແຂວງສາລະວັນ ແລະ

ກວາງຈີພັດທະນາຢ່າງບໍ່ຢຸດຢັ້ງ. ໄລຍະແຕ່ປີ 1989 ຫາປີ 2014, ວົງເງິນຂາອອກ ຂາເຂົ້າລະຫວ່າງສອງແຂວງນັບມື້ນັບເພີ່ມ.

ການເຂົ້າຮ່ວມການນຳເຂົ້າ ແລະສົ່ງອອກລະຫວ່າງສອງຝ່າຍບໍ່ພຽງແຕ່ມີບັນດາລັດວິສາຫະກິດລັດເທົ່ານັ້ນ, ແຕ່ຍັງມີຫຼາຍບັນດາວິສາຫະກິດເອກະຊົນ ແລະ ບຸກຄົນເຂົ້າຮ່ວມ. ສິນຄ້ານຳເຂົ້າ ແລະສົ່ງອອກໄດ້ເປີດກວ້າງກ່ຽວກັບຈຳນວນ, ປະເພດ, ບໍ່ພຽງແຕ່ເພື່ອຮັບໃຊ້ຄວາມຕ້ອງການຜະລິດ ແລະບໍລິໂພກຢູ່ບັນດາທ້ອງຖິ່ນຂອງສອງແຂວງເທົ່ານັ້ນ, ແຕ່ຍັງໄວ້ແລກປ່ຽນກັບຄູ່ຮ່ວມມືທີ 3 (ຕາມຮູບແບບການນຳເຂົ້າຊົ່ວຄາວ, ສົ່ງອອກຄືນໃໝ່).

ຍ້ອນຄວາມຕ້ອງການພົບປະແລກປ່ຽນສິນຄ້າແລະການໄປມານັບມື້ນັບເພີ່ມຂຶ້ນ, ແຂວງສາລະວັນ ແລະກວາງຈີໄດ້ສະເໜີໃຫ້ລັດຖະບານສອງປະເທດຍົກລະດັບບັນດາດ່ານຊາຍແດນ ແລະ ເປີດບາງເສັ້ນທາງຕື່ມອີກ.

ພາຍຫຼັງໄດ້ຮັບການອະນຸມັດຜ່ານຈາກລັດຖະບານຂອງສອງປະເທດແລ້ວ, ດ່ານຊາຍແດນແຫ່ງຊາດລາໄລ (ກວາງຈີ) - ລາໄລ (ສາລະວັນ) ໄດ້ຮັບການຍົກລະດັບເປັນດ່ານຊາຍແດນສາກົນ. ນອກນີ້, ສອງຝ່າຍຍັງສືບຕໍ່ເປີດດ່ານຊາຍແດນຕື່ມສຳຮອງ: ບ້ານກອກ (ຕາແສງ ປານາງ, ເມືອງດາກຣົງ, ແຂວງກວາງຈີ) - ອາໂຊກ (ບ້ານອາໂຊກ, ເມືອງສະໝ້ວຍ, ແຂວງສາລະວັນ) ເພື່ອຊຸກຍູ້ການເຄື່ອນໄຫວແລກປ່ຽນສິນຄ້າລະຫວ່າງສອງແຂວງ.

ການເຄື່ອນໄຫວການນຳເຂົ້າ ແລະສົ່ງອອກຂອງແຂວງສາລະວັນ ແລະກວາງຈີ ໃນຊຸມປີນີ້ໄດ້ຮັບການຊຸກຍູ້ໂດຍຜ່ານການນຳເຂົ້າ ແລະສົ່ງອອກຢ່າງເປັນທາງການ ແລະບໍ່ເປັນທາງການ.

ການເຄື່ອນໄຫວນຳເຂົ້າ ແລະສົ່ງອອກລະຫວ່າງແຂວງສາລະວັນ ແລະກວາງຈິຕົ້ນຕໍແມ່ນໄດ້ດຳເນີນຜ່ານດ່ານຊາຍແດນສາກົນລາໄລ (ກວາງຈິ) - ລາໄລ (ສາລະວັນ). ພາຍຫຼັງທີ່ເສັ້ນທາງ 15B ຂອງລາວໄດ້ຮັບການລົງທຶນກໍ່ສ້າງແລ້ວ, ການເຄື່ອນໄຫວເຂົ້າເມືອງ, ການນຳເຂົ້າ ແລະສົ່ງອອກຜ່ານດ່ານຊາຍແດນນັບມື້ນັບເພີ່ມຂຶ້ນ. ຕາມຈຳນວນຕົວເລກ ລາຍງານ ຂອງກົມພາສີ ກວາງຈິ, ແຕ່ປີ 2010 ຫາປີ 2014, ຈຳນວນຄົນ ແລະພາຫະນະນຳເຂົ້າ-ສົ່ງອອກຜ່ານດ່ານຊາຍແດນເພີ່ມຂຶ້ນຢ່າງວ່ອງໄວ, ຄວາມໄວເພີ່ມສະເລ່ຍແຕ່ 90-100%. ສະເພາະປີ 2014, ວົງເງິນການນຳເຂົ້າ-ສົ່ງອອກທັງໝົດບັນລຸ 127,5 ລ້ານ USD/ປີ (ສູງກວ່າ 16,5 ເທົ່າທຽບໃສ່ປີ 2010). ເພື່ອຊຸກຍູ້ການເຄື່ອນໄຫວດ້ານການຄ້າ, ສອງແຂວງໄດ້ສົມທົບກັນພັດທະນາ ແລະສ້າງລະບົບບັນດາ ຕະຫຼາດມາແລກປ່ຽນສິນຄ້າຢູ່ລຽບຕາມຊາຍແດນສອງປະເທດ.

ເພື່ອສ້າງເງື່ອນໄຂສະດວກ ໃຫ້ບັນດາວິສາຫະກິດແນະນຳຜະລິດຕະພັນໃໝ່, ປະກອບສ່ວນຊຸກຍູ້ເຄື່ອນໄຫວການຄ້າລະຫວ່າງສອງຝ່າຍ, ພະແນກການຄ້າ, ພະແນກການຄ້າຕ່າງປະເທດຂອງສອງແຂວງ ໄດ້ສົມທົບກັນຈັດຕັ້ງງານຕະຫຼາດນັດ. ໂດຍຜ່ານງານຕະຫຼາດນັດ, ບັນດາວິສາຫະກິດຂອງສອງແຂວງໄດ້ລົງນາມໃນສັນຍາບໍລິໂພກຜະລິດຕະພັນຂອງກັນແລະກັນ.

ຂະແໜງການທ່ອງທ່ຽວກວາງຈິແຕ່ລະປີ ໄດ້ມີບັນດາລາຍການຮ່ວມມືແນ່ໃສ່ສື່ມວນຊົນໃຫ້ການທ່ອງທ່ຽວລາວ, ໃນນັ້ນໃຫ້ຄວາມສຳຄັນເຖິງບັນດາແຫຼ່ງທ່ອງທ່ຽວຂອງແຂວງສາລະວັນ. ສາມາດເວົ້າໄດ້ວ່າ, ແຕ່ປີ 1990 ຮອດປະຈຸບັນ, ໃນຂະບວນການພັດທະນາເສດຖະກິດ, ການເຄື່ອນໄຫວການຄ້າລະຫວ່າງສອງ

ແຂວງໄດ້ມີບາດກ້າວບຸກທະລຸທີ່ສຳຄັນ, ວົງເງິນການນຳເຂົ້າ ແລະສົ່ງອອກລະຫວ່າງສອງແຂວງໄດ້ເພີ່ມຂຶ້ນຢ່າງວ່ອງໄວ.

ພິເສດ, ປະຕິບັດບົດບັນທຶກເນື້ອໃນຜຽນການເຮັດວຽກຂອງຄະນະວຽກງານຂັ້ນສູງແຂວງກວາງຈີກັບ ແຂວງສາລະວັນ (ວັນທີ 20 ກຸມພາ 2022), ຄະນະປະຈຳຄະນະພັກແຂວງກວາງຈີໄດ້ສ້າງຕັ້ງຄະນະປະຕິບັດງານ ຂອງແຂວງກວາງຈີຄົ້ນຄວ້າກົນໄກ, ນະໂຍບາຍສະເພາະເພື່ອປະກອບຄຳເຫັນວຽກປະສານສົມທົບກັບ ແຂວງສາລະວັນ. ຄົ້ນຄວ້າແຜນການ ແລະສະເໜີໃຫ້ລັດຖະບານສອງປະເທດມີກົນໄກບຸລິມະສິດໃນການກໍ່ສ້າງເຂດເສດຖະກິດ, ການຄ້າຢູ່ເຂດດ່ານຊາຍແດນລາໄລ. ແຂວງກວາງຈີ້ ກໍ່ໄດ້ແນະນຳ ແລະໜູນຊ່ວຍເພື່ອຮ່ວມຊື່ບໍລິສັດ Sakae Holding - Surbana Jurong (Singapore) ເພື່ອຊ່ວຍແຂວງສາລະວັນ ສ້າງວາງແຜນພັດທະນາເສດຖະກິດ - ສັງຄົມ, ທີ່ສຸດແມ່ນວາງແຜນກຳນົດດ່ານຊາຍແດນລາໄລ (ກວາງຈີ) ແຂວງສາລະວັນ.

* ກ່ຽວກັບປະສານສົມທົບໃນການຄຸ້ມຄອງການເຄື່ອນໄຫວດ້ານການຄ້າຊາຍແດນ:

ສອງແຂວງຊີ້ນຳບັນດາຂະແໜ່ງການ, ບັນດາກຳລັງຢູ່ດ່ານຊາຍແດນລາໄລປະຕິບັດວຽກງານການປະຕິຮູບລະບຽບການດ້ານພາສີເປັນຢ່າງດີ, ສ້າງເງື່ອນໄຂຄວາມສະດວກໃຫ້ແກ່ການເຄື່ອນໄຫວຊື້ຂາຍ, ແລກປ່ຽນສິນຄ້າຂອງນັກທຸລະກິດຊາຍແດນ ແລະປະຊາຊົນຢູ່ເຂດຊາຍແດນ; ບັນດາບໍລິການສະໜັບສະໜູນການຄ້າຊາຍແດນ ແລະການອຳນວຍຄວາມສະດວກດ້ານການຄ້າຢູ່ດ່ານຊາຍແດນ; ປະຕິບັດການສົມທົບກັນຢ່າງດີກັບກອງກຳລັງປ້ອງກັນຊາຍແດນ, ດ່ານພາສີດ່ານແກ້ໄຂ

ບັນດາຄວາມຫຍຸ້ງຍາກໃຫ້ທັນການ ແລະແກ້ໄຂລະບຽບການຜ່ານດ່ານຢ່າງວ່ອງໄວສະດວກສະບາຍໃຫ້ແກ່ສິນຄ້າຂອງນັກທຸລະກິດ ແລະປະຊາຊົນຢູ່ຊາຍແດນ.

ກວາງຈິ ໄດ້ຈັດຕັ້ງຄະນະວຽກງານໄປເຮັດວຽກກັບແຂວງສາລະວັນ ເພື່ອປຶກສາຫາລືກ່ຽວກັບການຊຸກຍູ້ການປະຕິຮູບລະບຽບການບໍລິຫານ, ສ້າງເງື່ອນໄຂຄວາມສະດວກກ່ຽວກັບລະບຽບການເຂົ້າອອກເມືອງ, ການນໍາເຂົ້າ ແລະສົ່ງອອກ, ຫຼຸດຜ່ອນເວລາຜ່ານດ່ານ, ປະຢັດຄ່າໃຊ້ຈ່າຍເຮັດລະບຽບການໃຫ້ປະຊາຊົນ ແລະວິສາຫະກິດເພື່ອຊຸກຍູ້ການເຄື່ອນໄຫວການຮ່ວມມືດ້ານການລົງທຶນ, ການຄ້າ, ການທ່ອງທ່ຽວຂ້າມຊາຍແດນລະຫວ່າງຄູ່ດ່ານຊາຍແດນສາກົນລາໄລ (ກວາງຈິ) - ລາໄລ (ສາລະວັນ). ແນ່ໃສ່ການຂຸດຄົ້ນຄວາມສາມາດບົ່ມຊ້ອນ, ທ່າແຮງຂອງແຕ່ລະແຂວງ ແລະເສັ້ນທາງ 15 (ເສັ້ນແລວເສດຖະກິດໃໝ່ຂອງບັນດາປະເທດໃນພາກພື້ນ), ແຂວງກວາງຈິກໍ່ໄດ້ສະເໜີໃຫ້ສູນກາງກໍ່ສ້າງແຜນສະເໜີ "ຮ່ວມມືຜັນຂະຫຍາຍແລວເສດຖະກິດກວາງຈິ (ຫວຽດນາມ) - ສາລະວັນ (ລາວ) - ອຸບົນຣາຊະທານີ (ໄທ)"; ແລກປ່ຽນກັບແຂວງສາລະວັນ ແລະອຸບົນຣາຊະທານີເພື່ອແລກປ່ຽນຂໍ້ມູນຂ່າວສານ ແລະເຫັນດີເປັນເອກະພາບໃນການຈັດຕັ້ງກໍ່ສ້າງແຜນສະເໜີ.

### 3. ການຮ່ວມມືໃນຂົງເຂດວັດທະນະທໍາ-ສັງຄົມ, ການສຶກສາ-ບໍາລຸງສ້າງ, ວິທະຍາສາດ-ເຕັກໂນໂລຊີ ແລະບັນດາຂົງເຂດອື່ນໆ

*- ໃນຂົງເຂດວັດທະນະທໍາແລະກິລາ*

ຄຽງຄູ່ກັບການພັດທະນາຢ່າງແຂງແຮງຂອງຂະແໜງເສດຖະກິດ, ແຕ່ປີ 1989 ມາຮອດປະຈຸບັນ, ວັດທະນະທໍາ, ຂໍ້ມູນຂ່າວສານ ແລະສື່ມວນຊົນຂອງແຂວງກວາງຈິ ແລະ ແຂວງສາລະວັນໄດ້ພັດທະນາໃນທຸກດ້ານ, ປະກອບສ່ວນ

ພໍສົມຄວນໃນການຍົກສູງຊີວິດຈິດໃຈໃຫ້ປະຊາຊົນ.ໃນໄລຍະນີ້, ການຮ່ວມມືດ້ານວັດທະນະທຳ, ຂໍ້ມູນຂ່າວສານ ແລະການສື່ສານມວນຊົນລະຫວ່າງ 2 ຝ່າຍສືບຕໍ່ປັບປຸງແລະ ເພີ່ມທະວີ, ໃນນັ້ນສຸມໃສ່ບາງເນື້ອໃນສຳຄັນຄື: ຊຸກຍູ້ພົບປະແລກປ່ຽນ, ການຮ່ວມມືດ້ານສິລະປະວັດທະນະທຳ, ກິລາກາຍະກຳ ແລະບັນດາ ການເຄື່ອນໄຫວມິດຕະພາບ; ເພີ່ມທະວີການຊ່ວຍເຫຼືອເຊິ່ງກັນ ແລະກັນໃນບັນດາຂົງເຂດໜັງສືພິມ, ສິລະປະ ວັນນະຄະດີ, ການພິມ, ພິມຈຳໜ່າຍ, ຫໍພິພິທະພັນ, ສຳເນົາແລະບັນດາຂົງເຂດອື່ນໆ; ການຮ່ວມມືດ້ານການລົງທຶນ ເພື່ອພັດທະນາລະບົບຂໍ້ມູນຂ່າວສານ - ສື່ສານມວນຊົນ.

ການເຄື່ອນໄຫວພົບປະແລກປ່ຽນວັດທະນະທຳ, ສິລະປະ ແລະກິລາ ໄດ້ກາຍເປັນຮີດຄອງປະເພນີໃນການພົວພັນຮ່ວມມືດ້ານວັດທະນະທຳລະຫວ່າງ 2 ແຂວງ ແລະ ໄດ້ຮັບການຮັກສາໄວ້ເປັນປະຈຳຂອງສອງປະເທດໃນຊຸມແຕ່ປີ 1989 ເຖິງທຸກວັນນີ້, ທີ່ສຸດແມ່ນໃນໂອກາດບັນດາງານວັນບຸນໃຫຍ່ຂອງສອງຊາດເຊັ່ນ: ສະເຫຼີມສະຫຼອງ 30 ປີ ແຫ່ງວັນເຊັນສົນທິສັນຍາມິດຕະພາບແລະການຮ່ວມມືລາວ - ຫວຽດນາມ (1977 - 2007) ແລະ 45 ປີ ແຫ່ງວັນສ້າງຕັ້ງການພົວພັນ ທາງການທູດລະຫວ່າງສອງປະເທດ (1962 - 2007). ຄະນະສິລະປະກວາງຈີໄດ້ໄປພົບປະແລກປ່ຽນແລະສະແດງຢູ່ຫຼາຍທ້ອງຖິ່ນຂອງແຂວງສາລະວັນ. ກໍ່ເນື່ອງໃນວັນສຳຄັນໃຫຍ່ດັ່ງກ່າວ, ພະແນກວັດທະນະທຳ ແລະກິລາ ແຂວງກວາງຈີ ໄດ້ສົ່ງບັນດາທີມກິລາບານເຕະ, ບານສົ່ງ, ຕີດອກປີກໄກ່ໄປແຂ່ງຂັນມິດຕະພາບຢູ່ແຂວງສາລະວັນ.

ໃນຂົງເຂດໜັງສືພິມ, ສິລະປະວັນນະຄະດີ, ຫໍພິພິທະພັນ, ຫ້ອງສະໝຸດ, ການພິມ, ຈຳໜ່າຍແລະແປເອກະສານ, ກວາງຈີທັງປະກອບສ່ວນເຂົ້າໃນການບຳລຸງສ້າງແລະບຳລຸງວິຊາສະເພາະ, ວິຊາອາຊີບ, ທັງສ້າງທຸກເງື່ອນໄຂຊ່ວຍເຫຼືອພະນັກງານ ແລະຂ້າລັດຖະການບັນດາຂະແໜງການໃນການເຄື່ອນໄຫວວິຊາສະເພາະ. ສູນສຳເນົາເອກະສານກວາງຈີໄດ້ເປັນທີ່ປຶກສາໃຫ້ບັນດາພະນັກງານສຳເນົາເອກະສານແຂວງສາລະວັນ ໃນການກໍ່ສ້າງລະບົບສຳເນົາເອກະສານບັນດາຂັ້ນ, ຂະແໜງການ ກໍ່ຄືປະສົບການໃນວຽກງານຮັກສາຄວາມລັບສຳເນົາເອກະສານ.

ນອກຈາກນັ້ນ, ກອງປະຊຸມມິດຕະພາບລາວ-ຫວຽດ, ຫວຽດລາວຂອງສອງແຂວງໄດ້ມີການເຄື່ອນໄຫວຫຼາຍຢ່າງໄດ້ສິ້ນສຸດລົງ, ພ້ອມທັງຊຸກຍູ້ການຮ່ວມມືຮອບດ້ານ ແລະພ້ອມທັງໂຄສະນາເຜີຍແຜ່ຢ່າງກວ້າງເລິກ ແລະການສຶກສາໃຫ້ກັບບັນດາຮຸ່ນໜຸ່ມສາວ. ສະມາຄົມມິດຕະພາບຫວຽດນາມ - ລາວ ແຂວງກວາງຈີແຕ່ລະປີໄດ້ຈັດຕັ້ງການ “ຢາມຄືນ ສະໜາມຮົບເກົ່າ” ໃຫ້ບັນດາພະນັກງານ, ນັກຮົບທີ່ເຄີຍຕໍ່ສູ້, ຮັບໃຊ້ຢູ່ສະໜາມຮົບລາວ. ທະຫານຊາຍແດນແຂວງກວາງຈີໄດ້ປະກອບສ່ວນຫຼາຍຢ່າງເຂົ້າໃນການລົບລ້າງບັນດາຮີດຄອງປະເພນີ ຫຼ້າຫຼັງ, ແລະກໍ່ສ້າງແບບແຜນດຳລົງຊີວິດສີວິໄລ, ປອດໃສໃຫ້ແກ່ປະຊາຊົນຢູ່ລຽບຕາມຊາຍແດນສອງຝັ່ງ.

*- ການຮ່ວມມືໃນດ້ານການແພດ*

ການຮ່ວມມືດ້ານການແພດລະຫວ່າງແຂວງກວາງຈີ ກັບ ສາລະວັນສືບຕໍ່ໄດ້ຮັບການຜັນຂະຫຍາຍຢ່າງເລິກເຊິ່ງ, ໂດຍສຸມໃສ່ບັນດາເນື້ອໃນຕົ້ນຕໍຄື: ການປະສານສົມທົບ ແລະການຊ່ວຍເຫຼືອເຊິ່ງກັນ ແລະກັນ ໃນໄລຍະປະຕິບັດໂຄງການປ້ອງກັນພະຍາດຜ່ານຊາຍແດນຂຶ້ນກັບຢູ່ອະນຸພາກພື້ນແມ່ນ້ຳຂອງ; ຊຸກຍູ້ການ

ຮ່ວມມືໃນການລົງທຶນກໍ່ສ້າງບັນດາຮາກຖານກວດແລະປິ່ນປົວພະຍາດ; ຍົກສູງປະສິດທິພາບວຽກງານການກວດ ແລະ ການປິ່ນປົວພະຍາດ.

ໃນໄລຍະປະຕິບັດໂຄງການປ້ອງກັນພະຍາດຜ່ານຊາຍແດນ, ກວາງຈີໄດ້ໜູນຊ່ວຍທັງດ້ານວິຊາສະເພາະ ເຕັກນິກ ເຖິງ ຊັບພະຍາກອນມະນຸດໃຫ້ແຂວງສາລະວັນ. ໂຄງການສັກຢາກັນພະຍາດເປີດກວ້າງ ເພື່ອປ້ອງກັນ ບັນດາພະຍາດໄຂ້ຍຸງລາຍ, ໄຂ້ເລືອດອອກ, ຖອກທ້ອງໜັກແລະປ້ອງກັນໂລກເອດສ (HIV) ຢູ່ແຂວງສາລະວັນແມ່ນໄດ້ຈັດຕັ້ງປະຕິບັດຖືກຕາມແຜນ ການປິ່ນປົວພະຍາດທີ່ກຳນົດ. ການຄົ້ນພົບ, ຂີດແບ່ງເຂດແລະການທຳລາຍແຫຼ່ງພະຍາດໄດ້ດຳເນີນຢ່າງທັນການ.

ຄຽງຂ້າງການກວດປິ່ນປົວພະຍາດ ແລະບຳລຸງໃຫ້ພະນັກງານແຂວງສາລະວັນຕາມການເຫັນດີເປັນ ເອກະພາບນຳກັນໄດ້ເຊັນສັນຍາໃນແຕ່ລະປີ, ຂະແໜງການແພດກວາງຈີໄດ້ອະນຸຍາດໃຫ້ໂຮງໝໍເມືອງທີ່ຂຶ້ນກັບ ຂອບເຂດຊາຍແດນແລະໂຮງໝໍແຂວງຜັນຂະຫຍາຍປະຕິບັດຮູບແບບການກວດແລະປິ່ນປົວພະຍາດຕາມຄວາມຕ້ອງການໃຫ້ປະຊາຊົນແຂວງສາລະວັນ. ເພື່ອປະຕິບັດໂຄງການນີ້ເປັນຢ່າງດີ, ຮາກຖານການແພດທີ່ຢູ່ລຽບຕາມຊາຍແດນໄດ້ຮັບການຍົກລະດັບໂດຍຂະແໜງການແພດ ກວາງຈີ, ລົງທຶນອຸປະກອນແລະປູກຢາ. ຂະແໜງການແພດກວາງຈີໄດ້ລົງທຶນສ້າງປ້ອມແພດຢູ່ລາໄລ (ເມືອງດາກຣຶງ). ບັນດາຮາກຖານນີ້ສົມທົບກັບແພດໝໍທະຫານຊາຍແດນ ທັງຈັດຕັ້ງການກວດ, ປິ່ນປົວພະຍາດໃຫ້ແກ່ປະຊາຊົນຢູ່ເຂດຊາຍແດນແຂວງກວາງຈີ, ທັງກວດ ແລະປິ່ນປົວພະຍາດໃຫ້ແກ່ປະຊາຊົນແຂວງສາລະວັນ. ປີ 2014-2015, ກອງບັນຊາການທະຫານປ້ອງກັນຊາຍແດນໄດ້ສົມທົບກັບສະມາຄົມແພດໜຸ່ມ, ໂຮງໝໍທົ່ວໄປແຂວງ ໄດ້ກວດກາ ແລະສະໜອງຢາປິ່ນປົວໂດຍບໍ່ເສຍຄ່າໃຫ້ປະຊາຊົນບ້ານເຊ ແລະ ເຕີນຢູ, ເມືອງສະໜ້ອຍ, ແຂວງ

ສາລະວັນ ໃຫ້ແກ່ຄົນເຈັບ 150 ກວ່າເທື່ອ. ຈຳນວນເງິນມອບຊ່ວຍເຫຼືອລ້າແມ່ນ 12 ລ້ານດົ່ງ.

ນອກຈາກນັ້ນ, ໜ້າທີ່ການບຳລຸງວິຊາອາຊີບໃຫ້ພະນັກງານການແພດແຂວງສາລະວັນສືບຕໍ່ ປະຕິບັດ ໄດ້ດີ. ວິທະຍາໄລການແພດກວາງຈີ ໂດຍສະເລ່ຍແລ້ວໄດ້ບຳລຸງສ້າງນັກສຶກສາຈາກແຂວງສາລະວັນ 10 ຄົນໃນແຕ່ລະປີ. ວຽກງານການຝຶກອົບຮົມວິຊາສະເພາະໃຫ້ແກ່ພະນັກງານປ້ອງກັນການລະບາດແມ່ນໄດ້ຈັດຂຶ້ນຕາມກຳນົດເວລາໃນແຕ່ລະປີ.

ປະຕິບັດໜ້າທີ່ປ້ອງກັນ ແລະຄວບຄຸມການແຜ່ລະບາດຂອງພະຍາດໂຄວິດ-19, ແຂວງກວາງຈິໄດ້ສົມທົບ, ໜູນຊ່ວຍແຂວງສາລະວັນໃນວຽກງານການໂຄສະນາເຜີຍແຜ່, ສຶກສາອົບຮົມປະຊາຊົນໃນການສົມທົບກັນປ້ອງກັນພະຍາດ. ຊີ້ນຳບັນດາກຳລັງປະຕິບັດໜ້າທີ່ຈັດຕັ້ງການລາດຕະເວນ, ກວດກາ ແລະຄຸ້ມຄອງຢ່າງເຂັ້ມງວດການເຄື່ອນໄຫວເຂົ້າອອກເມືອງການນຳເຂົ້າ - ສົ່ງອອກຂ້າມຊາຍແດນ, ຮັບປະກັນການໄປມາຄ້າຂາຍສິນຄ້າໄດ້ສະດວກ ສະບາຍລະຫວ່າງສອງຝັ່ງຊາຍແດນກໍຄືວຽກງານປ້ອງກັນຕ້ານການແຜ່ລະບາດຂອງພະຍາດ. ໃນໄລຍະທີ່ໂລກ ລະບາດ ໂຄວິດ-19 ເກີດຂຶ້ນ, ບັນດາກຳລັງ, ອົງການປະຕິບັດງານທີ່ກ່ຽວຂ້ອງໄດ້ເລັ່ງລັດແກ້ໄຂບັນຫາທີ່ເກີດຂຶ້ນໃນໄລຍະປິດດ່ານຊາຍແດນຢ່າງທັນການ ແລະສົມທົບກັບຝ່າຍລາວກ່ຽວກັບມາດຕະການປ້ອງກັນພະຍາດໂຄວິດ-19 ພ້ອມກັນນັ້ນໄດ້ໜູນຊ່ວຍອຸປະກອນຮັບໃຊ້ໃນວຽກງານການປ້ອງກັນ, ຄວບຄຸມພະຍາດ. ໃນປີ 2021, ກ່ອນທີ່ພະຍາດ ໂຄວິດ-19 ແຜ່ລະບາດຄືນມາຢູ່ລາວ ແລະຫວຽດນາມ, ແຂວງກວາງຈິໄດ້ໜູນຊ່ວຍພະຫະນະອຸປະກອນ ແລະ ເຄື່ອງອຸປະກອນ

ການແພດປ້ອງກັນພະຍາດໂຄວິດ-19 ໃຫ້ບັນດາເມືອງຊາຍແດນຂອງແຂວງສາລະວັນດ້ວຍມູນຄ່າລວມກວ່າ 300 ລ້ານດົ່ງ....[14]

*- ການຮ່ວມມືໃນການສຶກສາ - ບຳລຸງສ້າງ, ຍົກສູງຄຸນນະພາບແຫຼ່ງຊັບພະຍາກອນມະນຸດ*

ໃນຊຸມປີຜ່ານມາ, ໃນຂົງເຂດບຳລຸງສ້າງຊັບພະຍາກອນມະນຸດ, ການຮ່ວມມືລະຫວ່າງແຂວງກວາງຈິ ແລະ ແຂວງສາລະວັນ ໄດ້ມີການປ່ຽນແປງຢ່າງຕັ້ງໜ້າ; ຮູບແບບການຮ່ວມມືດ້ານການບຳລຸງສ້າງທີ່ຫຼາກຫຼາຍ ໃນນັ້ນໄດ້ສຸມໃສ່ການເຊື່ອມໂຍງແລະການແລກປ່ຽນດ້ານການສຶກສາລະຫວ່າງບັນດາໂຮງຮຽນຂອງສອງແຂວງ.

ໂຮງຮຽນການເມືອງ ເລຢວນ ແຂວງກວາງຈິໄດ້ສົມທົບກັບແຂວງສາລະວັນບຳລຸງສ້າງ 11 ຫຼັກສູດ ໃນນັ້ນມີ ພະນັກງານ 230 ຄົນພາຍໃຕ້ໂຄງການທິດສະດີການເມືອງ ແລະການຄຸ້ມຄອງລັດຂັ້ນກາງ; ໄດ້ເປີດຊຸດບຳລຸງ ຄວາມຮູ້ພື້ນຖານດ້ານການກໍ່ສ້າງ 02 ຫ້ອງໃນນັ້ນປະກອບມີພະນັກງານ 80 ທ່ານ ແລະຝຶກອົບຮົມວຽກງານຄຸ້ມຄອງຊາຍແດນ 01 ຫ້ອງໃຫ້ນາຍທະຫານ 15 ທ່ານ. ໂຮງຮຽນວິທະຍາໄລຄູກວາງຈິ ໄດ້ປະຕິບັດໂຄງການ "ບຳລຸງສ້າງຄູສອນແຂວງສາລະວັນໄລຍະ 2012-2015" ຢ່າງມີປະສິດທິຜົນ. ໂຮງຮຽນວິທະຍາໄລຄູກວາງຈິໄດ້

---

[14]ນອກນັ້ນ, ສະມາຄົມມິດຕະພາບຫວຽດນາມ - ລາວ ໄດ້ຂົນຂວາຍບໍລິຈາກຊ່ວຍເຫຼືອມອບໃຫ້ອຳນາດການປົກຄອງ ແລະ ສະມາຄົມມິດຕະພາບລາວ - ຫວຽດນາມ ແຂວງສະຫວັນນະເຂດ ບັນດາອຸປະກອນການແພດເພື່ອປ້ອງກັນ ແລະ ຄວບຄຸມພະຍາດໂຄວິດ-19 ດ້ວຍມູນຄ່າເກືອບ 80 ລ້ານດົ່ງ...

ບຳລຸງສ້າງ ແລະບຳລຸງຄູສອນໃຫ້ແຂວງສາລະວັນຈຳນວນ 9 ຄົນ; ໃນນັ້ນ, ມີຄູສອນວິຊາເຕັກໂນໂລຊີຂໍ້ມູນຂ່າວສານ ແລະສື່ສານມວນຊົນ 02 ຄົນ, ຄູສອນພາສາຫວຽດນາມ ແລະອະນຸບານ 05 ຄົນ ແລະຄູຮຽນວິຊາ ພາສາຫວຽດນາມຂັ້ນສູງ ແລະວິທີການານສິດສອນພາສາຫວຽດ 02 ຄົນ; ຮັບ ແລະບຳລຸງສ້າງນັກສຶກສາຕ່າງປະເທດຈຳນວນ 10 ຄົນ ຕາມໂຄງການທຶນການສຶກສາ ສົ່ງໂດຍພະແນກສຶກສາທິການ ແລະກິລາແຂວງສາລະວັນ; ໄດ້ຮັບ ແລະບຳລຸງສ້າງພາຫວຽດນາມ ໃຫ້ພະນັກງານ 15 ຄົນຂອງແຂວງສາລະວັນ ໄປຮຽນວິຊາທິດສະດີການເມືອງຂັ້ນກາງຢູ່ໂຮງຮຽນການເມືອງເລຢວນ.... ນອກຈາກການບຳລຸງສ້າງຢ່າງເປັນທາງການ ແລະເຂັ້ມງວດແລ້ວ, ໂຮງຮຽນວິທະຍາໄລສ້າງຄູກວາງຈິຍັງເປີດຊຸດຝຶກອົບຮົມ ວິຊາຊີບອື່ນໆໃຫ້ແກ່ພະນັກງານຄູສອນ ຈາກແຂວງສາລະວັນນັບຮ້ອຍຄົນ.

ເພື່ອຍົກສູງຄຸນນະພາບວິຊາສະເພາະໃຫ້ຄູສອນຢູ່ແຂວງສາລະວັນ, ຂະແໜງການສຶກສາແຂວງກວາງຈິໄດ້ຊຸກຍູ້ຮູບແບບການແລກປ່ຽນຄູສອນ, ບຳລຸງສ້າງເປັນປະຈຳ ແລະບຳລຸງຢູ່ກັບທີ່ຕາມກຳນົດເວລາ. ຂະແໜງການສຶກສາແຂວງກວາງຈິໄດ້ສົ່ງຄູສອນທີ່ມີປະສົບການດ້ານວິຊາຄະນິດສາດ, ຟີຊິກ, ເຄມີ, ຊີວະສາດ ແລະຂໍ້ມູນ ຂ່າວສານເພື່ອສົ່ງເສີມທັກສະ ວິຊາຊີບ ໃຫ້ແກ່ຖັນແຖວຄູສອນຂອງແຂວງສາລະວັນ ເພື່ອສອນພາສາຫວຽດນາມ.

ການຮ່ວມມືດ້ານການຊ່ວຍເຫຼືອ ແລະການລົງທຶນກໍ່ສ້າງໂຮງຮຽນ, ການຈັດຊື້ອຸປະກອນການສອນໃຫ້ແຂວງສາລະວັນ ກໍ່ໄດ້ຮັບການເພີ່ມທະວີຫຼາຍ. ປີ 2000, ຂະແໜງການສຶກສາ ແລະບຳລຸງສ້າງແຂວງກວາງຈິໄດ້ໜູນຊ່ວຍ 1 ຕື້ດົ່ງ ເພື່ອກໍ່ສ້າງ

ໂຮງຮຽນປະຖົມຢູ່ແຂວງສາລະວັນ. ປີ 2005, ແຂວງກວາງຈິໄດ້ໜູນຊ່ວຍ 500 ລ້ານດົ່ງ ເພື່ອກໍ່ສ້າງໂຮງຮຽນແລະ 100 ລ້ານດົ່ງ ເງິນອຸປະກອນຫ້ອງການ. ພ້ອມດຽວກັນນີ້, ແຂວງກວ່າງຈິ ໄດ້ໜູນຊ່ວຍ 1,2 ຕື້ດົ່ງ ເພື່ອກໍ່ສ້າງໂຮງຮຽນປະຖົມຢູ່ເມືອງສະໝ້ວຍ (ສາລະວັນ). ປີ 2006, ແຂວງກວາງຈິໄດ້ໜູນຊ່ວຍໃຫ້ຂະແໜງການສຶກສາແຂວງສະຫວັນນະເຂດດ້ວຍຈຳນວນ 400 ລ້ານດົ່ງເພື່ອລົງທຶນບັນດາອຸປະກອນຫ້ອງການ. ແຕ່ປີ 2018 – 2020, ແຂວງກວາງຈິ ໄດ້ໜູນຊ່ວຍໃຫ້ແຂວງສາລະວັນດ້ວຍຈຳນວນເງິນ 2.681 ຕື້ດົ່ງ ເພື່ອກໍ່ສ້າງໂຮງຮຽນມັດທະຍົມຕອນຕົ້ນຕາລຸງກາງ, ເມືອງສະໝ້ວຍ. ວິສາຫະກິດບາງແຫ່ງຂອງແຂວງກວາງຈິຍັງໄດ້ລົງທຶນງົບປະມານກໍ່ສ້າງໂຮງຮຽນປະຖົມ ແລະມັດທະຍົມຈຳນວນໜຶ່ງໃຫ້ບັນດາເມືອງຊາຍແດນຕິດກັບແຂວງກວາງຈິ.

ນອກນັ້ນ, ກອງບັນຊາການທະຫານຊາຍແດນແຂວງກວາງຈິໄດ້ຊ່ວຍຈັດຕັ້ງປະຕິບັດໂຄງການກໍ່ສ້າງໂຮງຮຽນຢູ່ເມືອງສະໝ້ວຍແຂວງສາລະວັນ; ບັນດາຂະແໜງດ່ານພາສີ, ທະຫານ, ຕຳຫຼວດ... ພ້ອມກັບບັນດາອຳນາດການປົກຄອງເມືອງ, ຕາແສງ, ບ້ານລຽບຕາມຊາຍແດນແລະບັນດາຄ້າຍ ແລະປ້ອມປ້ອງກັນຊາຍແດນ ໄດ້ເພີ່ມທະວີການເຮັດວຽກງານການຕ່າງປະເທດເປັນຢ່າງດີ, ຊ່ວຍເຫຼືອອຳນາດການປົກຄອງ ແລະບຸກຄະລາກອນສອງຝ່າຍເຂດຊາຍແດນພັດທະນາເສດຖະກິດ, ວັດທະນະທຳ, ສັງຄົມ, ລົບລ້າງຄວາມອຶດຫິວ, ຫຼຸດຜ່ອນຄວາມທຸກຍາກ, ລົບລ້າງເຮືອນຢູ່ທີ່ຊຸດໂຊມ... ຕາມໜ້າທີ່, ເງື່ອນໄຂຂອງຂະແໜງການແລະທ້ອງຖິ່ນຂອງຕົນ.

ສາມາດເວົ້າໄດ້ວ່າ, ການຮ່ວມມືຢ່າງແໜ້ນແຟ້ນດ້ານການສຶກສາ ແລະບຳລຸງສ້າງລະຫວ່າງແຂວງກວາງຈິ ແລະ ແຂວງສາລະວັນ ໄດ້ປະກອບສ່ວນຢ່າງຕັ້ງໜ້າເຂົ້າໃນການບຳລຸງສ້າງຊັບພະຍາກອນມະນຸດ ເພື່ອພັດທະນາເສດຖະກິດ-ສັງຄົມໃຫ້ແຂວງສາລະວັນ.

*- ການຮ່ວມມືດ້ານວິທະຍາສາດແລະເຕັກໂນໂລຊີ*

ພະແນກວິທະຍາສາດແລະເຕັກໂນໂລຊີແຂວງກວາງຈິໄດ້ສົມທົບກັບພະແນກວິທະຍາສາດແລະເຕັກໂນໂລຊີ ແຂວງສາລະວັນສາມາດປະຕິບັດໄດ້ຫຼາຍຫົວຂໍ້, ໂຄງການ, ທີ່ເປັນສັນຍະລັກຄື: ຫົວຂໍ້ "ສັງລວມການປະເມີນ ສະພາບການ ປັດຈຸບັນຂອງທຳມະຊາດ, ເສດຖະກິດ-ສັງຄົມ, ສ້າງຂໍ້ອ້າງອີງທີ່ນຳໃຊ້ເພື່ອພິສູດວິທະຍາສາດໃນການພັດທະນາເສດຖະກິດ, ປົກປັກຮັກສາສິ່ງແວດລ້ອມຢູ່ດ່ານຊາຍແດນລາໄລ-ຮາຮາງ"; ກໍ່ສ້າງໂຄງການ "ສັງລວມການປະເມີນເງື່ອນໄຂທຳມະຊາດ, ຊັບພະຍາກອນ ທຳມະຊາດ, ສິ່ງແວດລ້ອມ, ເສດຖະກິດ - ສັງຄົມ, ສ້າງຂໍ້ອ້າງອີງ ທີ່ນຳໃຊ້ເພື່ອພິສູດວິທະຍາສາດ ໃນການພັດທະນາເສດຖະກິດ - ສັງຄົມ, ປົກປັກຮັກສາສິ່ງແວດລ້ອມເຂດເສດຖະກິດກວາງຈິ - ສາລະວັນ ໃນເຂດແລວເສດຖະກິດຕາເວັນອອກ - ຕາເວັນຕົກ.

ພະແນກວິທະຍາສາດແລະເຕັກໂນໂລຊີແຂວງກວາງຈິ ໄດ້ຕິດຕັ້ງລະບົບກວດກາ ແລະ ຕີລາຄາຄຸນນະພາບໄຟຟ້າອັດຕະໂນມັດ; ຈັດຕັ້ງການຝຶກອົບຮົມເຕັກໂນໂລຊີຂໍ້ມູນຂ່າວສານໃຫ້ບັນພະນັກງານຂອງພະແນກ, ສາຂາຂອງແຂວງສາລະວັນ; ການຝຶກອົບຮົມວິຊາສະເພາະໃນກຳມະວິທີການກວດກາ ແລະຕີລາຄາຄຸນນະພາບໄຟຟ້າ; ຝຶກອົບຮົມ ພະນັກງານທ່ານກ່ຽວກັບ 11 ກ່ຽວກັບເຕັກນິກການ

ຜະລິດແນວພັນເຫັດແລະການຜະລິດເຫັດກິນ, ເຫັນທີ່ໃຊ້ເປັນວັດຖຸດິບໃນການເຮັດຢາ, ຝຶກອົບຮົມພາສາຫວຽດໃຫ້ກັບພະນັກງານວິທະຍາສາດ ແລະເຕັກໂນໂລຊີ 4 ຄົນ. ເນື້ອໃນຂອງຊຸດອົບຮົມ ໄດ້ຕອບສະໜອງຕາມຄວາມຮຽກຮ້ອງຕ້ອງການໃນການປັບປຸງວິຊາສະເພາະ ດ້ານເຕັກໂນໂລຊີຂໍ້ມູນຂ່າວສານ, ນຳໃຊ້ຄວາມກ້າວໜ້າດ້ານວິທະຍາສາດ-ເຕັກໂນໂລຊີແລະມາດຕະຖານ ການວັດແທກຄຸນນະພາບ, ເພື່ອປະກອບສ່ວນປະຕິບັດໂຄງການ ລັດຖະບານເອເລັກຕຼົງຂອງປະເທດລາວ ແລະ ເພີ່ມທະວີວຽກງານການຄຸ້ມຄອງ ການວັດແທກຂອງພະແນກວິທະຍາສາດ ແລະເຕັກໂນໂລຊີແຂວງສາລະວັນ.

*-ສະໜັບສະໜູນແກ້ໄຂຜົນຮ້າຍຂອງໄພທຳມະຊາດ:*

ຍ້ອນມີທີ່ຕັ້ງພູມສາດຈຶ່ງເຮັດໃຫ້ກວາງຈິ ແລະສາລະວັນໃນແຕ່ລະປີ ແມ່ນແຂວງທີ່ປະສົບກັບຜົນກະທົບຈາກ ໄພທຳມະຊາດຢ່າງຮ້າຍແຮງ. ໃນຄວາມຍາກລຳບາກນັ້ນ, ການອຸປະຖຳຄ້ຳຊູເຊິ່ງກັນ ແລະກັນຈຶ່ງເຮັດໃຫ້ມິດຕະພາບຍິ່ງໜັ້ນແກ່ນ.

ແຕ່ປີ 1989 – 2021, ແຂວງກວາງຈິ ໄດ້ຊ່ວຍເຫຼືອກອງກຳລັງປ້ອງກັນຊາຍແດນ ແລະປະຊາຊົນຢູ່ ເຂດຊາຍແດນແຂວງສາລະວັນ ດ້ວຍງົບປະມານປະມານ 6 ຕື້ດົ່ງ; ໃນນັ້ນ, ສັນຄັນຕົ້ນຕໍແມ່ນສະໜັບສະໜູນສະບຽງອາຫານ, ອຸປະກອນການແພດເພື່ອແກ້ໄຂຜົນຮ້າຍທີ່ເກີດຈາກຝົນຕົກ, ນ້ຳຖ້ວມ ແລະພະຍາດລະບາດ.

ພິເສດ, ໃນປີ 2009, ເຖິງວ່າແຂວງກວາງຈິ ແລະແຂວງສາລະວັນໄດ້ຮັບຜົນກະທົບຢ່າງໜັກໜ່ວງຈາກພາຍຸເກດສະໜາ, ແຕ່ແຂວງກວາງຈິກໍຍັງໄດ້ຊ່ວຍເຫຼືອປະຊາຊົນແຂວງສາລະວັນ ເພື່ອແກ້ໄຂຜົນຮ້າຍທີ່ເກີດຈາກພະຍຸມີ:

ເຂົ້າສານ 40 ໂຕນ, ຫມີ່ 81.000 ຫໍ່,ຜ້າຮົ່ມແລະມຸ້ງ 200 ຊຸດ, ນໍ້າດື່ມ 400 ແກັດ ແລະຢາປົວພະຍາດ ແລະເຄື່ອງໃຊ້ຈໍາເປັນອື່ນໆ ຈໍານວນໜຶ່ງ...

ໃນປີ 2019, ໄພນໍ້າຖ້ວມຄັ້ງໃຫຍ່ໄດ້ເກີດຂຶ້ນຢູ່ 6 ແຂວງພາກກາງ ແລະ ພາກໃຕ້ຂອງລາວ, ເຮັດໃຫ້ມີຜູ້ ເສຍຊີວິດ 15 ຄົນ, 175,000 ຄອບຄົວໄດ້ຮັບຜົນກະທົບ. ແຂວງກວາງຈີ້ໄດ້ຊ່ວຍເຫຼືອມອບເຂົ້າສານ 10 ໂຕນໃຫ້ກັບແຂວງສາລະວັນ.

ໃນປີ 2020, ກວາງຈີຍັງໄດ້ສະໜອງສະບຽງອາຫານແລະອຸປະກອນການແພດໃຫ້ແຂວງສາລະວັນເປັນມູນຄ່າກວ່າ 2 ຕື້ດົ່ງ ເພື່ອຊ່ວຍໃຫ້ແຂວງສາລະວັນແກ້ໄຂຜົນເສຍຫາຍທີ່ເກີດຈາກໄພນໍ້າຖ້ວມ ແລະຕ້ານພະຍາດ ໂຄວິດ-19.

## ພາກທີ III.

## ສືບຕໍ່ເສີມສ້າງການພົວພັນຮ່ວມມືມິດຕະພາບລະຫວ່າງແຂວງກວາງຈິແລະແຂວງສາລະວັນໃຫ້ ນັບມື້ນັບຍືນຍົງ.

ໃນຊຸມປີທີ່ຜ່ານມານີ້, ດ້ວຍການບຸກບືນແລະຕິດສິນໃຈທີ່ສູງສົ່ງ, 2 ແຂວງ ກວາງຈິ ແລະແຂວງສາລະວັນສາມາດບັນລຸຜົນງານຫຼາຍຢ່າງໃນການຮ່ວມມືຮອບດ້ານໃນທຸກຂົງເຂດ. ກວາງຈິຮ່ວມກັບແຂວງສາລະວັນໄດ້ສ້າງເງື່ອນໄຂສະດວກ, ສະໜັບສະໜູນເຊິ່ງກັນແລະກັນໃນການປ້ອງກັນຊາດ - ປ້ອງກັນຄວາມສະຫງົບ ແລະການພັດທະນາເສດຖະກິດ-ສັງຄົມຂອງແຕ່ລະແຂວງ. ໃນສະຖານະການປ່ຽນແປງທີ່ວ່ອງໄວ ແລະສັບສົນຂອງພາບການຂອງໂລກ ແລະພາກພື້ນ, ສອງແຂວງກວາງຈິ ແລະສາລະວັນພວມປະສົບກັບກາລະໂອກາດ ແລະ ສິ່ງທ້າທາຍໃໝ່. ເພື່ອສືບຕໍ່ຊຸກຍູ້ການພົວພັນຮ່ວມມືລະຫວ່າງສອງແຂວງໃຫ້ນັບມື້ນັບເລິກເຊິ່ງ ແລະແທ້ຈິງໃນທຸກຂົງເຂດ. ໃນໄລຍະຈະມາເຖິງ, 2 ຝ່າຍຈະ ສືບຕໍ່ຊຸກຍູ້ການຮ່ວມມືຢ່າງມີປະສິດທິຜົນ ໃນບັນດາຂົງເຂດ; ການພົວພັນພາຍນອກ, ການທະຫານ, ຄວາມໝັ້ນຄົງ, ເຂດຊາຍແດນ, ເສດຖະກິດ, ການຄ້າ, ການລົງທຶນ, ການທ່ອງທ່ຽວ, ການປະຕິຮູບການບໍລິຫານ, ການສຶກສາ, ຝຶກອົບຮົມ, ການແພດ, ວິທະຍາສາດ ແລະເຕັກໂນໂລຊີ... ອີງຕາມເນື້ອໃນຂອງ ຂໍ້ຕົກລົງທີ່ໄດ້ລົງນາມ.

ດ້ານເສດຖະກິດ, ການຄ້າ, ການລົງທຶນແລະການທ່ອງທ່ຽວ: ສືບຕໍ່ຜັນຂະຫຍາຍປະຕິບັດສັນຍາການຄ້າຊາຍແດນ ລະຫວ່າງລັດຖະບານຫວຽດນາມ ແລະລັດຖະບານລາວ. ມີກົນໄກທີ່ເໝາະສົມສົ່ງເສີມການພັດທະນາ ການຜະລິດ ແລະ ຈຳໜ່າຍຜະລິດຕະພັນກະເສດຜະລິດ ໂດຍປະຊາຊົນສອງຝັ່ງຊາຍແດນ. ຍົກສູງປະສິດທິຜົນການນຳໃຊ້ແຫຼ່ງຕົ້ນທຶນ ການ ຊ່ວຍເຫຼືອຂອງຫວຽດນາມຢູ່ລາວ ໂດຍສະເພາະບັນດາໂຄງການທີ່ລັດຖະບານຫວຽດນາມໄດ້ຮັບການລົງທຶນ ແລະ ບັນດາໂຄງການອື່ນໆແຂວງກວາງຈິລົງທຶນ, ໜູນຊ່ວຍແຂວງສາລະວັນດ້ວຍງົບປະມານທ້ອງຖິ່ນ. ດຶງດູດການລົງທຶນ ແລະ ພັດທະນາລະບົບການຄ້າຊາຍແດນ, ດ່ານຊາຍແດນ. ສອງແຂວງຊີ້ນຳທຸກຂັ້ນ, ບັນດາຂະແໜງການສົມທົບກັນຮຽກຮ້ອງ, ຊຸກຍູ້ ແລະສ້າງເງື່ອນໄຂສະດວກໃຫ້ບັນດາວິສາຫະກິດຂອງສອງປະເທດ ແລະບັນດາປະເທດທີ່ກຳລັງ ຊອກຫາໂອກາດໃນການຮ່ວມມື, ການລົງທຶນໃນບັນດາຂົງເຂດທີ່ ສອງແຂວງມີຄວາມສາມາດໃນການບົ່ມຊ້ອນ ແລະຄວາມໄດ້ປຽບບົນຫຼັກການທີ່ຕ່າງຝ່າຍຕ່າງມີຜົນປະໂຫຍດ ແລະ ຮັບປະກັນກົດໝາຍຂອງແຕ່ລະປະເທດ. ຊຸກຍູ້ການຮ່ວມມືໃນການພັດທະນາ ການຜະລິດກະສິກຳ ໂດຍໃຊ້ເຕັກໂນໂລຊີຂັ້ນສູງ, ກະສິກຳສະອາດແລະຍືນຍົງ, ພັດທະນາຊົນນະບົດ, ລົບລ້າງຄວາມທຸກຍາກ, ປູກປ່າວັດຖຸດິບ ແລະກໍ່ສ້າງໂຮງງານປຸງແຕ່ງໄມ້ໃນສວນປູກຮັບໃຊ້ການສົ່ງອອກ. ສຶກສາກ່ຽວກັບກົນໄກການຮ່ວມມືຊຸດຄົ້ນ ທີ່ມີຜົນຕໍ່ແລວທາງເສດຖະກິດກວາງຈິ (ຫວຽດນາມ) - ສາລະວັນ (ລາວ) - ອຸບົນຣາຊະທານີ (ໄທ). ກໍ່ສ້າງສະຖານທີ່ ແລະເສັ້ນທາງທ່ອງທ່ຽວລະຫວ່າງສອງແຂວງ ແລະສອງປະເທດ, ເຊື່ອມຕໍ່ການທ່ອງທ່ຽວ ແລະເສັ້ນທາງທ່ອງທ່ຽວກັບບັນດາຈຸດຊົມທັດສະນີຍະພາບ ແລະຮ່ອງຮອຍຂົງເຂດພາກໃຕ້ຂອງລາວ.

ແຂວງກວາງຈີ້ໄດ້ແນະນຳ ແລະຮ່ວມກັບ Sakae Holding - Surbana Jurong ເພື່ອຊ່ວຍແຂວງສາລະວັນສ້າງແຜນການພັດທະນາເສດຖະກິດ - ສັງຄົມ, ໃນນັ້ນມີການວາງແຜນກຳນົດດ່ານຊາຍແດນລາໄລ (ກວາງຈິ) - ລາໄລ (ສາລະວັນ) ກໍ່ສ້າງຮ່າງຕົວຂຶ້ນແລະພັດທະນາເທື່ອລະກ້າວໃນບັນດາເຂດເສດຖະກິດການຄ້າ ໃນເຂດດ່ານຊາຍແດນລາໄລ.

ກໍ່ສ້າງຮ່າງຕົວຂຶ້ນແລະພັດທະນາເຂດເສດຖະກິດການຄ້າຢູ່ເຂດດ່ານຊາຍແດນລາເລຂຶ້ນເທື່ອລະກ້າວ. ລົງທຶນສ້າງພື້ນຖານໂຄງລ່າງ, ປະຕິບັດບັນດາລະບຽບການການສະເຫນີຂອງລັດຖະບານ ປະກອບໃນການຜັນຂະຫຍາຍແຜນນະໂຍບາຍ ຍົກລະດັບດ່ານຊາຍແດນກາອັກ (ກວາງຈິ) – ອາຊັອກ (ສາລະວັນ) ໃຫ້ກາຍເປັນດ່ານຊາຍແດນຫຼັກໃນການວາງແຜນກຳນົດດ່ານຊາຍແດນຫວຽດນາມ-ລາວໄລຍະ 2025 ຮອດປີ 2035.

- ດ້ານການສຶກສາແລະຝຶກອົບຮົມ, ການແພດ, ວິທະຍາສາດ ແລະ ເຕັກໂນໂລຊີ: ຍົກສູງຄຸນນະພາບ ແລະປະສິດທິຜົນການຮ່ວມມືລະຫວ່າງສອງແຂວງໃນຂົງເຂດສຶກສາແລະພັດທະນາຊັບພະຍາກອນມະນຸດ. ກວາງຈິສືບຕໍ່ບຳລຸງອົບຮົມພາສາຫວຽດນາມ, ທິດສະດີການເມືອງ ແລະວິຊາສະເພາະຂອງວິທະຍາໄລ, ເຝິກອົບຮົມວິຊາຊີບສະເພາະໃຫ້ແກ່ພະນັກງານ, ນັກສຶກສາແຂວງສາລະວັນ. ແລກປ່ຽນນັກຝຶກງານທີ່ເປັນພະນັກງານ, ລັດຖະກອນຂອງອົງກອນ, ກົມກອງໃດໜຶ່ງລະຫວ່າງແຂວງກວາງຈິ ແລະແຂວງສາລະວັນ. ກວາງຈິໄດ້ສົ່ງຄູອາຈານໄປສອນພາສາຫວຽດໃຫ້ກັບພະນັກງານ ແລະນັກຮຽນຢູ່ເມືອງສະໝ້ວຍ (ສາລະວັນ). ຈັດຕັ້ງຄະນະຜູ້ແທນການແພດເພື່ອພົບປະແລກປ່ຽນວິຊາສະເພາະ, ປະສົບການໃນການ

ຄຸ້ມຄອງ ແລະສ້າງເຄືອຂ່າຍດ້ານການແພດ, ສະໜອງຂໍ້ມູນ ແລະປະສານສົມທົບ ເພື່ອປ້ອງກັນ ແລະຕ້ານກັນພະຍາດລະບາດ ຂ້າມຊາຍຢ່າງທັນການ. ຈັດຕັ້ງການເຄື່ອນໄຫວກວດກາ, ຮັກສາ ແລະໃຫ້ຢາປິ່ນປົວພະຍາດໂດຍບໍ່ເສຍຄ່າໃຫ້ປະຊາຊົນຢູ່ເຂດຊາຍແດນ.

ການຈັດຕັ້ງການແລກປ່ຽນປະສົບການດ້ານວິທະຍາສາດ-ເຕັກໂນໂລຊີ; ສ້າງຫຼັກສູດການຮ່ວມມື, ແລກປ່ຽນ ແລະຖ່າຍທອດເຕັກໂນໂລຊີ, ວິທະຍາການ ແລະສ້າງບັນດາຮູບແບບການພັດທະນາກະສິກຳ, ພັດທະນາຊົນນະບົດ, ຍົກສູງຄວາມສາມາດ, ປ່ຽນແປງກົດບັນຍັດ, ນະໂຍບາຍໃນການຄຸ້ມຄອງການຜະລິດກະສິກຳ - ປ່າໄມ້, ຊົນລະປະທານ. ແລກປ່ຽນ ປະສົບການໃນການຫັນປ່ຽນ ແລະການນຳໃຊ້ເຕັກໂນໂລຊີຂໍ້ມູນຂ່າວສານເຂົ້າໃນການ ຄຸ້ມຄອງ, ຊີ້ນຳ ແລະບໍລິຫານຂອງພັກ, ລັດ ແລະອົງການຈັດຕັ້ງການເມືອງ-ສັງຄົມ.

ການປ້ອງກັນຄວາມສະຫງົບເຂດຊາຍແດນ ແລະການຮ່ວມມືມິດຕະພາບ: ເພີ່ມທະວີວຽກງານການໂຄສະນາເຜີຍແຜ່ ແລະຂົນຂວາຍປະຊາຊົນເພື່ອຍົກສູງກ່ຽວກັບຄວາມສຳຄັນ ແລະຄວາມໝາຍປະຫວັດສາດຂອງເສັ້ນ ຊາຍແດນ, ລະບົບຫຼັກໝາຍຊາຍແດນຫວຽດນາມ - ລາວ. ແລກປ່ຽນປະສົບການ, ຊ່ວຍເຫຼືອເຊິ່ງກັນ ແລະກັນ, ສົມທົບກັບບັນດາອົງການທີ່ມີ ບົດບາດເຄື່ອນໄຫວລາດຕະເວນກວດກາ, ປົກປັກຮັກສາຊາຍແດນ ແລະຫຼັກໝາຍຂອງຊາດ. ສືບຕໍ່ຊຸກຍູ້ ແລະປະຕິບັດຂໍ້ຕົກລົງຢ່າງດີ, ລະບຽບການຄຸ້ມຄອງເສັ້ນຊາຍແດນ ແລະດ່ານຊາຍແດນ ທາງບົກລະຫວ່າງຫວຽດນາມ - ລາວ, ອະນຸສັນຍາ ກ່ຽວກັບເສັ້ນຊາຍແດນ ແລະຫຼັກໝາຍແຫ່ງຊາດຫວຽດນາມ - ລາວໄດ້ລົງນາມເມື່ອ ປີ 2016. ສອງແຂວງສືບຕໍ່ເພີ່ມທະວີ

ການຮ່ວມມືປ້ອງກັນ ແລະຕ້ານສັດຕູຢູ່ເຂດຊາຍແດນ. ສົມທົບກັນຕ້ານອາດຊະຍາກຳຂ້າມຊາດໂດຍສະເພາະ ແມ່ນອາດຊະຍາກຳຢາເສບຕິດ, ການຄ້າມະນຸດ, ຄ້າເຖື່ອນ, ການລັກລອບເຂົ້າ-ອອກຢ່າງຜິດກົດໝາຍ; ຕ້ານອາດຊະຍາກຳຂ້າມຊາດ. ສືບຕໍ່ຜັນຂະຫຍາຍຮູບແບບທີ່ມີ ປະສິດທິຜົນໂດຍການແຮກສ່ຽວ "ບ້ານ-ບ້ານ" ເປີດກວ້າງຮູບແບບການແຮກສ່ຽວ ລະຫວ່າງອົງກອນຕໍ່ອົງກອນ, ໜ່ວຍຕໍ່ໜ່ວຍ, ກຸ່ມປະຊາຊົນທີ່ສອງຝັ່ງຊາຍແດນລະຫວ່າງແຂວງກວາງຈິ ແລະແຂວງສາລະວັນ; ເສີມຂະຫຍາຍບົດບາດຂອງມະຫາຊົນໃນການປົກປັກຮັກສາອະທິປະໄຕ, ຄວາມສະຫງົບຂອງຊາຍແດນ, ເພີ່ມທະວີຄວາມສາມັກຄີ ແລະມິດຕະພາບ ລະຫວ່າງບັນດາເຜົ່າຢູ່ສອງຝັ່ງຊາຍແດນ. ສະກັດກັ້ນການເຄື່ອນຍ້າຍຖິ່ນຖານແບບເສລີ ແລະແຕ່ງດອງທີ່ບໍ່ຈົດທະບຽນໃນເຂດຊາຍແດນລະຫວ່າງແຂວງກວາງຈິ ແລະສາລະວັນ[15].

ສືບຕໍ່ເຮັດວຽກງານການຕ່າງປະເທດຂອງພັກ ແລະປະຊາຊົນໃຫ້ດີຂຶ້ນ. ເພີ່ມທະວີວຽກງານຖະແຫຼງຂ່າວພາຍນອກ ແລະໂຄສະນາເຜີຍແຜ່ຂອງປະຊາຊົນທຸກຊັ້ນວັນນະ, ພິເສດແມ່ນລຸ້ນໄວໜຸ່ມກ່ຽວກັບສາຍພົວພັນມິດຕະພາບທີ່ເປັນມູນເຊື້ອ, ຄວາມສາມັກຄີ ແລະການຮ່ວມມືຮອບດ້ານລະຫວ່າງສອງປະເທດ

---

[15]ສະເໜີໃຫ້ລັດຖະບານລາວອອກສັນຊາດລາວໃນໃຫ້ແກ່ບັນດາຊາວຫວຽດໄວໆນີ້ ໃນກໍລະນີທີ່ຊາວຫວຽດນາມມີເງື່ອນໄຂໃນການພັດທະ ອາໄສຢ່າງ ຄົບຖ້ວນ, ສ້າງເງື່ອນໄຂສະດວກໃນການອອກໃບຢັ້ງຢືນການສົມລົດໃຫ້ພົນລະເມືອງລາວແຕ່ງງານກັບຊາວຫວຽດນາມ ເພື່ອຈຳກັດຮູບແບບ ການແຕ່ງງານໂດຍບໍ່ມີທະບຽນສົມລົດ (ຄວາມເປັນຈິງປັດຈຸບັນນີ້ ການທີ່ພົນລະເມືອງລາວທີ່ຂໍໃບຢັ້ງຢືນການແຕ່ງດອງ ກັບຊາວຫວຽດນາມ ຍັງມີຄວາມຫຍຸ້ງຍາກຫລາຍ ຈຶ່ງເຮັດໃຫ້ມີຫຼາຍກໍລະນີ ທີ່ມີການແຕ່ງງານແຕ່ບໍ່ໄດ້ຂຶ້ນທະບຽນ).

ຫວຽດນາມ - ລາວ. ແຂວງກວາງຈິໃຫ້ຄຳໝັ້ນສັນຍາຈະສົມທົບກັບກະຊວງຕຳຫຼວດຫວຽດນາມໝູນຊ່ວຍແຂວງສາລະວັນ ສ້າງກອງບັນຊາການຕຳຫຼວດໃນ 13 ກຸ່ມບ້ານໃກ້ເຂດຊາຍແດນຂອງແຂວງດ້ວຍງົບປະມານຊ່ວຍເຫຼືອ 550 ລ້ານດົ່ງ/ ກອງບັນຊາການ (ໃນນັ້ນ, ກະຊວງຕຳຫຼວດຫວຽດນາມຊ່ວຍ 150 ລ້ານດົ່ງ, ແຂວງກວາງຈິຊ່ວຍ 400 ລ້ານດົ່ງ).

**ສະຫຼຸບ**

1. ການສ້າງສາຍພົວພັນແບບພິເສດຫວຽດນາມ - ລາວ, ລາວ - ຫວຽດນາມ ແມ່ນການປະດິດສ້າງທິດສະດີປະຕິວັດປົດປ່ອຍຊາດ. ສິ່ງມະຫັດສະຈັນ ຂອງການພົວພັນແບບພິເສດ ຫວຽດນາມ - ລາວ - ລາວ - ຫວຽດນາມ ແມ່ນການສະແດງຄວາມສຳເລັດບັນລຸເຖິງລະດັບເປັນແບບຢ່າງ, ຖືກຕ້ອງ ແລະ ກົມກຽວຂອງການພົວພັນຊົນຊາດ ແລະສາກົນ; ສ້າງເງື່ອນໄຂສະດວກໃຫ້ສອງຝ່າຍເປັນເຈົ້າເພື່ອພັດທະນາແຫຼ່ງກຳລັງພາຍໃນຂອງຕົນ ແລະ ຮ່ວມກັນເພີ່ມທະວີກຳລັງແຮງຂອງກຸ່ມພັນທະມິດ, ຮ່ວມມືຂອງປະຊາຊົນສອງປະເທດ. ນັ້ນແມ່ນມໍລະດົກວັດທະນະທຳອະວັດຖຸຂອງປະຊາຊົນສອງປະເທດຫວຽດນາມ - ລາວ, ດັ່ງທີ່ທ່ານປະທານປະເທດ ສຸພານຸວົງ ໄດ້ຕີລາຄາວ່າ: “ການພົວພັນມິດຕະພາບອ້າຍນ້ອງລະຫວ່າງປະຊາຊົນລາວ ແລະຫວຽດນາມແມ່ນຍິ່ງໃຫຍ່ແທ້ໆ. ບໍ່ມີປຶດເພງ, ບົດກະວີໃດສາມາດສັນລະເສີນໄດ້ຫມົດ. ນ້ຳໃຈສາມັກຄີ ລາວ-ຫວຽດນາມ ສູງກ່ວາພູຜາ, ຍາວກວ່າແມ່ນ້ຳກວ້າງກວ່າມະຫາສະໝຸດ, ງາມກວ່າເດືອນເພັງ, ຫອມກວ່າດອກໄມ້ໃດໆທີ່ຫອມທີ່ສຸດໃນໂລກ. ສາຍມິດຕະພາບທີ່ດີງາມນັ້ນໄດ້

ຮັບການເພີ່ມພູນຄູນສ້າງ ດ້ວຍຈິດໃຈອັນບໍລິສຸດທີ່ບໍ່ມີສັດຕູໃດສາມາດທຳລາຍໄດ້." [16]

ການພົວພັນແບບພິເສດຫວຽດນາມ - ລາວ, ລາວ - ຫວຽດນາມ ແມ່ນການສັງລວມຄຸນທາດການປະຕິວັດອັນບໍລິສຸດຜຸດຜ່ອງ, ມີຄວາມຮັບຜິດຊອບອັນສູງສົ່ງ ແລະ ຄວາມຮັກແພງຈິງຮັກພັກດີອັນເຕັມປ່ຽງ ເຊິ່ງປະຊາຊົນ ແລະ ຊົນຊາດຫວຽດນາມ - ລາວ ໃຫ້ຕໍ່ກັນໃນໄລຍະການຕໍ່ສູ້, ອອກແຮງງານປະດິດສ້າງເພາະຄວາມເອກະລາດ, ເສລີພາບ, ເພື່ອພາລະກິດສ້າງສາ ແລະ ປ້ອງກັນປະເທດ. ບົນບັນດາໄລຍະການປະຕິວັດອັນຫຍຸ້ງຍາກ, ສັບສົນ ແລະ ການໄຊຊະນະອັນສະຫງ່າລາສີຂອງປະຊາຊົນສອງປະເທດ ຫວຽດນາມ - ລາວ, ລ້ວນແຕ່ໄດ້ສະແດງຢ່າງຈະແຈ້ງບົດບາດສຳຄັນ, ຄຸນຄ່າການປະຕິວັດ, ມະນຸດສະທຳ ແລະ ປະສິດທິຜົນອັນໃຫຍ່ຫຼວງຂອງສາຍພົວພັນແບບພິເສດ ຫວຽດນາມ - ລາວ, ລາວ - ຫວຽດນາມ. ໃນໄລຍະຈະມາເຖິງ, ຍາມໃດກໍຕ້ອງຮໍ່າຮຽນ ແລະ ເຊື່ອມຊຶມບັນດາທັດສະນະ, ຫຼັກການ ແລະ ວິທີການ ສ້າງສາຍພົວພັນແບບພິເສດຫວຽດນາມ - ລາວ, ລາວ - ຫວຽດນາມ ແລະ ໝູນໃຊ້ໃນທຸກການເຄື່ອນໄຫວທີ່ກ່ຽວຂ້ອງເຖິງການພົວພັນນັ້ນ. ພ້ອມກັນນັ້ນ, ຕ້ອງມີສະຕິລະວັງຕົວ ແລະຕໍ່ສູ້ຢ່າງບໍ່ຜ່ອນຜັນຕໍ່ບັນດາທັດສະນະ ແລະເລ່ລ່ຽມເຮັດໃຫ້ຕ່ຳລົງ ຫຼື ທຳລາຍສາຍພົວພັນແບບພິເສດຫວຽດນາມ - ລາວ - ລາວ - ຫວຽດນາມ. ພວກເຮົາຕ້ອງຮັບຮູ້ວ່າ, ສາຍພົວພັນ

---

[16] ບົດກ່າວຄຳເຫັນທີ່ມິດຕິງ ຢ່າງມີກຽດເພື່ອຕ້ອນຮັບຄະນະຜູ້ແທນປະຊາຊົນລາວ ຢູ່ຫໍບາດິ່ງ, ຮ່າໂນ້ຍ ວັນທີ 25/5/1971. ລົງພິມໃນຫນັງສືພິມ ປະຊາຊົນ ວັນທີ 2 ເດືອນມິຖຸນາ 1971.

ລະຫວ່າງ ລາວ-ຫວຽດນາມ ເຖິງວ່າແມ່ນມີຄ່າກວ່າເພັດພອຍອັນລ້ຳຄ່າທີ່ສຸດ, ແຕ່ກໍຍັງຕ້ອງໄດ້ເບິ່ງແຍງເພີ່ມພູນຄູນສ້າງຢ່າງເປັນປະຈຳເພື່ອໃຫ້ຜ່ອງໃສຕື່ມອີກ.

ເພື່ອເພີ່ມທະວີປັບປຸງສາຍພົວພັນສາມັກຄີ ລາວ-ຫວຽດນາມ ໃນສະພາບການໃໝ່, ພະນັກງານສະມາຊິກພັກຕ້ອງມີຄວາມຮັບຮູ້ ແລະ ເຊື່ອມຊຶມທັດສະນະ, ທ່າທາງກໍຄືວິທີປະກອບຄຳເຫັນ ແລະແກ້ໄຂບັນຫາຕ່າງໆໃນຕົວຈິງທີ່ມັກເກີດຂຶ້ນໃຫ້ຖືກຕ້ອງ.

ປະຈຸບັນ, ສະພາບການຂອງໂລກ ແລະພາກພື້ນພວມມີການຜັນແປໄປຫຼາຍຢ່າງ, ບໍ່ສາມາດຄາດເດົາໄດ້. ໂລກາພິວັດ ແລະ ການເຊື່ອມໂຍງເສດຖະກິດສາກົນ ແລະ ພາກພື້ນແມ່ນທ່າອ່ຽງທົ່ວໄປ ແລະເສົາຄ້ຳຫຼັກຂອງຂະບວນການນີ້ ແມ່ນການຫັນເປັນເສລີທາງດ້ານການຄ້າ. ດ້ວຍຖານະສຳຄັນຂອງເຂດອາຊີຕາເວັນອອກສ່ຽງໃຕ້, ບັນດາປະເທດໃຫຍ່ ແລະ ພັດທະນາແລ້ວນັບມື້ນັບມີຄວາມສົນໃຈ ແລະ ເພີ່ມທະວີເປີດກວ້າງການພົວພັນ, ພິເສດແມ່ນການຮ່ວມມືດ້ານເສດຖະກິດ, ການຄ້າ ແລະການລົງທຶນ. ນີ້ແມ່ນເງື່ອນໄຂສະດວກໃຫ້ແກ່ການພັດທະນາຂອງແຕ່ລະປະເທດ, ໃນນັ້ນມີ ຫວຽດນາມ ແລະລາວ. ກິດຈະການປ່ຽນໃໝ່ປະເທດຫວຽດນາມ - ລາວ ດ້ວຍການພັດທະນາຢ່າງວ່ອງໄວ, ພ້ອມກັບບັນດາໝາກຜົນການຮ່ວມມືທີ່ບັນລຸໄດ້ລະຫວ່າງຫວຽດນາມ ແລະລາວ ຮຽກຮ້ອງຕ້ອງເພີ່ມທະວີການຮ່ວມມືຮອບດ້ານໃນໄລຍະໃໝ່. ການສືບຕໍ່ເພີ່ມທະວີ ແລະພັດທະນາສາຍພົວພັນແບບພິເສດ ແລະ ການຮ່ວມມືຮອບດ້ານລະຫວ່າງສອງປະເທດຫວຽດນາມ - ລາວ ບໍ່ພຽງແຕ່ແມ່ນຄວາມຮຽກຮ້ອງພັດທະນາແບບພາວະວິໄສເຊິ່ງຍັງເປັນຄວາມປາຖະໜາຂອງປະຊາຊົນ, ແມ່ນຄວາມຮັບຜິດຊອບຂອງການນຳ

ແຕ່ລະປະເທດ ແລະ ຍັງເປັນປັດໄຈເພື່ອຮັບປະກັນໃຫ້ການປະຕິບັດປະສົບຜົນສໍາເລັດການກໍ່ສ້າງ, ປົກປັກຮັກສາ ແລະການພັດທະນາແບບຍືນຍົງ, ການເຊື່ອມໂຍງສາກົນຢ່າງສໍາເລັດຂອງແຕ່ລະປະເທດ. ໃນສະພາບການໃດກໍຕາມ, ສອງປະເທດຫວຽດນາມ - ລາວ ຈະມານະພະຍາຍາມຈົນສຸດຄວາມສາມາດ, ຮ່ວມກັນປົກປັກຮັກສາ ແລະ ເພີ່ມພູນຄູນສ້າງ ສາຍພົວພັນແບບພິເສດ ຫວຽດນາມ - ລາວ ໃຫ້ນັບມື້ນັບພັດທະນາ, ຂຽວສົດງົດງາມໝັ້ນຄົງຂະໜົງແກ່ນໄປ ຊົ່ວກາລະນານ ແລະ ສືບຕໍ່ໃຫ້ຄົນລຸ້ນຫຼັງ ເພື່ອຄວາມພັດທະນາຈະເລີນຮຸ່ງເຮືອງຂອງແຕ່ລະປະເທດ, ເພື່ອສັນຕິພາບ, ສະຖຽນລະພາບ, ການຮ່ວມມື ແລະການພັດທະນາຢູ່ໃນພາກພື້ນ ແລະທົ່ວໂລກ

2. ການພົວພັນລະຫວ່າງ ແຂວງກວາງຈິ ແລະ ສາລະວັນ ແມ່ນການສືບຕໍ່ "ສາຍພົວພັນບ້ານໃກ້ເຮືອນຄຽງເປັນມິດ" ໃນປະຫວັດສາດ ແລະ "ຄວາມສາມັກຄີແບບພິເສດ, ພັນທະມິດຕໍ່ສູ້" ໃນຊຸມປີຕໍ່ສູ້ ຄຽງບ່າຄຽງໄຫຼ່ກັນເພື່ອຕ້ານສັດຕູຮ່ວມຂອງສອງແຂວງ. ຈາກການໃກ້ຄຽງທາງດ້ານພູມສັນຖານ, ຄວາມຄ້າຍຄືກັນໃນສະພາບທໍາມະຊາດ, ເສດຖະກິດ ແລະວັດທະນະທໍາ; ເປັນຈຸດທີ່ຕັ້ງຍຸດທະສາດ ແລະ ຄວາມສາມາດບົ່ມຊ້ອນ ເພື່ອພັດທະນາເສດຖະກິດຂອງສອງແຂວງ, ປະຊາຊົນແຂວງສາລະວັນ ແລະ ປະຊາຊົນແຂວງກວາງຈິ ໄດ້ສ້າງການພົວພັນບ້ານໃກ້ເຮືອນຄຽງທີ່ເປັນມິດ. ລັກສະນະທີ່ພົ້ນເດັ່ນແມ່ນຄວາມສາມັກຄີ, ຄວາມສັດຊື່, ຄວາມຮັກແພງເຊິ່ງກັນ ແລະ ກັນ. ສູງກວ່າໝູ່ແມ່ນນໍ້າໃຈຮັກຊາດ, ຈິດໃຈຕໍ່ສູ້ທີ່ບໍ່ຍອມຈໍານົນ ແລະ ອົງອາດກ້າແກ່ນ ເພື່ອປົກປັກຮັກສາເອກະລາດ ແລະ ອິດສະລະພາບ. ມູນເຊື້ອອັນດີງາມນັ້ນໄດ້ຮັບການເພີ່ມພູນຄູນສ້າງຜ່ານຫຼາຍຮຸ່ນຄົນ,

ແມ່ນພື້ນຖານອັນໜັກແໜ້ນເຊື່ອມຕໍ່ປະຊາຊົນສອງແຂວງ, ໄດ້ຮັບການຈາລຶກໃນປະຫວັດສາດມູນເຊື້ອຕໍ່ສູ້ຕ້ານສັດຕູຜູ້ຮຸກຮານ, ກໍ່ສ້າງ, ປ້ອງກັນບ້ານເກີດເມືອງນອນ ແລະປະເທດຊາດ. ໃນປະຫວັດສາດແຫ່ງການຕໍ່ສູ້ຕ້ານຜູ້ຮຸກຮານຂອງສອງປະເທດ ໄດ້ມີຫຼາຍເຫດການທີ່ພົ້ນເດັ່ນ ສະແດງໃຫ້ເຫັນຄວາມສາມັກຄີ, ຕິດພັນຂອງປະຊາຊົນແຂວງກວາງຈິ ແລະ ສາລະວັນ. ເພື່ອປ້ອງກັນເສັ້ນຊາຍແດນ, ປົກປັກຮັກສາຜືນແຜ່ນດິນຂອງປະເທດ, ປະຊາຊົນກວາງຈິ ແລະສາລະວັນໄດ້ຮ່ວມກັນເພື່ອຕ້ານພວກສະຫຍາມມາຮຸກຮານເປັນຫຼາຍຄັ້ງ. ກວາງຈິ ແລະສາລະວັນ ໄດ້ສາມັກຄີກັນຕ້ານຜູ້ຮຸກຮານ ແລະລຸກຮືຂຶ້ນເພື່ອຍາດເອົາອຳນາດການປົກຄອງຢ່າງໄຊຊະນະ (ກ່ອນປີ 1930 ຫາ 1945). ປະຫວັດແຫ່ງສາຍພົວພັນແບບພິເສດລະຫວ່າງກວາງຈິ ແລະສາລະວັນ ເມື່ອຍັງບໍ່ທັນມີພັກໄດ້ປະຮອຍປະທັບຢ່າງເລິກເຊິ່ງ. ມູນເຊື້ອນັ້ນໄດ້ເສີມຂະຫຍາຍຕື່ມອີກ ຫຼັງຈາກທີ່ພັກກອມມູນິດອິນດູຈີນໄດ້ຮັບການສ້າງຕັ້ງຂຶ້ນ. ນັບແຕ່ພັກກອມມູນິດອິນດູຈີນໄດ້ກຳເນີດຂຶ້ນໃນປີ 1930, ປະຊາຊົນສອງແຂວງໄດ້ຮ່ວມກັນໃນຂຸ້ມຕະບອງດຽວກັນເພື່ອຕໍ່ສູ້ປົດປ່ອຍຊາດ. ຄວາມສາມັກຄີແບບພິເສດ ແລະພັນທະມິດຕໍ່ສູ້ຕ້ານສັດຕູລວມຂອງປະຊາຊົນສອງແຂວງ ໄດ້ສ້າງກຳລັງແຮງສັງລວມປະກອບສ່ວນ ນຳການປະຕິວັດຂອງສອງປະເທດຈາກໄຊຊະນະໜຶ່ງໄປສູ່ອີກໄຊຊະນະອື່ນ. ພາຍຫຼັງການປະຕິວັດ ເດືອນສິງຫາ ປີ 1945 ຢູ່ຫວຽດນາມ ແລະ ການລຸກຮື້ຂຶ້ນຍຶດອຳນາດການປົກຄອງຢູ່ລາວໄດ້ຮັບໄຊຊະນະ, ພ້ອມກັບກອງທັບ ແລະປະຊາຊົນຂອງສອງປະເທດ, ກອງທັບ ແລະປະຊາຊົນສອງແຂວງ ສືບຕໍ່ຮ່ວມມືກັນຕໍ່ສູ້ຕ້ານ ພວກລ່າເມືອງຂຶ້ນ ຝະລັ່ງ ແລະ ຈັກກະພັດ ອາເມລິກາຜູ້ຮຸກຮານ ເພື່ອສຳ

ເລັດພາລະກິດປົດປ່ອຍປະເທດຊາດ. ສາຍພົວພັນໄດ້ຮັບການຫຼໍ່ຫຼອມໃນຕະຫຼອດຊຸມປີທີ່ທຸກຍາກລໍາບາກ. ການພົວພັນມິດຕະພາບ ແລະການຮ່ວມມືຮອບດ້ານລະຫວ່າງສອງແຂວງ ໃນພາລະກິດສ້າງສາ ແລະປ້ອງກັນປະເທດຊາດ ແມ່ນການສືບຕໍ່ມູນເຊື້ອປະຫວັດສາດຂອງສອງຝ່າຍ. ນັ້ນແມ່ນທັງຄວາມຕ້ອງການ ແລະໜ້າທີ່ຂອງແຕ່ລະຝ່າຍໃນໄລຍະການປະຕິວັດໃໝ່.

3. ການພົວພັນລະຫວ່າງ ແຂວງກວາງຈິ ແລະ ແຂວງສາລະວັນ ເປັນຮູບພາບໂດຍຫຍໍ້ ຂອງການພົວພັນຮ່ວມມືແບບພິເສດ ແລະ ຮອບດ້ານຫວຽດນາມ - ລາວ, ເປັນການສະແດງອອກທີ່ມີຊີວິດຊີວາຂອງການພົວພັນສອງປະເທດໃນໄລຍະປະຕິວັດໃໝ່. ການພົວພັນຮ່ວມມືລະຫວ່າງ ແຂວງກວາງຈິ ແລະ ແຂວງສາລະວັນ ໄດ້ຮັບການປະຕິບັດຜ່ານບັນດາ ໄລຍະ ບົນພື້ນຖານບັນດາແຜນນະໂຍບາຍ ແລະນະໂຍບາຍຂອງພັກ, ລັດ ແລະ ລັດຖະບານ ສອງປະເທດ. ບັນດາຜົນງານທີ່ບັນລຸໄດ້ກໍຄືບັນດາຂໍ້ຈໍາກັດ ແລະ ຄົງຄ້າງໃນການພົວພັນຮ່ວມມືລະຫວ່າງສອງແຂວງ ໄດ້ສ່ອງແສງໃຫ້ເຫັນສະພາບຕົວຈິງຂອງການພົວພັນສອງປະເທດຢ່າງຄົບຖ້ວນ. ໃນສະພາບການທີ່ມີການປ່ຽນແປງຫຼາຍຢ່າງໃນໂລກ ແລະ ພາກພື້ນ, ການພົວພັນລະຫວ່າງສອງແຂວງ ຍັງໄດ້ພັດທະນາຢ່າງແຂງແຮງ ແລະ ບັນລຸໄດ້ບັນດາຜົນງານທີ່ສໍາຄັນຫຼາຍຢ່າງ. ບົນຈິດໃຈປ່ຽນໃໝ່, ພວກເຮົາໄດ້ເສີມຂະຫຍາຍແຫຼ່ງກໍາລັງພາຍໃນເພື່ອຂຸດຄົ້ນບັນດາຄວາມສາມາດບົ່ມຊ້ອນ ແລະ ທ່າແຮງທີ່ມີຢູ່, ສ້າງບາດກ້າວບຸກທະລຸທີ່ສໍາຄັນໃນຂົງເຂດເສດຖະກິດ, ບົນພື້ນຖານນັ້ນ, ຍົກສູງການພົວພັນສອງຝ່າຍໃຫ້ຂຶ້ນບາດກ້າວໃໝ່, ມີຄຸນນະພາບ ແລະປະສິດທິຜົນ

ກ່ວາອີກ. ດ້ວຍວິທີການຮ່ວມມືທີ່ສະເໝີພາບ, ຜ່ານບັນດາສັນຍາຍຸດທະສາດໄລຍະຍາວ ແລະ ປະຈຳປີ, ການພົວພັນລະຫວ່າງ ສອງແຂວງໄດ້ຮັບການຜັນຂະຫຍາຍຢ່າງມີປະສິດທິຜົນ ແລະ ເລິກເຊິ່ງໃນຫຼາຍຂົງເຂດ, ໃນນັ້ນມີການຮ່ວມມືດ້ານເສດຖະກິດ, ການຄ້າ, ວັດທະນະທຳ, ການສຶກສາ - ບຳລຸງສ້າງ ໄດ້ກາຍເປັນຂອດຂໍກະແຈ. ບັນດາຜົນງານທີ່ບັນລຸໄດ້ໃນການພົວພັນລະຫວ່າງສອງຝ່າຍ ໄດ້ປະກອບສ່ວນອັນສຳຄັນເຂົ້າໃນການປ່ຽນແປງໃບໜ້າຂອງເສດຖະກິດ - ສັງຄົມຂອງສອງແຂວງ, ພ້ອມກັນນັ້ນ ປະກອບສ່ວນຊຸກຍູ້ການພົວພັນມິດຕະພາບ ແລະການຮ່ວມມືຮອບດ້ານລະຫວ່າງສອງປະເທດຫວຽດນາມ - ລາວ ພັດທະນາ.

4. ປະຈຸບັນ, ເຖິງວ່າບັນລຸໄດ້ບາງຜົນງານອັນສຳຄັນກໍ່ຕາມ, ແຕ່ການພົວພັນລະຫວ່າງສອງແຂວງຍັງຖືກຈຳກັດ, ບໍ່ສົມກັບຄວາມສາມາດບົ່ມຊ້ອນ ແລະບໍ່ຕອບສະໜອງໄດ້ຄວາມຮຽກຮ້ອງຕ້ອງການ ແລະ ຄວາມປາດຖະໜາ ຂອງສອງຝ່າຍ. ຂໍ້ຈຳກັດເຫຼົ່ານີ້ຕ້ອງໄດ້ຮັບການວິເຄາະເພື່ອຊອກຫາສາເຫດເພື່ອມີວິທີການແກ້ໄຂໃນໄລຍະຈະມາເຖິງ. ຂຸດຄົ້ນຢ່າງມີປະສິດທິຜົນກວ່າບັນດາຄວາມສາມາດບົ່ມຊ້ອນ ແລະທ່າແຮງຂອງແຕ່ລະຝ່າຍ ໂດຍສະເພາະແມ່ນຄວາມສາມາດບົ່ມຊ້ອນກ່ຽວກັບທີ່ດິນ ແລະຊັບພະຍາກອນແຮ່ທາດຂອງສາລະວັນ ແລະທ່າແຮງດ້ານແຮງງານ, ການຕະຫຼາດ ແລະເຕັກນິກຂອງແຂວງກວາງຈິ.

5. ໃນສະພາບການໂລກາພິວັດພວມດຳເນີນໄປຢ່າງວ່ອງໄວ ແລະໄດ້ຮັບຜົນກະທົບຢ່າງເລິກເຊິ່ງ, ສາຍພົວພັນແບບພິເສດຫວຽດນາມ - ລາວ ໂດຍສະເພາະແມ່ນການພົວພັນຮ່ວມມືລະຫວ່າງແຂວງສາລະວັນ ແລະກວາງຈິ ພວມປະສົບກັບ

ຄວາມຫຍຸ້ງຍາກ, ສິ່ງທ້າທາຍ. ການເພີ່ມຂຶ້ນອິດທິພົນຂອງບັນດາປະເທດໃນໂລກ ແລະ ໃນພາກພື້ນ ແມ່ນຄວາມຫຍຸ້ງຍາກ ແລະສິ່ງທ້າທາຍຕໍ່ການພົວພັນຮ່ວມມື ລະຫວ່າງສອງແຂວງ. ເຖິງແນວໃດກໍຕາມ ດ້ວຍມູນເຊື້ອອັນດີງາມລະຫວ່າງສອງ ແຂວງທີ່ມີມາແຕ່ດົນນານ ແລະ ບັນດາທ່າແຮງໃນການພົວພັນລະຫວ່າງສອງປະ ເທດ, ແນ່ນອນວ່າ ການພົວພັນ ລະຫວ່າງແຂວງ ສາລະວັນ ແລະ ກວາງຈິ ຈະສືບ ຕໍ່ໄດ້ຮັບການເພີ່ມທະວີ ແລະ ຮັດແໜ້ນກວ່າໃນໄລຍະຈະມາເຖິງ.